ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ກະຊວງກະສິກຳ ແລະ ປ່າໄມ້
ກອງສົ່ງເສີມກະສິກຳ ແລະ ປ່າໄມ້
ໂຄງການຈັດສັນປ່າຜະລິດແບບຍືນນານ ແລະ ພັດທະນາຊົນນະບົດ

# ບົດບາດຍິງ-ຊາຍໃນການຈັດການຊັບພະຍາກອນປ່າໄມ້ ແລະ ການດຳລົງຊີວິດໃນຊົນນະບົດ

ລາຍງານໂດຍ:
ສູນຂໍ້ມູນຂ່າວສານບົດບາດຍິງ-ຊາຍ ເພື່ອການພັດທະນາ,
ສະຫະພັນແມ່ຍິງລາວ

ທັນວາ, 2004

# ຄຳຂອບໃຈ

ທີມງານສຶກສາຂໍສະແດງຄວາມຂອບໃຈມາຍັງທ່ານທີ່ໃຫ້ຄວາມຊ່ວຍເຫຼືອແລະແນະນຳໃນການເຮັດການສຳຫຼວດ ແລະ ບົດລາຍງານສະບັບນີ້. ສະນັ້ນ ພວກຂ້າພະເຈົ້າຈຶ່ງຂໍຖືໂອກາດນີ້ຂໍສະແດງຄວາມຂອບໃຈນຳ ບັນດາ ທ່ານດັ່ງລຸ່ມນີ້:

ທ່ານ. ນາງ. ບັນດິດ ປະທຸມວັນ, ຫົວໜ້າກົມພັດທະນາ, ສູນກາງສະຫະພັນແມ່ຍິງລາວ
ທ່ານ. ທອງສູນ ບຸນຜາໄຊ, ຫົວໜ້າປະສານງານໂຄງການ SUFORD
ທ່ານ. ວິໄລຮັກ ສິມສຸລິວົງ, ຮອງຫົວໜ້າປະສານງານໂຄງການ SUFORD.
ທ່ານ. ໂທມັດສ໌ ຈອນສັນ, ຫົວໜ້າຊ່ຽວຊານໂຄງການ SUFORD.
ທ່ານ. ນ. ວາລຸນີ ກຣິດຈາເລີນ, ທີ່ປຶກສາດ້ານພັດທະນາຊົນນະບົດ, SUFORD.
ທ່ານ ນ. ເພັດສະໝອນ ເຟືອງຈິນດາ, ພະນັກງານ ແນວລາວສ້າງຊາດ, ສະຫວັນນະເຂດ.
ທ່ານ ນ. ອາລິຍະວັນ, ພະນັກງານ ກອງສົ່ງເສີມກະສິກຳ ແລະ ປ່າໄມ້, ສະຫວັນນະເຂດ.
ທ່ານ ນ. ດວງນາລີ, ພະນັກງານ ສະຫະພັນແມ່ຍິງເມືອງສອງຄອນ, ແຂວງສະຫວັນນະເຂດ.
ທ່ານ ນ. ໄກສອນ, ພະນັກງານ ສະຫະພັນແມ່ຍິງເມືອງສອງຄອນ, ແຂວງສະຫວັນນະເຂດ.
ທ່ານ ນ. ພູມສະຫວັນ, ພະນັກງານ ສະຫະພັນແມ່ຍິງເມືອງສອງຄອນ, ແຂວງສະຫວັນນະເຂດ.
ທ່ານ ນ. ສີສະໝັນ, ພະນັກງານ ແນວລາວສ້າງຊາດ ເມືອງສອງຄອນ, ແຂວງສະຫວັນນະເຂດ.
ທ່ານ. ບຸນກວ້າງ, ພະນັກງານ ແນວລາວສ້າງຊາດ ເມືອງທ່າປາງທອງ, ແຂວງສະຫວັນນະເຂດ.
ທ່ານ. ຄຳເພັດ, ພະນັກງານ ແນວລາວສ້າງຊາດ ເມືອງທ່າປາງທອງ, ແຂວງສະຫວັນນະເຂດ.
ທ່ານ. ທິນນະກອນ, ທີ່ປຶກສາໂຄງການ SUFORD, ແຂວງສາລະວັນ.
ທ່ານ. ສີສຸກ ພົມມະວິຈິດ, ຮອງຫົວໜ້າປະສານງານໂຄງການ SUFORD, ແຂວງສາລະວັນ.
ທ່ານ. ສະກຸນສີ ແກ້ວພິລາວັນ, ຫົວໜ້າປະສານງານໂຄງການ SUFORD ເມືອງສາລະວັນ,
ທ່ານ ນ. ຄຳມີ ສໍພາບມີໄຊ, ພະນັກງານ ກອງສົ່ງເສີມກະສິກຳ ແລະ ປ່າໄມ້, ແຂວງສາລະວັນ
ທ່ານ ນ. ພອນ ວັນນະເລດ, ພະນັກງານ ໂຄງການ SUFORD, ແຂວງສາລະວັນ.
ທ່ານ ນ. ຈິດຕະວົງ ພົມມະນີວົງ, ພະນັກງານ ໂຄງການ SUFORD, ແຂວງສາລະວັນ.
ທ່ານ ນ. ພິມພອນ ເຫຼືອມະໄລສີ, ພະນັກງານ ສະຫະພັນແມ່ຍິງ ເມືອງສາລະວັນ, ແຂວງສາລະວັນ.
ທ່ານ ນ. ບົວຄຳ ດວງສາ, ພະນັກງານ ໂຄງການ SUFORD ເມືອງສາລະວັນ, ແຂວງສາລະວັນ.
ທ່ານ ນ. ໂອໄດ ອິນທິສານ, ພະນັກງານ ໂຄງການ SUFORD ເມືອງສາລະວັນ, ແຂວງສາລະວັນ.
ທ່ານ. ບົວລາ ຫານວິໄລ, ພະນັກງານ ແນວລາວສ້າງຊາດ ເມືອງສາລະວັນ, ແຂວງສາລະວັນ.

## ທີມງານວິຊາການ

- ອາຈານ. ໂພທອງ ສີລີພົງ, ທີ່ປຶກສາໂຄງການ, ສູນຂໍ້ມູນຂ່າວສານບົດບາດຍິງ-ຊາຍ ເພື່ອການພັດທະນາ.
- ທ່ານ ນ. ສົມບັດ ໄຊສຸລິໂຍ, ຜູ້ຈັດການສູນຂໍ້ມູນຂ່າວສານບົດບາດຍິງ-ຊາຍ ເພື່ອການພັດທະນາ ແຂວງສະຫວັນນະເຂດ.
- ອາຈານ. ແກ້ວເພັດ ພູມພອນ, ທີ່ປຶກສາດ້ານການພັດທະນາຊົນນະບົດ, ອາຈານ ມະຫາວິທະຍາໄລແຫ່ງຊາດ.
- ອາຈານ. ບົວທອງ ຈັນທະວົງ, ພາກວິຊາຊົນລະປະທານ, ມະຫາວິທະຍາໄລ ແຫ່ງຊາດ.
- ອາຈານ. ສຸລິດ ໄຊຍະສິດທິເດດ, ອາຈານ ມະຫາວິທະຍາໄລ ແຫ່ງຊາດ.
- ທ່ານ. ແສງອາລຸນ ມາດພົມມະວົງ, ພະນັກງານ, ມະຫາວິທະຍາໄລ ແຫ່ງຊາດ.
- ທ່ານ. ພັນມະລີ, ທີ່ປຶກສາດ້ານການວິໄຈ

# ບົດສະຫຼຸບຫຍໍ້

ບົດລາຍງານສະບັບນີ້ແມ່ນຜົນໄດ້ຮັບຂອງການສຶກສາຄົ້ນຄວ້າໃນຫົວຂໍ້ *"ບົດບາດຍິງ-ຊາຍໃນການຈັດການຊັບພະຍາກອນປ່າໄມ້ ແລະ ການດຳລົງຊີວິດຂອງຊາວຊົນນະບົດ"*, ຊຶ່ງສູນຂໍ້ມູນຂ່າວສານບົດບາດຍິງ-ຊາຍເພື່ອການພັດທະນາ, ສູນກາງສະຫະພັນແມ່ຍິງລາວເປັນຜູ້ຈັດຕັ້ງປະຕິບັດການຄົ້ນຄວ້າໃຫ້ແກ່ໂຄງການຈັດສັນປ່າຜະລິດແບບຍືນນານແລະພັດທະນາຊົນນະບົດ(SUFORD)

ການສຶກສາໃນຄັ້ງນີ້ໄດ້ອີງໃສ່ການລົງສຳຫຼວດຕົວຈິງໃນພາກສະໜາມໂດຍສຳພາດກຸ່ມເປົ້າໝາຍຈຳນວນ 110 ທ່ານ (ຍິງ 53 ທ່ານ ແລະ ຊາຍ 57 ທ່ານ) ໃນ 6 ບ້ານ ທີ່ຂຶ້ນກັບ 2 ແຂວງຄື: ສະຫວັນນະເຂດ ແລະ ສາລະວັນ. ໃນເວລາລົງສະໜາມຕົວຈິງນັ້ນທີມງານໄດ້ເກັບກຳຂໍ້ມູນກ່ຽວກັບການແບ່ງງານລະຫວ່າງຍິງ-ຊາຍ, ການເຂົ້າເຖິງ ແລະ ຄວບຄຸມຊັບພະຍາກອນປ່າໄມ້ ແລະ ຮູບແບບການດຳລົງຊີວິດຂອງແມ່ຍິງ ແລະ ຜູ້ຊາຍ ຂອງບ້ານທີ່ຖືກຄັດເລືອກ ໃນຂອບເຂດຂອງໂຄງການ ຈັດສັນປ່າຜະລິດແບບຍືນນານ ແລະ ພັດທະນາຊົນນະບົດ (SUFORD). ໂດຍອີງຕາມການຄົ້ນພົບຂອງການວິໄຈ, ທີມງານໄດ້ໃຫ້ຄຳແນະນຳຕ່າງໆ ເພື່ອເຊື່ອມເອົາບົດບາດຍິງ-ຊາຍເຂົ້າໃນການຈັດຕັ້ງປະຕິບັດໂຄງການໃນອານະຄົດ.

ການສຶກສາໄດ້ຄົ້ນພົບບັນຫາບົດບາດຍິງ-ຊາຍໃນຂະແໜງປ່າໄມ້ ແລະ ການດຳລົງຊີວິດຂອງຊາວຊົນນະບົດດັ່ງລຸ່ມນີ້:

- ແມ່ຍິງມີບົດບາດສຳຄັນຕໍ່ການພັດທະນາຊີວິດການເປັນຢູ່ຂອງຄອບຄົວ ແລະ ຊຸມຊົນ. ພວກເຂົາມີບົດບາດໃນການຄູ້ມຄອງ, ນຳໃຊ້ ແລະ ອະນຸລັກຊັບພະຍາກອນທຳມະຊາດ. ແມ່ຍິງເປັນຜູ້ຕົ້ນຕໍໃນການນຳໃຊ້ປ່າໄມ້, ໂດຍສະເພາະແມ່ນໄມ້ຟືນ ແລະ ເຄື່ອງປ່າຂອງດົງຕ່າງໆ. ຢູ່ໃນຂົງເຂດພື້ນທີ່ໂຄງການ, ແມ່ຍິງບໍ່ພຽງແຕ່ເປັນຄົນນຳໃຊ້ປ່າໄມ້ຕົ້ນຕໍເທົ່ານັ້ນແຕ່ຍັງເປັນຄົນປົກປັກຮັກສາປ່າໄມ້ອີກດ້ວຍ. ແມ່ຍິງມີບົດບາດສຳຄັນຕໍ່ການຈັດການເຄື່ອງປ່າຂອງດົງ ແລະ ການຜະລິດເຂົ້າ, ແຕ່ພວກເຂົາພັດຖືກມອງຂ້າມຈາກໂຄງການພັດທະນາຕ່າງໆ. ການອອກແບບກິດຈະກຳການພັດທະນາຍັງບໍ່ທັນໄດ້ເອົາໃຈໃສ່ຕໍ່ບັນຫາບົດບາດຍິງ-ຊາຍ/ຊົນເຜົ່າເທົ່າທີ່ຄວນ. ການເກັບຜະລິດຕະພັນປ່າໄມ້ຕ່າງໆໃນພື້ນທີ່ສຶກສາສ່ວນຫຼາຍຈະແມ່ນແມ່ຍິງແລະ ເດັກນ້ອຍ. ພວກເຂົາມີບົດບາດໃນການເກັບອາຫານຈາກ ປ່າໄມ້ເຊັ່ນ: ໜໍ່ໄມ້ ແລະ ຜັກປ່າຕ່າງໆ. ແມ່ຍິງປະມານ 83 ສ່ວນຮ້ອຍ ແມ່ນເກັບຜະລິດຕະພັນປ່າໄມ້ເພື່ອການບໍລິໂພກໃນຄົວເຮືອນ ແລະ ປະມານ 32 ສ່ວນຮ້ອຍ ຈະເກັບຜະລິດຕະພັນປ່າໄມ້ເພື່ອຈຳໜ່າຍໃນຕະຫຼາດ.

- ແມ່ຍິງ, ໂດຍສະເພາະຢູ່ໃນບ້ານຊົນເຜົ່າມີອັດຕາກົກໜັງສືສູງ. ອັດຕາການກົກໜັງສືໃນກຸ່ມແມ່ຍິງມີປະມານ 60 ສ່ວນຮ້ອຍ, ຊຶ່ງຢູ່ໃນອັດຕາທີ່ສູງກວ່າອັດຕາການກົກໜັງສືໃນລະດັບຊາດ ຊຶ່ງມີປະມານ 36 ສ່ວນຮ້ອຍ ໃນປີ 2003. ແມ່ຍິງບໍ່ເຂົ້າໃຈຂໍ້ແນະນຳ ຫຼືລະບຽບຫຼັກການຕ່າງໆ, ບໍ່ສາມາດເຂົ້າຮ່ວມໃນກິດຈະກຳຕ່າງໆຂອງໂຄງການ ຍ້ອນຂາດຄວາມເຂົ້າໃຈກ່ຽວກັບສະພາບ ແລະ ບັນຫາພື້ນຖານ. ແມ່ຍິງໂດຍ ສະເພາະແມ່ນແມ່ຍິງຊົນເຜົ່າລາວເທີງຈະໜ້າອາຍຫຼາຍ ແລະ ບໍ່ເຂົ້າໃຈການແນະນຳ, ບໍ່ກ້າອອກຄຳເຫັນ ແລະ ບໍ່ສາມາດສະແດງອອກໃນກອງປະຊຸມໄດ້.
- ແມ່ຍິງ ແລະ ຜູ້ຊາຍໄດ້ເຂົ້າເຖິງ ແລະ ຄວບຄຸມຊັບພະຍາກອນປ່າໄມ້ແຕກຕ່າງກັນ. ແມ່ຍິງສ່ວນຫຼາຍຈະເຂົ້າເຖິງຊັບພະຍາກອນເຄື່ອງປ່າຂອງດົງແລະຊັບພະຍາກອນໃນນ້ຳຕ່າງໆ. ຈາກການສຳຫຼວດໄດ້ສະແດງໃຫ້ເຫັນວ່າແມ່ຍິງ ແລະ ເດັກຍິງໄດ້ເຂົ້າປ່າ ຢູ່ໃກ້ບ້ານເພື່ອຫາເຄື່ອງປ່າຂອງດົງເປັນປະຈຳເຊັ່ນ: ໜໍ່ໄມ້, ເຫັດ, ໜໍ່ຫວາຍ, ໄມ້ຟືນ ແລະ ອື່ນໆ, ຊຶ່ງໃນຂະນະທີ່ຜູ້ຊາຍໄປຫາປາ, ກົບ ແລະ ສັດປ່າໜ້ອຍກວ່າແມ່ຍິງ. ຜູ້ຊາຍ ເຂົ້າເຖິງຊັບພະຍາກອນທີ່ພົວພັນເຖິງກິດຈະກຳການຜະລິດຫຼາຍກວ່າ, ເຊັ່ນ: ໄມ້ທ່ອນ ແລະ ໄມ້ໃຊ້ສອຍ. ຜູ້ຊາຍມີໂອກາດດ້ານອາຊີບ ແລະ ແຮງງານຮັບຈ້າງຫຼາຍກວ່າແມ່ຍິງ.
- ແມ່ຍິງມີມູມມອງ ແລະ ຕ້ອງການໃນການນຳໃຊ້ຊັບພະຍາກອນປ່າໄມ້ແຕກຕ່າງຈາກຜູ້ຊາຍ. ຜູ້ຊາຍມອງເຫັນປ່າໄມ້ເປັນແຫຼ່ງລາຍຮັບຕົ້ນຕໍ ແຕ່ແມ່ຍິງຊ້ຳພັດມອງເຫັນປ່າໄມ້ເປັນແຫຼ່ງອາຫານຕົ້ນຕໍໃນຊີວິດປະຈຳວັນຂອງເຂົາເຈົ້າ. ແມ່ຍິງຈະມັກໄມ້ຟືນ, ຖ່ານ, ອາຫານ ແລະໝາກໄມ້ຫຼາຍທີ່ສຸດ, ໃນຂະນະທີ່ຜູ້ຊາຍຈະຕ້ອງການໄມ້ທ່ອນແລະໄມ້ໃຊ້ສອຍຫຼາຍກວ່າ.
- ໂຄງການຈັດສັນ ແລະ ອະນຸລັກປ່າໄມ້ ຫຼື FOMACOP ທີ່ຜ່ານມາໄດ້ຈຳແນກຕໍ່ແມ່ຍິງໃນການຈ້າງແຮງງານ. ນອກຈາກນີ້, ໂຄງການຍັງສ້າງອາຊີບຫຼາຍຢ່າງ (ສ້າງໂອກາດດ້ານອາຊີບ) ໃຫ້ແກ່ຜູ້ຊາຍ ແຕ່ບໍ່ແມ່ນແມ່ຍິງ.
- ຜົນກະທົບຈາກຄຸນຄ່າທາງວັດທະນະທຳເຮັດໃຫ້ແມ່ຍິງດ້ອຍໂອກາດ ໃນການມີສ່ວນຮ່ວມໃນວຽກງານການເມືອງ ແລະ ຂະບວນການຕັດສິນໃຈຕ່າງໆ. ຕາມທຳມະດາແລ້ວຜູ້ຊາຍຈະເປັນຫົວໜ້າຄອບຄົວ ແລະ ຕັດສິນໃຈເລື້ອງຕ່າງໆໃນຄອບຄົວ. ແຕ່ເຖິງຢ່າງໃດກໍ່ຕາມ, ແມ່ຍິງຊົນເຜົ່າລາວລຸ່ມເປັນຜູ້ຮັກສາເງິນ ແລະ ສາມາດຕັດສິນໃຈຕໍ່ການໃຊ້ຈ່າຍປະເພດເລັກໆນ້ອຍໆໄດ້.
- ແມ່ຍິງມີຂອບເຂດຈຳກັດໃນການເຄື່ອນໄຫວໄປມາ ແລະ ຮີດຄອງປະເພນີບໍ່ອະນຸຍາດໃຫ້ເຂົາເຈົ້າອອກຈາກເຮືອນໄປປະຊຸມ ແລະ ຝຶກອົບຮົມຕ່າງໆ ຢູ່ໄກຈາກບ້ານ. ຜູ້ຊາຍບໍ່ມີຂໍ້ບັງຄັບທາງວັດທະນາທຳ ແລະ ມີຄວາມສະດວກໃນການໄປມາ.

- ການເຂົ້າເຖິງທີ່ດິນຂອງແມ່ຍິງມີຄວາມແຕກຕ່າງກັນອອກໄປຕາມແຕ່ລະຊົນເຜົ່າ. ແມ່ຍິງຊົນເຜົ່າລາວລຸ່ມມີສິດສືບທອດມູນມໍລະດົກທີ່ດິນ. ແຕ່ເຖິງຢ່າງໃດກໍ່ຕາມ, ຜູ້ຊາຍຈະເປັນຄົນໄດ້ສິດຕາມກົດໝາຍເຫຼົ່ານີ້ຢູ່ສະເໝີ. ຫົວໜ້າຄອບຄົວຈະເປັນຄົນເຊັນຊື່ໃນເອກະສານກຳມະສິດທີ່ດິນ, ຊຶ່ງສ່ວນຫຼາຍຈະແມ່ນຜູ້ຊາຍ. ແມ່ຍິງສູນເສຍກຳມະສິດທີ່ດິນຂອງເຂົາເຈົ້າຍ້ອນເຂົາເຈົ້າມີລະດັບການສຶກສາທີ່ຕ່ຳກວ່າ ແລະ ບໍ່ຮູ້ເລື້ອງກົດໝາຍ.ເຂົາເຈົ້າບໍ່ສາມາດໄປພົວພັນກັບພະນັກງານເພື່ອປະກອບເອກະສານຕ່າງໆ, ໂດຍສະເພາະແມ່ນການສື່ສານກັບພະນັກງານ ຫຼື ອຳນາດການປົກຄອງ, ຊຶ່ງສ່ວນຫຼາຍຈະເປັນຜູ້ຊາຍ.
- ວຽກແມ່ຍິງສ່ວນຫຼາຍແມ່ນວຽກໃນຄອບຄົວທີ່ບໍ່ໄດ້ຮັບຄ່າຈ້າງ, ອັນສືບເນື່ອງມາຈາກການແບ່ງງານລະຫວ່າງຍິງ-ຊາຍ ຕາມຮີດຄອງປະເພນີ, ຊຶ່ງຈຳກັດແມ່ຍິງບໍ່ໃຫ້ມີສ່ວນຮ່ວມຢ່າງເຕັມເມັດເຕັມໜ່ວຍໃນກິດຈະກຳປ່າໄມ້ ແລະ ຈຳກັດໂອກາດ ການມີສ່ວນຮ່ວມ ໃນການພັດທະນາເສດຖະກິດ-ສັງຄົມຕ່າງໆ.
- ພະນັກງານແມ່ຍິງໄດ້ຮັບການສົ່ງເສີມ/ຝຶກອົບຮົມຈາກໂຄງການໜ້ອຍກວ່າພະນັກງານຜູ້ຊາຍ. ແມ່ຍິງຍັງຂາດຈິດສຳນຶກ, ຄວາມຮູ້ ແລະ ຄວາມຊຳນິຊຳນານ ກ່ຽວກັບກິດຈະກຳຫາລາຍໄດ້ຕ່າງໆ.
- ໃນລະດັບເມືອງຍັງຂາດພະນັກງານແມ່ຍິງ ແລະ ມີຄວາມຈຳເປັນຕ້ອງປັບປຸງພະນັກງານສົ່ງເສີມພາກສະໜາມໃຫ້ມີແມ່ຍິງເພີ້ມຂຶ້ນ. ໃນລະດັບບ້ານ, ທັດສະນະຄະຕິທາງລົບຂອງຜູ້ຊາຍກໍ່ເປັນອຸປະສັກຕໍ່ວຽກງານບົດບາດຍິງ-ຊາຍ. ການຕີໂຕຕ່ຳຂອງແມ່ຍິງຫຼື ຂາດຄວາມເຊື່ອໝັ້ນໃນຕົນເອງຍິ່ງເປັນອຸປະສັກຫຼາຍກວ່າເກົ່າ. ນອກນັ້ນຍັງມີຄວາມຫຍຸ້ງຍາກໃນການໂອ້ລົມກັບແມ່ຍິງຍ້ອນມີອຸປະສັກດ້ານພາສາລາວ ແລະ ວັດທະນາທຳ. ໃນເຂດພື້ນທີ່ສຳຫຼວດບໍ່ມີແມ່ຍິງທີ່ເປັນຜູ້ນຳເຂັ້ມແຂງ. ຜູ້ຊາຍຂ້ອນຂ້າງໃຫ້ຄວາມສຳຄັນຕໍ່ການຮຽນຮູ້ຂອງແມ່ຍິງໜ້ອຍຫຼາຍ. ພະນັກງານລັດຍັງບໍ່ທັນເຂົ້າໃຈກ່ຽວກັບວຽກງານບົດບາດຍິງ-ຊາຍເທົ່າທີ່ຄວນ ແລະ ຍັງບໍ່ມີຄວາມຮູ້, ຄວາມສາມາດໃນການເຊື່ອມທັດສະນະບົດບາດຍິງ-ຊາຍເຂົ້າໃນກິດຈະກຳໂຄງການ.
- ແມ່ຍິງເຂົ້າຮ່ວມກິດຈະກຳໂຄງການໜ້ອຍກວ່າຜູ້ຊາຍ. ແມ່ຍິງຍັງບໍ່ຖືກຍອມຮັບໃຫ້ເຂົ້າຮ່ວມວຽກງານປ່າໄມ້ຫຼາຍເທົ່າທີ່ຄວນ. ແມ່ຍິງມີສ່ວນຮ່ວມໃນສະມາຄົມປ່າໄມ້ບ້ານ ບໍ່ເທົ່າທຽມກັບຜູ້ຊາຍ.ແມ່ຍິງມີໂອກາດໃນການປະກອບຄຳຄິດເຫັນໜ້ອຍຫຼາຍ. ຄວາມຕ້ອງການ ແລະ ບຸລິມະສິດຂອງແມ່ຍິງຍັງບໍ່ທັນໄດ້ພິຈາລະນາເທົ່າທີ່ຄວນ.
- ແມ່ຍິງມີສ່ວນຮ່ວມໃນທຸກໆກິດຈະກຳການຜະລິດຕາມແບບຄອງເດີມ,ປູກຝັງ-ລ້ຽງສັດແລະປ່າໄມ້.ການຮັບຈ້າງຕັດໄມ້ທ່ອນສ່ວນຫຼາຍແມ່ນຜູ້ຊາຍ ແລະ ຜູ້ຊາຍເປັນຄົນຄວບຄຸມການຂຸດຄົ້ນຊັບພະຍາກອນປ່າໄມ້ເພື່ອການຕະຫຼາດອື່ນໆ.

- ໃນທຸກໆບ້ານ, ແມ່ຍິງເປັນຄົນຮັບຜິດຊອບວຽກເຮືອນທັງໝົດ(ກິດຈະກຳລ້ຽງດູ). ແມ່ຍິງ ແລະ ຜູ້ຊາຍ ຍັງມີສ່ວນຮ່ວມໃນກິດຈະກຳການຜະລິດນຳກັນ, ຊຶ່ງລວມມີການປູກພືດຕ່າງໆ.ແມ່ຍິງເຮັດວຽກຫຼາຍຊົ່ວໂມງກ່ອນຜູ້ຊາຍ. ແຕ່ແມ່ຍິງເຂົ້າຮ່ວມປູກຕົ້ນໄມ້ ແລະ ກິດຈະກຳປ່າໄມ້ຊຸມຊົນໜ້ອຍກວ່າຜູ້ຊາຍ.
- ແມ່ຍິງເຂົ້າຮ່ວມກອງປະຊຸມບ້ານເພື່ອປຶກສາຫາລືກ່ຽວກັບຊັບພະຍາກອນປ່າໄມ້ ແລະ ໂຄງການບໍ່ເທົ່າທຽມກັບຜູ້ຊາຍ. ແມ່ຍິງຂາດການມີສ່ວນຮ່ວມໃນໂຄງການປ່າໄມ້. ພະນັກງານສົ່ງເສີມສ່ວນຫຼາຍເຊີນເອົາຄະນະກຳມະການປ່າໄມ້ເຂົ້າຮ່ວມກອງປະຊຸມປ່າໄມ້, ຊຶ່ງສ່ວນຫຼາຍແມ່ນຜູ້ຊາຍ, ພະນັກງານປ່າໄມ້ຍັງບໍ່ທັນໄດ້ເອົາໃຈໃສ່ຕໍ່ຄຳຄິດຄຳເຫັນຕ່າງໆຂອງແມ່ຍິງເທົ່າທີ່ຄວນ.

# ສາລະບານ


*ຄຳຂອບໃຈ.............................................................................................2*

*ບົດສະຫຼຸບຫຍໍ້ ..........................................................................................4*

*ອັກສອນຫຍໍ້..........................................................................................11*

*ພາກທີ 1. ແນະນຳເບື້ອງຕົ້ນ .......................................................................13*

1.1. ຄວາມເປັນມາຂອງການຄົ້ນຄວ້າ ........................................................ 13

1.2. ຈຸດປະສົງຂອງການສຶກສາ ................................................................ 14

1.3. ວິທີການສຶກສາ ............................................................................. 15

1.4. ການຄັດເລືອກກຸ່ມເປົ້າໝາຍ ............................................................... 16

*ພາກທີ 2. ສະພາບທົ່ວໄປຂອງປະເທດ .........................................................17*

*2.1. ສະພາບທົ່ວໄປຂອງປະເທດ ...............................................................17*

2.2. ບົດບາດຍິງ-ຊາຍ ແລະ ຄວາມທຸກຍາກໃນ ສປປ ລາວ ................................ 19

2.3. ດຳລັດ ແລະ ກົດໝາຍຕ່າງໆກ່ຽວກັບປ່າໄມ້............................................. 20

2.4. ນະໂຍບາຍກ່ຽວກັບປ່າໄມ້ຂອງລັດຖະບານ.............................................. 21

2.5. ການເຊື່ອມທັດສະນະບົດບາດຍິງ-ຊາຍ ໃນ ສປປ ລາວ ................................ 23

*ພາກທີ 3. ສະພາບເສດຖະກິດ-ສັງຄົມໃນເຂດສຶກສາ .........................................27*

3.1. ສະພາບໂດຍທົ່ວໄປ ........................................................................ 27

3.2.ລະດັບການສຶກສາ............................................................................ 28

3.3. ການຜະລິດກະສິກຳ.......................................................................... 29

3.4. ການລ້ຽງສັດ ................................................................................. 31

3.5. ການວິເຄາະສະພາບຊີວິດການເປັນຢູ່..................................................... 32

3.6. ສະພາບວັດທະນະທຳ ແລະ ຮີດຄອງປະເພນີ............................................. 34

3.7. ພາລະບົດບາດຂອງບັນດາອົງການຈັດຕັ້ງບ້ານ .......................................... 35

*ພາກທີ 4: ການວິເຄາະບົດບາດຍິງ-ຊາຍ ແລະ ປ່າໄມ້ ........................................40*

4.1. ການແບ່ງງານລະຫວ່າງຍິງ-ຊາຍ ........................................................... 40

4.2. ຜະລິດຕະພັນປ່າໄມ້ ......................................................................... 47

4.3. ລາຍໄດ້ຂອງຊາວບ້ານ....................................................................... 51

4.4. ການວິເຄາະການເຂົ້າເຖິງ ແລະ ຄວບຄຸມຊັບພະຍາກອນ.............................. 52

4.5. ການເຂົ້າເຖິງທີ່ດິນ............................................................................ 55

4.6. ອຳນາດ ແລະ ການຕັດສິນໃຈ................................................................. 57

4.7. ການມີສ່ວນຮ່ວມໃນການຄຸ້ມຄອງ ແລະ ຈັດສັນຊັບພະຍາກອນປ່າໄມ້ .......................... 58
4.8. ຂໍ້ຂັດແຍ່ງກ່ຽວກັບທີ່ດິນ ........................................................................................ 61
4.9. ການສຶກສາການຊົມໃຊ້ເວລາຂອງແມ່ຍິງ ແລະ ຜູ້ຊາຍ ............................................... 62
4.10. ຜົນກະທົບຂອງໂຄງການຈັດສັນ ແລະ ອະນຸລັກປ່າໄມ້ (FOMACOP)........................ 65
4.11. ແມ່ຍິງ ແລະ ຜູ້ຊາຍໃຫ້ບຸລິມະສິດແຕກຕ່າງກັນ ......................................................... 71
4.12. ຊາວນາສົນໃຈກິດຈະກຳປູກຕົ້ນໄມ້ ......................................................................... 71
*ພາກທີ 5: ການເຊື່ອມບົດບາດຍິງ-ຊາຍໃນໂຄງການ SUFORD ........................................ 74*
5.1. ຈຸດດີໃນການເຊື່ອມບົດບາດຍິງ-ຊາຍ ......................................................................... 74
5.2. ຈຸດອ່ອນຂອງການເຊື່ອມບົດບາດຍິງ-ຊາຍ ................................................................. 75
5.3.ເອກະສານໂຄງການ ................................................................................................... 76
5.4. ອັດຕາສ່ວນພະນັກງານຍິງ-ຊາຍ ................................................................................ 76
5.5. ວຽກພາກສະໜາມ ..................................................................................................... 77
5.6. ໂອກາດໃນການສົ່ງເສີມບົດບາດຍິງ-ຊາຍ .................................................................. 77
5.7. ການປະເມີນຄວາມຕ້ອງການຝຶກອົບຮົມ ..................................................................... 78
*ພາກທີ 6: ສະຫຼຸບ ແລະ ຂໍ້ສະເໜີແນະ ........................................................................... 80*
6.1. ສະຫຼຸບ ................................................................................................................. 80
6.2. ຂໍ້ສະເໜີແນະ ......................................................................................................... 82
*ເອກະສານຕິດຄັດ ......................................................................................................... 92*
*ເອກະສານອ້າງອີງ ......................................................................................................... 97*

## ຕາຕະລາງ


ຕາຕະລາງ 3.1: ລະດັບການສຶກສາຂອງຜູ້ທີ່ຖືກສຳພາດ 29
ຕາຕະລາງ 3.2: ອັດຕາຂາດເຂົ້າກິນຂອງຜູ້ທີ່ຖືກສຳພາດ 30
ຕາຕະລາງ 3.3: ຈຳນວນສັດລ້ຽງໃນ 6 ບ້ານ 31
ຕາຕະລາງ 3.4: ວິເຄາະສະພາບຊີວິດການເປັນຢູ່ຂອງຄອບຄົວ 32
ຕາຕະລາງ 3.5: ຕາຕະລາງວິເຄາະອົງການຈັດຕັ້ງ 36
ຕາຕະລາງ 4.1: ການແບ່ງງານລະຫວ່າງຍິງ-ຊາຍ 40
ຕາຕະລາງ 4.2 : ສະຫຼຸບສັງລວມການແບ່ງງານລະຫວ່າງຍິງ-ຊາຍ 45
ຕາຕະລາງ 4.3. ປະເພດຜະລິດຕະພັນປ່າໄມ້ 48
ຕາຕະລາງ 4.4. ຈຸດປະສົງຂອງການເກັບຜະລິດຕະພັນປ່າໄມ້ 50
ຕາຕະລາງ 4.5. ແຫຼ່ງລາຍໄດ້ 51
ຕາຕະລາງ 4.6.  ລາຍໄດ້ສະເລ່ຍປະຈຳເດືອນ (ກີບ) 51
ຕາຕະລາງ 4.7: ການເຂົ້າເຖິງ ແລະ ຄວບຄຸມຊັບພະຍາກອນຂອງແມ່ຍິງ ແລະ ຜູ້ຊາຍ 52
ຕາຕະລາງ 4.8: ກຳມະສິດທີ່ດິນ 56
ຕາຕະລາງ 4.9. ຈຳນວນຄຳຕອບຂອງຜູ້ທີ່ເຂົ້າຮ່ວມໃນກິດຈະກຳຂອງໂຄງການ 59
ຕາຕະລາງ 4.10 : ບັນຫາໃນການມີສ່ວນຮ່ວມຂອງໂຄງການ 60
ຕາຕະລາງ 4.11: ຂໍ້ຂັດແຍ່ງໃນບ້ານທີ່ສຶກສາ (ສະຫວັນນະເຂດ ແລະ ສາລະວັນ) 61
ຕາຕະລາງ 4.12 : ການນຳໃຊ້ເວລາຂອງແມ່ຍິງ ແລະ ຜູ້ຊາຍ (ຊົ່ວໂມງຕໍ່ວັນ) 62
ຕາຕະລາງ 4.13: ສະຫຼຸບສັງລວມການວິເຄາະບົດບາດຍິງ-ຊາຍ ໃນປະຈຸບັນ 63
ຕາຕະລາງ 4.14: ອັດຕາຄ່າຈ້າງແຮງງານ 65
ຕາຕະລາງ 4.15: ຕາຕະລາງວິເຄາະບັນຫາໂດຍກຸ່ມຍິງໃນບ້ານຄັດເລືອກ 67
ຕາຕະລາງ 4.16. ຕາຕະລາງວິເຄາະບັນຫາໂດຍກຸ່ມຊາຍໃນບ້ານຄັດເລືອກ 69
ຕາຕະລາງ 4.17: ຕາຕະລາງບຸລິມະສິດກ່ຽວກັບປ່າໄມ້ ຂອງແມ່ຍິງ ແລະ ຜູ້ຊາຍ 71
ຕາຕະລາງ 4.18: ຕາຕະລາງບຸລິມະສິດກິດຈະກຳພັດທະນາຂອງແມ່ຍິງ ແລະ ຜູ້ຊາຍ 72


## ຮູບພາບຕ່າງໆ


ຮູບທີ 1: ເຮືອນຊົນເຜົ່າປະໂກະທີ່ອ້ອມຮອບໂດຍໄຮ່ສາລີ 28
ຮູບທີ 2. ແມ່ຍິງເຜົ່າປະໂກະຕຳເຂົ້າດ້ວຍມື (2 ຄັ້ງຕໍ່ວັນ) 43
ຮູບທີ 3: ເດັກຍິງ (ຊົນເຜົ່າສ່ວຍ, ລາວເທິງ) ກັບຈາກໄປເອົາໄມ້ຟືນ 45
ຮູບທີ 4. ແມ່ຍິງລາວລຸ່ມຂາຍໜໍ່ໄມ້ ແລະ ກະຮອກຕາມແຄມທາງ 50

# ອັກສອນຫຍໍ້

| | |
|---|---|
| ADB | ທະນາຄານພັດທະນາອາຊີ |
| ASEAN | ສະມາຄົມນາໆຊາດອາຊີຕາເວັນອອກສ່ຽງໃຕ້ |
| CIDSE | ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານຈາກຝັ່ງ |
| CPC | ຄະນະກຳມະການແຜນການ ແລະ ການຮ່ວມມື |
| DAFO | ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ |
| DAFES | ກອງສົ່ງເສີມກະສິກຳ ແລະ ປ່າໄມ້ເມືອງ |
| DOF | ກົມປ່າໄມ້ |
| ESIA | ການປະເມີນຜົນກະທົບທາງສະພາບແວດລ້ອມ ແລະ ສັງຄົມ |
| FOMACOP | ໂຄງການຈັດສັນ ແລະ ອະນຸລັກປ່າໄມ້ |
| FRC | ສູນຄົ້ນຄ້ວາປ່າໄມ້ |
| GOF | ລັດຖະບານຟິນແລນ |
| GOL | ລັດຖະບານແຫ່ງ ສປປ ລາວ |
| HH | ຄົວເຮືອນ |
| ILO | ອົງການແຮງງານສາກົນ |
| IUCN | ສະຫະພັນອະນຸລັກສິ່ງແວດລ້ອມໂລກ |
| LECS | ການສຳຫຼວດການໃຊ້ຈ່າຍ ແລະ ຊົມໃຊ້ໃນຄົວເຮືອນ |
| LNFC | ແນວລາວສ້າງຊາດ |
| LWU | ສະຫະພັນແມ່ຍິງລາວ |
| LYO | ອົງການຈັດຕັ້ງຊາວໜຸ່ມ |
| JFM | ຈັດສັນປ່າແບບມີສ່ວນຮ່ວມ |
| LSFP | ໂຄງການຮ່ວມມືປ່າໄມ້ລາວ-ຊູແອດ |
| MAF | ກະຊວງກະສິກຳ ແລະ ປ່າໄມ້ |
| MIH | ກະຊວງອຸດສາຫະກຳ ແລະ ຫັດຖະກຳ |
| MOC | ກະຊວງການຄ້າ |
| MOE | ກະຊວງສຶກສາ |
| MOF | ກະຊວງການເງິນ |
| MRC | ຄະນະກຳມະການແມ່ນ້ຳຂອງ |
| NAFES | ກອງສົ່ງເສີມກະສິກຳ ແລະ ປ່າໄມ້ |
| NAFRI | ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ |
| NBCA | ພື້ນທີ່ອະນຸລັກຊີວະນາໆພັນແຫ່ງຊາດ |

| | |
|---|---|
| NGPES | ແຜນງານການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ |
| NGO | ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ |
| NNT | ປະເມີນຄວາມທຸກຍາກ ນາກາຍ-ນ້ຳເທີນ |
| NSEDP | ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ |
| NSC | ສູນສະຖິຕິແຫ່ງຊາດ |
| NT2 | ໂຄງການເຂື່ອນໄຟຟ້ານ້ຳເທີນ 2 |
| NTFP | ຜະລິດຕະພັນເຄື່ອງປ່າຂອງດົງ |
| PAFES | ກອງສົ່ງເສີມກະສິກຳ ແລະ ປ່າໄມ້ແຂວງ |
| PAFO | ພະແນກກະສິກຳ ແລະ ປ່າໄມ້ແຂວງ |
| PIP | ແຜນປະຕິບັດໂຄງການ |
| PMO | ຄຳສັ່ງແນະນຳຂອງນາຍົກລັດຖະມົນຕີ |
| PPA | ການປະເມີນຄວາມທຸກຍາກແບບມີສ່ວນຮ່ວມ |
| PRA | ການປະເມີນຊົນນະບົດແບບມີສ່ວນຮ່ວມ |
| PPIU | ໜ່ວຍງານປະຕິບັດໂຄງການຂັ້ນແຂວງ |
| PPT | ທີມງານກະກຽມໂຄງການ |
| RRA | ການປະເມີນຊົນນະບົດແບບເລັ່ງດ່ວນ |
| SFM | ຈັດສັນປ່າຜະລິດແບບຍືນນານ |
| SUFORD | ໂຄງການຈັດສັນປ່າຜະລິດແບບຍືນນານ ແລະ ພັດທະນາຊົນນະບົດ |
| SIDA | ອົງການພັດທະນາສາກົນຊູແອດ |
| STEA | ສະຖາບັນວິທະຍາສາດ, ເຕັກໂນໂລຍີ ແລະ ສະພາບແວດລ້ອມ |
| THB | ເງິນບາດໄທ |
| TOR | ຂໍ້ກຳນົດ/ແຜນວຽກ |
| TPFREC | ສູນສົ່ງເສີມປູກໄມ້ ແລະ ພື້ນຟູປ່າ |
| UNDP | ອົງການສະຫະປະຊາຊາດ ເພື່ອການພັດທະນາ |
| USD | ໂດລາສະຫະລັດ |
| VFA | ສະມາຄົມປ່າໄມ້ບ້ານ |
| VFC | ຄະນະປ່າໄມ້ບ້ານ |
| WB | ທະນາຄານໂລກ |
| WFP | ອົງການອາຫານໂລກ |
| WWF | ກອງທຶນອະນຸລັກສັດປ່າໂລກ |

ອັດຕາແລກປ່ຽນ (2004): USD 1.00 = 10,700 ກີບ

# ພາກທີ 1. ແນະນຳເບື້ອງຕົ້ນ

## 1.1. ຄວາມເປັນມາຂອງການຄົ້ນຄວ້າ

ໂຄງການຈັດສັນປ່າຜະລິດແບບຍືນນານ ແລະ ພັດທະນາຊົນນະບົດ (SUFORD) ສ້າງຕັ້ງຂຶ້ນເມື່ອປີ 2003 ຊຶ່ງເປັນໂຄງການ ພັດທະນາຊົນນະບົດ ແລະ ອະນຸລັກປ່າໄມ້ຮອບດ້ານ, ໂຄງການນີ້ຈັດຕັ້ງປະຕິບັດໂດຍ ກອງສົ່ງເສີມກະສິກຳ ແລະ ປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້, ຮ່ວມກັບລັດຖະບານຟິນແລນ ແລະ ທະນາຄານໂລກ. ແນວຄວາມຄິດຂອງໂຄງການແມ່ນສືບຕໍ່ຈັດສັນປ່າໄມ້ ແລະ ພັດທະນາບ້ານ ຊຶ່ງໄດ້ປະຕິບັດມາແລ້ວໃນໄລຍະເວລາ 6 ປີ ຂອງໂຄງການຈັດສັນ ແລະ ອະນຸລັກປ່າໄມ້ (FOMACOP) ທີ່ໄດ້ຮັບທຶນກູ້ຢືມຈາກທະນາຄານໂລກ ແລະ ສຸມໃສ່ພັດທະນາປ່າໄມ້ຂັ້ນບ້ານໃນແຂວງສະຫວັນນະເຂດ ແລະ ຄຳມ່ວນ. ເປົ້າໝາຍຕົ້ນຕໍຂອງໂຄງການກໍ່ເພື່ອຈັດຕັ້ງການຈັດສັນປ່າຜະລິດໃນທົ່ວປະເທດຢ່າງເປັນລະບົບເພື່ອຫຼຸດຜ່ອນຄວາມທຸກຍາກໃນເຂດຊົນນະບົດ, ປົກປັກຮັກສາຊີວະນາໆພັນ ແລະ ສົ່ງເສີມການຊົມໃຊ້ປ່າໄມ້ເພື່ອພັດທະນາເສດຖະກິດຂອງຊາດ ແລະ ທ້ອງຖິ່ນແບບຍືນນານ. ໂຄງການຈັດສັນປ່າຜະລິດແບບຍືນນານ ແລະ ພັດທະນາຊົນນະບົດ ປະກອບດ້ວຍ 4 ອົງປະກອບຄື: 1) ສ້າງຂີດຄວາມສາມາດ ໃນການຈັດສັນປ່າຜະລິດແບບຍືນນານ, (2) ຈັດສັນປ່າຜະລິດແບບຍືນນານ ແລະ ພັດທະນາບ້ານ, (3) ການຕິດຕາມ ແລະ ປະເມີນຜົນ ແລະ (4) ບໍລິຫານໂຄງການ.

ບົດບາດ ແລະ ສະພາບຂອງແມ່ຍິງປ່ຽນແປງໄປຕາມແຕ່ລະກຸ່ມຊົນເຜົ່າ. ແຕ່ໂດຍທົ່ວໄປແລ້ວ, ແມ່ຍິງດ້ອຍໂອກາດກວ່າຜູ້ຊາຍ ໃນຫຼາຍໆດ້ານເຊັ່ນ: ການໄດ້ຮັບຜົນປະໂຫຍດຈາກການພັດທະນາ, ການສຶກສາ, ສາທາລະນະສຸກ ແລະ ຄວາມທຸກຍາກ. ໃນຂອບເຂດຂອງໂຄງການ, ແມ່ຍິງໄດ້ຊົມໃຊ້ປ່າໄມ້, ໂດຍສະເພາະແມ່ນການຊົມໃຊ້ເພື່ອການຜະລິດ (ການເຮັດໄຮ່), ເຄື່ອງປ່າຂອງດົງ, ແລະ ນຳໃຊ້ເພື່ອການລ້ຽງສັດ.

ເຖິງແມ່ນວ່າໂຄງການທົດລອງທີ່ຜ່ານມາຈະພະຍາຍາມກະຕຸກຊຸກຍູ້ໃຫ້ແມ່ຍິງມາມີສ່ວນຮ່ວມ ໃນກິດຈະກຳຕ່າງໆຂອງການຄູ້ມຄອງ ແລະ ຈັດສັນປ່າໄມ້ກໍ່ຕາມ, ແຕ່ກິດຈະກຳເຫຼົ່ານີ້ ສ່ວນຫຼາຍແມ່ນຖືກປະຕິບັດໂດຍຜູ້ຊາຍ. ນອກຈາກນັ້ນ, ພະນັກງານຂອງລັດ, ຄະນະບ້ານ ຫຼື ທີວໜ້າກະສິກຳ, ລ້ຽງສັດ ແລະ ພະນັກງານປ່າໄມ້ລະດັບແຂວງ, ເມືອງ ສ່ວນຫຼາຍແມ່ນຜູ້ຊາຍ. ເພາະສະນັ້ນ, ໂຄງການນີ້ຈຶ່ງຫັນທິດເພື່ອເອົາໃຈໃສ່ເຮັດວຽກຮ່ວມກັບແມ່ຍິງເປັນພິເສດ, ໂດຍສະເພາະແມ່ນຈະສຸມໃສ່ໃຫ້ການຊ່ວຍເຫຼືອ ແລະ ພັດທະນາກິດຈະກຳຮ່ວມກັບແມ່ຍິງໃຫ້ຫຼາຍຂຶ້ນ.

ໂດຍທົ່ວໄປແລ້ວ ແມ່ຍິງ ແລະ ເດັກນ້ອຍ ເປັນພຽງຜູ້ນຳໃຊ້, ແຕ່ບໍ່ແມ່ນຜູ້ຈັດການຊັບພະຍາກອນທຳມະຊາດ. ແມ່ຍິງຊຶ່ງເປັນຜູ້ຊົມໃຊ້ຊັບພະຍາກອນທຳມະຊາດຍັງໄດ້ຮັບຜົນກະທົບຈາກປ່າໄມ້ເຊື່ອມໂຊມ ແລະ ບໍ່ໄດ້ເຂົ້າຮ່ວມຂະບວນການອະນຸລັກປ່າໄມ້

ບັນຫາບົດບາດຍິງ-ຊາຍ ແລະ ສິ່ງທີ່ກ່ຽວຂ້ອງ ຈະໄດ້ຮັບການພິຈາລະນາ ແລະ ບັນຈຸເຂົ້າໃນທຸກໆ ໄລຍະ ຂອງການພັດທະນາຂອງໂຄງການ (ວາງແຜນ, ພັດທະນາຫຼັກສູດ, ຝຶກອົບຮົມ, ປະຕິບັດ, ຕິດຕາມ ແລະ ປະເມີນຜົນ). ໂຄງການມີເປົ້າໝາຍ ສົ່ງເສີມການມີສ່ວນຮ່ວມ ແລະ ການມີໂອກາດເທົ່າທຽມກັນລະຫວ່າງຍິງ-ຊາຍ ໃນກິດຈະກຳປ່າໄມ້, ການຕັດສິນໃຈກ່ຽວກັບ ການຈັດສັນປ່າໄມ້ ແລະ ພັດທະນາບ້ານ, ຈະຝຶກອົບຮົມ ແລະ ກິດຈະກຳພັດທະນາທີ່ສຸມໃສ່ແມ່ຍິງເປັນພິເສດ. ທຸກໆການມີສ່ວນຮ່ວມ ແລະ ຂໍ້ມູນສຳຄັນຕ່າງໆຂອງກິດຈະກຳໂຄງການຈະຖືກແຍກຕາມ ເພດຍິງ ແລະ ຊາຍ.

ໃນລະດັບທ້ອງຖິ່ນ, ແມ່ຍິງ ແລະ ຜູ້ຊາຍມີບົດບາດ ແລະ ຄວາມຮັບຜິດຊອບໃນການຄຸ້ມຄອງຊັບພະຍາກອນປ່າໄມ້ແຕກຕ່າງກັນ ແລະ ພວກເຂົາຍັງມີຄວາມແຕກຕ່າງກັນໃນການເຂົ້າເຖິງ ແລະ ຄວບຄຸມ ຊັບພະຍາກອນປ່າໄມ້. ໂດຍທົ່ວໄປການແບ່ງງານລະຫວ່າງຍິງ-ຊາຍຈະມີຢູ່ໃນທຸກສັງຄົມ, ແຕ່ມັນແຕກຕ່າງໄປຕາມແຕ່ລະວັດທະນາທຳ, ພູມີປະເທດ ແລະ ເສດຖະກິດສັງຄົມຕ່າງໆ. ການວິເຄາະ ແລະ ຮັບຮູ້ເຖິງຄວາມແຕກຕ່າງເຫຼົ່ານີ້ ເປັນສິ່ງສຳຄັນ ທີ່ເຮັດໃຫ້ໂຄງການຈັດສັນປ່າໄມ້ແບບຍືນນານ ແລະ ພັດທະນາຊີວິດການເປັນຢູ່ຂອງຊາວບ້ານໄດ້ຮັບຜົນສຳເລັດ.

## 1.2. ຈຸດປະສົງຂອງການສຶກສາ

ຈຸດປະສົງໂດຍລວມ ຂອງການສຶກສາໃນຄັ້ງນີ້ ກໍ່ເພື່ອວິເຄາະ ລັກສະນະ ແລະ ຮູບແບບຂອງການຊົມໃຊ້ ແລະ ຄຸ້ມຄອງຊັບພະຍາກອນປ່າໄມ້ ຂອງແມ່ຍິງ ແລະ ຜູ້ຊາຍຂອງຊົນເຜົ່າຕ່າງໆ ໃນຂອບເຂດຂອງໂຄງການ, ເພື່ອໃຫ້ຂໍ້ສະເໜີແນະ ແລະ ຫາວິທີທາງໃຫ້ແມ່ຍິງ ແລະ ຜູ້ຊາຍ ມີສ່ວນຮ່ວມໃນການຈັດສັນຊັບພະຍາກອນປ່າໄມ້ ແລະ ພັດທະນາຊີວິດການເປັນຢູ່. ຈຸດປະສົງສະເພາະຂອງການສຶກສາມີດັ່ງລຸ່ມນີ້:

1. ວິເຄາະບົດບາດຕ່າງໆຂອງແມ່ຍິງແລະຜູ້ ຊາຍໃນການຄຸ້ມຄອງຊັບພະຍາກອນປ່າໄມ້ ໂດຍ ສະເພາະແມ່ນວິເຄາະໃນຂອບເຂດເປົ້າໝາຍຂອງໂຄງການ.
2. ວິເຄາະລະດັບການເຂົ້າເຖິງ ແລະ ການຄວບຄຸມຊັບພະຍາກອນປ່າໄມ້ຂອງແມ່ຍິງ ແລະ ຜູ້ຊາຍ.
3. ໃຫ້ຂໍ້ແນະນຳຕ່າງໆກ່ຽວກັບວິທີການສົ່ງເສີມໃຫ້ແມ່ຍິງ ແລະ ຜູ້ຊາຍມີສ່ວນຮ່ວມໃນການຄຸ້ມຄອງຊັບພະຍາກອນປ່າໄມ້ ແລະ ການປັບປຸງຊີວິດການເປັນຢູ່ໃນຂອບເຂດໂຄງການຕ່າງໆ.

4. ທົບທວນຄວາມສາມາດຂອງພະນັກງານໂຄງການໃນປະຈຸບັນ ແລະ ປະເມີນຄວາມຕ້ອງການເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ອົງການຈັດຕັ້ງໃນການເຊື່ອມທັດສະນະບົດບາດຍິງ-ຊາຍຂອງໃນວຽກງານໂຄງການ

ຄຳຖາມໃນການຄົ້ນຄ້ວາ:

1. ບົດບາດຍິງ-ຊາຍມີສາຍພົວພັນກັບການຊົມໃຊ້ຊັບພະຍາກອນປ່າໄມ້ຄືແນວໃດ? ບົດບາດຍິງ-ຊາຍ ມີອິດທິພົນຕໍ່ການຊົມໃຊ້ຊັບພະຍາກອນປ່າໄມ້ແນວໃດ?
2. ແມ່ຍິງ ແລະ ຜູ້ຊາຍມີບົດບາດ ແລະ ຄວາມຮັບຜິດຊອບໃນການຄູ້ມຄອງ ແລະ ຈັດສັນປ່າ ຫຍັງແດ່?
3. ໃຜເຂົ້າເຖິງ ແລະ ຄວບຄຸມຊັບພະຍາກອນປ່າໄມ້?
4. ຮູບແບບການຕັດສິນໃຈ ກ່ຽວກັບການຊົມໃຊ້ຊັບພະຍາກອນປ່າໄມ້ ມີຫຍັງແດ່?
5. ຄວາມສາມາດຂອງໂຄງການໃນການເຊື່ອມບົດບາດຍິງ-ຊາຍເຂົ້າໃນກິດຈະກຳຕ່າງໆມີຄືແນວໃດ?

## 1.3. ວິທີການສຶກສາ

ໃນຂັ້ນຕອນທຳອິດ, ທີມງານວິໃຈໄດ້ທົບທວນເອກະສານ, ບົດຄົ້ນຄ້ວາຜ່ານມາທີ່ພົວພັນເຖິງບັນຫາບົດບາດຍິງ-ຊາຍ ແລະ ການຄູ້ມຄອງປ່າໄມ້. ທີມງານໄດ້ທົບທວນ ແລະ ວິເຄາະບັນຫາການເຊື່ອມທັດສະນະບົດບາດຍິງ-ຊາຍ ໃນ ສປປ ລາວ ແລະ ໂຄງການຈັດສັນປ່າຜະລິດແບບຍືນນານ ແລະ ພັດທະນາຊົນນະບົດ. ທີມງານໄດ້ເກັບກຳຂໍ້ມູນກ່ຽວກັບສັງຄົມ ແລະ ສະພາບແວດລ້ອມ ໃນຂອບເຂດຂອງໂຄງການທີ່ກຳລັງປະຕິບັດຢູ່. ທີມງານໄດ້ສຶກສາເອກະສານຕ່າງໆຂອງໂຄງການ ແລະ ສົນທະນາກັບພະນັກງານໂຄງການ ກ່ຽວກັບຈຸດປະສົງ, ຍຸດທະສາດ ແລະ ກິດຈະກຳຕ່າງໆຂອງໂຄງການ ທີ່ພົວພັນເຖິງບັນຫາບົດບາດຍິງ-ຊາຍ. ຊຶ່ງລວມມີການທົບທວນຫຼັກສູດການຝຶກອົບຮົມ/ຄູ່ມື ແລະ ແຜນປະຕິບັດໂຄງການຕ່າງໆ.

ທີມງານໄດ້ນຳໃຊ້ວິທີການຕ່າງໆ ທັງແບບຄຸນນະພາບ ແລະ ປະລິມານ. ວິທີການປະເມີນຊົນນະບົດແບບສ່ວນຮ່ວມ (PRA) ແລະ ເຄື່ອງມືວິເຄາະບົດບາດຍິງ-ຊາຍ ໄດ້ຖືກນຳໃຊ້ໃນພາກສະໜາມ ເພື່ອຄົ້ນຫາສະພາບອັນແທ້ຈິງຂອງແມ່ຍິງ ແລະ ຜູ້ຊາຍ. ໃຊ້ການສັງເກດເບິ່ງການແບ່ງງານລະຫວ່າງຍິງ-ຊາຍ, ການເຮັດວຽກໜັກຂອງແມ່ຍິງ, ຜູ້ຊາຍ ແລະ ການຊົມໃຊ້ເວລາຂອງຊົນເຜົ່າຕ່າງໆ ແລະ ພ້ອມກັນນັ້ນກໍ່ໃຊ້ການສັງເກດອື່ນໆໃນພາກສະໜາມ, ຊຶ່ງໃຫ້ຂໍ້ມູນທີ່ມີຜົນປະໂຫຍດຕໍ່ການວິເຄາະຂໍ້ມູນ ແລະ ສົມທຽບກັບແບບຟອມສອບຖາມຕ່າງໆ. ທີມງານສຶກສາໄດ້ຈັດກອງປະຊຸມປຶກສາຫາລືກັບຜູ້ມີສ່ວນຮ່ວມໃນລະດັບຕ່າງໆ, ເຊັ່ນ: ລະດັບແຂວງ, ເມືອງ ແລະ ບ້ານ

## 1.4. ການຄັດເລືອກກຸ່ມເປົ້າໝາຍ

ທີມງານໄດ້ຄັດເລືອກເອົາທັງໝົດ 6 ບ້ານ ໃນ 3 ເມືອງ ໂດຍອີງຕາມລັກສະນະການດຳລົງຊີວິດຂອງເຂົາເຈົ້າ. ທີມງານໄດ້ຄັດເລືອກເອົາບ້ານທີ່ມີຊົນເຜົ່າດຽວ( ຫຼື ສ່ວນຫຼາຍເຜົ່າດຽວກັນ) ໃນແຕ່ລະເຂດຂອງການສຶກສາ ເພື່ອເປັນການສົມທຽບບ້ານຕໍ່ບ້ານ. ທີມງານໄດ້ຄັດເລືອກເອົາບ້ານລາວລຸ່ມ 2 ບ້ານ, ລາວເທິງ 4 ບ້ານ ເພື່ອສົມທຽບຄວາມແຕກຕ່າງຂອງແຕ່ລະຊົນເຜົ່າ. ທີມງານໄດ້ເຮັດວຽກຮ່ວມກັບຄະນະບ້ານ/ກຸ່ມຕ່າງໆ, ເຊັ່ນ: ນາຍບ້ານ, ແນວໂຮມ, ສະຫະພັນແມ່ຍິງບ້ານ, ກຸ່ມແມ່ຍິງ ແລະ ຜູ້ຊາຍ. ຂະໜາດຂອງກຸ່ມຕົວຢ່າງແມ່ນຄັດເລືອກເອົາ 24 % ຂອງຈຳນວນຄົວເຮືອນທັງໝົດຂອງແຕ່ລະບ້ານ. ທີມງານໄດ້ທຳການສຳພາດທັງໝົດ 110 ຕົວຢ່າງ (ຍິງ 53 ແລະ ຊາຍ 57) ໂດຍນຳໃຊ້ວິທີການສຳພາດແບບເຄິ່ງໂຄງສ້າງຕາມແບບຟອມຄຳຖາມ.

# ພາກທີ 2. ສະພາບທົ່ວໄປຂອງປະເທດ

## 2.1. ສະພາບທົ່ວໄປຂອງປະເທດ

ສປປ ລາວ ເປັນປະເທດທີ່ບໍ່ມີຊາຍແດນຕິດຈອດກັບທະເລ ແລະ ເປັນພູຜາສູງຊັນ. ມີເນື້ອທີ່ທັງໝົດ 236.800 ກິໂລຕາແມັດ ແລະ ມີພົນລະເມືອງປະມານ 5,4 ລ້ານ ກວ່າຄົນ ໃນປີ 2002. ປະມານ 89% ຂອງພົນລະເມືອງທັງໝົດແມ່ນດຳລົງຊີວິດໃນເຂດຊົນນະບົດ,ເຂົາເຈົ້າສ່ວນຫຼາຍແມ່ນດຳລົງຊີວິດແບບພໍຢູ່ພໍກິນ. ສປປ ລາວ ສ່ວນຫຼາຍຈະເພິ່ງພາອາໃສຊັບພະຍາກອນທຳມະຊາດເພື່ອປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ແລະ ສ້າງລາຍຮັບເປັນເງິນຕາຕ່າງປະເທດ. ຜະລິດຕະພັນໄມ້ກວມເອົາ 35% - 45% ຂອງລາຍຮັບຈາກການສົ່ງອອກທັງໝົດ ແລະ ປ່າໄມ້ກວມເອົາປະມານ 16% ຂອງລາຍຮັບແຫ່ງຊາດ (GDP). ປະມານ 80% ຂອງພະລັງງານຊົມໃຊ້ທັງໝົດຂອງປະເທດແມ່ນມາຈາກໄມ້. ປ່າໄມ້ຍັງຕອບສະໜອງເຄື່ອງປ່າຂອງດົງ, ຊຶ່ງລວມມີອາຫານ ແລະ ຢາປົວພະຍາດ, ພ້ອມກັນນັ້ນປ່າໄມ້ຍັງຊ່ວຍປົກປັກຮັກສາສະພາບແວດລ້ອມ,ເປັນທ່າແຮງໃຫ້ວຽກງານກະສິກຳ ແລະ ພະລັງງານອີກດ້ວຍ. ນອກຈາກນີ້, ປ່າໄມ້ໃນ ສປປ ລາວ ຍັງປະກອບດ້ວຍ ຊີວະນາໆພັນ ທີ່ມີຄວາມສຳຄັນຕໍ່ພາຍໃນ ແລະ ຕ່າງປະເທດ ອີກດ້ວຍ.

ສປປ ລາວ ປະກອບໄປດ້ວຍຊັບພະຍາກອນປ່າໄມ້ອັນອຸດົມສົມບູນ. ແຕ່ເຖິງຢ່າງໃດກໍ່ຕາມ, ຄວາມອຸດົມສົມບູນຂອງປ່າໄມ້ ໃນ ສປປ ລາວ ໄດ້ສູນເສຍໄປຢ່າງໄວວາ. ໃນປີ 1940 ໃນທົ່ວປະເທດມີປ່າໄມ້ເຖິງ 17 ລ້ານເຮັກຕາ, ແລະ ກວມເອົາ 70% ຂອງເນື້ອທີ່ທັງໝົດ. ເນື້ອທີ່ປ່າໄມ້ປົກຄຸມລຸດລົງມາເປັນ 47% ຂອງເນື້ອທີ່ທັງໝົດ ໃນປີ 1989 (ບົດລາຍງານການສຳຫຼວດປ່າໄມ້ແຫ່ງຊາດ). ການຖາງປ່າເຮັດໄຮ່ ແລະ ການລັກລອບຕັດໄມ້ຢ່າງຊະຊາຍ ແມ່ນສາເຫດຕົ້ນຕໍທີ່ເຮັດໃຫ້ປ່າໄມ່ເຊື່ອມໂຊມ ອັນເປັນຜົນສະທ້ອນໃຫ້ແກ່ຊີວະນາໆພັນ. ປ່າດົງປະມານ 60.000-70.000 ເຮັກຕາ ຖືກສູນເສຍໄປ ໃນແຕ່ລະປີ. ໃນຂະນະທີ່ປ່າເລົ່າປະມານ 100.000 ເຮັກຕາ ຖືກຖາງ ແລະຈູດເພື່ອເຮັດໄຮ່ໃນແຕ່ລະປີ. ການກໍ່ສ້າງທາງ ແລະ ເຂື່ອນ, ລ່າສັດ, ການຄ້າໄມ້ ແລະ ສັດປ່າແບບຜິດກົດໝາຍ ເປັນສິ່ງທີ່ຂົ່ມຂູ່ຊີວະນາໆພັນ ໃນ ສປປ ລາວ.

ຊັບພະຍາກອນປ່າໄມ້ ມີບົດບາດສຳຄັນຢ່າງຍິ່ງ ຕໍ່ເສດຖະກິດ ຂອງ ສປປ ລາວ, ຊຶ່ງມັນຊ່ວຍປັບປຸງຊີວິດການເປັນຢູ່ຂອງຊາວຊົນນະບົດ ແລະ ເສດຖະກິດຂອງຊາດ. ການຕັດໄມ້ສົ່ງອອກແມ່ນແຫຼ່ງລາຍຮັບອັນສຳຄັນຂອງຊາດ. ຜະລິດຕະພັນປ່າໄມ້ທີ່ສົ່ງອອກ ກວມເອົາອັດຕາສ່ວນຫຼາຍຂອງລາຍຮັບເປັນເງິນຕາຕ່າງປະເທດ. ອຸດສາຫະກຳໄມ້ ຍັງສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນປະມານ 18.300 ຕຳແໜ່ງ ໃນປີ 2001. ປະຊາຊົນເຂດຊົນນະບົດສ່ວນຫຼາຍ ແມ່ນອາໃສປ່າໄມ້ເປັນຕົ້ນຕໍ ໂດຍສະເພາະແມ່ນ ແຫຼ່ງອາຫານ, ວັດຖຸດິບ, ຢາພື້ນເມືອງ ແລະ ລາຍຮັບ. ຕາມທຳມະ

ດາແລ້ວຄົນທຸກທີ່ສຸດຈະອາໃສເຄື່ອງປ່າຂອງດົງຫຼາຍທີ່ສຸດ ແລະ ເພິ່ງພາອາໃສປ່າເປັນບ່ອນຄ້ຳປະກັນດ້ານສະບຽງອາຫານໃນເວລາຈຳເປັນ. ບົດສຶກສາຮ່ວມກັນລະຫວ່າງກົມປ່າໄມ້ ແລະ ສະຫະພັນອະນຸລັກໂລກ (IUCN) ພົບວ່າ ລາຍຮັບຂອງຄອບຄົວໂດຍສະເລ່ຍປະມານ 55% ແມ່ນມາຈາກເຄື່ອງປ່າຂອງດົງ. ແຕ່ຕົວເລກນີ້ອາດເພີ່ມຂຶ້ນຮອດ 90% ສຳລັບຄອບຄົວທີ່ທຸກທີ່ສຸດ (ໂຟບສ໌ ແລະ ເກດພັນ,1997).

ສປປ ລາວ ເປັນປະເທດໜຶ່ງທີ່ມີຊົນເຜົ່າຫຼາຍໃນໂລກ, ຊຶ່ງເຮັດໃຫ້ ສປປ ລາວ ເປັນປະເທດທີ່ຮັ່ງມີດ້ານວັດທະນະທຳ. ເມື່ອໄວໆນີ້ ແນວລາວສ້າງຊາດ (LFNC) ໄດ້ຮັບຮອງເອົາ 47 ຊົນເຜົ່າ, ຊຶ່ງຈັດຢູ່ໃນ 4 ຕະກຸນພາສາໃຫຍ່ຄື: ໄທ-ກະໄດ, ມອນຂະແມ, ມົ້ງ-ມ້ຽນ ແລະ ຕິເບດ-ພະມ້າ. ວັດທະນາອັນລ້ຳຄ່າ ແລະ ຄວາມເຊື່ອຖື ອັນຫຼາກຫຼາຍນີ້ ມີອິດທິພົນຕໍ່ການປະພຶດ, ກິດຈະກຳ ແລະ ສາຍພົວພັນຕ່າງໆຊຶ່ງກັນແລະກັນ (RTI, 2000), ເພາະສະນັ້ນມັນຈຶ່ງມີຜົນກະທົບໂດຍກົງຕໍ່ບົດບາດຍິງ-ຊາຍ.

ແມ່ຍິງສາມາດທຳການຜະລິດ ໄປພ້ອມໆກັບການດູແລເຮືອນຊານຂອງເຂົາເຈົ້າ ຢ່າງຕໍ່ເນື່ອງ. ພວກເຂົາຍັງປະກອບສ່ວນໃນກິດຈະກຳສ້າງລາຍໄດ້ຂະໜາດນ້ອຍ ແລະ ຜະລິດຫັດຖະກຳ ເພື່ອສ້າງລາຍໄດ້ໃຫ້ແກ່ຄອບຄົວ. ໂດຍທົ່ວໄປແລ້ວ, ແມ່ຍິງລາວເປັນຜູ້ຄ້ຳປະກັນດ້ານຊີວິດການເປັນຢູ່ຂອງຄອບຄົວ ໂດຍຜ່ານກິດຈະກຳການສ້າງລາຍໄດ້, ຜະລິດກະສິກຳ ແລະ ຫັດຖະກຳ[1].

ແຮງງານແມ່ຍິງ ປະມານ 69,5% ແລະ ຜູ້ຊາຍປະມານ 55,6% ແມ່ນເຮັດວຽກກ່ຽວກັບກະສິກຳ. ເຂົ້າໜຽວແມ່ນອາຫານຕົ້ນຕໍຂອງປະຊາຊົນລາວ, ສະນັ້ນກິດຈະກຳທີ່ສຳຄັນທີ່ສຸດຂອງຊາວນາກໍ່ແມ່ນການຜະລິດເຂົ້າໃນທົ່ງນາເຂດທົ່ງພຽງ ເປັນສ່ວນຫຼາຍ ແລະ ຖາງປ່າເຮັດໄຮ່ເທິງພູເຂົາ.

ໂດຍທົ່ວໄປແລ້ວ, ແມ່ຍິງສ່ວນຫຼາຍຮັບຜິດຊອບການຄັດເລືອກແນວພັນ ເພື່ອປູກໃນແຕ່ລະດູການ. ນອກຈາກນັ້ນ ແມ່ຍິງຍັງສ້າງເຄືອຂ່າຍ ເພື່ອແລກປ່ຽນແນວພັນ ພາຍໃນໝູ່ບ້ານນຳອີກ. ຜູ້ຊາຍທົ່ວໆໄປ ອາດຈະເປັນຄົນ ຮັບເອົາທຶນກູ້ຢືມ ແລະ ຫວ່ານປຸ໋ຍ, ສຳລັບລາວລຸ່ມ, ແມ່ຍິງ ຈະເປັນຜູ້ຕັດສິນໃຈເລື້ອງການໃຊ້ຈ່າຍໃນຄອບຄົວ ແລະ ຕາມປົກກະຕິແມ່ຍິງຈະເປັນຜູ້ປູກເຂົ້າແຕ່ເປັນຄົນໄດ້ຮັບຂໍ້ມູນຂ່າວສານກ່ຽວກັບການປັບປຸງແນວພັນເພື່ອໃຫ້ໄດ້ສະມັດຕະພາບຂອງການຜະລິດສູງໜ້ອຍກວ່າຜູ້ຊາຍ. ໂດຍທົ່ວໄປແລ້ວ, ແມ່ຍິງຈະເປັນຄົນຮັບຜິດຊອບຂາຍຜົນຜະລິດຕ່າງໆທີ່ເຫຼືອກິນ ເຫຼືອໃຊ້ ຂອງຄອບຄົວ.

ການຖາງປ່າເຮັດໄຮ່ ແມ່ນການຜະລິດກະສິກຳ ທີ່ເຄີຍປະຕິບັດມາຢູ່ຫຼາຍໆແຫ່ງຂອງ ສປປ ລາວ, ແຕ່ຂ້ອນຂ້າງຈະມີທ່າອ່ຽງລຸດລົງ ເມື່ອທຽບໃສ່ປີ 1997/98. ອັດຕາການຍ້າຍບ່ອນທຳ

---

[1] *ບົດບາດຍິງ-ຊາຍ ແລະ ເອກະສານດິນ: ທັດສະນະບົດບາດຍິງ-ຊາຍ ຂອງສັງຄົມ ສົ່ງຜົນສະທ້ອນຕໍ່ແມ່ຍິງ ແນວໃດ?, ສູນກາງສະຫະພັນແມ່ຍິງລາວ, ສູນຂໍ້ມູນຂ່າວສານບົດບາດຍິງ-ຊາຍ ເພື່ອການພັດທະນາ, ສະບັບປັບປຸງໃໝ່, ກໍລະກົດ,2000.*

ການຜະລິດ (ຖາງ ແລະ ຈູດ) ກໍ່ໄດ້ລຸດລົງເກືອບເຄິ່ງໜຶ່ງ ເມື່ອທຽບໃສ່ແຕ່ກ່ອນ ໃນຊຸມປີ 1997/98 [ການສຳຫຼວດການໃຊ້ຈ່າຍ ແລະ ຊົມໃຊ້ຂອງຄົວເຮືອນ, 2003]. ໃນການເຮັດໄຮ່ ແມ່ຍິງຍິ່ງເຮັດວຽກໜັກກວ່າກິດຈະກຳອື່ນໆ ຊຶ່ງຕ້ອງຍ່າງໄປໄຮ່ ເປັນໄລຍະທາງອັນຍາວໄກ, ແບກຫາບເຂົ້າ ແລະ ຜັກ ກັບມາເຮືອນເພື່ອການບໍລິໂພກໃນຄອບຄົວ. ການເສຍຫຍ້າໄຮ່ ຖືວ່າເປັນວຽກຂອງແມ່ຍິງ. ການຈຳກັດໃຫ້ທຳການຜະລິດແບບໝູນວຽນ ເນື່ອງຈາກມີເນື້ອທີ່ທຳການຜະລິດຈຳກັດເປັນສາເຫດເຮັດໃຫ້ແມ່ຍິງຊົນເຜົ່າມີຄວາມຍຸ້ງຍາກຂື້ນກວ່າເກົ່າເພາະຕ້ອງໃຊ້ເວລາເສຍຫຍ້າຫຼາຍຂື້ນ ແລະ ຜົນຜະລິດຊ້ຳພັດຕ່ຳລົງ.

ຊີວິດຂອງແມ່ຍິງຕິດພັນກັບປ່າໄມ້ຫຼາຍເພາະວ່າເຂົາເຈົ້າເປັນຄົນເຂົ້າປ່າເປັນປົກກະຕິເພື່ອເກັບຟືນ ແລະ ອາຫານ, ເຊັ່ນ: ຜັກ, ໜໍ່ໄມ້, ໝາກໄມ້, ຢາສະໝູນໄພ ຄືກັນກັບແມ່ຍິງໃນຕົວເມືອງຈະຕ້ອງໄປຕະຫຼາດຫຼືຮ້ານຊັບພະສິນຄ້າທີ່ເປັນໜ້າວຽກປະຈຳວັນຂອງເຂົາເຈົ້າ. ແມ່ຍິງມີຄວາມຮູ້ດ້ານຜະລິດຕະພັນປ່າໄມ້ ແລະ ມີສ່ວນພົວພັນໃນການປົກປັກຮັກສາ ແລະ ຟື້ນຟູປ່າ.

## 2.2. ບົດບາດຍິງ-ຊາຍ ແລະ ຄວາມທຸກຍາກໃນ ສປປ ລາວ

ການປະເມີນຄວາມທຸກຍາກແບບມີສ່ວນຮ່ວມ ໂດຍ ສູນສະຖິຕິແຫ່ງຊາດ ໃນປີ 2001 ໄດ້ສະແດງໃຫ້ເຫັນວ່າ "*ແມ່ຍິງຍາມໃດກໍ່ເຮັດວຽກໜັກກວ່າຜູ້ຊາຍ ແລະ ມີບົດບາດໃນການຕັດສິນໃຈໜ້ອຍກວ່າ. ແຕ່ເຖິງຢ່າງໃດກໍ່ຕາມ, ບົດບາດຍິງ-ຊາຍ ມີເອກະລັກໄປຕາມແຕ່ລະຊົນເຜົ່າ ແລະ ການຄົ້ນຄ້ວາໄດ້ຄົ້ນພົບຄວາມແຕກຕ່າງຫຼາຍຢ່າງ. ຄວາມບໍ່ດຸ່ນດ່ຽງຂອງແຮງງານໃນຄອບຄົວ ເປັນປັດໃຈໜຶ່ງທີ່ເປັນຕົວກຳນົດບົດບາດແບບຄອງເດີມຂອງຜູ້ຊາຍລຸດລົງ ຫຼື ຖືກສູນຫາຍໄປ , ເຊັ່ນ: ລ່າເນື້ອ, ກອງຫຼອນ, ທະຫານ ຫຼື ຕັດໄມ້ທ່ອນ, ແຕ່ບົດບາດຂອງແມ່ຍິງຍັງຄົງຮັກສາໄວ້ເໝືອນເດີມ. ຫຍ້າໃນກາງໄຮ່ຫຼາຍຂື້ນ ເນື່ອງຈາກບັນຫາລະບົບນິເວດວິທະຍາ ບວກກັບບັນຫາການຈັດສັນທີ່ດິນ*[2] *ເປັນສາເຫດຕ້ອງເພີ່ມແຮງງານແມ່ຍິງຫຼາຍຂື້ນ ເພາະວຽກດັ່ງກ່າວນີ້ຖືກຈັດໃຫ້ເປັນ "ວຽກແມ່ຍິງ" ເຊັ່ນດຽວກັນກັບການລ້ຽງສັດປະເພດນ້ອຍກໍ່ແມ່ນວຽກຂອງແມ່ຍິງ ຄືກັນ ແລະ ເມື່ອພະຍາດລະບາດສັດລ້ຽງເຫຼົ່ານີ້ ແຮງງານຂອງແມ່ຍິງທີ່ທຸ່ມເທໃສ່ກໍ່ສູນເສຍໄປຫລ້າໆ. ມັນມີຄວາມຈຳເປັນຢ່າງຍິ່ງທີ່ຈະຕ້ອງວິໄຈ ແລະ ຄົ້ນຫາບົດບາດຍິງ-ຊາຍຂອງຊົນເຜົ່າຕ່າງໆ. ສິ່ງນີ້ອາດຈະໃຫ້ຂໍ້ມູນພື້ນຖານໃຫ້ແກ່ການສຶກສາບົດບາດຍິງ-ຊາຍ ແລະ ສ້າງແຜນພັດທະນາໃນຫຼາຍໆລັກສະນະ*".

ໃນຊີວິດປະຈຳວັນຂອງຄົນລາວສ່ວນຫຼາຍ ຈະເພິ່ງພາອາໃສເຂົ້າ ແລະ ສັດລ້ຽງຂອງເຂົາເຈົ້າ. ຊາວບ້ານທີ່ດຳລົງຊີວິດຢູ່ເຂດພູດອຍ ສ່ວນຫຼາຍຈະເຮັດໄຮ່ ເພື່ອປູກເຂົ້າ, ພືດ ແລະ ລ້ຽງສັດເພື່ອບໍລິໂພກພາຍໃນຄອບຄົວ. ບັນຫາຄວາມທຸກຈົນ ທີ່ພົບພໍ້ໃນລະບົບຊີວິດການເປັນຢູ່ຂອງຄອບຄົວ

---

[2] ການຈັດສັນທີ່ດິນຈຳກັດບໍລິເວນບ່ອນເຮັດໄຮ່, ຫຼື ເຮັດໄຮ່ປ່າເລົ່າຈະມີຫຍ້າຫຼາຍກວ່າໄຮ່ທີ່ຖາງປ່າດົງດິບໜາ

ແມ່ນ: ຂາດອາຫານ, ລາຍຮັບຕ່ຳ, ບໍ່ມີເງິນ ແລະ ຫນີ້ສິນ[3]. ສາມສາເຫດຕົ້ນຕໍຂອງຄວາມທຸກຈົນແມ່ນສະມັດຕະພາບຂອງເຂົ້າໄຮ່ຫຼຸດລົງ; ເຄື່ອງປ່າຂອງດົງນັບມື້ນັບຫຼຸດລົງ; ແລະ ແຫຼ່ງລາຍຮັບຂອງເຂດຊົນນະບົດມີຂອບເຂດຈຳກັດ.

## 2.3. ດຳລັດ ແລະ ກົດໝາຍຕ່າງໆກ່ຽວກັບປ່າໄມ້

*ດຳລັດເລກທີ່ 169, 1993 ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້*

ດຳລັດນີ້ແບ່ງປ່າໄມ້ອອກເປັນ 5 ປະເພດ, ພ້ອມນັ້ນກໍ່ໄດ້ຈັດລະບົບແບ່ງດິນແບ່ງປ່າ, ຊຶ່ງເປັນບ່ອນອີງພື້ນຖານໃຫ້ແກ່ຍຸດທະສາດຂອງລັດຖະບານ ເພື່ອບັນລຸຕາມຈຸດປະສົງຂອງຂະແໜງການປ່າໄມ້ ແລະ ແນໃສ່ເຮັດໃຫ້ຊັບພະຍາກອນປ່າໄມ້ມີຄວາມສົມດຸນ. ປ່າໄມ້ທັງ 5 ຊະນິດລວມມີ:

- *ປ່າປ້ອງກັນ*- ເພື່ອປ້ອງກັນແຫຼ່ງນ້ຳ ຫຼື ເຂດອ່າງໂຕ່ງນ້ຳ;
- *ປ່າຜະລິດ*- ເພື່ອຮັບປະກັນການຕອບສະໜອງໄມ້ທີ່ເປັນສິນຄ້າ ແລະ ເຄື່ອງປ່າຂອງດົງແບບຍືນນານ;
- *ປ່າສະຫງວນ*- ເພື່ອປົກປັກຮັກສາສະພາບແວດລ້ອມ, ເພື່ອການຄົ້ນຄວ້າທົດລອງທາງວິທະຍາສາດ ແລະ ຄຸນຄ່າທາງວັດທະນາທຳ;
- *ປ່າຟື້ນຟູ*- ເຂດທີ່ຈະກາຍເປັນປ່າ-ຕອບສະໜອງຄວາມຕ້ອງການຂອງຊຸມຊົນ; ແລະ
- *ປ່າເຊື່ອມໂຊມ ຫຼື ເຂດບໍ່ມີໄມ້* – ເນື້ອທີ່ໆບໍ່ສາມາດຊົມໃຊ້ໄມ້ໄດ້ຕໍ່ໄປ, ແຕ່ສາມາດນຳໃຊ້ເປັນພື້ນທີ່ຜະລິດກະສິກຳໄດ້.

*ກົດໝາຍປ່າໄມ້, ກັນຍາ 1996*

ກົດໝາຍປ່າໄມ້ ປະກອບມີຫຼາຍໆມາດຕາ. ມີບາງບົດບັນຍັດທີ່ກ່ຽວຂ້ອງຄື: ***ມາດຕາ 2*** ໄດ້ສະແດງໃຫ້ເຫັນຄວາມສຳຄັນຂອງປ່າໄມ້ຕໍ່ປະຊາຊົນທ້ອງຖິ່ນ ຊຶ່ງລະບຸໄວ້ວ່າ "ການດຳລົງຄົງຕົວຂອງປ່າໄມ້ ເປັນສິ່ງຈຳເປັນ ສຳລັບການປົກປັກຮັກສາ ແລະ ອະນຸລັກສິ່ງແວດລ້ອມ ແລະ ການດຳລົງຊີວິດຂອງມະນຸດ". ***ມາດຕາ 30*** " ກົດໝາຍຮັບຮອງເອົາການຊົມໃຊ້ປ່າໄມ້ຕາມຮີດຄອງປະເພນີທີ່ສອດຄ່ອງກັບລະບຽບປ່າໄມ້ ແລະ ທີ່ດິນປ່າໄມ້ຂອງບ້ານ ຊຶ່ງອຳນາດການປົກຄອງບ້ານ ເປັນຜູ້ກຳນົດອອກ ໂດຍສົມທົບກັບອຳນາດການປົກຄອງເມືອງ ແລະ ແຂວງ ຕາມລຳດັບ. ***ມາດຕາ 63*** ວ່າ

---

[3] ຊາວຊົນນະບົດເວົ້າວ່າ ທຸກຍ້ອນ ບໍ່ມີສັດລ້ຽງ, ເພາະສັດລ້ຽງແມ່ນຮູບແບບການປະຢັດ ແລະ ໃຊ້ເພື່ອການລົງທຶນຕົ້ນຕໍໃນເຂດຊົນນະບົດຕ່າງໆ.

ດ້ວຍການສ້າງແຜນຄຸ້ມຄອງຊັບພະຍາກອນປ່າໄມ້ລະດັບບ້ານ, ລະບຸໄວ້ວ່າ: ອຳນາດການປົກຄອງບ້ານມີຄວາມຮັບຜິດຊອບ "ສ້າງລະບຽບການສະເພາະ ທີ່ຖືກຕ້ອງກັບສະພາບຕົວຈິງຂອງບ້ານ". ໂດຍໄດ້ຮັບການຊ່ວຍເຫຼືອຈາກພະນັກງານກົມປ່າໄມ້, ວຽກດັ່ງກ່າວນີ້ຄວນອະນຸຍາດໃຫ້ຊຸມຊົນມີສ່ວນຮ່ວມໃນການກຳນົດຈຸດປະສົງ ແລະ ນະໂຍບາຍການຄຸ້ມຄອງປ່າໄມ້ ເພື່ອເຮັດໃຫ້ຈຸດປະສົງເຫຼົ່ານັ້ນປະກົດຜົນເປັນຈິງ.

ແຕ່ເຖິງແມ່ນວ່າ ບັນດາບົດບັນຍັດເຫຼົ່ານີ້ຈະລະບຸຄວາມສຳຄັນຂອງປ່າໄມ້ຕໍ່ປະຊາຊົນທ້ອງຖິ່ນ ແລະ ສະໜັບສະໜູນການຄຸ້ມຄອງປ່າໄມ້ໂດຍຊຸມຊົນດ້ວຍກົດໝາຍ ກໍ່ຕາມ, ລັດຍັງຊອກຫາວິທີທາງເພີ່ມສະມັດຕະພາບຂອງການຜະລິດກະສິກຳໃຫ້ສູງຂື້ນ ແລະ ຫຼຸດຜ່ອນການເອື້ອຍອີງຂອງຊຸມຊົນຕໍ່ການນຳໃຊ້ຊັບພະຍາກອນທຳມະຊາດ. ສິ່ງນີ້ໄດ້ເຮັດໃຫ້ຊຸມຊົນທີ່ອີງໃສ່ຊັບພະຍາກອນປ່າໄມ້ໃນການດຳລົງຊີວິດມີຄວາມຫຍຸ້ງຍາກ ແລະ ຕ້ອງປ່ຽນອາຊີບໄປເຮັດວຽກອື່ນເພື່ອການຢູ່ລອດໃນການດຳລົງຊີວິດ.

## 2.4. ນະໂຍບາຍກ່ຽວກັບປ່າໄມ້ຂອງລັດຖະບານ

ລັດຖະບານໄດ້ເອົາໃຈໃສ່ຈັດຕັ້ງການຟື້ນຟູປ່າ ແລະ ຈະໃຫ້ມີປ່າປົກຄຸມເຖິງ 60 ສ່ວນຮ້ອຍເມື່ອເຖິງປີ 2020. ສປປ ລາວ ເປັນປະເທດທີ່ເຕັມໄປດ້ວຍປ່າໄມ້ ອັນລ້ຳຄ່າ, ແລະ ສຳຄັນຕໍ່ລະບົບນິເວດວິທະຍາ. ພວກມັນເປັນແຫຼ່ງອາຫານ, ຢາປົວພະຍາດ, ພະລັງງານ ແລະ ລາຍໄດ້ອັນສຳຄັນຂອງປະຊາຊົນ ໂດຍສະເພາະແມ່ນຄົນທຸກຍາກ ແລະ ຊົນເຜົ່າທີ່ຢູ່ຫ່າງໄກສອກຫຼີກ.

ລັດຖະບານໄດ້ພະຍາຍາມຫຼຸດການຂຸດຄົ້ນໄມ້ປະຈຳປີລົງຫຼາຍ,ຈາກຈຳນວນສູງສຸດ 734.000 $m^3$ ໃນປີ 1999 ລົງເຖິງ 260.000 $m^3$ ໃນປີ 2001/02. ຕະຫຼອດ 10 ປີທີ່ຜ່ານມາ ກໍ່ໄດ້ພະຍາຍາມເອົາໃຈໃສ່ຫຼຸດເນື້ອທີ່ການເຮັດໄຮ່ລົງ. ໄດ້ສ້າງສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ ແລະ ກອງສົ່ງເສີມກະສິກຳ ແລະ ປ່າໄມ້ຂື້ນ ຊຶ່ງໃນປະຈຸບັນ ກໍ່ໄດ້ໃຫ້ບໍລິການດ້ານການຄົ້ນຄວ້າວິໄຈ ແລະ ສົ່ງເສີມໃນພາກສະໜາມ ຊ່ວຍພັດທະນາຫາທາງເລືອກແທນການເຮັດໄຮ່.

ວຽກການຄຸ້ມຄອງປ່າໄມ້ມີຄວາມຈຳເປັນຕ້ອງໄດ້ສ້າງຄວາມເຂັ້ມແຂງ ແລະ ແກ້ໄຂບັນຫາທີ່ກ່ຽວຂ້ອງຕ່າງໆ ເຊັ່ນ: ການຂາດເນື້ອທີ່ແບບປະສົມປະສານ ແລະ ລະບົບການຄຸ້ມຄອງປ່າໄມ້, ການບັງຄັບໃຊ້ກົດໝາຍຍັງບໍ່ພຽງພໍ, ຄວາມຮູ້ຄວາມສາມາດຂອງອົງການຈັດຕັ້ງຍັງບໍ່ພຽງພໍ ແລະ ຂາດງົບປະມານ ແລະ ວັດຖຸຮັບໃຊ້. ລັດຖະບານຈະມີມາດຕະການຢ່າງເຂັ້ມງວດ ເພື່ອຮັບປະກັນໃຫ້ປ່າໄມ້ຍັງຄົງສະພາບເດີມ ແລະ ບັງຄັບໃຫ້ອຸດສາຫະກຳໄມ້ຕ້ອງໄດ້ປະຕິບັດຕາມຈຳນວນທີ່ຈັດສັນໃຫ້ (ໂຄຕາ). ເພື່ອເປັນການຫຼຸດຜ່ອນຄວາມທຸກຍາກ ແລະ ຮັບປະກັນໃຫ້ການຄຸ້ມຄອງປ່າໄມ້ໃນ ສປປ

ລາວ ມີຄວາມຍືນຍົງຫຼາຍຂື້ນກວ່າເກົ່ານັ້ນ ລັດຖະບານໄດ້ພະຍາຍາມປະຕິບັດມາດຕະການຕ່າງໆ ຄື:

- ເພີ່ມທະວີການຄຸ້ມຄອງຊັບພະຍາກອນທຳມະຊາດ ໂດຍອີງໃສ່ບ້ານເປັນເຈົ້າການ ເພື່ອຫຼຸດຜ່ອນຄວາມທຸກຍາກ.
- ປັບປຸງລະບົບການກຳນົດໂຄຕາການຕັດໄມ້ຄືນ, ຊຶ່ງປ່ຽນຈາກການອີງຕາມຄວາມຕ້ອງການຂອງອຸດສະຫະກຳໄມ້ ມາເອົາໃຈໃສ່ເລື້ອງຄວາມຍືນຍົງຫຼາຍຂື້ນ.
- ປັບປຸງໂຄງຮ່າງການຈັດຕັ້ງອຸດສະຫະກຳໄມ້ໃນ ສປປ ລາວ ເພື່ອໃຫ້ມີຄວາມສາມາດປຸງແຕ່ງ ຊຶ່ງອີງໃສ່ຄວາມຍືນຍົງຂອງວັດຖຸດິບ.
- ຄວບຄຸມການຕັດໄມ້, ເຄື່ອງປ່າຂອງດົງ ແລະ ສິ່ງອອກແບບຂະຊາຍ ຂອງນັກທຸລະກິດ ແລະ ຫັນມາສົ່ງເສີມການຄູ້ມຄອງປ່າໄມ້ແບບຍືນຍົງ ແລະ ປຸງແຕ່ງເຄື່ອງປ່າຂອງດົງຫຼາຍຂື້ນ.
- ສົ່ງເສີມການປູກໄມ້; ກຳນົດເຕັກນິກວິຊາການ (ໂດຍຜ່ານ ກະຊວງກະສິກຳ ແລະ ປ່າໄມ້/ກົມປ່າໄມ້, ສູນຄົ້ນຄວ້າກະສິກຳ ແລະ ປ່າໄມ້ ແລະ ສະຖາບັນວິທະຍາສາດ, ເທັກໂນໂລຍີ ແລະ ສະພາບແວດລ້ອມ) ເພື່ອຮັບປະກັນການປູກໄມ້ແບບຍືນຍົງ.
- ຕ້ານການລ່ວງລະເມີດ, ການກະທຳຜິດກົດໝາຍ ແລະ ທຳລາຍຊີວະນາໆພັນ ໂດຍການບັງຄັບໃຊ້ກົດໝາຍຢ່າງເຂັ້ມງວດ, ສ້າງບຸກຄະລາກອນ ແລະ ຫັນເອົາຊາວບ້ານມາມີສ່ວນຮ່ວມໃນກິດຈະກຳການອະນຸລັກຫຼາຍຂື້ນ.
- ວາງນະໂຍບາຍກ່ຽວກັບການນຳໃຊ້ທີ່ດິນລະດັບຊາດ ແລະ ແນະນຳວິທີການວາງແຜນທີ່ດິນຊົມໃຊ້ ແຕ່ລະດັບສູນກາງ ຈົນຮອດທ້ອງຖິ່ນ.

ລັດຖະບານກຳລັງສຸມໃສ່ປະຕິຮູບແບບແຜນວິທີການເຮັດວຽກຂອງຂະແໜງປ່າໄມ້. ການປັບປຸງໂຄງການ ຄູ້ມຄອງ ແລະ ນຳໃຊ້ປ່າໄມ້ ກໍ່ເພື່ອເຮັດໃຫ້ປ່າຜະລິດຍືນຍົງ, ຄຸ້ມຄອງຕາມຫຼັກການວິທະຍາສາດ ແລະ ປະຕິບັດຕາມວິທີການດັ່ງຕໍ່ໄປນີ້:

- ກຳນົດໜ່ວຍງານຄູ້ມຄອງ/ຈັດສັນ ແລະ ວາງແຜນການຄູ້ມຄອງ.
- ສ້າງຄວາມເຂັ້ມທາງດ້ານກົດໝາຍ ແລະ ລະບຽບຫຼັກການຕ່າງໆ.
- ເພີ່ມຄວາມເຊື່ອໝັ້ນດ້ານກົນໄກການຕະຫຼາດ.
- ປັບປຸງໂຄງຮ່າງການຈັດຕັ້ງ ລັດວິສາຫະກິດຕ່າງໆ.
- ກະຈາຍອຳນາດ ແລະ ສ້າງຄວາມສາມາດ ໃຫ້ທ້ອງຖິ່ນຢ່າງເປັນຂະບວນ, ສົ່ງເສີມການຄູ້ມຄອງປ່າໄມ້ໂດຍອີງໃສ່ຊຸມຊົນເປັນເຈົ້າການ, ແລະ
- ລະດົມຂົນຂວາຍ ແລະ ຮ່ວມມືກັບສາກົນຢ່າງມີປະສິດທິຜົນ.

ດັ່ງໄດ້ລະບຸໄວ້ໃນຍຸດທະສາດຂອງຂະແໜງກະສິກຳ, ລັດຖະບານໄດ້ເອົາໃຈໃສ່ອະນຸລັກຊັບພະຍາກອນປ່າໄມ້ອັນມີຄຸນຄ່າໄວ້ ເພື່ອອະນຸລັກຊີວະນາໆພັນ ແລະ ປົກປັກຮັກສາສະພາບແວດລ້ອມ. ໃນປະຈຸບັນ ກະຊວງກະສິກຳ ແລະ ປ່າໄມ້ (MAF) ກຳລັງປະຕິບັດ ການກະຈາຍການພັດທະນາລົງສູ່ທ້ອງຖິ່ນ, ໂດຍເອົາໃຈໃສ່ການຄຸ້ມຄອງ/ຈັດສັນ ອ່າງໂຕ່ງ/ອ່າງເກັບນ້ຳ ທີ່ເປັນຜົນສະທ້ອນອັນດີຕໍ່ສະພາບແວດລ້ອມ ໂດຍການປົກປັກຮັກສາຊັບພະຍາກອນປ່າໄມ້. ການປະຕິບັດ ການຈັດແບ່ງເຂດກະສິກຳ ແລະ ປ່າໄມ້ທົ່ວປະເທດ ເຮັດໃຫ້ສາມາດຈຳແນກເຂດດິນກະສິກຳ ເຂດທົ່ງພຽງ/ຮາບພຽງ ແລະ ເຂດພູດອຍ, ເຂດອະນຸລັກຊີວະນາໆພັນ ແລະ ອ່າງໂຕ່ງ/ເຂດສູງຊັນ ໄດ້ຢ່າງຖືກຕ້ອງ. ໂດຍນຳໃຊ້ວິທີການດັ່ງກ່າວ, ກະຊວງກະສິກຳ ແລະ ປ່າໄມ້ຈະສົ່ງເສີມການຄຸ້ມຄອງຊັບພະຍາກອນທຳມະຊາດໂດຍຊຸມຊົນ ດ້ວຍຫຼາຍໆຮູບແບບ ຊຶ່ງລວມມີ ການຈັດສັນປ່າຜະລິດແບບມີສ່ວນຮ່ວມ. ໂຄງການແບ່ງດິນແບ່ງປ່າກຳລັງໄດ້ຮັບການປັບປຸງ ເພື່ອໃຫ້ສອດຄ່ອງກັບຊຸມຊົນຫຼາຍຂື້ນ.

## 2.5. ການເຊື່ອມທັດສະນະບົດບາດຍິງ-ຊາຍ ໃນ ສປປ ລາວ

*ບົດບາດຍິງ-ຊາຍ, ລັດຖະທຳມະນູນ ແລະ ສົນທິສັນຍາສາກົນ*

ໃນ ສປປ ລາວ, ຄວາມສະເໝີພາບລະຫວ່າງຍິງ-ຊາຍ ໄດ້ຖືກຮັບຮອງ ພາຍໃຕ້ລັດຖະທຳມະນູນປີ 1991 (ມາດຕາ 22 ແລະ 24). ຄວາມສະເໝີພາບລະຫວ່າງຍິງ-ຊາຍຍັງໄດ້ລະບຸໄວ້ໃນເອກະສານນະໂຍບາຍຕ່າງໆຂອງລັດຖະບານ ຊຶ່ງລວມມີ ເອກະສານນະໂຍບາຍພົນລະເມືອງ ແລະ ສາທາລະນະສຸກ. ສປປ ລາວ ໄດ້ເຊັນສົນທິສັນຍາຂອງສະຫະປະຊາຊາດຫຼາຍສະບັບ ເຊັ່ນ: ສົນທິສັນຍາວ່າດ້ວຍການລຶບລ້າງທຸກຮູບແບບການຈຳແນກຕໍ່ແມ່ຍິງ (CEDAW, 1981), ບົດຖະແຫຼງການ ກ່ຽວກັບ ແຜນການປະຕິບັດເພື່ອຄວາມກ້າວໜ້າຂອງແມ່ຍິງ ທີ່ປັກກິ່ງ ປີ 1995 ແລະ ເປົ້າໝາຍຂອງການພັດທະນາ ສະຫະສັດຕະວັດ ໃນປີ 2000.

*ການຈັດຕັ້ງຄະນະກຳມະການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງລາວ (LaoNCAW)*

ເມື່ອເດືອນ ພຶດສະພາ ປີ 2000, ຫ້ອງການສຳນັກງານນາຍົກລັດຖະມົນຕີ ໄດ້ອອກ ຄຳສັ່ງແນະນຳ ວ່າດ້ວຍ ການນຳໃຊ້ສະຖິຕິແຍກແພດ ແລະ ສ້າງແຜນງານ/ໂຄງການທີ່ເອົາໃຈໃສ່ບົດບາດຍິງ-ຊາຍ. ໃນປີ 2002, ລັດຖະບານໄດ້ຈັດຕັ້ງ ຄະນະກຳມະການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງຂື້ນ ຊຶ່ງເປັນກົງຈັກທີ່ຮັບຜິດຊອບວຽກງານບົດບາດຍິງ-ຊາຍເພື່ອສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ຄວາມກ້າວໜ້າຂອງແມ່ຍິງລາວ. ສິ່ງເຫຼົ່ານີ້ໄດ້ຊີ້ແຈງໃຫ້ເຫັນຢ່າງຈະແຈ້ງວ່າ ລັດຖະບານລາວ ໄດ້ເອົາໃຈໃສ່ຕໍ່ຄວາມສະເໝີພາບລະຫວ່າງຍິງ-ຊາຍຢ່າງແທ້ຈິງ.

*ບົດບາດຍິງ-ຊາຍ ແລະ ການຕັດສິນໃຈ*

ໃນ ສປປ ລາວ, ຕົວແທນຂອງແມ່ຍິງໃນຕໍາແໜ່ງຜູ້ນໍາ ທີ່ມີອໍານາດໃນການຕັດສິນໃຈ ຍັງມີຂອບເຂດຈໍາກັດ. ອຸປະສັກອັນຕົ້ນຕໍ ກໍ່ຄືການຂາດຈິດສໍານຶກກ່ຽວຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ຂາດການເຂົ້າເຖິງ ແລະ ດ້ອຍໂອກາດ. ອີງຕາມຂໍ້ມູນຈາກກະຊວງຕ່າງໆ ໄດ້ຊີ້ໃຫ້ເຫັນວ່າ ຕໍາແໜ່ງຂອງແມ່ຍິງໃນລະດັບການນໍາ ແລະ ລະດັບຕ່າງໆ ຍັງຕໍ່າຫຼາຍ. ຕົວຢ່າງ: ໃນລະດັບລັດຖະມົນຕີ ແລະ ທຽບເທົ່າລັດຖະມົນຕີມີພຽງແມ່ຍິງຄົນດຽວ (2,7%) ແລະ ລັດຖະມົນຕີຊ່ວຍວ່າການກະຊວງ ແລະ ທຽບເທົ່າລັດຖະມົນຕີຊ່ວຍວ່າການກະຊວງ ມີແມ່ຍິງພຽງ 6 ທ່ານ (9%). ແຕ່ເຖິງຢ່າງໃດກໍ່ຕາມ ຈໍານວນແມ່ຍິງໃນສະພາແຫ່ງຊາດ ກໍ່ເພີ່ມຂື້ນຈາກແມ່ຍິງ 4 ທ່ານ (8,8%) ໃນປີ 1975 ເປັນ 25 ທ່ານ (22,9%) ໃນປີ 2003. ໂດຍໄດ້ຮັບການສະໜັບສະໜູນຈາກ ອົງການສະຫະປະຊາຊາດ (UNDP), ສະພາແຫ່ງຊາດໄດ້ຈັດສໍາມະນາວ່າດ້ວຍບົດບາດຍິງ-ຊາຍໃຫ້ແກ່ພະນັກງານຂອງຕົນ ແລະ ຈັດກອງປະຊຸມກ່ຽວກັບແມ່ຍິງລະດັບການນໍາ ໃນປີ 2004. ໃນປະຈຸບັນ ສະພາແຫ່ງຊາດກໍາລັງຮ່າງແຜນຍຸດທະສາດບົດບາດຍິງ-ຊາຍູ່.

*ບົດບາດຍິງ-ຊາຍ ແລະ ໂຄງການອອກໃບຕາດິນ*

ໂດຍການຊ່ວຍເຫຼືອຈາກ ທະນາຄານໂລກ ແລະ ອົງການ AUSAID, ກະຊວງການເງິນໄດ້ປະຕິບັດໂຄງການ ອອກໃບຕາດິນ. ສະຫະພັນແມ່ຍິງ ແມ່ນຜູ້ຮ່ວມງານທີ່ສໍາຄັນ ໃນການເຊື່ອມເອົາບົດບາດຍິງ-ຊາຍ ເຂົ້າໃນໂຄງການນີ້. ເປົ້າໝາຍໂດຍລວມຂອງໂຄງການ ກໍ່ເພື່ອສ້າງຄວາມເຂັ້ມແຂງອັນພື້ນຖານ ໃຫ້ແກ່ການພັດທະນາເສດຖະກິດສັງ-ຄົມ ໃນໄລຍະຍາວ. ຈຸດປະສົງເພື່ອ ຊຸກຍູ້ສົ່ງເສີມ ການພັດທະນາການຕະຫຼາດ ແລະ ອໍານວຍຄວາມສະດວກໃນການນໍາໃຊ້ຊັບພະຍາກອນທໍາມະຊາດ ໂດຍການຕອບສະໜອງ ລະບົບສິດການນໍາໃຊ້ທີ່ດິນ ອັນຈະແຈ້ງ ແລະ ພັດທະນາ ການຊົມໃຊ້ດິນແບບມີຄຸນຄ່າ.

*ແຜນຍຸດທະສາດບົດບາດຍິງ-ຊາຍ ຂອງ ສະຖາບັນວິທະຍາສາດ, ເຕັກໂນໂລຍີ ແລະ ສະພາບແວດລ້ອມ (STEA)*

ພາຍໃຕ້ໂຄງການຊ່ວຍເຫຼືອຂອງ ຊູແອັດ, ໃນປະຈຸບັນ ສະຖາບັນວິທະຍາສາດ, ເຕັກໂນໂລຍີ ແລະ ສະພາບແວດລ້ອມ (STEA) ກໍາລັງຮ່າງແຜນຍຸດທະສາດບົດບາດຍິງ-ຊາຍຂອງຕົນຂື້ນ. ການເຊື່ອມບົດບາດຍິງ-ຊາຍ ທີ່ກ່ຽວຂ້ອງກັບສະພາບແວດລ້ອມ ປະກອບມີ 3 ຈຸດປະສົງຄື: 1) ໃຫ້ແມ່ຍິງມີສ່ວນຮ່ວມໃນການຕັດສິນໃຈ ກ່ຽວກັບສະພາບແວດລ້ອມ ໃນທຸກລະດັບ, 2) ເອົາບັນຫາບົດບາດຍິງ-ຊາຍ ເຂົ້າໃນນະໂຍບາຍ ແລະ ໂຄງການເພື່ອການພັດທະນາແບບຍືນຍົງ ແລະ 3) ສ້າງຄວາມເຂັ້ມແຂງ ຫຼື ສ້າງກົນໄກ ໃນທຸກລະດັບ ເພື່ອປະເມີນ ຜົນທະທົບຂອງການພັດທະນາ ແລະ ນະໂຍບາຍດ້ານສະພາບແວດລ້ອມຕໍ່ແມ່ຍິງ. ໃນໄລຍະປີ 2003-2004, ສູນຂໍ້ມູນຂ່າວສານບົດບາດຍິງ-

ຊາຍ ເພື່ອການພັດທະນາ ໄດ້ຈັດກອງປະຊຸມສຳມະນາບົດບາດຍິງ-ຊາຍ ໃຫ້ແກ່ພະນັກງານຂັ້ນສູງ ຂອງສະຖາບັນດັ່ງກ່າວ. ໜ່ວຍງານຮັບຜິດຊອບ ບົດບາດຍິງ-ຊາຍ ກໍ່ໄດ້ຮັບການສ້າງຕັ້ງຂື້ນ ເພື່ອອຳນວຍຄວາມສະດວກ ໃຫ້ແກ່ຂະບວນການເຊື່ອມທັດສະນະບົດບາດຍິງ-ຊາຍ ໃນສະຖາບັນວິທະຍາສາດ, ເຕັກໂນໂລຍີ ແລະ ສະພາບແວດລ້ອມ.

### *ບົດບາດຍິງ-ຊາຍ ແລະ ແຜນງານການຈະເລີນເຕີບໂຕ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ (NGPES)*

ບົດບາດຍິງ-ຊາຍ ຖືວ່າ ເປັນບຸລິມະສິດຂອງທຸກຂະແໜງການ ໃນແຜນງານ ເຕີບໂຕ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ ຂອງລັດຖະບານ ແຫ່ງ ສປປ ລາວ. ເອກະສານດັ່ງກ່າວ ໄດ້ຮັບການອະນຸມັດຈາກສະພາແຫ່ງຊາດແລ້ວ ໃນຕົ້ນປີ 2004, ຊຶ່ງລະບຸແຜນພັດທະນາ ເພື່ອລຶບລ້າງຄວາມທຸກຍາກ ຂອງ ສປປ ລາວ ໄວ້ຢ່າງຊັດເຈນ ແລະ ລວມມີ ຈຸດປະສົງ, ເປົ້າໝາຍ, ນະໂຍບາຍ ແລະ ແຜນງົບປະມານທີ່ຈຳເປັນ ເພື່ອໃຫ້ບັນລຸຕາມເປົ້າໝາຍເຫຼົ່ານັ້ນ. ແຜນງານ ***NGPES*** ໄດ້ລະບຸຄວາມຈຳເປັນຕ້ອງໄດ້ພິຈາລະນາບັນຫານີ້ໃນທຸກໆຂະແໜງການ, ໂດຍສະເພາະແມ່ນ ຄວາມສະເໝີພາບລະຫວ່າງຍິງ-ຊາຍ ກັບການອະນຸລັກສະພາບແວດລ້ອມ. ໃນຂະແໜງການກະສິກຳ ແລະ ປ່າໄມ້, ບົດບາດຍິງ-ຊາຍ ຈະຕ້ອງເຊື່ອມເຂົ້າໃນແຜນງານ ແລະ ໂຄງການສະເພາະ ໂດຍຜ່ານວິທີການຕ່າງໆ. ການວິໄຈ ແລະ ແຜນຂອງໂຄງການຈະປະກອບດ້ວຍ:

- ການປະເມີນ ແລະ ນຳໃຊ້ຂໍ້ມູນບົດບາດຍິງ-ຊາຍ
- ການປະກອບແມ່ຍິງເຂົ້າໃນກິດຈະກຳຕ່າງໆຂອງໂຄງການ
- ການປະຕິບັດຄວາມສະເໝີພາບລະຫວ່າງຍິງ-ຊາຍ ໃນການສົ່ງເສີມ ແລະ ຝຶກອົບຮົມຕ່າງໆ.
- ການນຳໃຊ້ຕົວຊີ້ວັດບົດບາດຍິງ-ຊາຍ ຕິດຕາມໂຄງການ.
- ການປະກອບພະນັກງານ ໃນລະດັບ ແຂວງ, ເມືອງ ແລະ ລວມທັງພະນັກງານສົ່ງເສີມຕ້ອງຮັບປະກັນໃຫ້ສົມດຸນກັນ.
- ມີໜ່ວຍງານຮັບຜິດຊອບໃນລະດັບບ້ານ ເພື່ອສົ່ງເສີມວຽກກະສິກຳ.
- ນຳໃຊ້ສິດຕາມຮີດຄອງປະເພນີຂອງແມ່ຍິງ ໃນການແບ່ງດິນແບ່ງປ່າ, ການອອກໃບຕາດິນ ແລະ ການແກ້ໄຂຂໍ້ຂັດແຍ້ງກ່ຽວກັບດິນ.
- ຊ່ວຍເຫຼືອແມ່ຍິງ ໃຫ້ເຂົ້າເຖິງກອງທຶນ ແລະ ລະບົບສິນເຊື່ອ.

ສປປ ລາວ ໄດ້ເອົາໃຈໃສ່ປະຕິບັດແຜນງານຕ່າງໆ ເພື່ອໃຫ້ບັນລຸຕາມເປົ້າໝາຍຂອງການພັດທະນາ ສະຫະສັດຕະວັດ (MDG) ຊຶ່ງເປົ້າໝາຍ 3 ຈະຕ້ອງສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ. ເປົ້າໝາຍຂອງການພັດທະນາ ສະຫະສັດຕະວັດ

ໄດ້ກຳນົດຫຼາຍບັນຫາພ້ອມກັບຍຸດທະສາດ ແລະ ການລົງທຶນເພື່ອໃຫ້ປະເທດຊາດປະສົບຜົນສຳເລັດໃນປີ 2015. ສິ່ງເຫຼົ່ານີ້ລວມມີ ບັນດາຍຸດທະສາດຂອງຂະແໜງການສາທາລະນະສຸກ, ການປົກປັກຮັກສາສະພາບແວດລ້ອມ, ປັບປຸງການເຂົ້າເຖິງຂອງຊຸມຊົນໃນເຂດຊົນນະບົດ, ພັດທະນາຊົນນະບົດໃຫ້ກາຍເປັນຕົວເມືອງ, ເອົາໃຈໃສ່ວຽກງານຊົນເຜົ່າ ແລະ ພາສາ, ການກໍ່ສ້າງພື້ນຖານໂຄງລ່າງ ແລະ ສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ແກ່ອົງການຈັດຕັ້ງ.

### *ການເຊື່ອມບົດບາດຍິງ-ຊາຍ ໃນຂະແໜງການປ່າໄມ້*

ໃນໄລຍະຊຸມປີ 1996-2001, ໂຄງການຮ່ວມມືປ່າໄມ້ ລາວ-ຊູແອດ ໄດ້ໃຫ້ການສະໜັບໜູນກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ ໃນການເຊື່ອມບົດບາດຍິງ-ຊາຍເຂົ້າໃນໂຄງການປ່າໄມ້. ບັນຫາບົດບາດຍິງ-ຊາຍໄດ້ຖືກເຊື່ອມເຂົ້າໃນທຸກໆກິດຈະກຳຂອງໂຄງການຮ່ວມມືປ່າໄມ້ ລາວ-ຊູແອດ. ໜ່ວຍງານບົດບາດຍິງ-ຊາຍ ໄດ້ຮັບການສ້າງຕັ້ງຂື້ນໃນກະຊວງ ແລະ ກິດຈະກຳຕົ້ນຕໍລວມມີ:

- ເອກະສານ (ຍຸດທະສາດ, ບັນຊີກວດກາ ແລະ ຄູ່ມືສຳລັບນັກບໍລິຫານ ແລະ ພະນັກງານສະໜາມ) ໄດ້ຖືກນຳໃຊ້ ໃນໂຄງການອື່ນໆ ແລະ ໄດ້ເລີ່ມຕົ້ນຄົ້ນຄວ້າວິທີເຊື່ອມບົດບາດຍິງ-ຊາຍ ເຂົ້າໃນໂຄງການຂອງຂະແໜງການອື່ນໆ ທີ່ໄດ້ຮັບການສະໜັບສະໜູນຈາກ ອົງການຊ່ວຍເຫຼືອສາກົນຊູແອດ ຫຼື SIDA, ຕົວຢ່າງ: ນ້ຳສະອາດ, ສາທາລະນະສຸກ ແລະ ສະພາບແວດລ້ອມ;
- ບົດບາດຍິງ-ຊາຍ ໃນໂຄງການຮ່ວມມືປ່າໄມ້ ລາວ-ຊູແອດ, ຍັງໄດ້ນຳສະເໜີໃນກອງປະຊຸມ ສະມາຊິກ ເອຊຽນ ໂດຍຜູ້ແທນຂັ້ນສູງຂອງ ສປປ ລາວ;
- ຊຸກຍູ້ສົ່ງເສີມ ພະນັກງານ ຂອງກະຊວງ ເຂົ້າຮ່ວມຝຶກອົບຮົມດ້ານບົດບາດຍິງ-ຊາຍທີ່ສະຖາບັນເທັກໂນໂລຍີເອຊຽນ ຫຼື AIT, ບາງກອກ, ປະເທດໄທ;
- ຮ່າງແຜນປະຕິບັດ ແລະ ແຜນຍຸດທະສາດການເຊື່ອມໂຍງບົດບາດຍິງ-ຊາຍ;
- ມີສ່ວນຮ່ວມໃນທີມງານຕ່າງໆ ກ່ຽວກັບ ການສຳຫຼວດແບ່ງດິນແບ່ງປ່າ ໃນພາກສະໜາມ;
- ປະຕິບັດການວາດແຜນທີ່ ແລະ ວິເຄາະຄວາມຮູ້ພື້ນບ້ານ ໃນການນຳໃຊ້ເຄື່ອງປ່າຂອງດົງ.

## ພາກທີ 3. ສະພາບເສດຖະກິດ-ສັງຄົມໃນເຂດສຶກສາ

## 3.1. ສະພາບໂດຍທົ່ວໄປ

ການສໍາຫຼວດພາກສະໜາມໄດ້ປະຕິບັດ ໃນ 6 ບ້ານຄື: ບ້ານ. ຫຼັກສິບເອັດ, ບ້ານ. ບາກຊຸມຄໍາ ແລະ ບ້ານ. ໂຄກທະເລີ້ ໃນແຂວງ ສະຫວັນນະເຂດ, ແລະ ບ້ານ. ຫ້ວຍຫຼາດ, ບ້ານ. ນາໄຊ ແລະ ບ້ານ. ນາດອນແກ້ວ ໃນແຂວງສາລະວັນ. ທັງ 3 ບ້ານໃນແຂວງສະຫວັນນະເຂດ ຂ້າງເທິງ ແມ່ນ ບ້ານທົດລອງ ຂອງໂຄງການ ຈັດສັນປ່າຜະລິດ ແລະ ອະນຸລັກປ່າໄມ້(ໂຟມາຄອບ) ແລະ ຕັ້ງຢູ່ຕາມ ແຄມດົງສີທວນ ໃນຂະນະທີ່ 3 ບ້ານໃນແຂວງ ສາລະວັນ ຕັ້ງຢູ່ແຄມພູຕາດລາວາ. ໂດຍທົ່ວໄປແລ້ວ ໝູ່ບ້ານສ່ວນໃຫ່ຍ່ແມ່ນອ້ອມຮອບໄປດ້ວຍ ເນື້ອທີ່ທໍາການຜະລິດ, ປ່າໂຄກ ແລະ ປ່າປະສົມ. ປ່າໄມ້ເຫຼົ່ານີ້ໄດ້ເປັນບ່ອນເພິ່ງພາອາໃສຂອງສັດຕ່າງໆ ຊຶ່ງລວມມີ ປ່າປະສົມ ແລະ ປ່າດົງ, ປ່າໄມ້ປ່ອງ, ເດີ່ນຫຍ້າ ແລະ ສະພາບຄວາມຊຸ່ມຊື່ນໃນປ່າໄມ້. ປ່າໄມ້ ສ່ວນຫຼາຍໄດ້ຮັບຜົນກະທົບຈາກການຊົມໃຊ້ຂອງມະນຸດ ຊຶ່ງລວມມີ ການຕັດໄມ້ທ່ອນ ຂາຍເປັນສິນຄ້າໃນເມື່ອກ່ອນ, ການຜະລິດ, ການປ່ອຍສັດກິນຫຍ້າ, ລ່າເນື້ອ, ຈູດ ແລະ ການເກັບເຄື່ອງປ່າຂອງດົງ.

ການຄົ້ນຄວ້າໃນຄັ້ງນີ້ໄດ້ປະຕິບັດຢູ່ບ້ານລາວລຸ່ມ ແລະ ລາວເທິງ ຄືດັ່ງລຸ່ມນີ້:

*ບ້ານລາວລຸ່ມ*

ບ້ານ. ບາກຊຸມຄໍາ ແລະ ບ້ານ. ນາດອນແກ້ວ ແມ່ນກຸ່ມຊົນເຜົ່າ ທີ່ມາຈາກກຸ່ມຊົນເຜົ່າພາສາໄທກະໄດ (ລາວລຸ່ມ, ເຂດທົ່ງພຽງ). ລາວລຸ່ມສ່ວນຫຼາຍ ແມ່ນປະກອບອາຊີບເປັນຊາວນາ, ຊຶ່ງລະບົບການຜະລິດຂອງເຂົາເຈົ້າແມ່ນສຸມໃສ່ປູກເຂົ້າໜຽວ ເປັນຈຸດໜັກ, ລ້ຽງສັດໃຫ່ຍ ແລະ ນ້ອຍ, ລ່າເນື້ອ ແລະ ເກັບເຄື່ອງປ່າຂອງດົງໃນປ່າໄມ້.

*ບ້ານລາວເທິງ*

ບ້ານ. ຫຼັກສິບເອັດ ແລະ ບ້ານ. ໂຄກທະເລີ້ ແມ່ນບ້ານຊົນເຜົ່າກະຕ່າງ ຈາກກຸ່ມພາສາ ມອນ-ຂະແມ (ໂອສ໌ໂຕຼ-ອາເຊຍຕິກສ໌ ຫຼື ລາວເທິງ). ບ້ານກະຕ່າງເຫຼົ່ານີ້ມີປະຫວັດ ແລະ ຮີດຄອງປະເພນີເພິ່ງພາອາໃສປ່າໄມ້ ເພື່ອຊີວິດປະຈໍາວັນຂອງເຂົາເຈົ້າມາແຕ່ດຶກດໍາບັນ. ມີລະບົບເສດຖະກິດເພິ່ງຕົນເອງໂດຍອີງໃສ່ການຫາປາ, ລ່າເນື້ອ ແລະ ການເກັບເຄື່ອງປ່າຂອງດົງ.

ບ້ານ. ຫ້ວຍຫຼາດ ແມ່ນບ້ານ ຊົນເຜົ່າປະໂກະ ຊຶ່ງມາຈາກກຸ່ມພາສາມອນ-ຂະແມ (ໂອສ໌ໂຕຼ-ອາເຊຍຕິກສ໌). ໃນປະຈຸບັນລະບົບການຜະລິດກະສິກໍາຂອງຊົນເຜົ່າດັ່ງກ່າວແມ່ນ ການເຮັດໄຮ່.

ພວກເຂົາຍັງປູກອ້ອຍ, ສາລີ, ໝາກແຕງ ແລະ ຕົ້ນໄມ້ກິນໝາກບາງຊະນິດ. ການລ້ຽງສັດເປັນອາຊີບສຳຄັນຫຼາຍສຳລັບຊີວິດການເປັນຢູ່ຂອງເຂົາເຈົ້າ. ພວກເຂົາເກັບເຄື່ອງປ່າຂອງດົງຫຼາຍປະເພດ ເຊັ່ນ: ໜໍ່ໄມ້, ເຫັດຕ່າງໆ.

ບ້ານ. ນາໄຊ ເປັນບ້ານ ຊົນເຜົ່າສ່ວຍ ຊຶ່ງມາຈາກກຸ່ມພາສາມອນ-ຂະແມ (ໂອສ໌ໂຕຼ-ອາເຊຍຕິກສ໌). ຊຶ່ງໃນປະຈຸບັນລະບົບການຜະລິດກະສິກຳຂອງຊົນເຜົ່າສ່ວຍແມ່ນ ການເຮັດນາ. ພວກເຂົາເຈົ້າປູກເຂົ້າ. ການລ້ຽງສັດມີຄວາມສຳຄັນຕໍ່ສະພາບຊີວິດການເປັນຢູ່ຂອງເຂົາເຈົ້າຫຼາຍ ແລະ ການເກັບເຄື່ອງປ່າຂອງດົງກໍ່ແມ່ນກິດຈະກຳໜຶ່ງຂອງການດຳລົງຊີວິດຂອງເຂົາເຈົ້າ.



ຮູບທີ 1: ເຮືອນຊົນເຜົ່າປະໂກະທີ່ອ້ອມຮອບໂດຍໄຮ່ສາລີ

## 3.2.ລະດັບການສຶກສາ

ຜ່ານການສຳຫຼວດໃນ 6 ບ້ານທີ່ກ່າວມາຂ້າງເທິງນັ້ນ ເຫັນວ່າ ລະດັບການຮູ້ໜັງສືຍັງຢູ່ໃນອັດຕາທີ່ຕ່ຳຫຼາຍ, ຊຶ່ງຈຳນວນແມ່ຍິງສ່ວນຫຼາຍບໍ່ໄດ້ເຂົ້າໂຮງຮຽນ. ໃນູ່ບ້ານລາວເທິງ, ຊາວບ້ານຜູ້ຊາຍຈຳນວນໜຶ່ງສາມາດເວົ້າ ແລະ ເຂົ້າໃຈພາສາລາວໄດ້, ແຕ່ສຳລັບແມ່ຍິງແລ້ວອາດຈະບໍ່ເຂົ້າໃຈພາສາລາວຈັກໜ້ອຍເລີຍ.

ຈຳນວນປີເຂົ້າໂຮງຮຽນ ໂດຍສະເລ່ຍທົ່ວໄປ ແມ່ນ 2,9; 3,6 ສຳລັບຜູ້ຊາຍ ແລະ 2,1 ສຳລັບແມ່ຍິງ. ສິ່ງນີ້ໄດ້ສະທ້ອນໃຫ້ເຫັນວ່າເຂົາເຈົ້າສ່ວນຫຼາຍຈະສົ່ງເສີມໃຫ້ຜູ້ຊາຍເຂົ້າໂຮງຮຽນຫຼາຍກວ່າ ແລະ ຕາມຮີດຄອງປະເພນີແລ້ວເດັກຍິງຕ້ອງເຮັດວຽກເຮືອນຊ່ວຍແມ່.

ຕາຕະລາງ 3.1: ລະດັບການສຶກສາຂອງຜູ້ທີ່ຖືກສຳພາດ

| | ແມ່ຍິງ | ຜູ້ຊາຍ |
|---|---|---|
| ບໍ່ເຄີຍເຂົ້າໂຮງຮຽນ | 60 | 21 |
| ຊັ້ນປະຖົມ | 40 | 53 |
| ຊັ້ນມັດທະຍົມຕອນຕົ້ນ | - | 21 |
| ຊັ້ນມັດທະຍົມຕອນປາຍ | - | 2 |
| ວິຊາຊີບຊັ້ນຕົ້ນ | - | 3 |
| ລວມ | 100 | 100 |

*ທີ່ມາຂອງຂໍ້ມູນ: ຈາກການສຳຫຼວດຂອງທີມງານ*

ອັດຕາການບໍ່ຮູ້ໜັງສືຂອງຜູ້ທີ່ຖືກສຳພາດເພດຍິງແມ່ນ 60 ສ່ວນຮ້ອຍ. ອັດຕາການຮູ້ຂອງຜູ້ຍິງທີ່ຖືກສຳພາດຖືວ່າຕ່ຳກວ່າອັດຕາການຮູ້ໜັງສືສະເລ່ຍແຫ່ງຊາດ. ຕາຕະລາງ 3.1 ສະແດງໃຫ້ເຫັນເຖິງອັດຕາການຮູ້ໜັງສືຂອງແມ່ຍິງມີປະມານ 40 ສ່ວນຮ້ອຍ ຊຶ່ງຢູ່ໃນລະດັບຕ່ຳກວ່າອັດຕາການຮູ້ໜັງສືສະເລ່ຍຂອງແມ່ຍິງແຫ່ງຊາດ 60,9 ສ່ວນຮ້ອຍ (ປີ 2002). ຜູ້ຊາຍໄດ້ເຂົ້າຮຽນ ຊັ້ນປະຖົມ (53 ສ່ວນຮ້ອຍ) ຫຼາຍກວ່າແມ່ຍິງ (40 ສ່ວນຮ້ອຍ) ແລະ ມີລະດັບການສຶກສາສູງກວ່າແມ່ຍິງ. ແມ່ຍິງທີ່ມີລະດັບການສຶກສາທີ່ສູງກວ່າຊັ້ນປະຖົມແມ່ນບໍ່ມີຈັກຄົນເລີຍ.

## 3.3. ການຜະລິດກະສິກຳ

ລະບົບເສດຖະກິດຄອບຄົວ ທັງ 6 ໝູ່ບ້ານແມ່ນແບບປະສົມປະສານມາແຕ່ດັ້ງເດີມ ຊຶ່ງລວມມີ ການເຮັດໄຮ່ (ບ້ານ. ຫ້ວຍຫຼາດ), ເຮັດນາ, ລ້ຽງປາ, ລ້ຽງສັດ, ລ່າເນື້ອ ແລະ ເກັບເຄື່ອງປ່າຂອງດົງອື່ນໆ. ການຜະລິດສ່ວນຫຼາຍແມ່ນເພື່ອການຊົມໃຊ້ໃນຄອບຄົວ. ພວກເຂົາໄດ້ປູກພືດຜັກໃສ່ກາງໄຮ່ທີ່ຢູ່ໃກ້ໆກັບເຮືອນ, ປູກໃສ່ສວນຄົວຂ້າງເຮືອນ ຫຼື ແລບຕາມແຄມແມ່ນ້ຳເປັນສ່ວນໃຫ່ຍ. ພືດຕົ້ນຕໍທີ່ປູກລວມມີ ໝາກແຕງ, ໝາກເລັ່ນ, ສາລີ, ໝາກອຶ ແລະ ໝາກຖົ່ວ.

ໃນຊຸມປີຜ່ານມາ, ແມ່ນມີຫຼາຍປັດໃຈທີ່ເປັນຜົນກະທົບຕໍ່ສະມັດພາບຂອງການຜະລິດຫຼຸດລົງ. ປັດໃຈເຫຼົ່ານັ້ນປະກອບມີ: ພົນລະເມືອງເພີ່ມຂື້ນ, ການເຮັດໄຮ່ໝູນວຽນມີໄລຍະຮອບວຽນສັ້ນລົງ ແລະ ການເລັ່ງໃສ່ຜະລິດເພື່ອເປັນສິນຄ້າເກີນໄປເຮັດໃຫ້ມີການຊົມໃຊ້ປ່າໄມ້ເພື່ອການຕະຫຼາດ

ຫຼາຍຂື້ນ, ປັດໃຈດ້ານຄວາມອຸດົມສົມບູນຂອງດິນ, ແຮງງານ, ນໍ້າ, ສັດລາກແກ່ ແລະ ຝຸ່ນສັດ. ປະຈຸບັນສະມັດຕະພາບຂອງການຜະລິດຂອງເຂົ້າໄຮ່ໃນເຂດນີ້ແມ່ນປະມານ 0,2 ໂຕນ/ເຮັກຕາ ແລະ ເຂົ້ານາມີປະມານ 1,6 - 2 ໂຕນຕໍ່ເຮັກຕາ.

ຂະໜາດຖືຄອງກຳມະສິດທີ່ດິນຂອງຄອບຄົວຈະມີຕັ້ງແຕ່ 0,42-6,36 ເຮັກຕາ. ໂດຍທົ່ວໄປແລ້ວ, ຜູ້ມີກຳມະສິດທີ່ດິນກວ້າງສ່ວນຫຼາຍກໍ່ບໍ່ໄດ້ທຳການຜະລິດຫຼາຍເທົ່າທີ່ຄວນຍ້ອນຂາດແຮງງານ. ໃນປະຈຸບັນມີການປ່ຽນແປງເສດຖະກິດແບບພໍກິນພໍໃຊ້ມາເປັນເສດຖະກິດແບບຄ້າຂາຍເພີ່ມຂື້ນຍ້ອນໄດ້ຮັບການສົ່ງເສີມຈາກຄົນຂ້າງນອກ. ບ້ານ. ຫວ້ຍຫຼາດ, ແຂວງສາລະວັນແມ່ນບ້ານອົບພະຍົກມາໃໝ່, ຊຶ່ງຫາກໍ່ຍົກຍ້າຍມາປີ 2001 ພວກເຂົາຜະລິດແບບພໍກິນພໍໃຊ້ ແລະ ເປັນສິນຄ້າຂາຍໃນຕະຫຼາດເຊັ່ນ: ສາລີ, ໝາກແຕງ ແລະ ເຄື່ອງປ່າຂອງດົງ.

ກະສິກຳແມ່ນເສດຖະກິດຕົ້ນຕໍຂອງ 6 ໝູ່ບ້ານ, ຊຶ່ງປູກເຂົ້າເປັນຕົ້ນຕໍ. ເຖິງແມ່ນວ່າຊາວບ້ານຈະສຸມໃສ່ການປູກເຂົ້າເປັນຕົ້ນຕໍ, ແຕ່ຈຳນວນຄອບຄົວທີ່ສາມາດຜະລິດເຂົ້າກຸ້ມກິນໝົດປີມີພຽງ 60,78 ສ່ວນຮ້ອຍ (ເບິ່ງຕາຕະລາງ 3.2), ແລະ ປະມານ 10,45 ສ່ວນຮ້ອຍ ຂອງຈຳນວນຄອບຄົວຜູ້ທີ່ຖືກສຳພາດທັງໝົດ ຂາດເຂົ້າກິນຫຼາຍກວ່າ 6 ເດືອນ. ຈຳນວນຄອບຄົວເຫຼົ່ານີ້ ສ່ວນຫຼາຍໄດ້ຍຶດເອົາການເຮັດນາເປັນ“ອາຊີບຕົ້ນຕໍ”. ຄົວເຮືອນທີ່ມີແມ່ຍິງເປັນຫົວໜ້າຄອບຄົວແມ່ນຈະຂາດເຂົ້າກິນຫຼາຍກວ່າບັນດາຄົວເຮືອນທີ່ມີຜູ້ຊາຍເປັນຫົວໜ້າຄອບຄົວ(ເບິ່ງເອກະສານຕິດຄັດ).ການຜະລິດເຂົ້າ/ອັດຕາຂາດເຂົ້າກິນຈະແຕກຕ່າງໄປຕາມແຕ່ລະກຸ່ມຊົນເຜົ່າ. ໝູ່ບ້ານລາວລຸ່ມມີເຂົ້າກຸ້ມກິນຫຼາຍກວ່າບັນດາໝູ່ບ້ານລາວເທິງ ຄືດັ່ງໃນຕາຕະລາງລຸ່ມນີ້:

ຕາຕະລາງ 3.2: ອັດຕາຂາດເຂົ້າກິນຂອງຜູ້ທີ່ຖືກສຳພາດ

| ຊື່ບ້ານ | ແຂວງ | ຊົນເຜົ່າສ່ວນໃຫຍ່[4] | ອັດຕາສ່ວນຮ້ອຍຂອງຄົວເຮືອນຂາດເຂົ້າກິນ ຕາມຈຳນວນເດືອນຕ່າງໆ | | | | |
|---|---|---|---|---|---|---|---|
| | | | ພຽງພໍ | ຂາດເຂົ້າ 1-3 ເດືອນ | ຂາດເຂົ້າ 4-6 ເດືອນ | ຂາດເຂົ້າ 7-10 ເດືອນ | ລວມ |
| ບ. ຫຼັກສິບເອັດ | ສະຫວັນນະເຂດ | ກະຕ່າງ | 61 | 17 | 0 | 22 | 100 |
| ບ. ບາກຊຸມຄຳ | ສະຫວັນນະເຂດ | ລາວລຸ່ມ | 83 | 11 | 6 | 0 | 100 |
| ບ. ໂຄກທະເລີ້ | ສະຫວັນນະເຂດ | ກະຕ່າງ | 57 | 14 | 15 | 14 | 100 |
| ບ. ຫ້ວຍຫຼາດ | ສາລະວັນ | ປະໂກະ | 44 | 22 | 17 | 17 | 100 |
| ບ. ນາໄຊ | ສາລະວັນ | ສ່ວຍ | 55 | 20 | 20 | 5 | 100 |
| ບ. ນາດອນແກ້ວ | ສາລະວັນ | ລາວລຸ່ມ | 64 | 9 | 23 | 4 | 100 |
| ສະເລ່ຍ | | | 61 | 16 | 13 | 10 | 100 |

*ທີ່ມາຂອງຂໍ້ມູນ: ຈາກການສຳຫຼວດຂອງທີມງານ*

---

[4] ຊົນເຜົ່າສ່ວນໃຫ່ຍໝາຍເຖິງຊົນເຜົ່າສ່ວນຫຼາຍຂອງໝົດບ້ານ

## 3.4. ການລ້ຽງສັດ

ຄວາຍແມ່ນສັດລ້ຽງຕົ້ນຕໍທີ່ຊາວບ້ານລ້ຽງໃນຂອບເຂດຂອງໂຄງການ, ຊຶ່ງມີຈຳນວນສູງຫຼາຍ ເມື່ອທຽບໃສ່ຈຳນວນສະເລ່ຍໃນທົ່ວປະເທດ. ຈຳນວນຄວາຍທັງໝົດໃນ 6 ບ້ານມີ ເຖິງ 759 ໂຕ, ແລະ ສະເລ່ຍປະມານ 1,68 ໂຕ/ຄົວເຮືອນ. ແຕ່ເຖິງຢ່າງໃດກໍ່ຕາມ, ສ່ວນຫຼາຍແມ່ນບ້ານລາວລຸ່ມ ມີການລ້ຽງສັດຫຼາຍປະເພດກວ່າບ້ານລາວເທິງ.ຈຳນວນສະເລ່ຍຕໍ່ຄົວເຮືອນກໍ່ມີຄວາມແຕກຕ່າງກັນ, ຊຶ່ງບາງຄົວເຮືອນມີຮອດ 10-15 ໂຕ (ມີຫຼາຍ ກວ່າ 20 ໂຕ ແມ່ນມີໜ້ອຍຄົວເຮືອນ), ແລະ ບາງຄົວ ເຮືອນກໍ່ບໍ່ມີຈັກໂຕເລີຍ.

ຊາວບ້ານຈະລ້ຽງສັດໄວ້ເພື່ອຊົມໃຊ້ໃນເວລາຕ້ອງການຫຼາຍກວ່າລ້ຽງໄວ້ເພື່ອສ້າງລາຍໄດ້ປະ ຈຳວັນ. ສັດໃຫຍ່ຈະໃຊ້ໄວ້ເພື່ອລາກແກ່ໃນທົ່ງນາ ແລະ ພ້ອມນັ້ນຊາວບ້ານຍັງມີການເຊົ່າສັດລາກ ແກ່ເພື່ອກະກຽມດິນ.

ຄວາຍ ແລະ ງົວໄດ້ຖືກປ່ອຍຢູ່ຕາມທົ່ງຫຍ້າ ແລະ ປ່າໄມ້ ຢ່າງເສລີ, ຍົກເວັ້ນໃນໄລຍະທຳ ການຜະລິດເພາະສັດຈະເຂົ້າໄປທຳລາຍທົ່ງນາ ແລະ ສວນ. ໃນລະດູແລ້ງ, ສັດລ້ຽງຖືກປ່ອຍໄປກິນ ຫຍ້າແບບເສລີ ໃນປ່າໄມ້. ໃນລະດູຝົນ, ພວກເຂົາຖືກແຫຼ່ງໄວ້ໃນຄອກ ໃກ້ໆກັບເຮືອນ ໃນເວລາ ກາງຄືນເພື່ອປ້ອງກັນບໍ່ໃຫ້ທຳລາຍຜົນລະປູກ. ຊາວບ້ານບໍ່ເຄີຍລ້ຽງສັດໃສ່ຄັງ, ແລະ ຈັດສັນເດີ່ນ ຫຍ້າທຳມະຊາດ ໂດຍການຈຳກັດເຂດກິນຫຍ້າຂອງສັດ ໃນຊ່ວງເວລາຕ່າງໆຂອງແຕ່ລະປີ. ຊາວນາ ບາງຈຳນວນບອກວ່າຂາດຫຍ້າລ້ຽງສັດໃນຊ່ວງເດືອນ ມີນາ ຫາ ພຶດສະພາ ຊຶ່ງຢູ່ໃນຊ່ວງກາງ ແລະ ທ້າຍລະດູແລ້ງ, ແຕ່ສິ່ງນີ້ກໍ່ສົ່ງຜົນສະທ້ອນໃຫ້ແກ່ຊາວນາຕ້ອງເອົາສັດລ້ຽງໄປກິນຫຍ້າຢູ່ເຂດຫ່າງໄກ ຈາກບ້ານໃນຍາມຂາດແຄນຫຍ້າ.

ຕາຕະລາງ 3.3: ຈຳນວນສັດລ້ຽງໃນ 6 ບ້ານ

| ຊື່ບ້ານ | ຄວາຍ | ງົວ | ໝູ | ສັດປີກ |
|---|---|---|---|---|
| ບ. ຫຼັກສິບເອັດ | 87 | 313 | 163 | 235 |
| ບ. ບາກຊຸມຄຳ | 309 | 310 | 234 | 1021 |
| ບ. ໂຄກທະເລີ້ | 127 | 167 | 64 | 350 |
| ບ. ຫ້ວຍຫຼາດ | 13 | 6 | - | 1900 |
| ບ. ນາໄຊ | 163 | 23 | - | - |
| ບ. ນາດອນແກ້ວ | 60 | 28 | 20 | 360 |
| ລວມທັງໝົດ | 759 | 847 | 481 | 3866 |

*ທີ່ມາຂອງຂໍ້ມູນ: ຈາກການສຳຫຼວດຂອງທີມງານ*

## 3.5. ການວິເຄາະສະພາບຊີວິດການເປັນຢູ່

ເພື່ອໃຫ້ເຂົ້າໃຈແຈ້ງເຖິງສະພາບຊີວິດການເປັນຢູ່ຂອງກຸ່ມເປົ້າໝາຍຕ່າງໆ, ທີມງານວິໄຈໄດ້ໃຊ້ຕາຕະລາງວິເຄາະດັ່ງຕໍ່ໄປນີ້ເພື່ອເກັບກຳຂໍ້ມູນຈາກກຸ່ມຍິງ, ຊາຍ ແລະ ຜູ້ໃຫ້ຂໍ້ມູນທີ່ສຳຄັນອື່ນໆໃນພາກສະໜາມ. ທີມງານໄດ້ທຳການວິເຄາະສະພາບຊີວິດການເປັນຢູ່ຈາກ 2 ລັກສະນະຄື: ຈາກເສດຖະກິດ-ສັງຄົມ ແລະ ເພດຂອງຫົວໜ້າຄອບຄົວ. ຜົນຂອງການວິເຄາະໄດ້ສະແດງຕາມຕາຕະລາງຂ້າງລຸ່ມນີ້:

ຕາຕະລາງ 3.4: ວິເຄາະສະພາບຊີວິດການເປັນຢູ່ຂອງຄອບຄົວ

| **ຄົວເຮືອນທຸກຍາກ** | **ຄົວເຮືອນປານກາງ** | **ຄົວເຮືອນຮັ່ງມີ** |
|---|---|---|
| 39% ຄົວເຮືອນທັງໝົດ | 43% ຄົວເຮືອນທັງໝົດ | 18% ຄົວເຮືອນທັງໝົດ |
| 36% ຄົວເຮືອນຜູ້ຊາຍເປັນຫົວໜ້າຄອບຄົວ | 41% ຄົວເຮືອນຜູ້ຊາຍເປັນຫົວໜ້າຄອບຄົວ | 18% ຄົວເຮືອນຜູ້ຊາຍເປັນຫົວໜ້າຄອບຄົວ |
| 3% ຄົວເຮືອນແມ່ຍິງເປັນຫົວໜ້າຄອບຄົວ | 2% ຄົວເຮືອນແມ່ຍິງເປັນຫົວໜ້າຄອບຄົວ | 0% ຄົວເຮືອນແມ່ຍິງເປັນຫົວໜ້າຄອບຄົວ |
| *ເງື່ອນໄຂເສດຖະກິດ-ສັງຄົມ* | | |
| • ມີເຮືອນຫຼັງນ້ອຍ ມຸງດ້ວຍຫຍ້າ ແລະ ຢູ່ໃນສະພາບເປ່ເພ<br>• ມີເຄື່ອງມືທຳການຜະລິດ ແລະ ສັດລ້ຽງບາງຈຳນວນ (ໄກ່, ເປັດ)<br>• ເພິ່ງພາອາໃສເຄື່ອງປ່າຂອງດົງຫຼາຍທີ່ສຸດ<br>• ບໍ່ໄດ້ເຂົ້າຮ່ວມປະຊຸມເປັນປົກກະຕິ<br>• ມີໂອກາດເປັນສະມາຊິກຂອງກຸ່ມ ແລະ ອົງການຈັດຕັ້ງໃດໜຶ່ງໃນບ້ານໜ້ອຍ ແລະ ບໍ່ໄດ້ເປັນຄະນະກຳມະການໃດໜຶ່ງຈັກເທື່ອ<br>• ມີການພົວພັນກັບການສົ່ງເສີມໃນຊຸມຊົນໜ້ອຍ- ພວກເຂົາບໍ່ຮູ້ກິດຈະກຳຂອງໂຄງການ ແລະ ບໍ່ຮູ້ຮອດແມ່ນຫຍັງກຳລັງເກີດຂຶ້ນໃນບ້ານ<br>• ຂາດເຂົ້າກິນປະມານ 7-10 ເດືອນໃນແຕ່ລະປີ<br>• ສ່ວນຫຼາຍບໍ່ມີມຸ້ງກາງ | • ມີເຮືອນແບບທຳມະດາ ມຸງດ້ວຍສັງກະສີ ແລະ ມີເຄື່ອງເຟີນີເຈີບາງອັນ<br>• ມີເຄື່ອງມື ແລະ ອຸປະກອນພຽງພໍ<br>• ນຳໃຊ້ສັດສັດລາກແກ່ບາງຈຳນວນ<br>• ນຳໃຊ້ແຮງງານຂອງຄອບຄົວເປັນຕົ້ນຕໍ<br>• ໄດ້ຊົມໃຊ້ການບໍລິການຈາກຂ້າງນອກ (ພະນັກງານສົ່ງເສີມ, ແພດຊຸມຊົນ)<br>• ມີລົດຖີບ<br>• ເຂົ້າຮ່ວມກອງປະຊຸມ, ເຄື່ອນໄຫວໃນອົງການຈັດຕັ້ງ ແລະ ກຸ່ມ ທັງເປັນສະມາຊິກ ແລະ ຄະນະ<br>• ຜະລິດພືດເຫຼືອກິນເຫຼືອໃຊ້ບາງ | • ມີເຮືອນລາຄາແພງ ມຸງດ້ວຍສັງກະສີ, ຝາດິນຈີ່, ປູພື້ນດ້ວຍຊີເມັນ, ມີເຄື່ອງເຟີນີເຈີງາມ<br>• ມີຊັບສິນບັດຫຼາຍ<br>• ມີງົວ, ຄວາຍ, ແບ້, ໄກ່ ແລະ ໝູ<br>• ຊົມໃຊ້ສິນເຊື່ອ<br>• ຈ້າງແຮງງານ (ຄົນທຸກ) ມາເຮັດນາ<br>• ນຳໃຊ້ກົນຈັກ (ເຊັ່ນ: ໂຮງສີເຂົ້າ)<br>• ມີພາຫະນະລາຄາແພງ (ລົດເກງ, ລົດໜັກ)<br>• ເຮັດວຽກເປັນຜູ້ນຳ<br>• ມີລາຍໄດ້ເຂົ້າຄອບຄົວຫຼາຍຢ່າງ (ການຜະລິດ ແລະ ກິດຈະກຳອື່ນໆ)<br>• ສົ່ງລູກທຸກໆຄົນເຂົ້າໂຮງຮຽນ |

<table>
<tr><td>• ບໍ່ມີດິນທຳການຜະລິດ</td><td>ຈຳນວນ<br>• ມີງົວ, ຄວາຍ 2-3 ໂຕ<br>• ມີໄກ່, ເປັດ ແລະ ໝູ<br>• ລູກໄດ້ເຂົ້າໂຮງຮຽນຢ່າງໜ້ອຍຊັ້ນມັດທະຍົມ</td><td>• ສາມາດຈ່າຍຄ່າປະຖົມພະຍາບານໄດ້</td></tr>
<tr><td>ປັດໃຈເຮັດໃຫ້ທຸກຍາກ:<br>• ສະມາຊິກຄອບຄົວເຈັບເປັນ<br>• ເຖົ້າແກ່<br>• ສູນເສຍສັບສິນບັດມີຄ່າ (ເຊັ່ນ: ສັດລ້ຽງ)<br>• ບໍ່ສາມາດທົດແທນເງິນກູ້ຢືມໄດ້<br>• ບຸກຄົນສຳຄັນໃນຄອບຄົວເສຍຊີວິດ<br>• ຮັບພາລະລ້ຽງລູກຫຼາຍຄົນ</td><td colspan="2">ປັດໃຈທີ່ເຮັດໃຫ້ພໍກິນພໍໃຊ້ ແລະ ຮັ່ງມີ:<br>• ໄດ້ຮັບຄວາມຊ່ວຍເຫຼືອຈາກພີ່ນ້ອງ (ເຊັ່ນ: ຝາກເງິນຈາກຕ່າງປະເທດມາໃຫ້)<br>• ປະສົບຜົນສຳເລັດກັບທຸລະກິດ<br>• ປູກພືດຂາຍເປັນສິນຄ້າ<br>• ສັບສິນບັດເພີ່ມຂຶ້ນ</td></tr>
<tr><td colspan="3">ວິທີປັບປຸງຊີວິດການເປັນຢູ່/ວິທີການແກ້ໄຂ</td></tr>
<tr><td>• ຊອກຫາອາຫານຈາກປ່າໄມ້<br>• ປູກພືດເພື່ອບໍລິໂພກໃນຄອບຄົວ<br>• ມີການແບ່ງງານໃນວຽກການຜະລິດໜ້ອຍລົງ<br>• ປ່ຽນອາຫານການກິນ, ຫຼຸດຜ່ອນອາຫານ ແລະ ຫັນມາກິນສາລີແທນເຂົ້າ<br>• ຮັບຈ້າງແຮງງານ ນຳຄອບຄົວຮັ່ງມີ</td><td>• ປູກພືດຂາຍບາງສ່ວນ<br>• ເຮັດທຸລະກິດເພື່ອສ້າງລາຍໄດ້<br>• ປະດິດເຄື່ອງໃຊ້ສອຍໃນເຮືອນຈາກທຳມະຊາດ<br>• ນຳໃຊ້ລາຍຮັບ ຈາກທຸລະກິດຊື້ອາຫານ<br>• ຊອກຫາອາຫານຈາກປ່າໄມ້<br>• ຂາຍຊັບສິນບັດຕ່າງໆ (ເຮັດໃຫ້ມັນມີລາຄາສູງໃນລະດູການຕໍ່ມາ)</td><td>• ເຮັດທຸລະກິດຕ່າງໆ (ເຊັ່ນ: ຄ້າຂາຍ)<br>• ປູກພືດຂາຍ</td></tr>
</table>

*ທີ່ມາຂອງຂໍ້ມູນ: ການຈັດລະດັບຖານະຄອບຄົວ, ສຳພາດກຸ່ມ, ສຳພາດຄົວເຮືອນ ແລະ ສັງເກດໂດຍກົງ*

*ໝາຍເຫດ: ອັດຕາສ່ວນຮ້ອຍຂອງຖານະຄອບຄົວແມ່ນອີງໃສ່ຈຳນວນຄົວເຮືອນທັງໝົດໃນ 6 ບ້ານ ແລະ ຈຳນວນຄົວເຮືອນທີ່ແມ່ຍິງ ແລະ ຜູ້ຊາຍເປັນຫົວໜ້າຄອບຄົວ ໃນກຸ່ມເສດຖະກິດຕ່າງໆ.*

ສະຫຼຸບ:

- ຄົວເຮືອນທຸກຍາກ ຂ້ອນຂ້າງເພິ່ງພາອາໃສຊັບພະຍາກອນປ່າໄມ້ ໂດຍສະເພາະແມ່ນເຄື່ອງປ່າຂອງດົງ ຫຼາຍກວ່າກຸ່ມເສດຖະກິດ-ສັງຄົມອື່ນໆ. ເຂົາເຈົ້າເກືອບຈະບໍ່ມີໂອກາດໄດ້ເຂົ້າຮ່ວມວຽກງານສົ່ງເສີມ ແລະ ບໍ່ໄດ້ເຂົ້າຮ່ວມໃນກິດຈະກຳການພັດທະນາ ແລະ ເຂົາເຈົ້າບໍ່ຮູ້ເລີຍວ່າແມ່ນຫຍັງກຳລັງເກີດຂຶ້ນຢູ່ໃນບ້ານ.

- ບໍ່ມີຄົວເຮືອນແມ່ຍິງຈັກຄົວເຮືອນຢູ່ໃນລະດັບຄົວເຮືອນຮັ່ງມີ, ມີຄົວເຮືອນແມ່ຍິງປະມານ2% ຢູ່ໃນລະດັບຄົວເຮືອນປານກາງ ແລະ ລະດັບຄົວເຮືອນທຸກຍາກມີປະມານ 3%. ເສດຖະກິດຂອງເຂົາເຈົ້າແມ່ນຂຶ້ນກັບຊັບພະຍາກອນທຳມະຊາດ.
- ຄົວເຮືອນແມ່ຍິງເປັນຫົວໜ້າຄອບຄົວຈະພົບບັນຫາຫຸ້ຍງຍາກຫຼາຍໃນການດຳລົງຊີວິດປະຈຳວັນ່ຂອງເຂົາເຈົ້າ ເຊັ່ນ: ຜົວຂອງເຂົາເຈົ້າເສຍຊີວິດ. ອຸປະສັກຂອງຄົວເຮືອນແມ່ຍິງເປັນຫົວໜ້າຄອບຄົວສ່ວນຫຼາຍແມ່ນບໍ່ມີຊັບພະຍາກອນໃນການຜະລິດ (ສັດລ້ຽງ, ກິດຈະກຳສ້າງລາຍໄດ້ອື່ນໆ) ແລະ ສະພາບຂອງຮ່າງກາຍນັບມື້ນັບເຊື່ອມໂຊມລົງ (ອາຍຸແກ່, ສຸຂະພາບຊຸດໂຊມ).

## 3.6. ສະພາບວັດທະນະທຳ ແລະ ຮີດຄອງປະເພນີ

### *ການແຕ່ງງານ ແລະ ຄອບຄົວ*

ການສືບເຊື້ອສາຍຕະກຸນ ຢູ່ໃນບ້ານລາວເທິງທັງ 4 ບ້ານ ແມ່ນສືບຕະກຸນຈາກພໍ່ຫາລູກຊາຍ. ຫຼື ສືບມູນທາງພໍ່. ເວລາແຕ່ງງານເຈົ້າສາວຈະຍ້າຍມາຢູ່ກັບຄອບຄົວເຈົ້າບ່າວ. ດິນ ແລະ ຊັບສິນບັດຕົກເປັນຂອງຝ່າຍຊາຍ. ຜົວສາມາດມີເມຍຫຼາຍກວ່າໜຶ່ງຄົນ, ແຕ່ເຂດນີ້ຍັງບໍ່ທັນປະກົດມີກໍລະນີດັ່ງກ່າວເທື່ອ. ໂດຍທົ່ວໄປແລ້ວ ແມ່ຍິງຊົນເຜົ່າລາວລຸ່ມມີສະຖານະພາບ ແລະ ການຕັດສິນໃຈໃນລະບົບສືບມູນທາງແມ່ດີກວ່າ, ຊຶ່ງຜົວຍ້າຍມາຢູ່ນຳເມຍ, ດັ່ງນັ້ນແມ່ຍິງຈຶ່ງມີສິດອຳນາດຫຼາຍກວ່າຍ້ອນວ່າເຮືອນ ແລະ ຊັບສິນບັດເປັນຂອງຄອບຄົວຂອງລາວ ແລະ ລາວຄຸ້ນເຄີຍກັບສະພາບແວດລ້ອມດີກວ່າ. ຖ້າມີບັນຫາກ່ຽວກັບການແຕ່ງງານ, ຜົວຈະຕ້ອງເປັນຝ່າຍໜີຈາກເຮືອນໄປ. ລູກສາວຜູ້ຢູ່ນຳ ແລະ ເບິ່ງແຍງພໍ່ແມ່ ກໍ່ຈະໄດ້ຮັບມູນມໍລະດົກຂອງພໍ່ແມ່ (ໂດຍທົ່ວໄປຈະແມ່ນດິນເຮືອນ ແລະ ນາ). ສ່ວນລູກຄົນອື່ນໆຈະໄດ້ຮັບມູນມໍລະດົກບາງຢ່າງນັ້ນແມ່ນກໍລະນີທີ່ຄອບຄົວຮັ່ງມີ ແລະ ມີດິນຫຼາຍຕອນເທົ່ານັ້ນ.

### *ຄວາມເຊື່ອຖື ແລະ ຮີດຄອງປະເພນີ*

ໂດຍທົ່ວໄປແລ້ວ, ໃນບ້ານທີ່ລົງສຳຫຼວດບໍ່ມີພິທີທາງສາສະໜາທີ່ໃຫຍ່ໂຕ ແລະ ບໍ່ໄດ້ຮັກສາຮີດເກົ່າຄອງເດີມໄວ້. ແຕ່ເຖິງຢ່າງໃດກໍ່ຕາມ, ຍັງມີການເຊື່ອຖືຜີປູ່ຜີຫຍ່າ ແລະ ບາງຄັ້ງກໍ່ແມ່ນຜີພໍ່ຜີແມ່. ໃນບ້ານລາວເທິງທັງ 3 ໝູ່ບ້ານໄດ້ມີເຊື້ອສາຍ ຫຼື ຕະກຸນທີ່ເປັນເອກະລັກ ຊຶ່ງໂດຍທົ່ວໄປຈະເຊື່ອຖື ແລະ ຕິດພັນກັບສັດ ຫຼື ຕົ້ນໄມ້, ສ່ວນເຊື້ອສາຍ ຫຼື ຕະກຸນລາວລຸ່ມແມ່ນອີງຕາມວົງສາຄະນາຍາດທີ່ສືບທອດກັນມາ. ພິທີທາງສາສະໜາສ່ວນຫຼາຍຈະແມ່ນພາລະຂອງຜູ້ຊາຍ ແຕ່ໃນກໍລະນີລະບົບມານດາທິລາດ ເຊັ່ນ ຊົນເຜົ່າສວ່ຍ (ລາວເທິງ), ພວກເຂົາສາມາດໃຫ້ແມ່ຍິງເປັນຜູ້ເຮັດພິທີ.

ຕາມຮີດຄອງປະເພນີຂອງຊົນເຜົ່າລາວເທີງແລ້ວໃຊ້ຄວາຍຖະຫວາຍຜີ. ສຳລັບພິທີການນ້ອຍໆພວກເຂົາກໍ່ໃຊ້ໝູ, ໝາ ຫຼື ໄກ່ຫຼາຍກວ່າ. ໃນປະຈຸບັນ, ຊົນເຜົ່າກະຕ່າງ, ປະໂກະ ແລະ ສ່ວຍ ໄດ້ຫັນເອົາໝູມາຖະຫວາຍແທນຄວາຍ ຫຼື ຍົກເລີກພິທີໄປແລ້ວ. ໃນບ້ານຫ້ວຍຫຼາດ (ຊົນເຜົ່າປະໂກະ) ໄດ້ທຳພິທີທາງສາສະໜາໃນປີທີ່ຈະຍ້າຍໄຮ່ໄປເຮັດຢູ່ບ່ອນໃໝ່. ຊາວບ້ານເຮັດພິທີເພື່ອຂໍອະນຸຍາດຈາກເຈົ້າຖິ່ນເຈົ້າຖານກ່ອນການສຳຫຼວດເນື້ອທີ່ໄຮ່, ຕັດຕົ້ນໄມ້, ກຽມດິນ, ສັກເຂົ້າ, ກ່ອນເກັບກ່ຽວ ແລະທຳພິທີຂອບໃຈ. ຊາວບ້ານເຊື່ອວ່າຖ້າບໍ່ເຮັດພິທີດັ່ງກ່າວນີ້ຈະເຮັດໃຫ້ສະມັດຕະພາບຂອງການຜະລິດຕ່ຳ ແລະ ສະມາຊິກຄອບຄົວເຈັບໄຂ້.

ສາສະໜາຂອງຊົນເຜົ່າກະຕ່າງແມ່ນສາສະໜາຜີ. ເຊື່ອຖືວ່າຜີຈະຄູ້ມຄອງປ່າໄມ້, ເຂດລຸ່ມນ້ຳ ,ໄຟຕ່າງໆ ແລະ ຜີປູ່ຜີຫຍ່າຄູ້ມຄອງຊຸມຊົນ. ການເຊື່ອຖືເຈົ້າປ່າເຈົ້າເຂົາໄດ້ຊ່ວຍປ້ອງກັນບໍ່ໃຫ້ມີການລັກລອບຕັດໄມ້ ແລະ ລ່າສັດ.˙ເຖິງແມ່ນວ່າຈະມີທັງວິນຍານດີ ແລະ ວິນຍານຮ້າຍກໍ່ຕາມ, ຊົນເຜົ່າກະຕ່າງເຊື່ອວ່າຫຼັງຈາກຕາຍແລ້ວມີພຽງວິນຍານດີເທົ່ານັ້ນຈະມີຊີວິດ. ພວກເຂົາເຊື່ອວ່າຜີບ້ານທີ່ເບິ່ງແຍງຄອບຄົວ ແລະ ຊຸມຊົນນັ້ນ ສາມາດປິ່ນປົວໂລກໄພໄຂ້ເຈັບ ແລະ ແກ້ໄຂບັນຫາໄດ້.

## 3.7. ພາລະບົດບາດຂອງບັນດາອົງການຈັດຕັ້ງບ້ານ

ລະບົບການປົກຄອງບ້ານລວມມີ: ຄະນະບ້ານ ຊຶ່ງປະກອບດ້ວຍ ນາຍບ້ານ ແລະ ຮອງນາຍບ້ານ 2 ທ່ານ, ເຖົ້າແກ່ແນວໂຮມບ້ານ (ແນວລາວສ້າງຊາດ), ແລະ ຄະນະກຳມະການເສດຖະກິດ, ສະຫະພັນແມ່ຍິງ, ຊາວໜຸ່ມ, ປກສ ຫຼື ຕຳຫຼວດບ້ານ, ກອງຫຼອນ, ສະມາຄົມປ່າໄມ້ບ້ານ. ທຸກໆອົງການຈັດຕັ້ງຂອງບ້ານ ລ້ວນແລ້ວແຕ່ມີສ່ວນຮ່ວມໃນການຄູ້ມຄອງ ແລະ ຈັດສັນປ່າໄມ້ໂດຍທາງກົງ ແລະ ທາງອ້ອມ. ການວິເຄາະພາລະບົດບາດ ແລະ ໜ້າທີ່ຂອງແຕ່ລະອົງການຈັດຕັ້ງມີຄືລຸ່ມນີ້:

ຕາຕະລາງ 3.5: ຕາຕະລາງວິເຄາະອົງການຈັດຕັ້ງ

| ອົງການຈັດຕັ້ງ | ພາລະບົດບາດ ແລະ ໜ້າທີ່ | ຄະນະນຳ | | ຜົນສຳເລັດ | ອຸປະສັກ | ຄວາມຕ້ອງການ |
|---|---|---|---|---|---|---|
| | | ຍິງ | ຊາຍ | | | |
| ສະຫະພັນແມ່ຍິງ | • ປຸກລະດົມແນວຄິດການເມືອງ<br>• ແກ້ໄຂບັນຫາຂອງແມ່ຍິງ<br>• ສົ່ງເສີມສິດທິຂອງແມ່ຍິງ ແລະ ເດັກນ້ອຍ<br>• ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດໂຄງການພັດທະນາ<br>• ເປັນຜູ້ປະສານງານລະຫວ່າງແມ່ຍິງ ກັບອົງການຊ່ວຍເຫຼືອ<br>• ສ້າງກິດຈະກຳສ້າງລາຍໄດ້<br>• ຕິດຕໍ່ພົວພັນກັບສະຫະພັນແມ່ຍິງເມືອງ ແລະ ກຸ່ມແມ່ຍິງບ້ານອື່ນໆ | 13 | 0 | • ສ້າງກອງທຶນເພື່ອກິດຈະກຳສ້າງລາຍໄດ້;<br>• ແກ້ໄຂຂໍ້ຂັດແຍ່ງລະຫວ່າງສະມາຊິກດ້ວຍກັນ;<br>• ໃຫ້ສະຫວັດດີການສັງຄົມແມ່ຍິງພາຍໃນບ້ານ;<br>• ຊ່ວຍການນຳຂອງບ້ານ ຮັບແຂກ (ແຕ່ງກິນ, ບໍລິການອາຫານ ໃນກອງປະຊຸມປ່າໄມ້);<br>• ເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບສາທາລະນະສຸກ ໃຫ້ແກ່ສະມາຊິກແມ່ຍິງ. | • ຄະນະນຳບໍ່ຮູ້ພາລະໜ້າທີ່ຂອງຕົນເອງ;<br>• ບໍ່ມີຕະຫຼາດຮອງຮັບຜະລິດຕະພັນຫັດຖະກຳ;<br>• ລະດັບການສຶກສາຕ່ຳ-ປະທານສະພັນແມ່ຍິງບໍ່ສາມາດຂຽນພາສາລາວໄດ້ໃນບາງບ້ານ;<br>• ບໍ່ໄດ້ຮັບເຊີນມາມີສ່ວນຮ່ວມໃນກິດຈະກຳປ່າໄມ້;<br>• ບໍ່ຮູ້ວ່າແມ່ນຫຍັງກຳລັງເກີດຂື້ນໃນບ້ານ-ຂາດຂໍ້ມູນຂ່າວສານ<br>• ບໍ່ໄດ້ປະຊຸມປົກກະຕິ | • ນ້ຳບາດານ;<br>• ຝຶກອົບຮົມການບໍລິຫານ;<br>• ກິດຈະກຳສ້າງລາຍໄດ້ສຳລັບແມ່ຍິງ;<br>• ສ້າງຕັ້ງກຸ່ມເຮັດກິດຈະກຳສ້າງລາຍໄດ້;<br>• ສ້າງຕະຫຼາດ;<br>• ປະຕິບັດຫຼາຍຂື້ນ-ບໍ່ຄວນມີແຕ່ເວົ້າຊື່ໆ;<br>• ຢາກໃຫ້ໂຄງການ SUFORD ຝຶກອົບຮົມບົດບາດຍິງ-ຊາຍ/ກອງປະຊຸມສຳມະນາໃຫ້ການນຳຂອງບ້ານ (ສະເພາະແຕ່ຜູ້ຊາຍ);<br>• ພະນັກງານເມືອງ ແລະ ໂຄງການຄວນຈະເຮັດກິດຈະກຳພັດທະນາຫຼາຍຂື້ນ ຊຶ່ງບໍ່ມີພຽງແຕ່ວຽກປ່າໄມ້ຢ່າງດຽວ;<br>• ສ້າງກອງທຶນສຳລັບແມ່ຍິງ;<br>• ສ້າງກຸ່ມຕ່ຳຫູກ;<br>• ຝຶກອົບຮົມເຄື່ອງປ່າຂອງດົງ;<br>• ຢາກມີສ່ວນຮ່ວມນຳຜູ້ຊາຍ |

| | | | | | | |
|---|---|---|---|---|---|---|
| | | | | | | • ຝຶກອົບຮົມການປຸງແຕ່ງ ຫຼື ແປຮູບອາຫານ. |
| ແນວໂຮມ | • ສ້າງຄວາມສາມັກຄີພາຍໃນບ້ານ<br>• ແກ້ໄຂຂໍ້ຂັດແຍ່ງ ຫຼື ວຽກໄກ່ເກ່ຍ. | 2 | 10 | • ສ້າງຄວາມສະຫງົບ;<br>• ແກ້ໄຂຂໍ້ແຍ່ງດິນ ແລະ ປ່າໄມ້ ລະຫວ່າງຊາວບ້ານດ້ວຍກັນ. | • ຍັງບໍ່ທັນມີການແບ່ງໜ້າທີ່ຮັບຜິດຊອບກັນຢ່າງຄັກແນ່ໃນຄະນະ | • ຫ້ອງການ ແລະ ອຸປະກອນຮັບໃຊ້<br>• ສ້າງໂຮງຮຽນ<br>• ສຸກສາລາ<br>• ທີ່ນທາງ ແລະ ໄຟຟ້າ<br>• ຈັດສັນເນື້ອທີ່ດິນ<br>• ທັດສະນະ<br>• ຝຶກອົບຮົມການປົກຄອງ |
| ຊາວໜຸ່ມ | • ປົກປ້ອງສິດທິຊາວໜຸ່ມ, ຫຼຸດຜ່ອນພຶດຕິກຳອັນບໍ່ດີໃນໝູ່ຊາວໜຸ່ມເຊັ່ນ: ຢາເສບຕິດ; ສຶກສາອົບຮົມຊາວໜຸ່ມກ່ຽວກັບແນວຄິດການເມືອງ;<br>• ຊ່ວຍອົງການຈັດຕັ້ງອື່ນໆ ຖ້າຕ້ອງການ. | 3 | 8 | • ຊ່ວຍການນຳຂອງບ້ານໃນການກວດກາການລັກລອບຕັດໄມ້ແບບຜິດກົດໝາຍ (ປົກປັກຮັກສາປ່າໄມ້);<br>• ສ້າງກອງທຶນຊາວໜຸ່ມ<br>• ສົ່ງສະມາຊິກໄປເປັນທະຫານພັນທະ ປ້ອງກັນຊາດ. | • ຂາດທັກສະດ້ານອາຊີບ<br>• ວ່າງງານ/ບໍ່ມີອາຊີບ<br>• ບາງຄັ້ງບໍ່ມີກິດຈະກຳ ແລະ ບໍ່ມີກອງປະຊຸມເປັນປົກກະຕິ<br>• ຄະນະນຳ ບໍ່ມີແຜນວຽກຈະແຈ້ງ | • ຝຶກອົບຮົມວິຊາຊີບ ແລະ ສ້າງວຽກເຮັດວານທຳ<br>• ເຮັດວຽກ ແລະ ປະຊຸມເປັນປົກກະຕິ<br>• ປູກໄມ້ຮັກສາສະພາບແວດລ້ອມ<br>• ກອງທຶນຊາວໜຸ່ມ |
| ຄະນະບ້ານ | • ນຳພາ ແລະ ປົກຄອງບ້ານ<br>• ວາງແຜນ ແລະ ພັດທະນາເສດຖະກິດສັງ-ຄົມ | 0 | 18 | • ວາງແຜນ ແລະ ປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ;<br>• ເຜີຍແຜ່ເອກະສານການເມືອງ/ຮັບການຊີ້ນຳໆພາຈາກປົກຄອງເມືອງ;<br>• ເກັບພາສີທີ່ດິນ<br>• ເຮັດວຽກໄກ້ສິດຕິດແທດກັບໂຄງ | • ຂາດສິ່ງອຳນວຍຄວາມສະດວກໃນການເຮັດວຽກ;<br>• ຂາດທັກສະດ້ານການຄູ້ມຄອງ;<br>• ບໍ່ຮູ້ວາງແຜນເພື່ອຄວາມກ້າວໜ້າຂອງແມ່ຍິງ;<br>• ບໍ່ຮູ້ພາລະບົດບາດ ແລະ ໜ້າ | • ຫອ້ງການບ້ານ ແລະ ອຸປະກອນຮັບໃຊ້<br>• ປັບປຸງພື້ນຖານໂຄງລ່າງ (ທີ່ນທາງ, ນ້ຳບາດານ, ໂຮງຮຽນ, ສຸກສາລາ ແລະ ໄຟຟ້າ)<br>• ຝຶກອົບຮົມປູກຝັງ ແລະ ລ້ຽງສັດ; |

| | | | | | | |
|---|---|---|---|---|---|---|
| | | | | ການ FOMACOP | ທີ່ຂອງຄະນະບ້ານ | • ແນວພັນເຂົ້າໃໝ່<br>• ຈັດສັນເນື້ອທີ່ດິນ<br>• ຝຶກອົບຮົມການຄຸ້ມຄອງການເງິນ ແລະ ບັນຊີ<br>• ເພີ່ມຄູສອນ<br>• ທັດສະນະສຶກສາ ຢູ່ປະເທດໄທ<br>• ກອງທຶນສຳລັບແມ່ຍິງ<br>• ໃຫ້ແມ່ຍິງມີສ່ວນຮ່ວມໃນການພັດທະນາບ້ານຫຼາຍຂຶ້ນ, ໂດຍສະເພາະແມ່ນຕຳແໜ່ງການນຳຕ່າງໆ<br>• ຝຶກອົບຮົມທັກສະການເປັນຜູ້ນຳ |
| ແພດອາສາສະໝັກບ້ານ | • ຮັບຜິດຊອບສຸກສາລາບ້ານ<br>• ເຜີຍແຜ່ຂໍ້ມູນຂ່າວສານດ້ານສາທາລະນະສຸກ | 1 | 5 | • ຈັດຝຶກອົບຮົມກ່ຽວກັບສາທາລະນະສຸກ<br>• ໃຫ້ຄຳປຶກສາກ່ຽວກັບບັນຫາສຸຂະພາບ | • ບໍ່ມີ | • ຖົງຢາປະຈຳບ້ານ-ກອງທຶນສຳລັບຢາປົວພະຍາດ<br>• ມຸ້ງກັນຍຸງ<br>• ຢາວັກຊີນ<br>• ສຸກສາລາ ແລະ ເຄື່ອງມື |
| ສະມາຄົມປ່າໄມ້ບ້ານ | • ວາງແຜນກິດຈະກຳປ່າໄມ້ ແລະ ປົກປັກຮັກສາ<br>• ຈັດສັນປ່າ<br>• ວາງແຜນຝຶກອົບຮົມປ່າໄມ້ກະສິກຳ | 1 | 46 | • ຕັດໄມ້ທ່ອນຂາຍ<br>• ສຳຫຼວດປ່າໄມ້<br>• ເຜີຍແຜ່ລະບຽບປ່າໄມ້<br>• ເຮັດວຽກກັບພະນັກງານເມືອງ<br>• ປ້ອງກັນປ່າໄມ້<br>• ປູກຕົ້ນໄມ້<br>• ສ້າງແຜນປ່າໄມ້ | • ສະມາຊິກແຕ່ລະຄົນມີໜ້າທີ່ ແລະ ຄວາມຮັບຜິດຊອບບໍ່ຈະແຈ້ງ;<br>• ມີການກຳນົດມາດຕະຖານການຄັດເລືອກຫົວໜ້າ, ແຕ່ບໍ່ເອົາໃຈໃສ່ແມ່ຍິງເຂົ້າຮ່ວມ.<br>• ຄະນະບໍ່ມີຄວາມສາມາດ ແລະ ເຮັດວຽກບໍ່ລ້ອນໜ້າທີ່. | • ປັບປຸງເບ້ຍໄມ້ (ສວນກ້າເບ້ຍ)<br>• ຝຶກອົບຮົມປ່າໄມ້ຫຼາຍຂຶ້ນ<br>• ກອງທຶນໝູນວຽນຂອງບ້ານ<br>• ຫ້ອງການປ່າໄມ້ບ້ານ<br>• ຍຸດຕັດໄມ້ (ໄມ້ທ່ອນ) ເພື່ອຮັກສາສະພາບແວດລ້ອມ<br>• ສ້າງກິດຈະກຳສ້າງລາຍໄດ້ແທນການຂາຍໄມ້ທ່ອນ ຫຼາຍຂຶ້ນ |

| | | | | | | |
|---|---|---|---|---|---|---|
| | | | | | | • ໃຫ້ມີແມ່ຍິງໃນຄະນະປ່າໄມ້ບ້ານຫຼາຍກວ່າເກົ່າ |
| ຕຳຫຼວດບ້ານ (ປ້ອງກັນຄວາມສະຫງົບ) | • ປ້ອງກັນຄວາມສະຫງົບຂອງບ້ານ<br>• ຄວບຄຸມຄົນເຂົ້າອອກ (ເຂົ້າ ແລະ ອອກບ້ານ) | 0 | 5 | • ປ້ອງກັນຄວາມສະຫງົບເປັນປົກກະຕິ | • ບໍ່ສາມາດຄວບຄຸມການລັກລອບຕັດໄມ້ແບບຜິດກົດໝາຍໄດ້ | • ສືບຕໍ່ປ້ອງກັນຄວາມສະຫງົບຂອງບ້ານ |
| ກອງທຶນພັດທະນາບ້ານ | • ຄູ້ມຄອງກອງທຶນຂອງບ້ານ | 1 | 4 | • ສ້າງກອງທຶນໝູນວຽນ ແລະ ກຸ່ມອອມສັບໃນບ້ານ<br>• ບໍລິການສິນເຊື່ອໃຫ້ແກ່ສະມາຊິກ (300,000 ກີບ/ຄອບຄົວ) | • ສະມາຊິກບໍ່ສາມາດຈ່າຍຄ່າດອກເບ້ຍໄດ້ | • ຕ້ອງການທະນາຄານງົວ ແລະ ຄວາຍຕື່ມອີກ<br>• ຝຶກອົບຮົມສິນເຊື່ອ |
| ສະມາຄົມພໍ່ແມ່ນັກຮຽນ | • ຕິດຕາມການສອນຂອງຄູ<br>• ລະດົມທຶນ ເພື່ອປັບປຸງໂຮງຮຽນ | 0 | 3 | • ສ້າງກອງທຶນເພື່ອຊື້ອຸປະກອນການສິດສອນ | • ບໍ່ມີ | • ຕ້ອງການຄູຕື່ມອີກ<br>• ໂຕະຕັ່ງສຳລັບນັກຮຽນ<br>• ສ້າງໂຮງຮຽນໃໝ່ |

*ທີ່ມາຂອງຂໍ້ມູນ: ສົນທະນາກຸ່ມແມ່ຍິງ ແລະ ຜູ້ຊາຍ*

# ພາກທີ 4: ການວິເຄາະບົດບາດຍິງ-ຊາຍ ແລະ ປ່າໄມ້

## 4.1. ການແບ່ງງານລະຫວ່າງຍິງ-ຊາຍ

ທີມງານສຳຫຼວດໄດ້ເກັບກຳຂໍ້ມູນໂດຍໃຊ້ຕາຕະລາງແບ່ງງານລະຫວ່າງຍິງ-ຊາຍ, ຊຶ່ງເກັບກຳຈາກກຸ່ມແມ່ຍິງ, ຜູ້ຊາຍ ແລະ ຜູ້ໃຫ້ຂໍ້ມູນທີ່ສຳຄັນອື່ນໆໃນພາກສະໜາມ. ຕາຕະລາງ 4.1 ໄດ້ສະແດງໃຫ້ເຫັນເຖິງຄວາມແຕກຕ່າງລະຫວ່າງຍິງ-ຊາຍ ໃນວຽກການຜະລິດ, ວຽກເຮືອນ ແລະ ຊຸມຊົນ.

ຕາຕະລາງ 4.1: ການແບ່ງງານລະຫວ່າງຍິງ-ຊາຍ

| ປະເພດວຽກ | ກິດຈະກຳ | ບົດບາດຍິງ-ຊາຍ | ເວລາ |
|---|---|---|---|
| **ການຜະລິດເຂົ້າໄຮ່** | | | |
| ການເຮັດໄຮ່ | ສຳຫຼວດເນື້ອທີ່ | ຊ | ປີລະເທື່ອ |
| | ຖາງໄຮ່ | ຊຍ | ເດືອນ 3-4 |
| | ຈູດໄຮ່ | ຊຍ | ປີລະເທື່ອ |
| | ລ້ອມຮົ້ວ | ຊຍ | ບາງຄັ້ງຄາວ |
| | ຮ້າໄຮ່ | ຊຍ | ປີລະເທື່ອ |
| | ເລືອກແນວພັນ | ຍ | ປີລະເທື່ອ |
| | ກຽມດິນ | ຊຍ | ປີລະເທື່ອ |
| | ປູກ | ຊຍ | ບາງຄັ້ງຄາວ |
| | ເສຍຫຍ້າຄັ້ງທີ 1 | ຍຊ | ບາງຄັ້ງຄາວ |
| | ເສຍຫຍ້າຄັ້ງທີ 2 | ຍຊ | ບາງຄັ້ງຄາວ |
| | ເສຍຫຍ້າຄັ້ງທີ 3 | ຍຊ | ບາງຄັ້ງຄາວ |
| | ເກັບກ່ຽວ | ຍຊ | ຫຼາຍອາທິດ |
| | ມັດເຂົ້າ, ກອງເຂົ້າ | ຍຊ | ຫຼາຍອາທິດ |
| | ຟາດເຂົ້າ | ຍຊ | ຫຼາຍອາທິດ |
| | ຂົນ, ຫາບ | ຊຍ | ຫຼາຍອາທິດ |
| | ສີເຂົ້າ | ຍ | ອາທິດລະເທື່ອ |
| **ການຜະລິດເຂົ້ານາ** | | | |
| ການເຮັດນາ (ເຂດທົ່ງພຽງ) | ກະກຽມເຄື່ອງມື | ຊ | ປີລະເທື່ອ |
| | ກະກຽມແນວພັນ | ຍຊ | ປີລະເທື່ອ |
| | ກຽມຕົກກ້າ | ຊຍ | ປີລະເທື່ອ |
| | ໃສ່ຝຸ່ນ, ປຸ໋ຍ/ ບົ່ມຝຸ່ນ | ຊຍ | ບາງຄັ້ງຄາວ |
| | ຫວ່ານກ້າ | ຍຊ | ປີລະເທື່ອ |
| | ປ້ານຂັ້ນນາ | ຊ | ບາງຄັ້ງຄາວ |
| | ລ້ອມຮົ້ວ | ຊຍ | ປີລະເທື່ອ |

| | | | |
|---|---|---|---|
| | ໄຖ | ຊ | ປີລະເທື່ອ |
| | ຄາດ | ຊ | ປີລະເທື່ອ |
| | ດຳນາ | ຊຍ | ປີລະເທື່ອ |
| | ໃສ່ຝຸ່ນ, ປຸ໋ຍ/ ບົ່ມຝຸ່ນ | ຊຍ | ບາງຄັ້ງຄາວ |
| | ເສຍຫຍ້າ | ຍຊ | ບາງຄັ້ງຄາວ |
| | ເກັບກ່ຽວ | ຊຍ | ປີລະເທື່ອ |
| | ມັດເຂົ້າ | ຊຍ | ປີລະເທື່ອ |
| | ຟາດເຂົ້າ | ຊຍ | ປີລະເທື່ອ |
| | ຂົນ, ຫາບ | ຊຍ | ປີລະເທື່ອ |
| | ຄັດເລືອກແນວພັນ | ຍ | ປີລະເທື່ອ |
| | ສີເຂົ້າ | ຍ | ອາທິດລະເທື່ອ |
| **ວຽກປ່າໄມ້** | | | |
| ປ່າໄມ້ ແລະ ເດີ່ນຫຍ້າ | ເກັບຫວາຍ | ຊ | ບາງຄັ້ງຄາວ |
| | ເກັບໜໍ່ຫວາຍ | ຍຊ | ບາງຄັ້ງຄາວ |
| | ເກັບໜໍ່ໄມ້ | ຍຊ | ບາງຄັ້ງຄາວ |
| | ເກັບເຫັດ | ຍຊ | ບາງຄັ້ງຄາວ |
| | ເກັບສະໝູນໄພ | ຊຍ | ບາງຄັ້ງຄາວ |
| | ລ່າເນື້ອ | ຊ | ບາງຄັ້ງຄາວ |
| | ຕັດໄມ້ຮັບໃຊ້ຄອບຄົວ | ຊຍ | ເດືອນລະເທື່ອ |
| | ເອົາຟືນ | ຍ | ອາທິດລະເທື່ອ |
| | ຕັດໄມ້ທ່ອນ | ຊ | ບາງອາທິດ |
| | ຂົນສົ່ງໄມ້ທ່ອນ | ຊ | ບາງອາທິດ |
| | ກວດກາເວນຍາມປ່າໄມ້ (ປ້ອງກັນ) | ຊ | ປະຈຳວັນ |
| ກິດຈະກຳປູກຕົ້ນໄມ້ | ຮ່າຍຖົງກ້າເບ້ຍ | ຍຊ | ບາງຄັ້ງຄາວ |
| | ເສຍຫຍ້າ | ຍ | ບາງຄັ້ງຄາວ |
| | ຂຸດ ແລະ ຖົມຂຸມ | ຊຍ | ບາງຄັ້ງຄາວ |
| | ປູກ | ຊຍ | ບາງຄັ້ງຄາວ |
| | ກະກຽມດິນ | ຊຍ | ບາງຄັ້ງຄາວ |
| | ຂຸດໜານ, ຄັນຄູ | ຊຍ | ບາງຄັ້ງຄາວ |
| | ຢືມເງິນຈາກທະນາຄານມາປູກໄມ້ | ຊ | ບາງຄັ້ງຄາວ |
| **ການລ້ຽງສັດ** | | | |
| ບໍລິເວນເຮືອນຊານ | ລ້ຽງປາ | ຊ | ປະຈຳວັນ |
| | ລ້ຽງເປັດ,ໄກ່ | ຍ | ປະຈຳວັນ |
| | ລ້ຽງໝູ | ຍ | ປະຈຳວັນ |
| ບໍລິເວນເດີ່ນຫຍ້າ | ລ້ຽງງົວ, ຄວາຍ | ຊ | ບາງລະດູການ |
| **ຫັດຖະກຳ ແລະ ອຸດສາຫະກຳຂະໜາດຄອບຄົວ** | | | |

| | | | |
|---|---|---|---|
| ໃນເຮືອນຊານ | ຫຍິບເສື້ອຜ້າ | ຍ | ປະຈຳວັນ |
| | ເຂັນຝ້າຍ | ຍ | ປະຈຳວັນ |
| | ຍ້ອມສີໄໝ ຫຼື ເສື້ອຜ້າ | ຍ | ປະຈຳວັນ |
| | ຕຳຫູກ | ຍ | ປະຈຳວັນ |
| | ສ້າງ ແລະ ສ້ອມແປງເຮືອນ | ຊ | ບາງຄັ້ງຄາວ |
| | ສານກະຕ່າ, ກະບຸງ | ຊ | ບາງຄັ້ງຄາວ |
| | ສານແຫ, ສະຫວິງ | ຊ$_{ຍ}$ | ບາງຄັ້ງຄາວ |
| | ໄພຫຍ້າ (ໃຊ້ຫຍ້າຄາ) | ຊ | ບາງຄັ້ງຄາວ |
| | ຕີເຫຼັກ, ຕີພ້າ | ຊ | ບາງຄັ້ງຄາວ |
| **ກິດຈະກຳດູແລຄອບຄົວ** | | | |
| ວຽກເຮືອນ | ແຕ່ງກິນ | ຍ | 3 ຄາບຕໍ່ມື້ |
| | ຕັກນ້ຳ | ຍ | 2 ຄັ້ງຕໍ່ມື້ |
| | ໜຶ້ງເຂົ້າ | ຍ | ປະຈຳວັນ |
| | ຕຳເຂົ້າດ້ວຍມື | ຍ | 2 ຄັ້ງຕໍ່ມື້ |
| | ເຮັດສວນຄົວ | ຍ$_{ຊ}$ | ປະຈຳວັນ |
| | ເບິ່ງແຍງລູກຫຼານ ແລະ ຜູ້ເຖົ້າ | ຍ$_{ຊ}$ | ປະຈຳວັນ |
| | ສັກເຄື່ອງ | ຍ | ປະຈຳວັນ |
| | ອະນາໄມເຮືອນຊານ | ຍ | ປະຈຳວັນ |
| **ວຽກຊຸມຊົນ** | | | |
| ວຽກລວມບ້ານ | ໄປປະຊຸມ | ຊ | ບາງຄັ້ງຄາວ |
| | ບຸນສິນກິນທານໃນບ້ານ | ຊ$_{ຍ}$ | ບາງຄັ້ງຄາວ |
| | ສ້າງທາງ | ຊ$_{ຍ}$ | ບາງຄັ້ງຄາວ |
| | ສ້າງໂຮງຮຽນ | ຊ$_{ຍ}$ | ບາງຄັ້ງຄາວ |

*ໝາຍເຫດ: ຊ = ມີແຕ່ຊາຍເຮັດ; ຊ$_{ຍ}$ = ຊາຍເຮັດຫຼາຍກວ່າຍິງ; ຊຍ= ຍິງ ແລະ ຊາຍເຮັດເທົ່າກັນ; ຍ$_{ຊ}$= ຍິງເຮັດຫຼາຍກວ່າຊາຍ; ຍ = ມີແຕ່ຍິງເຮັດ.*

ໂດຍທົ່ວໄປ, ແມ່ຍິງ ແລະ ຜູ້ຊາຍມີຄວາມຮັບຜິດຊອບໃນການປູກເຂົ້ານຳກັນເກືອບທຸກໆກິດຈະກຳ. ໃນທຸກໆບ້ານ, ແມ່ຍິງສ່ວນຫຼາຍແມ່ນຮັບຜິດຊອບ "ເລື້ອງແນວພັນ" ຫຼາຍກວ່າ, ໂດຍສະເພາະແມ່ນການຄັດເລືອກແນວພັນໄວ້ປູກປີຕໍ່ໄປ. ຜູ້ຊາຍອາດຮັບຜິດຊອບເລື້ອງການສຳຫຼວດ (ຄັດເລືອກ) ບ່ອນທີ່ຈະເຮັດໄຮ່ ແລະ ທຳພິທີດູມໍເບິ່ງວ່າເປັນເຂດດີ ຫຼື ບໍ່ດີ. ທັງສອງເພດໄດ້ຊ່ວຍກັນຖາງ ແລະ ຈູດໄຮ່ ແລະ ກິດຈະກຳອື່ນໆກໍ່ຄ້າຍໆຄືກັນ. ໃນການເຮັດໄຮ່ ແມ່ຍິງກໍ່ຈະເຮັດວຽກໜັກກວ່າ ໂດຍຍ່າງໄປໄຮ່ເປັນໄລຍະທາງອັນຍາວໄກ, ແບກເຂົ້າ ແລະ ຜັກກັບມາເຮືອນເພື່ອການບໍລິໂພກໃນຄອບຄົວ. ການເສຍຫຍ້າໄຮ່ແມ່ນວຽກຂອງແມ່ຍິງ. ການເຮັດໄຮ່ແບບໝູນວຽນຍັງມີຂອບເຂດຈຳກັດ ເນື່ອງຈາກຄະນະກຳມະການແບ່ງດິນແບ່ງປ່າໄດ້ແບ່ງເນື້ອທີ່ທຳການຜະລິດໃຫ້ແກ່ຊາວບ້ານໃນຂອບ

ເຂດຈຳກັດ[5] ແລະ ເຮັດໃຫ້ຊີວິດການເປັນຢູ່ຂອງແມ່ຍິງຊົນເຜົ່າສ່ວນນ້ອຍທຸກຍາກເນື່ອງຈາກ ຕ້ອງເສຍຫຍ້າຫຼາຍຂຶ້ນ ແລະ ສະມັດຕະພາບຂອງການຜະລິດພັດຕ່ຳລົງເລື້ອຍໆ.

ໃນການເຮັດນາ, ຜູ້ຊາຍສ່ວນຫຼາຍຈະປ້ານຄັນນາ, ໄຖ ແລະ ຄາດນາ ຊຶ່ງແມ່ຍິງຈະຮັບຜິດຊອບການເລືອກແນວພັນ, ມັດເຂົ້າ. ຖ້າເປັນວຽກໜັກເຊັ່ນ: ປ້ານຄັນນາ ແລະ ປຸກເລົ້າເຂົ້າ ຈະແມ່ນວຽກຂອງຜູ້ຊາຍ (ຜົວ ແລະ ລູກຊາຍ) ສະເໝີ. ການຕຳ ແລະ ສີເຂົ້າແມ່ນວຽກຂອງແມ່ຍິງ. ສ່ວນກິດຈະກຳອື່ນໆແມ່ນ ຄົນໜຸ່ມ ແລະ ຜູ້ເຖົ້າ ຈະຊ່ວຍກັນໃນເວລາຕ້ອງການແຮງງານຫຼາຍທີ່ສຸດ.

ແມ່ຍິງຈະຮັບຜິດຊອບເລື້ອງການຕຳເຂົ້າໂດຍສະເພາະ. ສ່ວນຜູ້ຊາຍຈະລ້ຽງປາ ແລະ ສັດໃຫຍ່ສ່ວນສັດປີກ ແລະ ສັດປະເພດນ້ອຍຈະແມ່ນແມ່ຍິງເປັນຄົນລ້ຽງ. ແມ່ຍິງມີບົດບາດສະເພາະໃນການເຂັນຝ້າຍ, ຍ້ອມສີ, ຕ່ຳຫູກ ແລະ ຫຍິບແຊ່ວ. ສ່ວນຜູ້ຊາຍຈະມີບົດບາດສະເພາະໃນການກໍ່ສ້າງເຮືອນ, ຕີເຫຼັກ, ສານແຫ ແລະ ກະຕ່າ.



ຮູບທີ 2. ແມ່ຍິງເຜົ່າປະໂກະຕຳເຂົ້າດ້ວຍມື ຊຶ່ງແມ່ນກິດຈະກຳປະຈຳວັນຂອງເຂົາເຈົ້າ (2 ຄັ້ງຕໍ່ວັນ)

ການເຮັດສວນຄົວສຳລັບຄອບຄົວແລະເອົາຜົນຜະລິດບາງສ່ວນໄປຈຳໜ່າຍຢູ່ຕະຫຼາດລ້ວນແລ້ວແຕ່ແມ່ນຄວາມຮັບຜິດຊອບຂອງແມ່ຍິງ, ການລ້ຽງໝູແລະສັດປີກກໍ່ເຊັ່ນດຽວກັນ. ຊາວນາພົບ

[5] ການເຮັດໄຮ່ຄົງທີ່ ຫຼື ເຮັດໄຮ່ເຫຼົ່າຈະມີຫຍ້າຫຼາຍກວ່າເຮັດໄຮ່ຢູ່ປ່າດົງດິບໜາ

ກັບຄວາມຫຍຸ້ງຍາກເມື່ອມີພະຍາດສັດລະບາດ. ແມ່ຍິງຕ້ອງການຄວາມຮູ້ດ້ານວິຊາການເພື່ອປັບປຸງຜົນຜະລິດ ແລະ ສາມາດເກັບຜົນກຳໄລໄດ້ຈາກການລ້ຽງທົ່ນ.

ແມ່ຍິງ ແລະ ຜູ້ຊາຍມີກິດຈະກຳການສ້າງລາຍໄດ້ເກືອບເທົ່າໆກັນ, ແຕ່ໂດຍທົ່ວໄປແລ້ວ, ໃນເຂດຊົນນະບົດແມ່ຍິງອາດມີໂອກາດສ້າງລາຍໄດ້ຫຼາຍກວ່າຜູ້ຊາຍຈາກການຕໍ່າຫູກ(ຝ້າຍ ແລະ ໄໝ) ແລະ ກິດຈະກຳຫຍິບແສ່ວຕ່າງໆ. ແມ່ຍິງມີຄວາມຊຳນິຊຳນານ ແລະ ເຕັກນິກສູງກ່ຽວກັບການຕໍ່າ ແລະ ສິລະປະໃນການອອກແບບເສື້ອຜ້າອື່ນໆ. ເພື່ອຕອບສະໜອງວັດຖຸດິບໃຫ້ແກ່ກິດຈະກຳຕໍ່າຫູກຢ່າງພຽງພໍ, ແມ່ຍິງຫຼາຍຄົນໄດ້ທຳການປູກຕົ້ນຄາມ ແລະ ປູກມອນ-ລ້ຽງມ້ອນ. ສິລະປະການຕໍ່າຫູກຂອງແມ່ຍິງຊົນນະບົດເປັນຜະລິດຕະພັນອັນສຳຄັນ ໃຫ້ແກ່ການຊົມໃຊ້ໃນຄອບຄົວ, ຈຳໜ່າຍຕະຫຼາດທັງພາຍໃນ ແລະ ຕ່າງປະເທດ.

ໄມ້ຟືນເປັນສິ່ງສຳຄັນທີ່ສຸດໃນຊີວິດປະຈຳວັນຂອງປະຊາຊົນລາວ, ໂດຍສະເພາະແມ່ນປະຊາຊົນທີ່ດຳລົງຊີວິດຢູ່ເຂດຊົນນະບົດຫ່າງໄກສອກຫຼີກ. ຜ່ານການເກັບກຳຂໍ້ມູນຕົວຈິງໃນພາກສະໜາມເຫັນວ່າຄົວເຮືອນຕ່າງໆໃນສປປລາວນຳໃຊ້ຟືນຫຼືຖ່ານເປັນພະລັງງານເພື່ອປຸງແຕ່ງອາຫານ. ບັນຫາໄມ້ຟືນໄດ້ຕິດພັນກັບຊີວິດປະຈຳວັນຂອງແມ່ຍິງມາແຕ່ດຶກດຳບັນ, ຊຶ່ງຮີດຄອງປະເພນີໄດ້ກຳນົດໃຫ້ແມ່ຍິງມີຄວາມຮັບຜິດຊອບຕົ້ນຕໍໃນການເກັບໄມ້ຟືນເພື່ອຊົມໃຊ້ໃນຄອບຄົວຕະຫຼອດເວລາ. ໃນກຸ່ມຕົວຢ່າງຂອງການສຳພາດ, ການແບ່ງງານຂ້ອນຂ້າງເຂັ້ມງວດທີ່ສຸດສຳລັບຊົນເຜົ່າລາວເທິງ, ຊຶ່ງແມ່ຍິງໄດ້ຖືກມອບຄວາມຮັບຜິດຊອບໃນວຽກນີ້ພຽງຄົນດຽວ.ການແບ່ງງານໃນຊົນເຜົ່າລາວລຸ່ມຂ້ອນຂ້າງບໍ່ເຂັ້ມງວດປານໃດ, ຊຶ່ງຜູ້ຊາຍໄດ້ຮັບຜິດຊອບວຽກນີ້ໃນເວລາທີ່ເມຍຖືພາ ແລະ ລູກຍັງນ້ອຍ.

ແມ່ຍິງໃຊ້ເວລາ ແລະ ແຮງງານຫຼາຍເພື່ອເກັບໄມ້ຟືນ, ຊຶ່ງເປັນບັນຫາ ແລະ ອຸປະສັກອັນຕົ້ນຕໍໃຫ້ແກ່ແມ່ຍິງທີ່ຖືພາມານ, ເບິ່ງແຍງເດັກນ້ອຍ, ເປັນໄຂ້ ຫຼື ພິການ. ໂດຍອີງຕາມການຄົ້ນຄວ້າຂອງສູນຂໍ້ມູນຂ່າວສານບົດບາດຍິງ-ຊາຍເພື່ອການພັດທະນາຜ່ານມາເຫັນວ່າ:ແມ່ຍິງທີ່ເກັບໄມ້ຟືນເພື່ອຊົມໃຊ້ໃນຄອບຄົວ ຈະຕ້ອງແບກຟືນ 120-150 ມັດຕໍ່ປີ. ແຕ່ລະມັດທີ່ແບກໃສ່ຫຼັງ ຫຼື ບ່ານັ້ນ ໜັກ 15-20 ກິໂລ ແລະ ໃຊ້ເວລາຍ່າງ ແລະ ຕັດຟືນປະມານ 1-3 ຊົ່ວໂມງ.

ໃນກິດຈະກຳການປູກຕົ້ນໄມ້, ແມ່ຍິງໄດ້ປະກອບສ່ວນແຮງງານເທົ່າກັນກັບຜູ້ຊາຍແຕ່ຂ້ອນຂ້າງຈະຮັບຜິດຊອບວຽກເບົາກວ່າເຊັ່ນ: ກ້າເບ້ຍ, ປູກແລະເສຍຫຍ້າ. ສ່ວນວຽກໜັກເຊັ່ນ: ຂຸດ ແລະ ກຽມດິນຈະແມ່ນຜູ້ຊາຍເປັນຄົນຮັບຜິດຊອບ.

ແມ່ຍິງ ແລະ ລູກສາວຂອງພວກເຂົາ ຍາມໃດກໍ່ຮັບຜິດຊອບພາລະການດູແລຄອບຄົວທຸກຢ່າງຢູ່ສະເໝີ ຊຶ່ງລວມມີ ການກະກຽມອາຫານ ແລະ ແຕ່ງກິນ, ເບິ່ງແຍງເດັກນ້ອຍ, ອະນາໄມ, ຕັກນ້ຳ ແລະ ເກັບໄມ້ຟືນ.



ຮູບທີ 3: ເດັກຍິງ (ຊົນເຜົ່າສ່ວຍ, ລາວເທິງ) ກັບຈາກໄປເອົາໄມ້ຟືນ

ຕາຕະລາງ 4.2 : ສະຫຼຸບສັງລວມການແບ່ງງານລະຫວ່າງຍິງ-ຊາຍ

| ວຽກແມ່ຍິງ (ໂດຍສະເພາະ ຫຼື ສ່ວນຫຼາຍ) | ວຽກຮ່ວມກັນ (ເທົ່າກັນ) | ວຽກຜູ້ຊາຍ (ໂດຍສະເພາະ ຫຼື ສ່ວນຫຼາຍ) |
|---|---|---|
| • ວຽກເຮືອນຕ່າງໆເຊັ່ນ: ແຕ່ງກິນ, ຕັກນ້ຳ, ອະນາໄມ, ຊັກເຄື່ອງ ແລະ ອື່ນໆ;<br>• ບໍລິການອາຫານໃຫ້ແຂກທີ່ມາຢາມບ້ານ;<br>• ຕັດໄມ້ຟືນ;<br>• ຕຳເຂົ້າ;<br>• ລ້ຽງສັດນ້ອຍໃນບໍລິເວນເຮືອນຊານ (ໄກ່, ເປັດ ແລະ ໝູ);<br>• ເບິ່ງແຍງສວນຄົວ;<br>• ເບິ່ງແຍງລູກນ້ອຍ, ຜູ້ເຖົ້າ, ຄົນພິການ ແລະ ຄົນໄຂ້;<br>• ຂາຍຜັກ, ສັດນ້ອຍ ແລະ ເຄື່ອງປ່າຂອງດົງໃນບ້ານ ແລະ ຕະຫຼາດໃກ້ໆ | • ຖາງໄຮ່;<br>• ກຽມຕາກ້າ;<br>• ໃສ່ປຸ໋ຍ/ຝຸ່ນ;<br>• ປູກ/ປັກດຳ;<br>• ຟາດ ແລະ ກ່ຽວເຂົ້າ;<br>• ເກັບເຄື່ອງປ່າຂອງດົງອື່ນໆນອກຈາກປະເພດທີ່ເປັນອາຫານ. | • ກະກຽມເຄື່ອງມື;<br>• ວຽກໜັກໃນໄຮ່ນາເຊັ່ນ: ຕັດຕົ້ນໄມ້/ຍ້າຍຕົ້ນໄມ້ໃຫຍ່;<br>• ກຽມດິນ ແລະ ເຮັດຮົ້ວ;<br>• ໄຖ ແລະ ຄາດ;<br>• ຕິດຕໍ່ພົວພັນກັບພະນັກງານລັດ ແລະ ຄົນຂ້າງນອກອື່ນໆ;<br>• ເຂົ້າຮ່ວມກອງປະຊຸມ ຫຼື ສຳມະນາ;<br>• ເຮັດວຽກດ້ວຍກົນຈັກ ແລະ ຂັບລົດ;<br>• ຕັດໄມ້;<br>• ລ້ຽງງົວ ແລະ ຄວາຍ;<br>• ລ່າເນື້ອ, ໃສ່ແຮ້ວ ແລະ ຫາປາດ້ວຍແຫ, ມອງ; |

| | | |
|---|---|---|
| ກັບບ້ານ;<br>• ກ້າເບ້ຍ ແລະ ເສຍຫຍ້າ;<br>• ຫາອາຫານໃນປ່າໄມ້ ແລະ ຫ້ວຍນ້ຳ;<br>• ຍິບແສ່ວ, ເຂັນຝ້າຍ, ຍ້ອມສີ, ຕຳ່ຫູກ ແລະ<br>• ເກັບຮັກສາເງິນໃນຄອບຄົວ (ບ້ານ ລາວລຸ່ມ). | | • ຕີເຫຼັກ, ຊ່າງໄມ້, ຊ່າງເຮັດເຮືອນ ແລະ ວຽກກ່ຽວກັບເຄື່ອງມືພິເສດອື່ນໆ;<br>• ຕຳແໜ່ງການນຳຂອງອຳນາດການປົກຄອງ(ໂດຍສະເພາະແມ່ນສະມາຄົມປ່າໄມ້) ໃນໝູ່ບ້ານ;<br>• ສານແຫ, ມອງ;<br>• ຂຸດດິນປູກຕົ້ນໄມ້;<br>• ໄພຫຍ້າ<br>• ເດີນທາງໄປຕະຫຼາດໃນເມືອງນອນຄ້າງຄືນ |

***ຍ້ອນຫຍັງພວກເຮົາຈຶ່ງຈຳເປັນຕ້ອງຮູ້ການແບ່ງງານລະຫວ່າງຍິງ-ຊາຍໃນກິດຈະກຳການດຳລົງຊີວິດ?*** *ເພື່ອຕອບຄຳຖາມນີ້, ພວກເຮົາມາສຶກສາເບິ່ງບາງບັນຫາຂອງກິດຈະກຳການສົ່ງເສີມຂຸມຊົນຕ່າງໆ.* ***ບັນຫາທີໜຶ່ງ*** *ແມ່ນບັນຫາການສື່ສານ, ຖ້າຫາກວ່າພະນັກງານສົ່ງເສີມແນະນຳກິດຈະກຳແລະວິທີການຕ່າງໆໃຫ້ແກ່ຜູ້ຊາຍ, ແຕ່ຄວາມຈິງແລ້ວວຽກນີ້ແມ່ນແມ່ຍິງເປັນຄົນເຮັດ, ໂອກາດຂອງການສື່ສານຜິດພາດມີເຖິງສອງເທົ່າຕົວ (ຈາກພະນັກງານສົ່ງເສີມ ສົ່ງຕໍ່ ຊາວນາຜູ້ຊາຍ ແລະ ຫຼັງຈາກນັ້ນ ຊາວນາຜູ້ຊາຍກໍ່ສົ່ງຕໍ່ຊາວນາແມ່ຍິງ). ເມື່ອຜູ້ປະຕິບັດຕົວຈິງຂອງກິດຈະກຳບໍ່ໄດ້ຮັບເຊີນໃຫ້ເຂົ້າຮ່ວມປະຊຸມຫຼືຝຶກອົບຮົມກ່ຽວກັບກິດຈະກຳນັ້ນ, ໂອກາດທີ່ຂໍ້ມູນ/ບົດຮຽນ ຈະບໍ່ສົ່ງເຖິງຜູ້ປະຕິບັດ ມີອັດຕາສູງຫຼາຍ. ຕົວຢ່າງ ຖ້າພະນັກງານສົ່ງເສີມຈັດຝຶກອົບຮົມກ່ຽວກັບພະລັງງານໄມ້ຟືນ ຫຼື ການແປຮູບເຫັດ,ໜໍ່ໄມ້, ຍ້ອນວ່າຜູ້ຊາຍບໍ່ເຂົ້າໃຈເຖິງກິດຈະກຳນີ້ລະອຽດເທົ່າກັບຜູ້ປະຕິບັດຕົວຈິງ, ພວກເຂົາອາດຈະບໍ່ເຂົ້າໃຈເນື້ອໃນຂອງການຝຶກອົບຮົມໄດ້ຢ່າງຖືກຕ້ອງ.* ***ບັນຫາທີສອງ****ແມ່ນຂະບວນການຕັດສິນໃຈທີ່ໄປຄຽງຄູ່ກັບການປະຕິບັດກິດຈະກຳ. ຖ້າພວກເຂົາຈະຕ້ອງປ່ຽນແນວທາງປະຕິບັດຂອງພວກເຂົາ, ຜູ້ປະຕິບັດ (ສ່ວນຫຼາຍແມ່ນແມ່ຍິງ) ແລະ ຜູ້ຕັດສິນໃຈ (ສ່ວນຫຼາຍແມ່ນຜູ້ຊາຍ) ຕ້ອງເຂົ້າໃຈແລະຮັບຮູ້ເຖິງເຫດຜົນໃນການປະຕິບັດກິດຈະກຳໃດໜຶ່ງດ້ວຍເຕັກນິກຫຼືວິທີການແບບໃໝ່ໆຮ່ວມກັນຈຶ່ງສາມາດຕັດສິນໃຈຮ່ວມກັນໄດ້.* ***ບັນຫາທີສາມ****ແມ່ນເງື່ອນໄຂຂອງການຄັດເລືອກກຸ່ມເປົ້າໝາຍຕ່າງໆ. ຖ້າພວກເຮົາຮູ້ວ່າແມ່ນໃຜທີ່ກ່ຽວຂ້ອງກັບກິດຈະກຳນັ້ນແທ້ຈິງແລ້ວ ມັນຈະຊ່ວຍຄັດເລືອກຜູ້ເຂົ້າຮ່ວມຖືກຕາມໜ້າທີ່, ເວລາ ແລະ ສະຖານທີ່ຖືກຕ້ອງຫຼາຍຂຶ້ນ.*

## 4.2. ຜະລິດຕະພັນປ່າໄມ້

ເສັ້ນສະແດງ 4.1: ອາທິດນີ້ເຈົ້າໄດ້ເຂົ້າປ່າຫາອາຫານຈັກເທື່ອ?




ຊາວບ້ານໝົດທຸກຄົນແມ່ນເພິ່ງພາອາໃສຫາກິນໃນປ່າໄມ້ເປັນຕົ້ນຕໍ ຫຼື ເປັນອາຊີບເສີມ. ພວກເຂົາເຈົ້າເກັບໜໍ່ໄມ້ ແລະ ຜັກຕ່າງໆຕາມແຄມທົ່ງນາຂອງພວກເຂົາ ຫຼື ຕາມປ່າໄມ້ແຄມບ້ານ. ໃນກຸ່ມຕົວຢ່າງທີ່ສຳຫຼວດບໍ່ມີບ້ານໃດຮັ່ງມີ ແລະ ຢູ່ໃນແຕ່ລະບ້ານມີຫຼາຍໆຄອບຄົວທີ່ບໍ່ສາມາດຜະລິດເຂົ້າກຸ້ມກິນ. ເພາະສະນັ້ນ, ຄອບຄົວເຫຼົ່ານີ້ຈຶ່ງຫາຫົວມັນ, ກອຍ ແລະ ເຄື່ອງປ່າຂອງດົງອື່ນໆມາເສີມ ແລະ ກິນແທນເຂົ້າ.ນອກຈາກນີ້ພວກເຂົາຍັງຮັບຈ້າງເຮັດວຽກໃຫ້ແກ່ເພື່ອນບ້ານເພື່ອຫາເງິນມາຊື້ເຂົ້າທີ່ພວກເຂົາຕ້ອງການ.

ຮູບສະແດງຂ້າງເທິງໄດ້ຊີ້ແຈງໃຫ້ເຫັນວ່າແມ່ຍິງສ່ວນຫຼາຍ (38 ສ່ວນຮ້ອຍ) ແມ່ນເຂົ້າປ່າຫາເຄື່ອງປ່າຂອງດົງທຸກໆວັນ ແລະ ສ່ວນຜູ້ຊາຍມີພຽງ 22 ສ່ວນຮ້ອຍ. ເຫດຜົນກໍ່ຄືແມ່ຍິງໄປຫາອາຫານປະຈຳວັນຫຼາຍກວ່າຜູ້ຊາຍ. ແມ່ຍິງ 28 ສ່ວນຮ້ອຍ ແລະ ຜູ້ຊາຍ 25 ສ່ວນຮ້ອຍ ແມ່ນບໍ່ໄດ້ເຂົ້າປ່າຫາອາຫານໃນອາທິດຂອງການສຳຫຼວດ.

ຜູ້ທີ່ພວກເຮົາສຳພາດຈຳນວນທັງໝົດໄດ້ລາຍງານ ຊະນິດຜະລິດຕະພັນປ່າໄມ້ທີ່ພວກເຂົາເກັບ ຫຼື ລ່າເນື້ອ ທັງໝົດມີ 37 ຊະນິດ: ປະເພດທີ່ເປັນອາຫານມີ 11 ຊະນິດ, ປະເພດທີ່ເປັນຢາມີ 12 ຊະນິດ, ປະເພດຜະລິດຕະພັນຊົມໃຊ້ມີ 5 ຊະນິດ ແລະ ປະເພດສັດປ່າມີ 18 ຊະນິດ. ຜະລິດຕະພັນທີ່ເກັບ ຫຼື ລ່າເນື້ອ (ລາຍງານໂດຍຜູ້ທີ່ຖືກສຳພາດ 110 ທ່ານ) ມີຄືດັ່ງລຸ່ມນີ້:

## ຕາຕະລາງ 4.3. ປະເພດຜະລິດຕະພັນປ່າໄມ້

| ຜະລິດຕະພັນປ່າໄມ້ | | ຈຳນວນຜູ້ເກັບ | | | |
|---|---|---|---|---|---|
| ຊື່ລາວ | ຊື່ສາກົນ | ຍິງ | ຊາຍ | ທັງສອງ | ລວມ |
| **1. ປະເພດອາຫານ** | | | | | |
| ໜໍ່ໄມ້ | Bamboo shoots | 53 | 15 | 21 | 89 |
| ເຫັດ | Mushrooms | 52 | 11 | 13 | 76 |
| ໜໍ່ຫວາຍ | Rattan shoots | 21 | 13 | 12 | 46 |
| ຜັກຫວານ/ຜັກຕິ້ວ | Melientha suavis/ Alstonia sp | 25 | 6 | 12 | 43 |
| ໜໍ່ຂ່າ/ດອກກະຈຽວ | Alpinia shoots/Curcuma sp. | 13 | 1 | 2 | 16 |
| ໝາກຄໍແລນ/ໝາກໄຟ | Xerospermum sp./Baccaurea sapida | 8 | 1 | 2 | 11 |
| ຜັກກູດ/ຜັກໜາມ | Ferns/lasia spinosa | 4 | 0 | 2 | 6 |
| ຜັກກະໂດນ | Barringtonia sp. | 1 | 0 | 2 | 3 |
| ໜໍ່ບຸ້ນ | Calamus shoots | 0 | 1 | 1 | 2 |
| ໝາກຂາມແຟບ | Dialium indum | 0 | 1 | 1 | 2 |
| ມັນກອຍ | Dioscorea hispida Dennst | 1 | 0 | 1 | 2 |
| **2. ປະເພດສັດປ່າ** | | | | | |
| ກົບ,ຂຽດ/ອຶ່ງ | Frog/kaloula pulchra | 17 | 19 | 12 | 48 |
| ປາ/ກຸ້ງ | Fish/fresh water shrimp | 9 | 24 | 6 | 39 |
| ປູ/ປາ/ຫອຍ | Crab/fish/snails | 14 | 10 | 7 | 31 |
| ກະຮອກ | Squirrel | 1 | 10 | 1 | 12 |
| ນົກ/ໄກ່ປ່າ | Birds/wild fowl | 2 | 6 | 2 | 10 |
| ແລນ | Varanus bengalensis | 1 | 6 | 1 | 8 |
| ງູ/ໜູ | Snake/rat | 0 | 6 | 1 | 7 |
| ຈີ່ນາຍ | Crickets | 3 | 0 | 1 | 4 |
| ເຕົ່າ/ກະທ້າງ | Turtle/varanus sp | 0 | 1 | 1 | 2 |
| ບ່າງ | Petaurista sp. | 0 | 2 | 0 | 2 |
| **3. ປະເພດຊົມໃຊ້** | | | | | |
| ໄມ້ເຮັຍ | Bamboo for weaving and fencing | 5 | 14 | 1 | 20 |
| ໄມ້ທ່ອນ/ໄມ້ໃຊ້ສອຍ | Timber/woods | 6 | 7 | 2 | 15 |
| ຂີ້ຊີ | Thitga resin | 2 | 4 | 3 | 9 |
| ຫວາຍ | Rattan | 0 | 6 | 0 | 6 |
| ນ້ຳມັນຍາງ | Dipterocapus alatus | 1 | 3 | 0 | 4 |
| **4. ປະເພດຢາພື້ນເມືອງ** | | | | | |
| ປະດົງຂາວ | Dalbergia nigrescens | 1 | 3 | 0 | 4 |
| ຮາກອ່ຽນດ່ອນ | Eurycoma harmandiana Pierre | 2 | 1 | 0 | 3 |
| ນົມສາວ/ລີ້ນສັງວ | Soleropyrum wallichianum/bauhinia malebarica | 1 | 2 | 0 | 3 |

| | | | | | |
|---|---|---|---|---|---|
| ຈອງບານ/ເຄືອເຂົາຮໍ | Malvanuts/tinospora crispa miers | 3 | 0 | 0 | 3 |
| ຫົວສີໄຄ/ໃບມີ້ | Lemon grass/jackfruit leaf | 0 | 0 | 3 | 3 |
| ເປືອກແຕ້/ເປືອຍເລືອດ | Bark of Afzelia xylocarpa/terminalia corticosa | 0 | 1 | 2 | 3 |
| ພວງພີ | Clerodendrum paniculatum | 1 | 1 | 0 | 2 |
| ຝາກເຊືອກ/ຝາກບົກ | Bark of terminalia alata/irvingia malayana | 0 | 2 | 0 | 2 |
| ສາມພັນຮູ | Hydnophytum formicarum jack | 0 | 1 | 0 | 1 |
| ຝາກໂທມ | Bark of Mitragyna parvifolia | 0 | 1 | 0 | 1 |
| ກະໂດນ | Careya sphaerica | 0 | 0 | 1 | 1 |
| ຮາກດູ່ | Root of pterocapus macrocapus | 0 | 1 | 0 | 1 |

ໃນເຂດສຶກສາ, ປະຊາຊົນຈະເກັບຜະລິດຕະພັນປ່າໄມ້ໃນເວລາພວກເຂົາໄປນາຫຼືກັບມາເຮືອນ. ນອກຈາກນີ້ແມ່ຍິງ ແລະ ເດັກນ້ອຍມີພາລະບົດບາດຕໍ່ຄອບຄົວແລະອອກໄປເກັບເປັນປະຈຳ. ເຄື່ອງປ່າຂອງດົງແມ່ນອາຫານທີ່ສຳຄັນສຳລັບຄົນລາວ ແລະ ເປັນແຫຼ່ງລາຍຮັບຕົ້ນຕໍຂອງຊຸມຊົນ. ແມ່ຍິງຮັບຜິດຊອບເກັບອາຫານຈາກປ່າໄມ້, ເຊັ່ນ: ໜໍ່ໄມ້, ຮາກມັນ ແລະ ຜັກປ່າ ຊຶ່ງເປັນຜະລິດຕະພັນສຳຄັນທີ່ຄ້ຳປະກັນດ້ານສະບຽງອາຫານໃນເວລາຂາດແຄນອາຫານ. ເພາະສະນັ້ນ, ສະມາຊິກຄອບຄົວຊາວນາ ແລະ ຊາວບ້ານຈຶ່ງເປັນຜູ້ເກັບຜະລິດຕະພັນປ່າໄມ້.

ບັນດາຄົວເຮືອນຕ່າງໆໃນບ້ານໄດ້ຊອກຫາອາຫານຈາກປ່າໄມ້ ແລະ ເຂດປ່າເລົ່າແຄມບ້ານຂອງພວກເຂົາ. ຄອບຄົວຕ່າງໆໄດ້ກິນອາຫານຈາກປ່າໄມ້ທຸກໆຄາບເຂົ້າຂອງເຂົາເຈົ້າກ່ອນນີ້ຈະສຳພາດພວກເຂົາ. ແມ່ຍິງຮັບຜິດຊອບເກັບຜະລິດຕະພັນປະເພດອາຫານພຽງຄົນດຽວ (ຫຼື ສ່ວນຫຼາຍ) ເຊັ່ນ: ໜໍ່ຫວາຍ, ໜໍ່ໄມ້, ເຫັດ, ຜັກຫວານ ແລະ ອື່ນໆ. ສ່ວນຜູ້ຊາຍແມ່ນຮັບຜິດຊອບລ່າເນື້ອພຽງຄົນດຽວ ເຊັ່ນ: ກະຮອກ, ນົກ/ໄກ່ປ່າ, ປາ, ງູ, ໝູ.

ຊີວິດປະຈຳວັນຂອງແມ່ຍິງແມ່ນຕິດພັນຫຼາຍກັບປ່າໄມ້. ເຂົາເຈົ້າເປັນຄົນເຂົ້າປ່າຫາຟືນແລະອາຫານອື່ນໆເປັນປະຈຳ, ເຊັ່ນ: ຜັກ, ໜໍ່ໄມ້, ໝາກໄມ້, ສະໝຸນໄພ, ຊຶ່ງຄືກັບແມ່ຍິງໃນເມືອງຕ້ອງໄປຕະຫຼາດ ເພື່ອຊີວິດປະຈຳວັນຂອງພວກເຂົາ. ແມ່ຍິງມີຄວາມຮູ້ກ່ຽວກັບຜະລິດຕະພັນປ່າໄມ້ຫຼາຍ ແລະ ມີສ່ວນກ່ຽວຂ້ອງໃນການປົກປັກຮັກສາ ແລະ ຟື້ນຟູປ່າຕ່າງໆ.

ຕາຕະລາງ 4.4. ຈຸດປະສົງຂອງການເກັບຜະລິດຕະພັນປ່າໄມ້
(ຕອບໄດ້ຫຼາຍຄໍາຕອບ)

| ຈຸດປະສົງ | ແມ່ຍິງ | | ຜູ້ຊາຍ | |
|---|---|---|---|---|
| | ຄວາມຖີ່ | ສ່ວນຮ້ອຍ | ຄວາມຖີ່ | ສ່ວນຮ້ອຍ |
| ກິນ | 44 | 83 | 49 | 86 |
| ຂາຍ | 17 | 32 | 09 | 17 |
| ຊົມໃຊ້ | 05 | 09 | 02 | 04 |
| ແລກປ່ຽນ | 01 | 02 | 01 | 02 |

ແມ່ຍິງ ຈໍານວນສ່ວນຫຼາຍ (83%) ແລະ ຜູ້ຊາຍ (86%) ເກັບຜະລິດຕະພັນປ່າໄມ້ເພື່ອການບໍລິໂພກຂອງຄອບຄົວ. ແມ່ຍິງປະມານ 32 ສ່ວນຮ້ອຍ ແມ່ນເກັບຜະລິດຕະພັນປ່າໄມ້ເພື່ອຂາຍໃນບ້ານ ແລະ ຕະຫຼາດໃກ້ບ້ານ.



ຮູບທີ 4. ແມ່ຍິງລາວລຸ່ມຂາຍໜໍ່ໄມ້ ແລະ ກະຮອກຕາມແຄມທາງ

## 4.3. ລາຍໄດ້ຂອງຊາວບ້ານ

ຕາຕະລາງ 4.5. ແຫຼ່ງລາຍໄດ້

| ແຫຼ່ງລາຍໄດ້ | ແມ່ຍິງ | | ຜູ້ຊາຍ | |
|---|---|---|---|---|
| | ຄວາມຖີ່ | ສ່ວນຮ້ອຍ | ຄວາມຖີ່ | ສ່ວນຮ້ອຍ |
| ຂາຍສັດລ້ຽງ ແລະ ຜັກ | 30 | 57 | 36 | 63 |
| ຜະລິດຕະພັນປ່າໄມ້ (ເຄື່ອງປ່າຂອງດົງ) | 17 | 32 | 9 | 16 |
| ຫັດຖະກຳ | 10 | 19 | 4 | 7 |
| ຮັບຈ້າງ | 5 | 9 | 20 | 35 |
| ຂາຍເຂົ້າ | 2 | 4 | 3 | 5 |
| ທຸລະກິດຂະໜາດນ້ອຍ | 0 | 0 | 2 | 4 |

ເມື່ອສົມທຽບເບິ່ງການຈັດລຳດັບຂອງແຫຼ່ງລາຍຮັບແລ້ວເຫັນວ່າ ແຫຼ່ງລາຍຮັບສ່ວນຫຼາຍແມ່ນມາຈາກການຂາຍສັດລ້ຽງ ແລະ ຜັກຕ່າງໆ. ແມ່ຍິງໄດ້ສ້າງລາຍໄດ້ຈາກການຂາຍເຄື່ອງປ່າຂອງດົງຫຼາຍກວ່າຜູ້ຊາຍ, ກວມເອົາ 32%. ການສຶກສາໃນຄັ້ງນີ້ໄດ້ສະແດງໃຫ້ເຫັນລາຍໄດ້ຈາກການຮັບຈ້າງ ແລະ ທຸລະກິດອື່ນໆແມ່ນຢູ່ໃນອັນດັບສຸດທ້າຍສຳລັບແມ່ຍິງ. ຜ່ານມາຜູ້ຊາຍໄດ້ມີອາຊີບຈາກໂຄງການຈັດສັນ ແລະ ອະນຸລັກປ່າໄມ້ (FOMACOP) ຫຼາຍກວ່າແມ່ຍິງ, ເຊັ່ນ: ຕັດໄມ້ທ່ອນຂາຍ. ສຳລັບແຫຼ່ງລາຍຮັບຈາກການຂາຍເຂົ້າຖືວ່າຢູ່ໃນອັນດັບຕ່ຳເພາະວ່າຊາວບ້ານສ່ວນຫຼາຍບໍ່ມີເຂົ້າເຫຼືອກິນ ແລະ ພົບກັບບັນຫາອຶດເຂົ້າເລື້ອຍໆ.

ຕາຕະລາງ 4.6. ລາຍໄດ້ສະເລ່ຍປະຈຳເດືອນ (ກີບ)

| | ຕ່ຳສຸດ | ສູງສຸດ | ສະເລ່ຍ |
|---|---|---|---|
| ແມ່ຍິງ | 5.000 | 590.000 | 56.083 |
| ຜູ້ຊາຍ | 2.000 | 1.000.000 | 195.220 |

ແມ່ຍິງສ່ວນໃຫ່ຍຈະເຮັດວຽກຄອບຄົວທີ່ບໍ່ໄດ້ຮັບຄ່າຈ້າງ, ສະນັ້ນເຂົາເຈົ້າຈຶ່ງບໍ່ຄ່ອຍມີລາຍຮັບ ແລະ ເຮັດໃຫ້ເສດຖະກິດຂອງພວກເຂົາເຈົ້າບໍ່ເຂັ້ມແຂງ. ລາຍໄດ້ສະເລ່ຍຂອງຜູ້ຊາຍສູງກວ່າແມ່ຍິງ 150 ສ່ວນຮ້ອຍ. ສິ່ງນີ້ໄດ້ສະແດງໃຫ້ເຫັນວ່າຜູ້ຊາຍມີໂອກາດເຂົ້າເຖິງແຮງງານໄດ້ຮັບຄ່າຈ້າງ ຫຼື ວຽກງານອື່ນໆຫຼາຍກວ່າແມ່ຍິງ, ຕົວຢ່າງເຊັ່ນ: ການເຮັດວຽກໃນໂຮງເລື່ອຍ ແລະ ພວກເຂົາຍັງມີໂອກາດໄດ້ເຮັດວຽກຫຼາຍຢ່າງເຊັ່ນ: ຮັບຈ້າງຕັດໄມ້ທ່ອນຂາຍ ຊຶ່ງໃຫ້ຄ່າຈ້າງໂດຍໂຄງການຈັດສັນ ແລະ ອະນຸລັກປ່າໄມ້ (FOMACOP) ໃນເມື່ອກ່ອນ.

## 4.4. ການວິເຄາະການເຂົ້າເຖິງ ແລະ ຄວບຄຸມຊັບພະຍາກອນ

ຕາຕລາງ 4.7:້ ສະແດງໃຫ້ເຫັນລະດັບການເຂົ້າເຖິງ ແລະ ຄວບຄຸມຊັບພະຍາກອນຕ່າງໆ ແລະ ການມີສ່ວນຮ່ວມໃນການຕັດສິນໃຈທີ່ໄດ້ຮັບອິດທິພົນຈາກບົດບາດຍິງ-ຊາຍ

ຕາຕະລາງ 4.7: ການເຂົ້າເຖິງ ແລະ ຄວບຄຸມຊັບພະຍາກອນຂອງແມ່ຍິງ ແລະ ຜູ້ຊາຍ[6]

| ຊັບພະຍາກອນ | ອີງຕາມກຸ່ມແມ່ຍິງ | | | | ອີງຕາມກຸ່ມຜູ້ຊາຍ | | | | ຜົນປະໂຫຍດ |
|---|---|---|---|---|---|---|---|---|---|
| | ເຂົ້າເຖິງ | | ຄວບຄຸມ | | ເຂົ້າເຖິງ | | ຄວບຄຸມ | | |
| | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | |
| ດິນເຮືອນ | 5 | 5 | 2 | 8 | 3 | 7 | 2 | 8 | ປູກຕົ້ນໄມ້ກິນໝາກ, ຜັກ ແລະ ລ້ຽງສັດເພື່ອຊີວິດປະຈຳວັນ ແລະ ລາຍໄດ້ |
| ເຮືອນ | 5 | 5 | 3 | 7 | 5 | 5 | 4 | 6 | ທີ່ຢູ່ອາໃສ, ເຮັດຄອກສັດ |
| ດິນນາ | 5 | 5 | 2 | 8 | 4 | 6 | 1 | 9 | ເຂົ້າ, ພືດ, ໄມ້ຟືນ |
| ສວນຄົວ | 5 | 5 | 4 | 6 | 5 | 5 | 4 | 6 | ຜັກ ແລະ ຕົ້ນໄມ້ກິນໝາກ |
| ສັດນ້ອຍ (ໄກ່, ເປັດ, ໝູ) | 8 | 2 | 7 | 3 | 9 | 1 | 8 | 2 | ບໍລິໂພກໃນຄອບຄົວ ແລະ ລາຍໄດ້ເສີມ |
| ງົວ ແລະ ຄວາຍ | 4 | 6 | 2 | 8 | 3 | 7 | 1 | 9 | ສິນບັດ, ແຮງງານ, ຝຸ່ນ, ສິນສອດ, ບູຊາຜີ, ອາຫານໃນພິທີສຳຄັນ |
| ຊົນລະປະທານ | - | - | - | - | 5 | 5 | ຄົນອື່ນ | ຄົນອື່ນ | ຜະລິດເຂົ້ານາ |
| ສິນເຊື່ອເພື່ອລ້ຽງໄກ່ | 5 | 5 | 5 | 5 | 5 | 5 | 4 | 6 | ເພີ່ມສະມັດຕະພາບ, ອາຫານ ແລະ ລາຍໄດ້ |
| ສິນເຊື່ອຕໍ່າຫູກ | 7 | 3 | 6 | 4 | 7 | 3 | 5 | 5 | ສ້າງລາຍໄດ້ |
| ຮັບຈ້າງ | 3 | 7 | 2 | 8 | 4 | 6 | 3 | 7 | ລາຍໄດ້ |
| ເງິນຈາກການຂາຍເຂົ້າ | - | - | - | - | 3 | 7 | 2 | 8 | ລາຍໄດ້,ເງິນຄ່າຮຽນໜັງສື |
| ແຮງງານຄອບຄົວ | 6 | 4 | 3 | 7 | - | - | - | - | ກຳລັງການຜະລິດ, ຫຼຸດຜ່ອນວຽກງານ |
| ຝຶກອົບຮົມກະສິກຳ | - | - | - | - | 2 | 8 | 1 | 9 | ຄວາມຮູ້ການຄັດເລືອກແນວພັນ, ແລະ ຫຼັກການໃສ່ຝຸ່ນ/ປຸ໋ຍ |

[6] ເກັບກຳຂໍ້ມູນໂດຍແຍກກຸ່ມຍິງ ແລະ ກຸ່ມຊາຍ

| | | | | | | | | | |
|---|---|---|---|---|---|---|---|---|---|
| ຝຶກອົບຮົມການຄຸມກໍາເນີດ | 5 | 5 | 2 | 8 | - | - | - | - | ຄວາມຮູ້, ແຕ່ບໍ່ໄດ້ຜົນຍ້ອນຜົວບໍ່ປະຕິບັດຕາມ |
| ກອງປະຊຸມບ້ານ (ປົກກະຕິຈະປະຊຸມເວລາກາງຄືນ) | 1 | 9 | 1 | 9 | 0 | 10 | 0 | 10 | ຂໍ້ມູນຂ່າວສານກ່ຽວກັບກິດຈະກໍາປ່າໄມ້, ການພັດທະນາ, ການປ້ອງກັນຄວາມສະຫງົບຂອງບ້ານ. |
| ດິນລວມບ້ານ | 5 | 5 | ຄົນອື່ນ | ຄົນອື່ນ | 5 | 5 | ຄົນອື່ນ | ຄົນອື່ນ | ບຸນບ້ານ, ໂຮງຮຽນ, ສຸກສາລາ |
| ໂຮງຮຽນ | - | - | - | - | 4 | 6 | ຄົນອື່ນ | ຄົນອື່ນ | ການສຶກສາຂັ້ນພື້ນຖານ |
| ໝາກແໜ່ງ | - | - | - | - | 0 | 10 | 0 | 10 | ສ້າງລາຍໄດ້ |
| ຮາກອ່ຽນດ່ອນ | 5 | 5 | 2 | 8 | - | - | - | - | ຢາພື້ນເມືອງ, ລາຍໄດ້ເສີມ (ຖ້າຂາຍ, 1ກິໂລ=7.000 ກີບ) |
| ໄມ້ປ້ອງ ແລະ ໄມ້ເພື່ອການກໍ່ສ້າງ | 5 | 5 | 4 | 6 | 4 | 6 | 3 | 7 | ເພື່ອການບໍລິໂພກໃນຄອບຄົວ |
| ໜໍ່ໄມ້ ແລະ ເຫັດ | 7 | 3 | 6 | 4 | 6 | 4 | 7 | 3 | ບໍລິໂພກ |
| ໄມ້ຟືນ | 8 | 2 | 8 | 2 | 5 | 5 | 8 | 2 | ພະລັງງານ |
| ສະໝຸນໄພ | 5 | 5 | 4 | 6 | - | - | - | - | ປົວພະຍາດ |
| ປ່າສະຫງວນຂອງບ້ານ | 7 | 3 | ຄົນອື່ນ | ຄົນອື່ນ | 8 | 2 | ຄົນອື່ນ | ຄົນອື່ນ | ໜໍ່ໄມ້, ເຫັດ, ໄມ້ຟືນ |
| ປ່າສະຫງວນຂອງເມືອງ | 5 | 5 | ຄົນອື່ນ | ຄົນອື່ນ | 8 | 2 | ຄົນອື່ນ | ຄົນອື່ນ | ໜໍ່ໄມ້, ເຫັດ, ໄມ້ຟືນ |
| ຕັດໄມ້ຂາຍ | - | - | - | - | 2 | 8 | 0 | 10+[7] | ລາຍໄດ້ຂອງບ້ານ |
| ຄະນະປ່າໄມ້ບ້ານ | 1 | 9 | 0 | 10 | 0 | 10 | 0 | 10 | ການຕັດສິນໃຈກ່ຽວກັບກິດຈະກໍາປ່າໄມ້, ຂໍ້ມູນຂ່າວສານດ້ານເຕັກນິກ ເພື່ອການຄຸ້ມຄອງປ່າໄມ້ |
| ການຝຶກອົບຮົມປ່າໄມ້ກະສິກໍາ | 2 | 8 | 3 | 7 | 1 | 9 | 2 | 8 | ທັກສະ, ຂໍ້ມູນຂ່າວສານກ່ຽວກັບການອະນຸລັກສະພາບແວດລ້ອມ, ຄວາມຮູ້ດ້ານການເກັບເຄື່ອງປ່າຂອງດົງແບບຍືນນານ. |

*ໝາຍເຫດ:*

[7] ໂຄງການຈັດສັນ ແລະ ອະນຸລັກປ່າໄມ້ (FOMACOP) ຄວບຄຸມ/ສິ່ງອິດທິພົນ

***ການໃຫ້ຄະແນນ:*** *ແຍກເປັນກຸ່ມຍິງ ແລະ ກຸ່ມຊາຍ, ທຳອິດຕ້ອງກຳນົດຊັບພະຍາກອນທັງໝົດທີ່ມີໃນລະດັບຄົວເຮືອນ.ຫຼັງຈາກນັ້ນໃຫ້ພວກເຂົາໃຫ້ຄະແນນ10 ລະຫວ່າງຍິງ ແລະ ຊາຍ ໂດຍອີງຕາມການຄວາມເຂົ້າໃຈກ່ຽວກັບການເຂົ້າເຖິງແຕ່ລະຊັບພະຍາກອນ (ຕົວຢ່າງ ສິດໃນການຊົມໃຊ້) ແລະ ອີກ 10 ຄະແນນ ສຳລັບການຄວບຄຸມແຕ່ລະຊັບພະຍາກອນ(ຕົວຢ່າງ: ການເປັນເຈົ້າຂອງ ແລະ ການຕັດສິນໃຈໃນການຊົມໃຊ້). 10 ຄະແນນ ໝາຍເຖິງຄົນໃດຄົນໜຶ່ງເຂົ້າເຖິງ ຫຼື ຄວບຄຸມ ທັງໝົດ. ແລະ ຄະແນນ 5 ໝາຍເຖິງການເຂົ້າເຖິງ ຫຼື ຄວບຄຸມ ລະຫວ່າງຍິງ ແລະ ຊາຍເທົ່າກັນ.*

*“-“ : ໝາຍເຖິງລາຍການທີ່ກຸ່ມບໍ່ໄດ້ກຳນົດ/ກ່າວເຖິງໃນເລື່ອງນັ້ນ*

***“ຄົນອື່ນ”:*** *ໝາຍເຖິງລາຍການນັ້ນຖືກຄວບຄຸມໂດຍອົງການຈັດຕັ້ງໃດໜຶ່ງທີ່ຢູ່ຂ້າງນອກເຮືອນ (ສ່ວນຫຼາຍຈະແມ່ນອຳນາດການປົກຄອງບ້ານ ຫຼື ອົງການຈັດຕັ້ງຂອງລັດ/ມະຫາຊົນ)*

**ສະຫຼຸບ**

ການເຂົ້າເຖິງຊັບພະຍາກອນ/ຜົນປະໂຫຍດຕ່າງໆຂອງແມ່ຍິງ:

- ເຂົ້າເຖິງຊັບພະຍາກອນປະເພດທີ່ເປັນວຽກເຮືອນ ແລະ ບໍ່ແມ່ນການຜະລິດຫຼາຍກວ່າ [ສວນຄົວ, ຕຳເຂົ້າດ້ວຍມື, ແຮງງານໃນຄອບຄົວ (ລູກສາວ)].
- ອັດຕາເຂົ້າເຖິງສັດປະເພດນ້ອຍຫຼາຍກວ່າ (ໄກ່, ເປັດ, ໝູ).
- ການເຂົ້າເຖິງການບໍລິການຈາກຂ້າງນອກ ແລະ ຂໍ້ມູນຂ່າວສານ ມີຂອບເຂດຈຳກັດຫຼາຍ
- ແມ່ຍິງສູນເສຍກຳມະສິດທີ່ດິນ ແລະ ການເຂົ້າເຖິງເຄື່ອງປ່າຂອງດົງເພື່ອການບໍລິໂພກ ແລະ ສ້າງລາຍໄດ້ຈະຫຍຸ້ງຍາກຂຶ້ນເລື້ອຍໆ ຍ້ອນປ່າໄມ້ຈະໄກອອກໄປ ແລະ ພົນລະເມືອງເພີ່ມຂຶ້ນ.
- ແມ່ຍິງຊົນເຜົ່າລາວລຸ່ມ ມີຄວາມຮັບຜິດຊອບໃນການຄຸ້ມຄອງການເງິນຂອງຄອບຄົວຕົ້ນຕໍ. ພວກເຂົາຮັບຜິດຊອບການຂາຍຜະລິດຕະພັນທີ່ສະມາຊິກຂອງຄອບຄົວເກັບມາ,ຮັບຜິດຊອບການຊື້ວັດຖຸສິ່ງຂອງຕາມຄວາມຕ້ອງການຂອງຄອບຄົວເຂົາເຈົ້າແລະເປັນຜູ້ຄຸ້ມຄອເງິນປະຢັດ ແລະ ລາຍຈ່າຍຂະໜາດນ້ອຍຕ່າງໆ.
- ແມ່ຍິງທຳການປັກດຳ ແລະ ເກັບກ່ຽວເຂົ້າໃນໄຮ່ນາຕ່າງໆ. ໂດຍທົ່ວໄປແລ້ວ ພວກເຂົາຈະເປັນຄົນຕັດສິນໃຈ ວ່າຈະປູກຜັກຊະນິດໃດ ໃນສວນຜັກແຄມນ້ຳ ແລະ ການລ້ຽງສັດເຊັ່ນ: ໝູ, ໄກ່ ແລະ ເປັດ ກໍ່ເຊັ່ນດຽວກັນ. ແມ່ຍິງໄດ້ມີສ່ວນຮ່ວມໃນກິດຈະກຳການຫາປາ ໃນຕົ້ນ ແລະ ທ້າຍລະດູຝົນ ແລະ ຕະຫຼອດລະດູແລ້ງ. ແມ່ຍິງເກັບເຄື່ອງປ່າຂອງດົງ ແລະ ປູປານານ້ຳຕ່າງໆ ເກືອບໝົດທຸກຊະນິດ. ແມ່ຍິງແມ່ນເສດຖະກິດຕົ້ນຕໍຂອງຄອບຄົວ, ຈຳໜ່າຍຜະ

ລິດຕະພັນທີ່ເກັບມາຈາກປ່າໄມ້, ແມ່ນຳ້ ແລະ ທົ່ງນາ, ແລະ ລາຍໄດ້ບາງສ່ວນຈາກການຂາຍຜະລິດຕະພັນນີ້ຍັງໄດ້ນຳໃຊ້ເພື່ອລູກຂອງພວກເຂົາ.

ການເຂົ້າເຖິງຊັບພະຍາກອນ/ຜົນປະໂຫຍດຕ່າງໆຂອງຜູ້ຊາຍ:

- ເຂົ້າເຖິງສິ່ງທີ່ມີຄ່າຕ່າງໆຂອງກິດຈະກຳການຜະລິດຫຼາຍກວ່າ [(ໂດຍສະເພາະແມ່ນງົວ, ຄ່າຈ້າງແຮງງານ ແລະ ແຮງງານຄອບຄົວ (ລູກຊາຍ)]
- ເຂົ້າເຖິງການບໍລິການຕ່າງໆຈາກຂ້າງນອກໄດ້ດີ (ການຝຶກອົບຮົມປ່າໄມ້ກະສິກຳ, ພະນັກງານສົ່ງເສີມກະສິກຳ, ກອງປະຊຸມ ແລະ ສິນເຊື່ອ)

ການຄວບຄຸມຊັບພະຍາກອນ/ຜົນປະໂຫຍດຕ່າງໆ ຂອງແມ່ຍິງ:

- ຄວບຄຸມເງິນສົດເພື່ອໃຊ້ຈ່າຍໃນຄອບຄົວ.
- ການຄວບຄຸມພືດ ແລະ ສັດລ້ຽງຕ່າງໆຍັງມີຂອບເຂດຈຳກັດ (ຜັກ, ມັນຝັ່ງ, ໄກ່).

ການຄວບຄຸມຊັບພະຍາກອນ/ຜົນປະໂຫຍດຕ່າງໆ ຂອງຜູ້ຊາຍ:

- ຄວບຄຸມເງິນຂອງຄອບຄົວ ເພື່ອການລົງທຶນຂະໜາດໃຫ່ຍ
- ຄວບຄຸມຊັບພະຍາກອນຜະລິດເກືອບທັງໝົດ ຊຶ່ງລວມມີ ດິນເຮືອນ, ດິນນາ, ແຮງງານຮັບຈ້າງ ແລະ ແຮງງງານຂອງສະມາຊິກຄອບຄົວຄົນອື່ນໆ (ເມຍ, ລູກທັງຍິງ ແລະ ຊາຍ) ເພາະຜູ້ຊາຍເປັນຫົວໜ້າຄອບຄົວ.
- ຄວບຄຸມສິ່ງມີຄ່າອື່ນໆຂອງຄອບຄົວ (ເຮືອນ, ວິທະຍຸ, ລົດຖີບ)
- ຄວບຄຸມສັດປະເພດໃຫ່ຍ (ງົວ/ຄວາຍ)

## 4.5. ການເຂົ້າເຖິງທີ່ດິນ

ບາງຊຸມຊົນ, ແມ່ຍິງ ແລະ ຜູ້ຊາຍແມ່ນມີສິດໃນຊັບພະຍາກອນເທົ່າທຽມກັນຢູ່ສະເໝີ, ມີຄວາມຮູ້ໃນການນຳໃຊ້ຊັບພະຍາກອນ (ແບບລວມໝູ່ ແລະ ສ່ວນຕົວ), ແລະ ຕັດສິນໃຈໃນຊັບພະຍາກອນທີ່ສຳຄັນ. ໃນຊຸມຊົນສືບທອດມູນມໍລະດົກທາງແມ່, ທີ່ດິນ ແລະ ຊັບພະຍາກອນການຜະລິດແມ່ນຖືກໂອນໃຫ້ແກ່ຝ່າຍຍິງ. ສະພາບທາງສັງຄົມລາວລຸ່ມຈະເອື້ອອຳນວຍໃຫ້ແກ່ແມ່ຍິງເພາະຮີດຄອງປະເພນີສືບທອດມູນມໍລະດົກທາງແມ່ຫຼາຍກວ່າ, ສ່ວນຊົນເຜົ່າລາວເທີງມີຮີດຄອງປະເພນີສືບທອດມໍລະດົກທາງພໍ່.

ການຂຶ້ນທະບຽນທີ່ດິນໄດ້ມອບຄວາມເປັນສິດຕາມຮີດຄອງປະເພນີໃຫ້ແກ່ແມ່ຍິງ ແລະ ສ່ວນກໍາມະສິດທີ່ດິນອັນແທ້ຈິງ ແມ່ນມອບໃຫ້ແກ່ຜູ້ຊາຍ ໂດຍການອອກຊື່ຜູ້ຊາຍໃນໃບຢັ້ງຢືນທີ່ດິນ ແລະ ໃບຕາດິນພຽງຄົນດຽວ. ແມ່ຍິງໄດ້ເສຍສິດໃນການເປັນເຈົ້າຂອງທີ່ດິນພາຍໃຕ້ການອອກໃບຕາດິນຂອງລັດຖະບານ.

ຜົນໄດ້ຮັບຂອງການສໍາຫຼວດໄດ້ສະແດງໃຫ້ເຫັນຄວາມແຕກຕ່າງໃນການອອກຊື່ໃບຕາດິນໃນເອກະສານ ແລະ ທີ່ມາຂອງດິນ.

ຕາຕະລາງ 4.8: ກໍາມະສິດທີ່ດິນ

| ທີ່ມາຂອງດິນ | ສ່ວນຮ້ອຍ | ຊື່ໃນເອກະສານທີ່ດິນ (ຕາມກົດໝາຍ) | ສ່ວນຮ້ອຍ |
|---|---|---|---|
| ມາຈາກຄອບຄົວຂອງຜົວ | 23 | ອອກຊື່ຜົວ | 68 |
| ມາຈາກຄອບຄົວຂອງເມຍ | 30 | ອອກຊື່ເມຍ | 16 |
| ມາຈາກສັບສິນບັດທົ່ວໄປ ຫຼື ສິນສົມສ້າງ | 47 | ອອກຊື່ທັງສອງ | 16 |
| ລວມ | 100 | ລວມ | 100 |

*ທີ່ມາຂອງຂໍ້ມູນ: ມາຈາກການສໍາຫຼວດຂອງທີມງານ*

ເມື່ອເບິ່ງຂໍ້ມູນຈາກຕາຕະລາງຂ້າງເທິງເຫັນວ່າ: ທີ່ດິນປະມານ 16 ສ່ວນຮ້ອຍທີ່ອອກຊື່ເມຍ ເຖິງແມ່ນວ່າທີ່ດິນຈໍານວນ 30 ສ່ວນຮ້ອຍ ຈະມາຈາກພໍ່ແມ່ຂອງພວກເຂົາກໍ່ຕາມ ແລະ ທີ່ດິນປະມານ 68 ສ່ວນຮ້ອຍແມ່ນອອກຊື່ຜົວຊຶ່ງດິນມູນທີ່ມາຈາກພໍ່ແມ່ຂອງພວກເຂົາມີພຽງ 23 ສ່ວນຮ້ອຍ. ກະລຸນາເບິ່ງຄວາມແຕກຕ່າງລະຫວ່າງຊື່ໃນໃບຕາດິນ(ອອກຊື່ໃນເອກະສານທາງການ)ແລະທີ່ມາຂອງດິນ ຂອງຊົນເຜົ່າລາວລຸ່ມ ແລະ ລາວເທິງໃນເອກະສານຕິດຄັດ.

ຍິງ ແລະ ຊາຍສ່ວນຫຼາຍບໍ່ເອົາໃຈໃສ່ເລື້ອງສິດໃນຊັບສິນບັດທາງກົດໝາຍຂອງແມ່ຍິງ. ຍັງມີແມ່ຍິງຫຼາຍຄົນທີ່ບໍ່ທັນຕື່ນຕົວໃນສິດທາງກົດໝາຍຂອງການອອກໃບຕາດິນຂອງຕົນເອງ, ສາເຫດແມ່ນເຂົາເຈົ້າບໍ່ຮູ້ໜັງສື ແລະ ບໍ່ມີຄວາມໝັ້ນໃຈໃນຕົນເອງ. ນອກຈາກນີ້, ແມ່ຍິງສ່ວນຫຼາຍຍັງບໍ່ທັນຮູ້ວ່າພວກເຂົາສາມາດໃຊ້ທີ່ດິນຂອງພວກເຂົາເປັນສິ່ງຄໍ້າປະກັນໃນການກູ້ຢືມເງິນຈາກທະນາຄານ.

ໃນບ້ານ ບາກຊຸມຄໍາ ແລະ ບ້ານ ນາດອນແກ້ວ (ບ້ານລາວລຸ່ມ) ມີລັກສະນະຄ້າຍໆຄືກັນ, ແມ່ຍິງ ແລະ ຜູ້ຊາຍ ໄດ້ບອກວ່າມູນມໍລະດົກຂອງພວກເຂົາແມ່ນໂອນໃຫ້ລູກໝົດທຸກໆຄົນ ແຕ່ສ່ວນຫຼາຍແມ່ນລູກຜູ້ທີ່ເບິ່ງແຍງພໍ່ແມ່. ລູກຜູ້ທີ່ເບິ່ງແຍງພໍ່ແມ່ຈະເປັນລູກສາວ ຫຼື ລູກຊາຍກໍ່ໄດ້ ແຕ່ສ່ວນຫຼາຍແມ່ນລູກສາວ. ໃນໝູ່ບ້ານລາວເທິງ, ທັງຍິງ ແລະ ຊາຍຕ່າງກໍ່ບອກວ່າໃຫ້ລູກຜູ້ເບິ່ງແຍງພໍ່ແມ່ເປັນສ່ວນຫຼາຍ ຊຶ່ງຈະເປັນລູກສາວກໍ່ໄດ້ ແຕ່ສ່ວນຫຼາຍແມ່ນລູກຊາຍຫຼ້າ.

ສະຫຼຸບແລ້ວແມ່ຍິງໄດ້ສູນເສຍກຳມະສິດທີ່ດິນຕາມຮີດຄອງປະເພນີເນື່ອງຈາກມີແຕ່ຊື່ຜູ້ຊາຍຢູ່ໃນເອກະສານກຳມະສິດທີ່ດິນເພາະວ່າກອງປະຊຸມທາງການຄັ້ງໃດກໍ່ມີແຕ່ຜູ້ຊາຍເຂົ້າຮ່ວມ. ສິດໃນການສືບທອດດິນມໍລະດົກຂອງແມ່ຍິງໄດ້ຖືກສູນເສຍໄປຖ້າຫາກວ່າພວກເຂົາບໍ່ມີຊື່ໃນໃບຕາດິນຕ່າງໆນັ້ນ. ແມ່ຍິງໄດ້ສູນເສຍການເຂົ້າເຖິງທີ່ດິນ ແລະ ປ່າໄມ້ທີ່ສຳຄັນສຳລັບການຫາອາຫານ, ພະລັງງານ, ນ້ຳ ແລະ ສະໝຸນໄພອື່ນໆ.

## 4.6. ອຳນາດ ແລະ ການຕັດສິນໃຈ

### ການຕັດສິນໃຈໃນຄອບຄົວ

ທີມງານໄດ້ສຳພາດຜູ້ໃຫ້ຂໍ້ມູນກ່ຽວກັບຂະບວນການຕັດສິນໃຈໃນຄອບຄົວ.ຈາກຕາຕະລາງເຫັນວ່າຜູ້ຊາຍຂ້ອນຂ້າງຕັດສິນໃຈໃນຄອບຄົວຫຼາຍກວ່າ. ຜູ້ທີ່ຖືກສຳພາດທັງຍິງແລະຊາຍຕ່າງກໍ່ເວົ້າວ່າຜູ້ຊາຍເປັນຄົນຕັດສິນໃຈຫຼາຍກວ່າເພາະເປັນຫົວໜ້າຄອບຄົວແລະມີການສຶກສາດີກວ່າ.ໃນຄອບຄົວໃຫຍ່, ຜູ້ອາວຸໂສກ່ອນໝູ່ຈະເປັນຄົນຕັດສິນໃຈ. ແລະ ໂດຍທົ່ວໄປແລ້ວຜູ້ອາວຸໂສກ່ອນໝູ່ອາດຈະແມ່ນພໍ່ເຖົ້າ ຫຼື ພໍ່.

ໃນເວລາມີກອງປະຊຸມບ້ານ ຜົວຈະເປັນຄົນຕັດສິນໃຈດ້ວຍຕົວລາວເອງ ໂດຍບໍ່ປຶກສາຫາລືກັບເມຍ ຫຼື ຄົນອື່ນໆໃນຄອບຄົວ. ນາຍບ້ານອາດຈະຕຳໜິຜົວ ຖ້າຫາກວ່າລາວສົ່ງເມຍ ຫຼື ສະມາຊິກຄົນອື່ນໆໃນຄອບຄົວມາຮ່ວມກອງປະຊຸມບ້ານຖ້າຫາກລາວບໍ່ມີເຫດຜົນພຽງພໍໃນການຂາດປະຊຸມ. ນາຍບ້ານກໍ່ຄາດຫວັງໃຫ້ຫົວໜ້າຄອບຄົວຕ້ອງມາ, ຖ້າບໍ່ມາກໍ່ໝາຍຄວາມວ່າຜົວບໍ່ເຫັນຄວາມສຳຄັນຂອງກອງປະຊຸມ. ນອກຈາກນີ້, ຖ້າຜູ້ຊາຍສົ່ງເມຍຂອງລາວມາແທນແລະບໍ່ມາດ້ວຍຕົນເອງລາວຈະເສຍໜ້າ ແລະ ລະອາຍຕໍ່ໜ້າຊາວບ້ານທັງໝົດ.

ສ່ວນຫຼາຍແມ່ຍິງຈະເປັນຜູ້ຄູ້ມຄອງການເງິນຂອງຄອບຄົວ.ແຕ່ຫຼັງຈາກຖາມເຈາະຈີ້ມລົງໄປແລ້ວເຫັນວ່າແມ່ຍິງຕ້ອງຂໍອະນຸຍາດຈາກຜົວເຂົາເຈົ້າກ່ອນເວລາຈະຈ່າຍເງິນອັນໃດໜຶ່ງ ຫຼື ລົງທຶນຄ້າຂາຍ. ນອກຈາກນີ້, ຜູ້ຊາຍກໍ່ຈະໃຊ້ເງິນເພື່ອຄວາມສຸກຂອງຕົນເອງ/ການຊົມໃຊ້ສ່ວນຕົວຫຼາຍກວ່າ (ເບຍ, ຢາສູບ, ເດີນທາງ ແລະ ອື່ນໆ).

### ການຕັດສິນໃຈກ່ຽວກັບກອງທຶນໝູນວຽນບ້ານ

ຜູ້ຊາຍ້ເປັນຫົວໜ້າຄອບຄົວ ແລະ ແມ່ຍິງເປັນຮອງຫົວໜ້າຄອບຄົວ.ໃນນາມຫົວໜ້າຄອບຄົວ, ຜູ້ຊາຍເປັນຕົວແທນຂອງຄອບຄົວໃນກອງປະຊຸມບ້ານທຸກໆຄັ້ງ. ຊາວບ້ານຄິດວ່າບໍ່ມີຂໍ້ຂັດແຍ່ງແຕ່

ຢ່າງໃດຖ້າຫາກວ່າຜູ້ຊາຍເປັນຕັດສິນໃຈກ່ຽວກັບກິດຈະກຳທີ່ປະຕິບັດໂດຍແມ່ຍິງ (ຕົວຢ່າງ: ໄກ່, ໝູ ແລະ ຫຍິບແສ່ວຕ່າງໆ). ທຸກຝ່າຍຄິດວ່າແມ່ຍິງເຮັດກິດຈະກຳກໍ່ເພື່ອຜົນປະໂຫຍດຂອງຄອບຄົວ ແລະ ຜູ້ຊາຍ ກູ້ຢືມເງິນກໍ່ເພື່ອຜົນປະໂຫຍດຂອງຄອບຄົວຄືກັນ.

**ແມ່ຍິງ**

- ໃນລະດັບຄອບຄົວ: ແມ່ຍິງມີອຳນາດໃນການຕັດສິນໃຈຢູ່ໃນຂອບເຂດຈຳກັດ; ແຕ່ເຖິງຢ່າງໃດກໍ່ຕາມ, ໃນເວລາຜົວບໍ່ຢູ່ ແມ່ຍິງກໍ່ເປັນຄົນຕັດສິນໃຈແທນ.
- ການມີສ່ວນຮ່ວມໃນການຕັດສິນໃຈໃນອົງການຈັດຕັ້ງລະດັບຊຸມຊົນຍັງຢູ່ໃນລະດັບຕ່ຳ (ຕົວຢ່າງ: ບໍ່ມີຕົວແທນໃນຄະນະບ້ານ ຫຼື ສະມາຄົມປ່າໄມ້ບ້ານ)
- ມີຕົວແທນໃນສະຫະພັນແມ່ຍິງເທົ່ານັ້ນ.

**ຜູ້ຊາຍ**

- ເປັນຫົວຄອບຄົວ ແລະ ຢູ່ໃນຕຳແໜ່ງການນຳ ແລະ ອຳນາດການປົກຄອງທີ່ມີຄວາມເປັນເອກະລາດໃນການຕັດສິນໃຈ
- ມີສ່ວນຮ່ວມໃນການບໍລິຫານຊຸມຊົນຢູ່ໃນອັດຕາສູງ (ຕົວຢ່າງ: ຮ່ວມກອງປະຊຸມ, ເປັນສະມາຊິກຄະນະບ້ານ, ເປັນການນຳໃນກຸ່ມອື່ນໆນອກຈາກສະພັນແມ່ຍິງ).
- ຜູ້ຊາຍມີບົດບາດຫຼາຍກວ່າ, ຕັດສິນໃຈໃນຄອບຄົວ ແລະ ຊຸມຊົນເກືອບໝົດທຸກຢ່າງ.
- ແມ່ຍິງຕັດສິນໃຈເລື້ອງການແຕ່ງກິນ ແລະ ການເບິ່ງແຍງສະມາຊິກຄອບຄົວ.

## 4.7. ການມີສ່ວນຮ່ວມໃນການຄູ້ມຄອງ ແລະ ຈັດສັນຊັບພະຍາກອນປ່າໄມ້

ໃນເວລາສຳພາດພວກເຮົາໄດ້ຊັກຖາມຊາວບ້ານວ່າພວກເຂົາໄດ້ເຂົ້າຮ່ວມໃນກິດຈະກຳຂອງໂຄງການບໍ? ຖ້າພວກເຂົາເຂົ້າຮ່ວມ, ເຂົ້າຮ່ວມເລື້ອງຫຍັງ? ເມື່ອຄະນະບ້ານ ແລະ ສະມາຄົມປ່າໄມ້ສ້າງແຜນຊາວບ້ານໄດ້ເຂົ້າຮ່ວມບໍ?ແມ່ຍິງໄດ້ເຂົ້າຮ່ວມບໍ?ຂ້າງລຸ່ມນີ້ແມ່ນບັນດາຄຳຕອບຂອງເຂົາເຈົ້າ:

ຕາຕະລາງ 4.9. ຈຳນວນຄຳຕອບຂອງຜູ້ທີ່ເຂົ້າຮ່ວມໃນກິດຈະກຳຂອງໂຄງການ[8]
(ຕອບໄດ້ຫຼາຍຄຳຕອບ)

| ປະເພດຂອງການມີສ່ວນຮ່ວມ | ລາວລຸ່ມ | | ລາວເທິງ | |
|---|---|---|---|---|
| | ຍິງ | ຊາຍ | ຍິງ | ຊາຍ |
| ປະຊຸມ | 2 (14%) | 11 (65%) | 1 (14%) | 5 (42%) |
| ຮ່າງກົດລະບຽບປ່າໄມ້ | 1 (7%) | 5 (29%) | 0 (0%) | 3 (25%) |
| ຝຶກອົບຮົມ | 4 (29%) | 7 (41%) | 2 (29%) | 5(42%) |
| ປູກຕົ້ນໄມ້ | 3 (21%) | 5 (29%) | 1 (14%) | 3 (25%) |
| ໃຊ້ກອງທຶນພັດທະນາບ້ານ | 3 (21%) | 8 (47%) | 2 (29%) | 4 (33%) |
| ອື່ນໆ | 1 (7%) | 2 (12%) | 0 (0%) | 1 (8%) |
| ບໍ່ໄດ້ເຂົ້າຮ່ວມ | 7 (50%) | 5 (29%) | 4 (57%) | 4 (33%) |
| ຈຳນວນຜູ້ຕອບທັງໝົດ | 14 (100%) | 17 (100%) | 7 (100%) | 12 (100%) |

ຈາກຕາຕະລາງ 4.9 ສະແດງໃຫ້ເຫັນວ່າແມ່ຍິງຈຳນວນ 53 ສ່ວນຮ້ອຍບໍ່ໄດ້ເຂົ້າຮ່ວມກິດຈະກຳຂອງໂຄງການຈັກໜ້ອຍເລີຍ. ຜູ້ຊາຍມີສ່ວນຮ່ວມໃນກິດຈະກຳຂອງໂຄງການຫຼາຍກວ່າຊຶ່ງມີປະມານ 69 ສ່ວນຮ້ອຍ. ແມ່ຍິງມີພຽງ 14 ສ່ວນຮ້ອຍ ເທົ່ານັ້ນທີ່ເຂົ້າຮ່ວມກອງປະຊຸມ ແມ່ຍິງສ່ວນຫຼາຍເວົ້າວ່າກອງປະຊຸມສ່ວນຫຼາຍຈັດໃນຍາມກາງຄືນແລະແມ່ຍິງບໍ່ສາມາດເຂົ້າຮ່ວມນຳໄດ້. ເຖິງວ່າມີແມ່ຍິງຈຳນວນໜຶ່ງມາຮ່ວມໃນກອງປະຊຸມ, ບໍ່ໄດ້ໝາຍຄວາມວ່າພວກເຂົາຈະມີສ່ວນຮ່ວມໃນການອອກຄຳຄິດຄຳເຫັນ, ດັ່ງນັ້ນພະນັກງານໂຄງການຄວນເອົາໃຈໃສ່ເລື້ອງນີ້ເພື່ອໃຫ້ແມ່ຍິງໄດ້ສະແດງອອກຢ່າງຈິງຈັງ. ໂດຍທົ່ວໄປແລ້ວແມ່ຍິງບໍ່ມີຄວາມໝັ້ນໃຈໃນຕົນເອງແລະເຮັດທຸກຢ່າງເພື່ອຫຼີກເວັ້ນການຜິດຖຽງກັບຜົວຂອງເຂົາເຈົ້າ. ສະນັ້ນ,ແມ່ຍິງຈຶ່ງໃຊ້ເວລາເພື່ອປຶກສາຫາລືກັບຜົວກ່ອນຈະ ຕັດສິນໃຈເລື້ອງໃດໜຶ່ງ ຫຼື ສະແດງຄວາມຄິດເຫັນຂອງຕົນອອກມາ.ແມ່ຍິງລາວລຸ່ມປະມານ 7 ສ່ວນຮ້ອຍແລະ ບໍ່ມີແມ່ຍິງຊົນເຜົ່າລາວເທິງຈັກຄົນທີ່ມີສ່ວນຮ່ວມໃນການຮ່າງກົດລະບຽບປ່າໄມ້ເນື່ອງຈາກການຮ່າງລະບຽບແມ່ນຕ້ອງການຫົວໜ້າໜ່ວຍ ແລະ ຫົວໜ້າຄອບຄົວ (ສ່ວນຫຼາຍແມ່ນຜູ້ຊາຍ) ເຂົ້າຮ່ວມ.

---

[8] ຂໍ້ມູນນີ້ໝາຍເຖິງໂຄງການ FOMACOP ເທົ່ານັ້ນ ແລະ ບໍ່ໄດ້ພິຈາລະນາເຖິງໝູ່ບ້ານຕ່າງໆຂອງໂຄງການ SUFORD ໃນແຂວງສາລະວັນ.

ທີມງານໄດ້ຖາມຜູ້ຖືກສຳພາດກ່ຽວກັບບັນຫາຕ່າງໆທີ່ພວກພົບພໍ້ໃນເວລາປະຕິບັດໂຄງການ. ບັນຫາຕ່າງໆທີ່ບັນດາຜູ້ສຳພາດຍົກມາມີຄືລຸ່ມນີ້:

ຕາຕະລາງ 4.10 : ບັນຫາໃນການມີສ່ວນຮ່ວມຂອງໂຄງການ[9]
(ຕອບໄດ້ຫຼາຍຄຳຕອບ)

| ບັນຫາທີ່ເຄີຍພົບພໍ້ໂດຍຜູ້ຖືກສຳພາດ | ລາວລຸ່ມ | | ລາວເທິງ | |
|---|---|---|---|---|
| | ຍິງ | ຊາຍ | ຍິງ | ຊາຍ |
| ຂ້ອຍບໍ່ຖືກເຊີນ (ບໍ່ຮູ້) | 9 (64%) | 1 (6%) | 5 (71%) | 1 (8%) |
| ບໍ່ເຂົ້າໃຈຈຸດປະສົງຂອງໂຄງການ | 5 (36%) | 2 (12%) | 4 (57%) | 3 (25%) |
| ບໍ່ມີເວລາເຂົ້າຮ່ວມ | 6 (43%) | 2 (12%) | 3 (43%) | 2 (17%) |
| ຂາດຄວາມຮູ້ (ການສຶກສາຕ່ຳ) | 3 (21%) | 1 (6%) | 3 (43%) | 1 (8%) |
| ບໍ່ເຂົ້າໃຈກົດລະບຽບ ແລະ ຫຼັກການປ່າໄມ້ | 3 (21%) | 1 (6%) | 3 (43%) | 1 (8%) |
| ການສື່ສານພາສາລາວ | 0 (0%) | 0 (0%) | 1 (14%) | 0 (0%) |
| ແບ່ງປັນຜົນປະໂຫຍດບໍ່ເທົ່າກັນ | 1 (7%) | 5 (29%) | 1 (14%) | 5 (42%) |
| ບໍ່ປະຕິບັດຕາມສັນຍາ (ພະນັກງານໂຄງການບໍ່ເຮັດຄືຄຳເວົ້າ) | 1 (7%) | 1 (6%) | 0 (0%) | 1 (8%) |
| ບໍ່ມີແຮງງານໃນຄອບຄົວ | 1 (7%) | 0 (0%) | 1 (14%) | 1 (8%) |
| ເຮັດວຽກໃນປ່າໄມ້ມີຄວາມຫຍຸ້ງຍາກ | 1 (7%) | 1 (6%) | 0 (0%) | 0 (0%) |
| ບໍ່ມີບັນຫາ | 5 (36%) | 10 (59%) | 2 (29%) | 6 (50%) |
| ຈຳນວນຜູ້ຕອບທັງໝົດ | 14 (100%) | 17 (100%) | 7 (100%) | 12 (100%) |

ໃນການເຂົ້າຮ່ວມກິດຈະກຳຕ່າງໆຂອງໂຄງການເຫັນວ່າ ແມ່ຍິງພົບອຸປະສັກຫຼາຍກວ່າຜູ້ຊາຍ. ຜູ້ທີ່ຖືກສຳພາດຍິງປະມານ 67 ສ່ວນຮ້ອຍ ເວົ້າວ່າພວກເຂົາບໍ່ຖືກເຊີນເຂົ້າຮ່ວມກອງປະຊຸມ. ແມ່ຍິງບໍ່ເຂົ້າໃຈຈຸດປະສົງຂອງໂຄງການ ແລະ ກົດລະບຽບປ່າໄມ້ ມີປະມານ 46 ສ່ວນຮ້ອຍ. ຜູ້ຊາຍສ່ວນຫຼາຍເວົ້າວ່າການແບ່ງປັນຜົນປະໂຫຍດບໍ່ເທົ່າກັນແມ່ນອຸປະສັກຕົ້ນຕໍໃນການມີສ່ວນຮ່ວມຂອງໂຄງການ. ຕົວຢ່າງ: ໃນແຂວງສະຫວັນນະເຂດ, ຂໍ້ຂັດແຍ່ງລະຫວ່າງ ສະມາຄົມປ່າໄມ້ບ້ານ (VFA) ກັບຄົນຂ້າງນອກ (ພະນັກງານໂຄງການ ແລະ ບໍລິສັດ) ໃນປີ 2000. ບໍລິສັດຂຸດຄົ້ນໄມ້ສັນຍາວ່າຈະຈ່າຍເງິນ (15USD/1m$^3$) ຈາກການຂາຍໄມ້ທ່ອນໃຫ້ແກ່ກອງທຶນພັດທະນາບ້ານ (VDF) . ແຕ່ເຖິງຢ່າງໃດ

[9] ບ້ານຂອງໂຄງການໂຟມາຄອບໃນແຂວງສະຫວັນນະເຂດເທົ່ານັ້ນ

ກໍ່ຕາມ, ເງິນຈຳນວນດັ່ງກ່າວນີ້ຍັງບໍ່ທັນໄດ້ຈ່າຍຕາມທີ່ໄດ້ສັນຍາເອົາໄວ້. ຈົນເຖິງປະຈຸບັນ, ຂໍ້ຂັດແຍ່ງດັ່ງກ່າວຍັງບໍ່ໄດ້ຮັບການແກ້ໄຂເທື່ອ. ເມື່ອຍັງບໍ່ທັນຈະຈ່າຍເງິນໃຫ້ແກ່ຊາວບ້ານ,ພະນັກງານພາກສະໜາມຮູ້ສຶກລະອາຍເມື່ອເວົ້າເຖິງກອງທຶນພັດທະນາບ້ານ. ໃນປະຈຸບັນລັດ ແລະ ບໍລິສັດຂຸດຄົ້ນໄມ້ຕິດໜີ້ຊາວບ້ານ (ປະມານ 2,500 USD/ບ້ານ). ໂດຍອີງຕາມຜົນຂອງການສຳພາດຊາວບ້ານເຫັນວ່າຊາວບ້ານຫຼາຍຄົນຮູ້ສຶກວ່າກິດຈະກຳຕັດໄມ້ທ່ອນແມ່ນເຊື່ອຖືບໍ່ໄດ້ແລະເຮັດໃຫ້ຊາວບ້ານບໍ່ເຊື່ອຖື ກິດຈະກຳຂອງໂຄງການ

## 4.8. ຂໍ້ຂັດແຍ່ງກ່ຽວກັບທີ່ດິນ

ບ້ານຫ້ວຍຫຼາດໄດ້ພົບບັນຫາພື້ນທີ່ກະສິກຳມີຂອບເຂດຈຳກັດ.ໂດຍສະເພາະແມ່ນບັນຫາກ່ຽວກັບແບ່ງດິນແບ່ງປ່າ ແລະ ມີຂໍ້ຂັດແຍ່ງກັບບ້ານໃກ້ຄຽງ. ໃນປີ 2001, ມີການລາຍງານວ່າເນື້ອທີ່ໆສາມາດເຮັດນາໄດ້ ຂອງບ້ານ ນາໄຊ ໄດ້ເອົາໃຫ້ຊາວບ້ານໆຫ້ວຍຫຼາດຢືມເພື່ອທຳການຜະລິດເສຍກ່ອນ ແລະ ໃນປີ 2002 ບ້ານ ນາໄຊ ກໍ່ຍຸດຕິການໃຫ້ເຊົ່າດິນຂອງພວກເຂົາ, ສະນັ້ນ ຊາວບ້ານໆຫວ້ຍຫຼາດຈຶ່ງບໍ່ມີເນື້ອທີ່ນາ ແລະ ຈຳເປັນຕ້ອງຖາງປ່າເຮັດໄຮ່. ພ້ອມກັນນັ້ນກໍ້ຂັດແຍ່ງກ່ຽວກັບດິນ, ໂດຍສະເພາະແມ່ນເລື້ອງປ່າເລົ່າເພື່ອລ້ຽງສັດ ແລະ ຊົມໃຊ້ຫຍ້າ ຫຼື ເຮັດໄຮ່. ໝູ່ບ້ານທີ່ຕັ້ງຖິ່ນຖານຢູ່ກ່ອນນັ້ນຈະຄອບຄອງເນື້ອທີ່ດິນທີ່ສາມາດເຮັດນາໄວ້ ເກືອບໝົດ. ໃນ 3 ໝູ່ບ້ານ: ບ້ານ ຫ້ວຍຫຼາດ, ນາໄຊ ແລະ ນາດອນແກ້ວ ຕ່າງກໍ່ມີຂໍ້ຂັດແຍ່ງລະຫວ່າງຊາວນາດ້ວຍກັນ ກ່ຽວກັບນ້ຳຊຶມລະປະທານ.

ຕາຕະລາງ 4.11: ຂໍ້ຂັດແຍ່ງໃນບ້ານທີ່ສຶກສາ (ສະຫວັນນະເຂດ ແລະ ສາລະວັນ)

| ຂໍ້ຂັດແຍ່ງ | ສະຫວັນນະເຂດ | | | | | | ສາລະວັນ | | | | | |
|---|---|---|---|---|---|---|---|---|---|---|---|---|
| | ຫຼັກສິບເອັດ | | ບາກຊຸມຄຳ | | ໂຄກທະເລ້ | | ຫ້ວຍຫຼາດ | | ນາໄຊ | | ນາດອນ ແກ້ວ | |
| ການຕັ້ງຖິ່ນຖານ | ກ່ອນ | ຫຼັງ | ກ່ອນ | ຫຼັງ | ກ່ອນ | ຫຼັງ | ກ່ອນ | ຫຼັງ | ກ່ອນ | ຫຼັງ | ກ່ອນ | ຫຼັງ |
| ດິນນາ | | | | | | | | ✓ | | ✓ | | |
| ນ້ຳຊຶມລະປະທານ | | | | | | | ✓ | ✓ | ✓ | ✓ | ✓ | ✓ |
| ເດີ່ນຫຍ້າ | | | | | | | | ✓ | | ✓ | | |
| ທີ່ດິນປ່າໄມ້ | | | | | | | ✓ | ✓ | ✓ | ✓ | | |
| ຄົນຂ້າງນອກ | | | | | | | | | | | | |
| ບໍລິສັດຂຸດຄົ້ນໄມ້ | ✓ | ✓ | ✓ | ✓ | ✓ | ✓ | ✓ | ✓ | ✓ | ✓ | ✓ | ✓ |

**ໝາຍເຫດ:** ✓ ໝາຍເຖິງມີຂໍ້ຂັດແຍ່ງ

## 4.9. ການສຶກສາການຊົມໃຊ້ເວລາຂອງແມ່ຍິງ ແລະ ຜູ້ຊາຍ

ທີມສຳຫຼວດຍັງໄດ້ສຶກສາການນຳໃຊ້ເວລາລະຫວ່າງຍິງ ແລະ ຊາຍ ໃນໝູ່ບ້ານທີ່ໄດ້ຄັດເລືອກນັ້ນ. ເວລາເຮັດວຽກສະເລ່ຍຂອງແມ່ຍິງມີປະມານ 8,4 ຊົ່ວໂມງ ແຕ່ເວລາເຮັດວຽກສະເລ່ຍຂອງຜູ້ຊາຍມີພຽງ 6,6 ຊົ່ວໂມງ ຕໍ່ວັນ. ແມ່ຍິງສ່ວນຫຼາຍຈະເຮັດວຽກໃນຕອນເຊົ້າໆຫຼາຍກວ່າ. ພວກເຂົາຫຍຸ້ງກັບວຽກງານ ແລະ ເຮັດຫຼາຍໆວຽກໃນເວລາດຽວກັນ. ແຕ່ກົງກັນຂ້າມກັບຜູ້ຊາຍຂ້ອນຂ້າງຈະມີເວລາພັກຜ່ອນ, ແລະ ມີເວລາພົບປະສັງສັນກັບເພື່ອນ, ເຊັ່ນ: ດື່ມເຫຼົ້າ, ລົມກັນ ແລະ ສູບຢາ.

ຕາຕະລາງ 4.12 : ການນຳໃຊ້ເວລາຂອງແມ່ຍິງ ແລະ ຜູ້ຊາຍ (ຊົ່ວໂມງຕໍ່ວັນ)

| ກິດຈະກຳ | ແມ່ຍິງ | ຜູ້ຊາຍ |
|---|---|---|
| **ກິດຈະກຳການສ້າງລາຍໄດ້** | **5.5** | **5.9** |
| ວຽກກະສິກຳ | 2.8 | 3.0 |
| ລ່າເນື້ອ/ຫາປາ | 0.2 | 1.0 |
| ເກັບເຄື່ອງປ່າຂອງດົງ | 0.9 | 0.4 |
| ຫັດຖະກຳ | 0.7 | 0.3 |
| ເຮັດວຽກຮັບຈ້າງ | 0.4 | 0.7 |
| ວຽກທຸລະກິດສ່ວນຕົວ | 0.5 | 0.4 |
| ກໍ່ສ້າງ | 0.0 | 0.1 |
| **ວຽກເຮືອນ** | **2.9** | **0.7** |
| ແຕ່ງກິນ ແລະ ກະກຽມອາຫານ | 0.9 | 0.2 |
| ຕຳເຂົ້າ (ດ້ວຍມື) | 0.5 | 0.0 |
| ເກັບໄມ້ຟືນ | 0.4 | 0.1 |
| ຕັກນ້ຳ | 0.4 | 0.1 |
| ອະນາໄມ, ລ້າງຖ້ວຍ ແລະ ຊັກເຄື່ອງ | 0.3 | 0.1 |
| ເບິ່ງແຍງລູກນ້ອຍ ແລະ ຜູ້ເຖົ້າ | 0.4 | 0.2 |
| **ເວລາກິນ, ເວລາຫວ່າງ ແລະ ເວລານອນ** | **14.6** | **15.8** |
| ກິນ, ດື່ມ, ດູແລຕົວເອງ | 2.6 | 3 |
| ເວລາຫວ່າງ | 3.4 | 4.1 |
| ນອນ | 8.6 | 8.7 |

| | | |
|---|---|---|
| **ການເດີນທາງ ແລະ ອື່ນໆ** | **1.0** | **1.6** |
| ເດີນທາງ | 0.4 | 0.6 |
| ອື່ນໆ | 0.6 | 1.0 |
| **ລວມ** | **24** | **24** |

ເມື່ອວິເຄາະເຖິງບົດບາດຍິງ-ຊາຍ ແລະ ການນຳໃຊ້ເວລາແລ້ວເຫັນວ່າແມ່ຍິງກວມເອົາເຖິງ 2,9 ຊົ່ວໂມງ ແລະ ເມື່ອທຽບໃສ່ຜູ້ຊາຍມີພຽງ 0,7 ຊົ່ວໂມງເພື່ອເຮັດວຽກເຮືອນ. ຜູ້ຊາຍໃຊ້ເວລາໃນການລ່າສັດ ແລະ ຫາປາ ປະມານ 1 ຊົ່ວໂມງ/ວັນ, ຊຶ່ງແມ່ຍິງໃຊ້ເວລາພຽງ 0,2 ຊົ່ວໂມງສຳລັບວຽກນີ້. ແມ່ຍິງໃຊ້ເວລາໃນການເຮັດວຽກທຸລະກິດ ແລະ ຫັດຖະກຳ (ຂາຍຜົນຜະລິດຂອງພວກເຂົາເອງ, ຕ່ຳຫູກ, ຍິບແສ່ວ, ວຽກທໍຜ້າ ແລະ ຫັດຖະກຳອື່ນໆ) ຫຼາຍກວ່າຜູ້ຊາຍ (0,7 ກັບ 0,3 ຊົ່ວໂມງ/ວັນ). ແມ່ຍິງໃຊ້ເວລາໃນການເກັບໄມ້ຟືນປະມານ 0,4 ຊົ່ວໂມງ/ວັນ ຊຶ່ງຜູ້ຊາຍມີພຽງ 0,1 ຊົ່ວໂມງ/ວັນເທົ່ານັ້ນ.

ຕາຕະລາງ 4.13: ສະຫຼຸບສັງລວມການວິເຄາະບົດບາດຍິງ-ຊາຍ ໃນປະຈຸບັນ

| ສະພາບບົດບາດຍິງ-ຊາຍ | ສາເຫດ | ຜົນກະທົບ |
|---|---|---|
| • ແມ່ຍິງຫຼາຍໆຄົນຍັງເຮັດວຽກໜັກ ແລະ ເຮັດວຽກຫຼາຍຊົ່ວໂມງ, ມີວຽກເຮືອນຫຼາຍຢ່າງ (ບໍ່ໄດ້ຮັບຄ່າຕອບແທນ, ບໍ່ມີວັນສິ້ນສຸດ, ຊ້ຳຊາກ), ມີເວລາພັກຜ່ອນໜ້ອຍ, ໃຊ້ເວລາຫຼາຍ, ຮັບຜິດຊອບຫຼາຍວຽກ<br>• ຜູ້ຊາຍມີສ່ວນຮ່ວມໃນວຽກການຜະລິດ ແລະ ການຕະຫຼາດ<br>• ການເຮັດວຽກເດີກດື່ນທ່ຽງຄືນເປັນບັນຫາຕົ້ນຕໍຂອງແມ່ຍິງ<br>• ຜູ້ຊາຍບໍ່ຄ່ອຍຈະເຮັດວຽກເຮືອນ ແລະ ມັກພັກຜ່ອນໃນລະດູແລ້ງ<br>• ແມ່ຍິງມີໂອກາດເຂົ້າຮຽນໃນລະດັບການສຶກສາທີ່ສູງມີໜ້ອຍ<br>• ຜູ້ຊາຍບາງຄົນຖືວ່າແມ່ຍິງຄືກັບດອກໄມ້<br>• ສັງຄົມມອງເຫັນວຽກປ່າໄມ້ແມ່ນວຽກຂອງຜູ້ຊາຍ | • ກົດເກນທາງສັງຄົມ ແລະ ຄຸນຄ່າທາງວັດທະນາທຳ ໄດ້ເຮັດໃຫ້ແມ່ຍິງ ແລະ ຜູ້ຊາຍມີບົດບາດແຕກຕ່າງກັນ<br>• ການສົ່ງເສີມເລັ່ງໃສ່ແຕ່ຜູ້ຊາຍ; ແມ່ຍິງຂາດຂໍ້ມູນຂ່າວສານກ່ຽວກັບກະສິກຳ ແລະ ປ່າໄມ້<br>• ບົດບາດການນຳຂອງຜູ້ຊາຍ 'ຖືກສ້າງຂຶ້ນ' ໂດຍສັງຄົມ, ເຮັດໃຫ້ຜູ້ຊາຍເປັນຄົນຊະນະ ແລະ ຄວບຄຸມຜົນຂອງການຜະລິດ ແລະ ລາຍໄດ້<br>• ຂະບວນການທາງສັງຄົມ: ຜູ້ຊາຍບໍ່ຄ່ອຍຈະອະນຸຍາດ ໃຫ້ແມ່ຍິງມີສິດໃນການຕັດສິນໃຈ<br>• ບົດບາດຂອງຜູ້ຊາຍໃນນາມເປັນຫົວໜ້າຄອບຄົວເຮັດໃຫ້ເຂົາເຈົ້າມີສາຍພົວພັນລະຫວ່າງຄອບຄົວ ແລະ ຊຸມຊົນ | • ເຮັດໃຫ້ແມ່ຍິງຈຳນວນຫຼວງຫຼາຍຕ້ອງແບກຮັບພາລະອັນໜັກໜ່ວງ<br>• ການພັດທະນາຄອບຄົວລ້າຊ້າເນື່ອງຈາກຊັບພະຍາກອນມະນຸດບໍ່ໄດ້ຖືກນຳໃຊ້ໃນທາງທີ່ເປັນປະໂຫຍດ<br>• ຂາດອາຫານໃນລະດັບຄົວເຮືອນ<br>• ແມ່ຍິງສ່ວນຫຼາຍທຸກຍາກ<br>• ແມ່ຍິງບໍ່ມີຄວາມກ້າວໜ້າ (ເນື່ອງຈາກຂາດຄວາມເປັນເອກະລາດ, ຂາດການເຂົ້າເຖິງຂໍ້ມູນຂ່າວສານ, ຂາດໂອກາດໃນການສຶກສາ)<br>• ຜູ້ຊາຍເຊື່ອງເງິນໄວ້ໃຊ້ສ່ວນຕົວ, ຊຶ່ງເຮັດໃຫ້ຄອບຄົວຂອງພວກເຂົາທຸກຍາກ ໂດຍເອົາເງິນໃຫ້ຄອບຄົວໜ້ອຍ ແລະ ໃຊ້ເງິນຊື້ເຫຼົ້າ ແລະ ຫຼິ້ນໂສເພນີຫຼາຍກວ່າ.<br>• ແມ່ຍິງໄດ້ຮັບເຄາະຮ້າຍເພາະຜົວເສຍຊີວິດ: ຮັບພາລະແທນທຸກຢ່າງ |

| | | |
|---|---|---|
| • ຜູ້ຊາຍມີສ່ວນຮ່ວມໃນກິດຈະກຳຂອງຊຸມຊົນຫຼາຍກວ່າ<br>• ແມ່ຍິງເຂົ້າເຖິງຊັບພະຍາກອນທີ່ມີຄຸນຄ່າທາງເສດຖະກິດຕ່ຳ ຊຶ່ງສ່ວນຫຼາຍແມ່ນວຽກເຮືອນ<br>• ຜູ້ຊາຍເຂົ້າເຖິງຊັບພະຍາກອນທີ່ມີຄຸນຄ່າທາງເສດຖະກິດສູງ<br>• ຜູ້ຊາຍຄວບຄຸມຜົນຂອງການຜະລິດ ແລະ ລາຍໄດ້ຈາກການນຳໃຊ້ຊັບພະຍາກອນຕ່າງໆ<br>• ແມ່ຍິງເຂົ້າເຖິງຂໍ້ມູນຂ່າວສານດ້ານສາທາລະນະສຸກໜ້ອຍ<br>• ຜູ້ຊາຍເຂົ້າເຖິງຂໍ້ມູນຂ່າວສານກ່ຽວກັບການຜະລິດຕ່າງໆ<br>• ລູກສາວຕ້ອງຊ່ວຍແມ່ເຮັດວຽກເຮືອນ<br>• ແມ່ຍິງເຂົ້າເຖິງສັບສົມບັດຂອງຄອບຄົວໄດ້ກໍ່ຕໍ່ເມື່ອຜົວເສຍຊີວິດ<br>• ແມ່ຍິງມີຄວາມຫຍຸ້ງຍາກໃນການໄປມາ<br>• ແມ່ຍິງບໍ່ມີອຳນາດໃນການຕັດສິນໃຈ<br>• ຜູ້ຊາຍບໍ່ຊ່ວຍເຮັດວຽກເຮືອນ<br>• ແມ່ຍິງເຮັດວຽກກາງຄືນຈະຖືກສັງຄົມ<br>ເບິ່ງໄປໃນທາງລົບ<br>• ຈິດສຳນຶກກ່ຽວກັບບົດບາດຍິງ-ຊາຍຂອງຄະນະບ້ານຍັງຕ່ຳ<br>• ຜູ້ຊາຍຄວບຄຸມແຮງງານຂອງຄອບຄົວ: ເມຍ, ລູກສາວ, ລູກຊາຍ | • ຜູ້ຊາຍທຸກຍາກຂີ້ຄ້ານ ແລະ ບໍ່ເອົາໃຈໃສ່ຕໍ່ການເຮັດວຽກໜັກ ແລະ ການແບ່ງງານໃນຄອບຄົວ<br>• ຜູ້ຊາຍມັກເຂົ້າເຖິງການສຶກສາ ແລະ ຂໍ້ມູນຂ່າວສານຫຼາຍກວ່າແມ່ຍິງ | ໃນຄອບຄົວ,<br>ຈະພົບຂໍ້ຫຍຸ້ງຍາກເພາະຂາດປະສົບປະການ |

## 4.10. ຜົນກະທົບຂອງໂຄງການຈັດສັນ ແລະ ອະນຸລັກປ່າໄມ້ (FOMACOP)

ທີມງານໄດ້ຖາມແມ່ຍິງກ່ຽວກັບຜົນກະທົບຈາກໂຄງການຈັດສັນ ແລະ ອະນຸລັກປ່າໄມ້ (ໂຟມາຄອບ) ຕໍ່ກັບການປະກອບອາຊີບ ແລະ ກິດຈະກໍາການດໍາລົງຊີວິດ. ຈາກຂໍ້ມູນຕົວຈິງເຫັນວ່າ ວຽກງານທີ່ໄດ້ຮັບຄ່າຈ້າງສ່ວນຫຼາຍຈະແມ່ນຜູ້ຊາຍເປັນຄົນເຮັດ, ເຖິງວ່າແມ່ຍິງຈໍານວນຫຼາຍກວ່າເຄິ່ງໜຶ່ງຈະໄດ້ເຂົ້າຮ່ວມວຽກຮັບຈ້າງຖາງທາງກໍ່ຕາມ. **ໂຄງການຈັດສັນ ແລະ ອະນຸລັກປ່າໄມ້ ທີ່ຜ່ານມາໄດ້ຈໍາແນກຕໍ່ແມ່ຍິງໃນການຈ້າງແຮງງານ. ນອກຈາກນີ້, ໂຄງການຍັງສ້າງອາຊີບຫຼາຍຢ່າງ (ສ້າງໂອກາດດ້ານອາຊີບຫຼາຍຢ່າງ) ໃຫ້ແກ່ຜູ້ຊາຍ, ແຕ່ບໍ່ແມ່ນແມ່ຍິງ**. ຕົວຢ່າງ: ແມ່ຍິງສ່ວນຫຼາຍມີສ່ວນຮ່ວມໃນການຖາງທາງທີ່ໄດ້ຮັບຄ່າຈ້າງຕໍ່າກວ່າອາຊີບອື່ນໆຂອງຜູ້ຊາຍ. ກະລຸນາເບິ່ງອັດຕາຄ່າຈ້າງຂ້າງລຸ່ມນີ້:

ຕາຕະລາງ 4.14: ອັດຕາຄ່າຈ້າງແຮງງານ

| ວຽກຂອງແມ່ຍິງ | | ວຽກຂອງຜູ້ຊາຍ | |
|---|---|---|---|
| ກິດຈະກໍາ | ອັດຕາຄ່າຈ້າງ | ກິດຈະກໍາ | ອັດຕາຄ່າຈ້າງ |
| ວຽກຖາງທາງ | 3000 - 6000 ກີບ/ວັນ | ສໍາຫຼວດປ່າໄມ້ | 4000 - 12000 ກີບ/ວັນ |
| - | - | ແບ່ງເຂດ | 4800 - 12000 ກີບ/ວັນ |
| - | - | ໝາຍຕົ້ນຕັດ | 4800 - 12000 ກີບ/ວັນ |
| - | - | ທີມປ້ອງກັນໄຟໃໝ້ລາມປ່າ | 3000 - 30000 ກີບ/ເດືອນ |
| - | - | ກອງປະຊຸມຄະນະຊີ້ນໍາ | 10000 - 60000 ກີບ/ຄັ້ງ |
| - | - | ກອງປະຊຸມຄະນະຈັດສັນ | 10000 - 100000 ກີບ/ຄັ້ງ |

*ແຫຼ່ງທີ່ມາຂອງຂໍ້ມູນ: ຈາກການສໍາຫຼວດຂອງທີມງານ*

ໂດຍທົ່ວໄປແລ້ວ, ໂຄງການໄດ້ເຮັດບາງກິດຈະກໍາເພື່ອເຊື່ອມບົດບາດຍິງ-ຊາຍເຂົ້າໃນຂະແໜງການປ່າໄມ້ ແລະ ໄດ້ຮັບຜົນສໍາເລັດຈໍານວນໜຶ່ງດັ່ງລຸ່ມຄື:

- ບ້ານຕ່າງໆໄດ້ສ້າງປ່າປ້ອງກັນໄວ້ເພື່ອຊົມໃຊ້, ຄູ້ມຄອງ ແລະ ອະນຸລັກໂດຍຊຸມຊົນຕ່າງໆ.
- ພະນັກງານລັດ ແລະ ຊາວບ້ານໄດ້ຮັບການຝຶກອົບຮົມຫຼັກສູດການຄູ້ມຄອງປ່າໄມ້ຫຼາຍຢ່າງ ແລະ ທໍາການປະເມີນຊົນນະບົດແບບມີສ່ວນຮ່ວມຫຼາຍຄັ້ງ (PRAs). ແຕ່ລະບ້ານໄດ້ມີແຜນພັດທະນາບ້ານຂອງຕົນ. ຫຼັງຈາກນັ້ນ ແຜນເຫຼົ່ານີ້ກໍ່ໄດ້ຖືກນໍາໃຊ້ເພື່ອກໍານົດກິດຈະກໍາຂອງການພັດທະນາ ແລະ ໄດ້ຮັບການສະໜັບສະໜູນດ້ານງົບປະມານຈາກ ໂຄງການຈັດສັນ ແລະ ອະນຸລັກປ່າໄມ້ ຫຼື FOMACOP, ຊຶ່ງກິດຈະກໍາເຫຼົ່ານີ້ໃນອະນາຄົດຈະໄດ້ຮັບງົບປະມານສະໜັບສະໜູນຈາກລາຍໄດ້ຈາກການຕັດໄມ້ຂອງບ້ານເອງ. ສະມາຄົມປ່າໄມ້ບ້ານໄດ້ມີລະບຽບ

ໃນການນຳໃຊ້ກອງທຶນຂອງພວກເຂົາເອງ- ຄ່າໃຊ້ຈ່າຍໃນການຈັດສັນປ່າ, ພັດທະນາບ້ານ, ສະຫວັດດີການສັງຄົມ, ແລະ ມີທຶນແຮໄວ້ໃຊ້ໃນອະນາຄົດ.

- ບາງບ້ານຂອງໂຄງການ FOMACOP ໄດ້ຮັບການຊ່ວຍເຫຼືອຈາກກິດຈະກຳການພັດທະນາໂດຍພື້ນຖານຈາກໂຄງການ. ການຊ່ວຍເຫຼືອຈາກໂຄງການຈັດສັນ ແລະ ອະນຸລັກປ່າໄມ້ລວມມີ: ການກໍ່ສ້າງ ແລະ ປັບປຸງໂຮງຮຽນ, ຂຸດໜອງປາ, ເຮັດຝາຍ, ນ້ຳບາດານ ແລະ ປັບປຸງເສັ້ນທາງຕ່າງໆ. ທາງໂຄງການໄດ້ສ້າງສະມາຄົມປ່າໄມ້ບ້ານຂຶ້ນ ຊຶ່ງຈະຮັບຜິດຊອບວຽກການຄຸ້ມຄອງ ແລະ ຈັດສັນປ່າໄມ້ທຸກຢ່າງ, ຊຶ່ງລວມມີ ການຂຸດຄົ້ນໄມ້ທ່ອນ ແລະ ສ້າງລາຍໄດ້. ໃນປະຈຸບັນເຂົາເຈົ້າກໍ່ມີກອງທຶນບາງຈຳນວນເປັນຂອງຕົນເອງເພື່ອພັດທະນາບ້ານ. ເກືອບໝົດທຸກບ້ານໄດ້ນຳໃຊ້ລາຍໄດ້ຂອງເຂົາເຈົ້າເພື່ອເອົາໄປລົງທຶນສ້າງພື້ນຖານໂຄງລ່າງອື່ນໆ.
- ແມ່ຍິງ ແລະ ເດັກຍິງ, ຜູ້ທີ່ເກັບເຄື່ອງປ່າຂອງດົງ ແລະ ຕັກນ້ຳໄດ້ເຂົ້າເຖິງແຫຼ່ງນ້ຳຫຼາຍຂື້ນ; ການແບ່ງດິນແບ່ງປ່າຈະຊ່ວຍປົກປັກຮັກສາສະພາບແວດລ້ອມ ເພາະຊາວບ້ານຈະທຳການຜະລິດໃນທີ່ດິນຂອງຕົນ. ຍ້ອນເນື້ອທີ່ດິນເພື່ອການດຳລົງຊີວິດມີໜ້ອຍຈະເຮັດໃຫ້ຄົນຫັນມາເຮັດກິດຈະອື່ນເພື່ອການດຳລົງຊີວິດ ຫຼື ອອກຈາກບ້ານໄປຊອກຫາວຽກເຮັດງານທຳ; ຊີວິດສະດວກສະບາຍຂື້ນ ແລະ ການເຮັດວຽກໜັກກໍ່ເບົາລົງກວ່າເກົ່າ ເນື່ອງຈາກມີທຶນທາງ ແລະ ໄດ້ນຳໃຊ້ກົນຈັກເຂົ້າຊວ່ຍວຽກງານຕ່າງໆ;
- ມີການບຸກເບີກທີ່ດິນ ແລະ ປ່າໄມ້ ເພື່ອປູກຜັກຫຼາຍຂື້ນ; ແມ່ຍິງ ແລະ ຜູ້ຊາຍມີລາຍໄດ້ຈາກການມີສ່ວນຮ່ວມໃນການຂາຍໄມ້ທ່ອນຫຼາຍຂື້ນ;
- ແມ່ຍິງໄດ້ນຳໃຊ້ກອງທຶນພັດທະນບ້ານ ເພື່ອສ້າງກິດຈະກຳສາງລາຍໄດ້ອື່ນໆ; ການປັບປຸງເສັ້ນທາງໄດ້ສ້າງໂອກາດໃຫ້ແມ່ຍິງມີອາຊີບຫຼາຍຂື້ນ, ການເຂົ້າເຖິງສາທາລະນະສຸກ, ການສຶກສາ ແລະ ການບໍລິການອື່ນໆ ດີຂື້ນກວ່າເກົ່າ.

ແຕ່ເຖິງຢ່າງໃດກໍ່ຕາມ, ໂຄງການໄດ້ເຮັດໃຫ້ມີຜົນກະທົບໃນແງ່ລົບບາງຢ່າງຄືດັ່ງນີ້:

- ໃນປະຈຸບັນຄວາມເຂົ້າໃຈຂອງຊາວບ້ານຕໍ່ປ່າໄມ້ປ່ຽນແປງໄປໃນທາງລົບເພາະຈະມອງເຫັນປ່າໄມ້ເປັນແຫຼ່ງລາຍໄດ້ເທົ່ານັ້ນ.
- ໃນບາງຄອບຄົວ, ດິນຂອງແມ່ຍິງໄດ້ອອກຊື່ຜູ້ຊາຍ ແລະ ກຳມະສິດຂອງເຂົາເຈົ້າຖືກສູນເສຍໄປ. ແມ່ຍິງໄດ້ສູນເສຍໂອກາດທາງເສດຖະກິດ ແລະ ຮັບຜິດຊອບດູແລຄອບຄົວຫຼາຍຂື້ນ, ສຸດທ້າຍກໍ່ຈະເຮັດໃຫ້ການເຂົ້າເຖິງທີ່ດິນເພື່ອການດຳລົງຊີວິດຂອງແມ່ຍິງປ່ຽນແປງໄປ.
- ຊາວບ້ານຕ້ອງເພິ່ງພາອາຊີບທີ່ໄດ້ຮັບຄ່າຈ້າງຫຼາຍຂື້ນ, ຊຶ່ງແຕ່ກ່ອນພວກເຂົາໄດ້ອາໃສອາຫານຈາກປ່າໄມ້ ແລະ ປາ, ແຕ່ໃນປະຈຸບັນເຂົາເຈົ້າບໍ່ຄ່ອຍຈະມີຊັບພະຍາກອນປ່າໄມ້ແລ້ວ.
- ຍ້ອນທີ່ດິນມີລາຄາຫຼາຍຂຶ້ນເປັນສາຍເຫດໃຫ້ມີຂໍ້ຂັດແຍ່ງກ່ຽວກັບທີ່ດິນ ແລະ ຍາດທີ່ດິນກັນໃນຊຸມຊົນ;

## ຕາຕະລາງ 4.15: ຕາຕະລາງວິເຄາະບັນຫາໂດຍກຸ່ມຍິງໃນບ້ານຄັດເລືອກ

| ບັນຫາ | ສາເຫດ | ຜົນກະທົບ | ແນວທາງແກ້ໄຂ(ວິທີການແກ້ໄຂ) |
|---|---|---|---|
| 1. ອຶດເຂົ້າ | • ພື້ນທີ່ທຳການຜະລິດບໍ່ພຽງພໍ<br>• ແຫ້ງແລ້ງ<br>• ດິນບໍ່ດີ ແລະ ຄວາມອຸດົມສົມບູນຂອງດິນຫຼຸດລົງ<br>• ຜົນຜະລິດຕົກຕ່ຳ<br>• ສັດຕູພືດທຳລາຍ<br>• ຂາດສັດລາກແກ່<br>• ຂາດແຮງງານ<br>• ເນື້ອທີ່ນາມີໜ້ອຍ | • ຂາດເຂົ້າກິນຫຼາຍເດືອນ<br>• ລູກສາວ ແລະ ລູກຊາຍອອກຈາກບ້ານໄປຊອກວຽກເຮັດງານທຳຢູ່ປະເທດໄທ ແລະ ມີຫຼາຍຄົນຖືກຂາຍ/ຂູດຮີດແຮງງານ<br>• ຂາດອາຫານ | • ເຮັດກິດຈະກຳສ້າງລາຍໄດ້ໃຫ້ຫຼາຍຂື້ນ<br>• ຢືມເຂົ້ານຳພີ່ນ້ອງໂດຍບໍ່ມີດອກເບ້ຍ<br>• ສ້າງໂຄງການທະນາຄານເຂົ້າ<br>• ເມຍຕ້ອງໄດ້ເກັບເຄື່ອງປ່າຂອງດົງເພື່ອແລກປ່ຽນເຂົ້າກິນ<br>• ຍົກສະມັດຕະພາບໂດຍໃຊ້ສັດລາກແກ່ ແລະ ປຸ່ຍໃຫ້ຫຼາຍຂື້ນ<br>• ຜົວຕ້ອງໄປຮັບຈ້າງ ແລະ ເຮັດວຽກຢູ່ໃນເມືອງ<br>• ນຳໃຊ້ຝຸ່ນຄອກປັບປຸງດິນ<br>• ປັບປຸງກິດຈະກຳລ້ຽງສັດ<br>• ຈັດສັນທີ່ດິນໂດຍລັດຖະບານ |
| 2. ແມ່ຍິງມີວຽກຫຼາຍ (ເຮັດວຽກໜັກ) | • ບັນທັດຖານດ້ານຮີດຄອງປະເພນີ: ແມ່ຍິງຕ້ອງເຮັດວຽກເຮືອນ, ເຊັ່ນ: ແຕ່ງກິນ, ອະນາໄມເຮືອນຊານ, ເບິ່ງແຍງສະມາຊິກຄອບຄົວ ແລະ ອື່ນໆ<br>• ຜູ້ຊາຍບໍ່ຊ່ວຍວຽກເຮືອນ<br>• ໃຊ້ເວລາໄປເອົາຟືນ ແລະ ເຄື່ອງປ່າຂອງດົງຫຼາຍຊົ່ວໂມງ | • ແມ່ຍິງມັກເຈັບເປັນ<br>• ເດັກຍິງຈຳຕ້ອງອອກໂຮງຮຽນມາຊ່ວຍແມ່ຂອງລາວເຮັດວຽກເຮືອນ | • ລະດົມຜູ້ຊາຍໃຫ້ຊ່ວຍວຽກເຮືອນ ແລະຕັດຟືນຊ່ວຍ<br>• ສ້າງ ຫຼື ສ້ອມແປງລະບົບນ້ຳບາດານ (ເຈາະຮູບາດານ)<br>• ຈັດກອງປະຊຸມສຳມະນາວ່າດ້ວຍບົດບາດບາດຍິງ-ຊາຍໃຫ້ແກ່ຜູ້ຊາຍ<br>• ສ້າງໂຮງສີເຂົ້າຂື້ນໃນບ້ານ |
| 3. ຊັບພະຍາກອນປ່າໄມ້ເຊື່ອມໂຊມ | • ຂາຍໄມ້ທ່ອນ<br>• ບ້ານຍັງບໍ່ມີແຜນຄູ້ມຄອງ ແລະ ຈັດສັນປ່າໄມ້ທີ່ຊັດເຈນ<br>• ນຳໃຊ້ປ່າໄມ້ເພື່ອຫາເງິນເກີນໄປ<br>• ພົນລະເມືອງເພີ່ມຂື້ນ (ຜູ້ເກັບຫຼາຍຂື້ນ) | • ບໍ່ມີຄວາມໝັ້ນຄົງດ້ານສະບຽງອາຫານ, ບໍ່ມີອາຫານຈາກປ່າໄມ້<br>• ລາຍໄດ້ຈາກການຂາຍເຄື່ອງປ່າຂອງດົງຫຼຸດລົງ<br>• ແມ່ຍິງຈຳຕ້ອງໃຊ້ເວລາອອກໄປຫາກິນຢູ່ໃນປ່າໄມ້ທີ່ຢູ່ໄກຈາກເຮືອນຫຼາຍຂື້ນກວ່າເກົ່າ. | • ປູກຕົ້ນໄມ້ ທົດແທນ<br>• ສ້າງແຜນການຄູ້ມຄອງ ແລະ ຈັດສັນປ່າໄມ້ຂອງບ້ານໃຫ້ລະອຽດ<br>• ວາງ ແລະ ປະຕິບັດຕາມກົດລະບຽບປ່າໄມ້ຢ່າງເຄັ່ງຄັດ<br>• ນຳໃຊ້ຊັບພະຍາກອນປ່າໄມ້ເພື່ອການບໍລິ |

| | | | |
|---|---|---|---|
| | | | ໂພກໃນຄອບຄົວ ແລະ ບໍ່ໃຫ້ໃຊ້ເພື່ອຫາເງິນ<br>• ສ້າງກິດຈະກຳສ້າງລາຍໄດ້ອື່ນໆ,ເຊັ່ນ: ປູກເຫັດ, ລ້ຽງກົບ ແລະ ປາ |
| 4. ເຈັບໄຂ້ (ເຊັ່ນ: ໄຂ້ຍຸງ, ຖອກທ້ອງ, ໄຂ້ຫວັດ) | • ຍຸງກັດໃນເວລາໄປເກັບເຄື່ອງປ່າຂອງດົງ<br>• ບໍ່ດື່ມນ້ຳຕົ້ມ<br>• ບໍ່ມີສ້ວມຖ່າຍ<br>• ບໍ່ມີສຸກສາລາ/ຄຼີນິກ | • ແມ່ຍິງ, ເດັກນ້ອຍ ແລະ ຜູ້ເຖົ້າມັກເປັນໄຂ້<br>• ແມ່ຍິງຕ້ອງຢູ່ເຮືອນເພື່ອເບິ່ງແຍງຄົນເຈັບ<br>• ໂຮງໝໍຢູ່ໄກ | • ນອນໃນມຸ້ງ<br>• ດື່ມນ້ຳຕົ້ມ<br>• ນຳໃຊ້ຢາພື້ນເມືອງ<br>• ສ້າງແພດອາສາສະມັກບ້ານ<br>• ສ້າງສຸກສາລາ/ຖົງຢາປະຈຳບ້ານ<br>• ຝຶກອົບຮົມວິທີການຮັກສາສຸຂະພາບຂັ້ນຕົ້ນໃຫ້ແກ່ສະມາຊິກບ້ານ<br>• ປັບປຸງລະບົບສຸຂາພິບານໃນຄອບຄົວ |
| 5. ສັດລ້ຽງຕາຍຫ່າ | • ລ້ຽງສັດຕາມທຳມະຊາດ<br>• ບໍ່ມີຢາວັກຊີນປ້ອງກັນ<br>• ມີເດີ່ນຫຍ້າຈຳກັດ<br>• ບໍ່ມີຄອກສັດ | • ຂາດສິ່ງທີ່ມີຄຸນຄ່າ/ຊັບສິນ<br>• ບໍ່ສາມາດປະຫຍັດເງິນໄດ້ | • ແນະນຳໃຫ້ປະຊາຊົນສັກຢາວັກຊີນປ້ອງກັນ ແລະ ສ້າງໂຄງການສັກຢາປ້ອງກັນພະຍາດສັດລ້ຽງ<br>• ແນະນຳພັນພື້ນເມືອງ<br>• ສ້າງສັດຕະວະແພດບ້ານ<br>• ຈັດສັນທີ່ດິນໃຫ້ມີເດີ່ນຫຍ້າ. |
| 6. ຄູບໍ່ພຽງພໍ | • ເງິນເດືອນຕ່ຳ<br>• ບ້ານຫ່າງໄກຊອກຫຼີກຈາກຕົວເມືອງ | • ເດັກນ້ອຍບໍ່ໄດ້ຮຽນເຕັມເວລາ<br>• ຄຸນນະພາບຂອງການສຶກສາຂັ້ນພື້ນຖານຢູ່ໃນລະດັບຕ່ຳ | • ຮ້ອງຂໍຫ້ອງການສຶກສາເມືອງສົ່ງຄູມາໃຫ້ຕື່ມອີກ |
| 7. ທາງບໍ່ສະດວກ | • ຫົນທາງເປ່ເພຍ້ອນລົດແກ່ໄມ້ທ່ອນຫຼຽວໄປມາຫຼາຍຄັ້ງ<br>• ບໍ່ມີເງິນສ້ອມແປງທາງຄົນ | • ໄປຂາຍຜົນຜະລິດໃນຕະຫຼາດບໍ່ສະດວກ | • ສ້າງ/ປັບປຸງເສັ້ນທາງຕ່າງໆຄືນໃໝ່ |

ຕາຕະລາງ 4.16. ຕາຕະລາງວິເຄາະບັນຫາໂດຍກຸ່ມຊາຍໃນບ້ານຄັດເລືອກ

| ບັນຫາ | ສາເຫດ | ຜົນກະທົບ | ແນວທາງແກ້ໄຂ(ວິທີການແກ້ໄຂ) |
|---|---|---|---|
| 1. ເຄື່ອງປ່າຂອງດົງຫຼຸດລົງ ໂດຍສະເພາະແມ່ນສັດປ່າ | • ພົນລະເມືອງເພີ່ມຂຶ້ນ<br>• ເກັບຫຼາຍເກີນໄປ<br>• ລ່າສັດບໍ່ຖືກວິທີ<br>• ໄຟໃໝ້ລາມປ່າ<br>• ເກັບບໍ່ຖືກວິທີ<br>• ຄົນຂ້າງນອກມາເກັບນຳ<br>• ຂາຍເອົາເງິນ | • ລາຍໄດ້ຈາກການຂາຍເຄື່ອງປ່າຂອງດົງຫຼຸດລົງ<br>• ຂາດອາຫານ<br>• ແມ່ຍິງ ແລະ ຜູ້ຊາຍຈຳເປັນຕ້ອງປ່ຽນບົດບາດຈາກທີ່ເຄີຍເປັນຄົນເກັບເຄື່ອງປ່າຂອງດົງ ໄປຊອກອາຊີບອື່ນຕາມຕົວເມືອງ. | • ແບ່ງເຂດປ່າເພື່ອອະນຸລັກ<br>• ສ້າງກົດລະບຽບປ່າໄມ້ຄືນໃໝ່<br>• ທຸກຄົນຕ້ອງປະຕິບັດຕາມກົດລະບຽບຢ່າງເຂັ້ມງວດ<br>• ສ້າງຈິດສຳນຶກກ່ຽວກັບການອະນຸລັກຊັບພະຍາກອນປ່າໄມ້ໃຫ້ຫຼາຍຂຶ້ນ<br>• ປູກພືດຫຼາຍຂຶ້ນ<br>• ວາງແຜນຄອບຄົວ<br>• ປູກຕົ້ນໄມ້ທົດແທນ<br>• ຫຼຸດຜ່ອນການການຂຸດຄົ້ນຊັບພະຍາກອນປ່າໄມ້<br>• ຝຶກອົບຮົມກ່ຽວກັບວິທີການເກັບເຄື່ອງປ່າຂອງດົງຕື່ມອີກ |
| 2. ປ່າໄມ້ເຊື່ອມໂຊມ | • ການລັກລອບຕັດໄມ້ແບບຜິດກົດໝາຍ<br>• ບໍລິສັດຂຸດຄົ້ນໄມ້ບໍ່ປະຕິບັດຕາມກົດລະບຽບປ່າໄມ້<br>• ກິດຈະກຳການຄູ້ມຄອງ ແລະ ຈັດສັນປ່າໄມ້ບ້ານບໍ່ຈະແຈ້ງ<br>• ຖາງປ່າເຮັດໄຮ່ ແລະ ເຮັດນາ | • ແຫ້ງແລ້ງ<br>• ແມ່ຍິງຈຳຕ້ອງອອກໄປເອົາຟືນ ແລະ ຫາເຄື່ອງປ່າຂອງດົງຢູ່ໄກ ແລະ ໃຊ້ເວລາຫຼາຍຂຶ້ນກວ່າເກົ່າ | • ທຸກຝ່າຍ (ພາກສ່ວນກ່ຽວຂ້ອງ) ຕ້ອງປະຕິບັດຕາມລະບຽບປ່າໄມ້ຢ່າງເຂັ້ມງວດ<br>• ປູກຕົ້ນໄມ້ທົດແທນ<br>• ປັບປຸງແບບວິທີການຄູ້ມຄອງປ່າໄມ້ຂອງບ້ານ<br>• ກຳນົດເນື້ອທີ່ອະນຸລັກປ່າໄມ້ |
| 3. ບໍ່ມີລາຍໄດ້ພຽງພໍກັບຄວາມຕ້ອງການຂອງຄອບຄົວ | • ຂາດກິດຈະກຳສ້າງລາຍໄດ້<br>• ບໍ່ມີທຶນເລີ່ມຕົ້ນທຸລະກິດ | • ບໍ່ມີເງິນເສຍຄ່າຮຽນ ແລະ ເປັນສາເຫດໃຫ້ເດັກນ້ອຍຕ້ອງອອກຈາກໂຮງຮຽນ<br>• ບໍ່ສາມາດຈ່າຍຄ່າປິ່ນປົວພະຍາດໄດ້ | • ໂຄງການໃຫ້ທຶນເຮັດທຸລະກິດ<br>• ຝຶກອົບຮົມຊາວບ້ານກ່ຽວກັບການປູກຝັງ ແລະ ລ້ຽງສັດ<br>• ຮຽນເຕັກນິກວິຊາການແບບໃໝ່ ແລະ ສ້າງ |

| | | | |
|---|---|---|---|
| | | | ກິດຈະກຳສ້າງລາຍໄດ້ໃຫ້ຫຼາຍຂື້ນ |
| 4. ໄຂ້ຍຸ້ງ ແລະ ຖອກທ້ອງ | • ບໍ່ນອນໃນມຸ້ງ<br>• ບໍ່ຕົ້ມນ້ຳດື່ມ<br>• ບໍ່ມີສ້ວມຖ່າຍ | • ບໍ່ສາມາດເຮັດວຽກຫາລາຍໄດ້ເຂົ້າຄອບຄົວໄດ້;<br>• ຂາຍສັບສິນບັດ ເອົາມາຈ່າຍຄ່າປິ່ນປົວພະຍາດ | • ດື່ມນ້ຳຕົ້ມ (ນ້ຳສະອາດ)<br>• ນອນໃນມຸ້ງ<br>• ສ້າງສຸກສາລາປະຈຳບ້ານ<br>• ຝຶກອົບຮົມສຸຂະອານາໄມສາມສະອາດໃຫ້ແກ່ຊາວບ້ານ |
| 5. ທາງບໍ່ສະດວກ | • ທົນທາງເປ່ເພຍ້ອນລົດແກ່ໄມ້ທ່ອນທຽວໄປມາຫຼາຍຄັ້ງ<br>• ກໍ່ສ້າງທົນທາງແບບປະຖົມປະຖານ | • ຕັດສາຍພົວພັນກັບໂລກຂ້າງນອກ ຕະຫຼອດລະດູຝົນ<br>• ບໍ່ສາມາດໄປຕະຫຼາດໄດ້<br>• ຄ່າໂດຍສານແພງ | • ສ້າງ/ປັບປຸງເສັ້ນທາງຕ່າງໆ<br>• ສ້າງກອງທຶນເພື່ອປັບປຸງເສັ້ນທາງພາຍໃນບ້ານ |
| 6. ສະມັດຕະພາບເຂົ້າຕົກຕ່ຳ | • ຂາດແຫຼ່ງນ້ຳ<br>• ບໍ່ມີນາພຽງພໍ<br>• ຂາດຄວາມຮູ້ດ້ານກະສິກຳ<br>• ຂາດແຮງງານ | • ຂາດອາຫານຫຼາຍເດືອນ<br>• ກິນອາຫານຈາກປ່າໄມ້ແທນເຂົ້າ | • ຝຶກອົບຮົມວິທີການປູກຜັກໃຫ້ຊາວບ້ານ<br>• ຂະຫຍາຍເນື້ອທີ່ນາ<br>• ຊອກຫາຄຳແນະນຳຈາກພະນັກງານກະສິກຳ<br>• ພົວໄປລ່າເນື້ອ<br>• ສ້າງແຫຼ່ງລາຍຮັບຕ່າງໆຈາກການຜະລິດ |
| 6. ໂຮງຮຽນຢູ່ໄກ | • ບໍ່ມີໂຮງຮຽນຢູ່ໃນບ້ານ | • ເດັກນ້ອຍຈຳຕ້ອງຍ່າງໄປໂຮງຮຽນທີ່ຢູ່ໄກຈາກບ້ານ<br>• ເດັກຍິງພົບກັບຄວາມຫຍຸ້ງຍາກໃນການໄປໂຮງຮຽນຫຼາຍກວ່າເດັກຊາຍ. | • ສ້າງໂຮງຮຽນປະຖົມຢູ່ໃນບ້ານ<br>• ທາງໂຄງການສົມທົບອຸປະກອນໃນການກໍ່ສ້າງໂຮງຮຽນ |
| 7. ການອົບພະຍົກແຮງງານ | • ຢູ່ໃນບ້ານ ບໍ່ມີອາຊີບ<br>• ບໍ່ມີກິດຈະກຳຫາລາຍໄດ້ | • ມີຄວາມສ່ຽງສູງ ເນື່ອງຈະຈາກຖືກຂາຍ/ຮັບຈ້າງ<br>• ແມ່ຍິງອາດມີສ່ວນຮ່ວມໃນການບໍລິການທາງເພດ. | • ໃຫ້ທາງໂຄງການສ້າງກິດຈະກຳຫາລາຍໄດ້ໃຫ້ຫຼາຍຂື້ນ |

## 4.11. ແມ່ຍິງ ແລະ ຜູ້ຊາຍໃຫ້ບຸລິມະສິດແຕກຕ່າງກັນ

ແມ່ຍິງ ແລະ ຜູ້ຊາຍ ມີຄວາມຄວາມຕ້ອງການຜະລິດຕະພັນປ່າໄມ້ແຕກຕ່າງກັນ. ສາເຫດແມ່ນຍ້ອນພວກເຂົາມີພາລະບົດບາດ ແລະ ຄວາມຮັບຜິດຊອບຄອບຄົວແຕກຕ່າງກັນ, ຈິ່ງເຮັດໃຫ້ແມ່ຍິງຕ້ອງການໄມ້ຟືນ, ຖ່ານ, ໝາກໄມ້ ແລະ ອາຫານ ຫຼາຍກວ່າ. ໃນຈຳນວນບຸລິມະສິດຕ່າງໆ, ຜູ້ຊາຍຕ້ອງການໄມ້ທ່ອນ ແລະ ໄມ້ໃຊ້ສອຍຫຼາຍທີ່ສຸດ, ແຕ່ແມ່ຍິງບອກວ່າບັນຫານີ້ບໍ່ສຳຄັນປານໃດ. ຜົນຂອງການຈັດລຽງບຸລິມະສິດຈາກ 110 ຄອບຄົວໄດ້ສະຫຼຸບໃນຕາຕະລາງຂ້າງລຸ່ມນີ້:

ຕາຕະລາງ 4.17: ຕາຕະລາງບຸລິມະສິດກ່ຽວກັບປ່າໄມ້ ຂອງແມ່ຍິງ ແລະ ຜູ້ຊາຍ

| | ບຸລິມະສິດຂອງແມ່ຍິງ | ບຸລິມະສິດຂອງຜູ້ຊາຍ |
|---|---|---|
| 1 | ໄມ້ຟືນ ແລະ ຖ່ານ | ໄມ້ໃຊ້ສອຍ |
| 2 | ອາຫານ ແລະ ໝາກໄມ້ | ໄມ້ທ່ອນ |
| 3 | ໄມ້ໃຊ້ສອຍ | ໄມ້ຟືນ ແລະ ຖ່ານ |
| 4 | ເຟືອງ/ຫຍ້າ | ສັດປ່າ |
| 5 | ຢາພື້ນເມືອງ | ອາຫານ ແລະ ໝາກໄມ້ |
| 6 | ໄມ້ທ່ອນ | ເຟືອງ/ຫຍ້າ |
| 7 | ສັດປ່າ | ຢາພື້ນເມືອງ |
| 8 | ອື່ນໆ | ອື່ນໆ |

## 4.12. ຊາວນາສົນໃຈກິດຈະກຳປູກຕົ້ນໄມ້

ອັດຕາສ່ວນຂອງຊາວບ້ານທີ່ຖືກສຳພາດທັງສອງເພດຍິງ (56%) ແລະ ຊາຍ (66%) ບອກວ່າມີຄວາມສົນໃຈໃນການປູກຕົ້ນໄມ້ອຸດສາຫະກຳປະສົມປະສານກັບກິດຈະກຳການຜະລິດກະສິກຳ ແລະ ປັບປຸງແຫຼ່ງລາຍຮັບຂອງພວກເຂົາ. ໂດຍສະເພາະແມ່ນຊາວບ້ານຜູ້ທີ່ມີເນື້ອດິນເຫຼືອ ນອກຈາກພື້ນທີ່ທຳການຜະລິດກະສິກຳຂອງພວກເຂົາແລ້ວ,ເຂົາເຈົ້າຍັງຕ້ອງການປູກຕົ້ນໄມ້ໃສ່ພື້ນທີ່ນີ້ໄປຄຽງຄູ່ກັບເນື້ອທີ່ທຳການຜະລິດກະສິກຳ. ຊາວບ້ານບາງຈຳນວນໃນແຂວງ ສະຫວັນນະເຂດ ແລະ ສາລະວັນໄດ້ເລີ່ມຕົ້ນທົດລອງປູກໃສ່ດິນຂອງເຂົາເຈົ້າ. ອຸປະສັກຕົ້ນຕໍໃນການປູກຕົ້ນໄມ້ຂອງພວກເຂົາແມ່ນທຶນຮອນ ແລະ ການຕະຫຼາດບໍ່ພຽງພໍ.

ຕາຕະລາງ 4.18: ຕາຕະລາງບຸລິມະສິດກິດຈະກຳພັດທະນາຂອງແມ່ຍິງ ແລະ ຜູ້ຊາຍ

| ບຸລິມະສິດຂອງແມ່ຍິງ | | ບຸລິມະສິດຂອງຜູ້ຊາຍ | |
| --- | --- | --- | --- |
| | ຄວາມຖີ່ (ຈຳນວນຄຳຕອບ) | | ຄວາມຖີ່ (ຈຳນວນຄຳຕອບ) |
| ນ້ຳບາດານ | 40 | ທຶນກະສິກຳ | 39 |
| ສຸກສາລາ | 35 | ສ້າງທາງ | 25 |
| ສ້າງໂຮງຮຽນປະຖົມ | 31 | ລ້ຽງສັດ | 23 |
| ສ້າງທາງ | 30 | ຕິດຕັ້ງໄຟຟ້າ | 22 |
| ລ້ຽງສັດ | 29 | ນ້ຳບາດານ | 21 |
| ຕິດຕັ້ງໄຟຟ້າ | 27 | ຝຶກອົບຮົມປູກຝັງ-ລ້ຽງສັດ | 18 |
| ທຶນກະສິກຳ | 18 | ເນື້ອທີ່ກະສິກຳ | 18 |
| ເນື້ອທີ່ກະສິກຳ | 15 | ສຸກສາລາ | 18 |
| ຢາປົວພະຍາດ | 10 | ສ້າງສ້ວມຖ່າຍ | 15 |
| ໃຫ້ແມ່ຍິງມີສ່ວນຮ່ວມໃນກິດຈະກຳຕ່າງໆຫຼາຍຂຶ້ນ | 10 | ສ້າງໂຮງຮຽນປະຖົມ | 13 |
| ຝຶກອົບຮົມປູກຝັງ-ລ້ຽງສັດ | 9 | ສ້າງໜອງປາ | 12 |
| ທຶນເຮັດຫັດຖະກຳ | 9 | ລະບົບຊົນລະປະທານ | 12 |
| ສ້າງສ້ວມຖ່າຍ | 7 | ໃຫ້ແມ່ຍິງມີສ່ວນຮ່ວມໃນກິດຈະກຳຕ່າງໆຫຼາຍຂຶ້ນ | 6 |
| ເສື້ອຜ້າ | 6 | ຝຶກອົບຮົມວິຊາຊີບ | 4 |
| ສ້າງໜອງປາ | 5 | ສິນເຊື່ອດອກເບ້ຍຕ່ຳ | 3 |
| ທຶນຄ້າຂາຍ | 5 | ທັດສະນະສຶກສາ | 2 |
| ລະບົບຊົນລະປະທານ | 5 | ຝຶກອົບຮົມບົດບາດຍິງ-ຊາຍ | 2 |
| ອຸປະກອນການສຶກສາ ແລະ ກິລາ | 3 | ຝຶກອົບຮົມການສຶກສາ (ພາສາລາວ) | 1 |
| ຝຶກອົບຮົມບົດບາດຍິງ-ຊາຍ | 2 | ເບ້ຍໄມ້ກິນໝາກ | 1 |
| ສ້າງວັດ ແລະ ມີຄູບາ | 2 | ໃຫ້ຄູຕື່ມອີກ | 1 |
| ຕະຫຼາດ | 1 | ຕະຫຼາດ | 1 |
| ກິດຈະກຳຫາລາຍໄດ້ອື່ນໆ | 1 | ສ້າງວັດ ແລະ ມີຄູບາ | 1 |
| | | ອຸປະກອນຮັບໃຊ້ຫ້ອງການບ້ານ | 1 |
| | | ອຸປະກອນການສຶກສາ ແລະ | 1 |

| | | | |
|---|---|---|---|
| | | ກິລາ | |
| | | ຝຶກອົບຮົມຫັດຖະກຳ | 1 |

ແມ່ຍິງ ແລະ ຜູ້ຊາຍ ມີຄວາມຕ້ອງການກິດຈະກຳການພັດທະນາແຕກຕ່າງກັນ. ສາເຫດແມ່ນຍ້ອນເຂົາເຈົ້າມີພາລະບົດບາດ ແລະ ຄວາມຮັບຜິດຊອບຄອບຄົວຫຼາຍຢ່າງ, ດັ່ງນັ້ນເຂົາເຈົ້າຈຶ່ງຕ້ອງການນ້ຳບາດານ (40 ຄຳຕອບ ເມື່ອສົມທຽບໃສ່ຜູ້ຊາຍມີພຽງ 21 ຄຳຕອບ) ແລະ ສຸກສາລາປະຈຳບ້ານ (35 ຄຳຕອບ ເມື່ອສົມທຽບໃສ່ຜູ້ຊາຍມີພຽງ 18 ຄຳຕອບ).

## ພາກທີ 5: ການເຊື່ອມບົດບາດຍິງ-ຊາຍໃນໂຄງການ SUFORD

## 5.1. ຈຸດດີໃນການເຊື່ອມບົດບາດຍິງ-ຊາຍ

*ຈິດສຳນຶກ ແລະ ທັດສະນະບົດບາດຍິງ-ຊາຍ*

ໂດຍອີງຕາມການປຶກສາຫາລືກັບພະນັກງານໂຄງການຈັດສັນປ່າຜະລິດແບບຍືນນານ ແລະ ພັດທະນາຊົນນະບົດ, ທີມງານເຫັນວ່າພະນັກງານຂັ້ນນຳ ແລະ ວິຊາການຕ່າງໆ ບໍ່ຄັດຄ້ານ ຫຼື ສ້າງອຸປະສັກໃດໆຕໍ່ການສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ການເຊື່ອມທັດສະນະບົດບາດຍິງ-ຊາຍເຂົ້າໂຄງການດັ່ງກ່າວ. ທາງໂຄງການໄດ້ສ້າງສິ່ງເອື້ອອຳນວຍ ແລະ ນະໂຍບາຍສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ແລະ ຄວາມສະເໝີພາບລະຫວ່າງຍິງ-ຊາຍຢູ່ພາຍໃນໂຄງການ. ບໍ່ມີການຈຳແນກແມ່ຍິງ ຫຼື ຜູ້ຊາຍໃນຂອບເຂດວຽກງານຂອງໂຄງການ. ພະນັກງານສ່ວນຫຼາຍຄິດວ່າ ການສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ ແມ່ນພາກສ່ວນໜຶ່ງຂອງໜ້າວຽກໂຄງການທີ່ເຂົາເຈົ້າມີຄວາມຮັບຜິດຊອບ, ເຖິງຢ່າງໃດກໍ່ຕາມ, ພະນັກງານໂຄງການຍັງບໍ່ຮູ້ວິທີເຊື່ອມທັດສະນະບົດບາດຍິງ-ຊາຍຢ່າງຄັກແນ່ເທື່ອ. ໃນເອກະສານຂອງໂຄງການສ່ວນຫຼາຍບໍ່ມີການຈຳແນກບົດບາດຍິງ-ຊາຍ. ໂຄງການຈັດສັນປ່າຜະລິດແບບຍືນນານ ແລະ ພັດທະນາຊົນນະບົດ ມີຍຸດທະສາດຮ່ວມມືກັບສະຫະພັນແມ່ຍິງທຸກໆລະດັບ ເຊັ່ນ: ສູນກາງ, ແຂວງ, ເມືອງ ແລະ ບ້ານ. ຄະນະຊີ້ນຳໂຄງການບາງທ່ານມາຈາກສະຫະພັນແມ່ຍິງ.

*ການສ້າງຄວາມສາມາດໃຫ້ແກ່ບຸກຄະລາກອນ*

ເມື່ອເດືອນ ເມສາ, 2004 ທາງໂຄງການຈັດສັນປ່າຜະລິດແບບຍືນນານ ແລະ ພັດທະນາຊົນນະບົດໄດ້ຈັດກອງປະຊຸມຝຶກອົບຮົມວ່າດ້ວຍການວາງແຜນພັດທະນາບ້ານແບບມີສ່ວນຮ່ວມ, ຊຶ່ງໃນຫຼັກສູດນີ້ລວມມີບັນຫາຊົນເຜົ່າ ແລະ ບົດບາດຍິງ-ຊາຍ 2 ຊົ່ວໂມງ. ນີ້ແມ່ນຈຸດເລີ່ມຕົ້ນຂອງການເຊື່ອມທັດສະນະບົດບາດຍິງ-ຊາຍ.  ໃນເວລາດຳເນີນການຝຶກອົບຮົມກໍ່ໄດ້ແຈກຢາຍອຸປະກອນ ແລະ ເອກະສານໃຫ້ຫຼາຍໆຢ່າງ, ແຕ່ບົດຮຽນບົດບາດຍິງ-ຊາຍຂ້ອນຂ້າງສັ້ນ. ສະນັ້ນ, ທາງໂຄງການຈຶ່ງຈຳເປັນຕ້ອງໄດ້ປັບປຸງຫຼັກສູດຝຶກອົບຮົມຄືນໃໝ່ເພື່ອເອົາບັນຫາບົດບາດຍິງ-ຊາຍໃສ່ໃນບົດໃຫ້ຫຼາຍຂຶ້ນຕື່ມ. ຄູຝຶກບົດບາດຍິງ-ຊາຍຈາກສູນຂໍ້ມູນຂ່າວສານບົດບາດຍິງ-ຊາຍ ເພື່ອການພັດທະນາກໍ່ໄດ້ຊ່ວຍກະກຽມ ແລະ ປະກອບສ່ວນໃນກອງປະຊຸມສຳມະນາໃນຄັ້ງນີ້ອີກດ້ວຍ.

## 5.2. ຈຸດອ່ອນຂອງການເຊື່ອມບົດບາດຍິງ-ຊາຍ

*ຈິດສຳນຶກ, ທັດສະນະດ້ານບົດບາດຍິງ-ຊາຍ*

ທັດສະນະຮີດຄອງປະເພນີ, ບັນທັດຖານທາງສັງຄົມ ແລະ ແນວຄິດຄອງເດີມຂອງພະນັກງານຜູ້ຊາຍທີ່ເບິ່ງແມ່ຍິງເປັນພຽງແມ່ເຮືອນ ແລະ ເປັນຜູ້ທຳຕາມ. ພະນັກງານທັງຍິງ ແລະ ຊາຍເວົ້າວ່າ ແມ່ຍິງເປັນຄົນມັກອາຍ ຫຼື ຂາດຄວາມເຊື່ອໝັ້ນໃນຕົນເອງ ຫຼື ຕີລາຄາຕົນເອງຕ່ຳ. ພະນັກງານສົ່ງເສີມ ຍັງບໍ່ທັນເຂົ້າໃຈກ່ຽວກັບແນວຄວາມຄິດ ແລະ ບົດບາດຍິງ-ຊາຍ ຊຶ່ງລວມມີຄວາມສາມາດໃນການວິເຄາະ ແລະ ການເຊື່ອມບົດບາດຍິງ-ຊາຍ ຍັງມີຂອບເຂດຈຳກັດ. ພະນັກງານໃນໂຄງການສ່ວນຫຼາຍຍັງບໍ່ທັນເຂົ້າໃຈຢ່າງເລິກເຊິ່ງເຖິງເຫດຜົນ ແລະ ຄວາມຈຳເປັນຈະຕ້ອງສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ. ພະນັກງານບໍລິຫານໂຄງການຍັງບໍ່ທັນເຂົ້າໃຈຕໍ່ແນວຄວາມຄິດ, ວິທີການ ແລະ ຂະບວນ ການເຊື່ອມບົດບາດຍິງ-ຊາຍ.

*ການສ້າງຄວາມສາມາດດ້ານບົດບາດຍິງ-ຊາຍ*

ທາງໂຄງການໄດ້ຈັດກອງປະຊຸມສຳມະນາໃຫ້ແກ່ພະນັກງານໂຄງການ ແລະ ພາກສ່ວນກ່ຽວຂ້ອງຫຼາຍໆຫຼັກສູດ. ໄດ້ຝຶກອົບຮົມຫຼັກສູດການຄຸ້ມຄອງ, ຈັດສັນປ່າຜະລິດແບບມີສ່ວນຮ່ວມ ແລະພັດທະນາບ້ານໃຫ້ແກ່ພະນັກງານ ແລະ ພາກສ່ວນກ່ຽວຂ້ອງຈຳນວນທັງໝົດ 2.531 ເທື່ອຄົນ ຊຶ່ງໃນນັ້ນ 300 ເທື່ອຄົນ (12%) ແມ່ນແມ່ຍິງ. ແຕ່ແມ່ຍິງເຂົ້າຮ່ວມໃນຫຼັກສູດຝຶກອົບຮົມກ່ຽວກັບການຝຶກອົບຮົມແບບມີສ່ວນຮ່ວມ, ການສົ່ງເສີມ ແລະ ການປະເມີນຊົນນະບົດແບບມີສ່ວນຮ່ວມ ຍັງມີໜ້ອຍ (ມີພຽງ 10% ເທົ່ານັ້ນ). ໃນກອງປະຊຸມຝຶກອົບຮົມຄັ້ງວັນທີ 23 ທັນວາ, 2003 ວ່າດ້ວຍຄູ່ມືປະຕິບັດໃນຂັ້ນບ້ານນັ້ນ ບໍ່ມີແມ່ຍິງເຂົ້າຮ່ວມຈັກຄົນເລີຍ. ມີຄູຝຶກຍິງພຽງ 2 ທ່ານ (ໃນຈຳນວນ 52 ທ່ານ) ໄດ້ເຂົ້າຮ່ວມກອງປະຊຸມວ່າດ້ວຍການວາງແຜນຂັ້ນແຂວງ (ບົດລາຍງານການປະຕິບັດໂຄງການຈັດສັນປ່າຜະລິດແບບຍືນນານ ແລະ ພັດທະນາຊົນນະບົດ ໄຕມາດທີ 4, ມັງກອນ-ມີນາ, 2004).

ການສ້າງຄວາມສາມາດໃຫ້ແກ່ບຸກຄະລາກອນຂອງໂຄງການ FOMACOP ໃນເມື່ອກ່ອນ ແລະ ໂຄງການ SUFORD ໃນປະຈຸບັນ ເຫັນວ່າບໍ່ເປັນລະບົບ. ການແລກປ່ຽນຄວາມຮູ້ດ້ານບົດບາດຍິງ-ຊາຍຍັງທັນບໍ່ເປັນລະບົບເທື່ອ. ໂຄງການຍັງບໍ່ທັນມີໜ່ວຍງານຮັບຜິດຊອບບົດບາດຍິງ-ຊາຍສະເພາະເທື່ອ. ການຝຶກອົບຮົມບົດບາດຍິງ-ຊາຍໃຫ້ແກ່ພະນັກງານລະດັບແຂວງ ແລະ ເມືອງຍັງຢູ່ໃນຂອບເຂດຈຳກັດ. ນອກນັ້ນ ຄູຝຶກ ແລະ ພະນັກງານບົດບາດຍິງ-ຊາຍຍັງບໍ່ທັນໄດ້ຮັບການແຕ່ງຕັ້ງ ໃຫ້ຮັບຜິດຊອບວຽກບົດບາດຍິງ-ຊາຍ ແລະ ຊົນເຜົ່າສະເພາະ, ຍົກເວັ້ນທີ່ປຶກສາດ້ານພັດທະນາຊົນນະບົດທີ່ເປັນຜູ້ຮັບຜິດຊອບຜູ້ດຽວ.

## 5.3.ເອກະສານໂຄງການ

ເຖິງວ່າໂຄງການຈັດສັນປ່າຜະລິດແບບຍືນນານ ແລະ ພັດທະນາຊົນນະບົດ ໄດ້ວາງນະໂຍບາຍສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລ້ວກໍ່ຕາມ, ຈົນເຖິງປະຈຸບັນ ຍັງບໍ່ທັນມີການວາງ**ແຜນປະຕິບັດບົດບາດຍິງ-ຊາຍ**ຢ່າງຄັກແນ່ວ່າຈະເຊື່ອມເຂົ້າວຽກງານຕ່າງໆຄືແນວໃດ. ບັນຫາຄວາມສະເໝີພາບລະຫວ່າງຍິງ-ຊາຍບໍ່ໄດ້ກຳນົດຢູ່ໃນເອກະສານສຳຄັນ, ແຜນ ແລະ ບົດລາຍງານຕ່າງໆຂອງໂຄງການ.ໃນເອກະສານຂອງໂຄງການບໍ່ທັນມີແຜນການສ້າງຄວາມສາມາດດ້ານບົດບາດຍິງ-ຊາຍ. ໃນເອກະສານຕ່າງໆຍັງບໍ່ທັນໄດ້ລະບຸເຖິງຄວາມສະເໝີພາບລະຫວ່າງຍິງ-ຊາຍ ຫຼືຄວາມກ້າວໜ້າຂອງແມ່ຍິງ ເຊັ່ນ: ເອກະສານໂຄງການ, ເອກະສານກຳນົດທີ່ປຶກສາ, ແຜນວຽກ, ບົດລາຍງານຕ່າງໆ. ການເອົາໃຈໃສ່ຕໍ່ບົດບາດຍິງ-ຊາຍໃນການປະເມີນສະພາບແວດລ້ອມ ແລະ ສັງຄົມ ຍັງມີໜ້ອຍ

ແຜນປະຈຳປີ ມີແຕ່ສຸມໃສ່ກິດຈະກຳປ່າໄມ້ຫຼາຍໂພດ, ຊຶ່ງບັນຫາສັງຄົມ ແລະ ບົດບາດຍິງ-ຊາຍຍັງມີໜ້ອຍ. ທີມຈັດການໂຄງການຈັດສັນປ່າຜະລິດແບບຍືນນານ ແລະ ພັດທະນາຊົນນະບົດຍັງບໍ່ທັນມີວິທີການວາງແຜນ ແລະ ຕິດຕາມບົດບາດຍິງ-ຊາຍເປັນລະບົບເທື່ອ. ໃນແຜນວຽກຂອງໂຄງການຍັງບໍ່ທັນມີຕົວຊີ້ບອກບົດບາດຍິງ-ຊາຍ.

ໂຄງການຈັດສັນ ແລະ ອະນຸລັກປ່າໄມ້ (FOMACOP) ທີ່ຜ່ານມາ ໄດ້ປະຕິບັດກິດຈະກຳບົດບາດຍິງ-ຊາຍຈຳນວນໜຶ່ງ, ເຊັ່ນ: ສ້າງບົດແນະນຳກ່ຽວກັບບົດບາດຍິງ-ຊາຍ, ຝຶກອົບຮົມບົດບາດຍິງ-ຊາຍ, ແຕ່ໂຄງການຍັງບໍ່ທັນໄດ້ສະຫຼຸບບົດຮຽນ ແລະ ປະສົບການທີ່ດີໃນການເຮັດກິດຈະກຳບົດບາດຍິງ-ຊາຍ ແລະ ສ້າງເປັນເອກະສານເພື່ອເອົາໄວ້ນຳໃຊ້ ແລະ ແລກປ່ຽນບົດຮຽນກັບກົມປ່າໄມ້ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນໆອີກ.

## 5.4. ອັດຕາສ່ວນພະນັກງານຍິງ-ຊາຍ

ແມ່ຍິງມີສ່ວນຮ່ວມ ແລະ ເປັນຕົວແທນໃນການຕັດສິນໃຈຍັງມີໜ້ອຍ. ພາຍໃນອົງການຈັດຕັ້ງຍັງຂາດພະນັກງານວິຊາການເພດຍິງ ໂດຍສະເພາະແມ່ນຢູ່ໃນລະດັບເມືອງ. ບັນຫານີ້ໄດ້ເປັນຜົນກະທົບຕໍ່ວຽກການສົ່ງເສີມພາກສະໜາມ ໂດຍສະເພາະແມ່ນູ່ບ້ານຊົນເຜົ່າສ່ວນໜ້ອຍຫ່າງໄກສອກຫຼີກ ຊຶ່ງເຮັດໃຫ້ພະນັກງານວິຊາການເພດຊາຍມີຄວາມຫຍຸ້ງຍາກໃນການເຮັດວຽກກັບຊາວບ້ານທີ່ເປັນແມ່ຍິງ. ພະນັກງານສົ່ງເສີມປ່າໄມ້ ທີ່ລົງສະໜາມຕົວຈິງ, ເມື່ອສົມທຽບແລ້ວເຫັນວ່າມີແມ່ຍິງໜ້ອຍກວ່າຜູ້ຊາຍ. ທັງນີ້ກໍ່ຍ້ອນວ່າພະນັກງານສົ່ງເສີມຕ້ອງລົງເຮັດວຽກຢູ່ໄກຈາກຄອບຄົວ,ດັ່ງນັ້ນແມ່ຍິງຈຶ່ງມີຄວາມຫຸ້ຍງຍາກ ແລະ ບໍ່ຄ່ອຍຈະເຮັດວຽກນີ້. ໂຄງການຍັງບໍ່ທັນໄດ້ສ້າງແຜນຍຸດທະສາດບົດບາດຍິງ-ຊາຍໃນການກໍ່ສ້າງພະນັກງານ.ພະນັກງານຍິງມີການສຶກສາຕ່ຳກວ່າພະນັກງານ

ຊາຍ ແລະ ພະນັກງານສົ່ງເສີມຄົນອື່ນໆ. ນີ້ເປັນເຫດຜົນອັນໜຶ່ງທີ່ເຮັດໃຫ້ພະນັກງານສົ່ງເສີມຍິງຍັງບໍ່ທັນມີໂອກາດໃນການຕັດສິນໃຈເທົ່າທຽມກັບພະນັກງານຊາຍເທື່ອ. ການປະເມີນຄວາມຕ້ອງການຝຶກອົບຮົມຍັງບໍ່ທັນໄດ້ລະບຸ ຫຼື ວິເຄາະເຖິງບັນຫາຄວາມສະເໝີພາບລະຫວ່າງຍິງ-ຊາຍ.

## 5.5. ວຽກພາກສະໜາມ

- ໃນເວລາລົງສຳຫຼວດພາກສະໜາມຕົວຈິງ ພະນັກງານສົ່ງເສີມບໍ່ໄດ້ນຳໃຊ້ເຄື່ອງມືບົດບາດຍິງ-ຊາຍ. ພະນັກງານໂຄງການຍັງບໍ່ໄດ້ວິເຄາະບົດບາດຍິງ-ຊາຍເວລາສຳຫຼວດພາກສະໜາມ.
- ໂຄງການບໍ່ໄດ້ວາງແຜນປະຕິບັດເພື່ອເຊື່ອມບົດບາດຍິງ-ຊາຍກັບພາກສ່ວນທີ່ກ່ຽວຂ້ອງ, ກຸ່ມເປົ້າໝາຍ ແລະ ອຳນາດການປົກຄອງທ້ອງຖິ່ນ.
- ບໍ່ນຳໃຊ້ວິທີການເກັບກຳຂໍ້ມູນແບບແຍກເພດ.
- ບໍ່ມີເຄື່ອງມື ແລະ ຂໍ້ແນະນຳໃນການເຊື່ອມບົດບາດຍິງ-ຊາຍເຂົ້າໃນຂະແໜງປ່າໄມ້. ການວິເຄາະບົດບາດຍິງຊາຍກ່ອນການປະຕິບັດໂຄງການບໍ່ເປັນລະບົບ

## 5.6. ໂອກາດໃນການສົ່ງເສີມບົດບາດຍິງ-ຊາຍ

ລັດຖະທຳມະນູນສະບັບປັບປຸງໃຫມ່ໃນປີ 2003, ໄດ້ປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ຍິງລາວ. ລັດຖະບານໄດ້ສ້າງຕັ້ງຄະນະກຳມະການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງລາວໃນ ປີ 2003. ພ້ອມກັນນັ້ນນະໂຍບາຍປ່າໄມ້ຂອງ ສປປ ລາວກໍ່ເອື້ອອຳນວຍໃຫ້ແກ່ການເຊື່ອມບົດບາດຍິງ-ຊາຍເຂົ້າໃນຂະແໜງການປ່າໄມ້.

ບົດບາດຍິງ-ຊາຍແມ່ນບັນຫາສຳຄັນ ແລະ ໄດ້ລະບຸໄວ້ໃນແຜນຍຸດທະສາດແຫ່ງການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ (NGPES), ຊຶ່ງ ສາມາດເອື້ອອຳນວຍໃຫ້ແກ່ການເຊື່ອມບົດບາດຍິງ-ຊາຍ ແລະ ສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ. ລັດຖະທຳມະນູນ ປີ 1991 ໄດ້ຮັບປະກັນສິດທິທາງກົດໝາຍຂອງແມ່ຍິງລາວ ແລະ ແມ່ຍິງມີສິດເຂົ້າຮ່ວມໃນວຽກງານການເມືອງ ແລະ ການປົກຄອງ. ກົດໝາຍແມ່ຍິງໄດ້ຖືກຮ່າງຂຶ້ນເພື່ອເປັນບ່ອນອີງໃນການເຊື່ອມທັດສະນະບົດບາດຍິງ-ຊາຍໃນລະດັບຊາດ. ສະຖາບັນເທັກໂນໂລຍີ, ວິທະຍາສາດ ແລະ ສະພາບແວດລ້ອມກຳລັງຮ່າງແຜນຍຸດທະສາດບົດບາດຍິງ-ຊາຍ. ໂຄງການຈັດສັນປ່າຜະລິດແບບຍືນນານ ແລະ ພັດທະນາຊົນນະບົດຍັງມີໂອກາດຫຼາຍທີ່ຈະຖອດຖອນບົດຮຽນໃນການເຊື່ອມບົດບາດຍິງ-ຊາຍກັບໜ່ວຍງານຕ່າງໆຂອງກະຊວງ/ອົງການຈັດຕັ້ງອື່ນໆ ແລະ ພາຍໃນຂະແໜງການປ່າໄມ້ດ້ວຍກັນເອງ, ຕົວຢ່າງ: ໂຄງການອອກໃບຕາດິນ, ແລະ ກົມປ່າໄມ້ ແລະ ຊົນລະປະທານ, ກະຊວງກະສິກຳ ແລະ ປ່າໄມ້.

ໂຄງການຈັດສັນປ່າຜະລິດແບບຍືນນານ ແລະ ພັດທະນາຊົນນະບົດ ໄດ້ຮ່ວມມືກັບ ສູນຂໍ້ມູນຂ່າວສານບົດບາດຍິງ-ຊາຍ ເພື່ອການພັດທະນາ ຫຼື GRID ໃນລະດັບສູນກາງ ແລະ ແຂວງ ສະຫວັນນະເຂດ, ຊຶ່ງສູນສາມາດຕອບສະໜອງການຝຶກອົບຮົມ ແລະ ຄູຝຶກ ພ້ອມດ້ວຍເອກະສານກ່ຽວກັບບົດບາດຍິງ-ຊາຍທີ່ເປັນພາສາລາວໃຫ້ແກ່ໂຄງການ (ໂຄງການຈັດສັນປ່າຜະລິດແບບຍືນນານ ແລະ ພັດທະນາຊົນນະບົດກໍ່ເຮັດວຽກຢູ່ແຂວງສະຫວັນນະເຂດຄືກັນກັບສູນຂໍ້ມູນຂ່າວສານບົດບາດຍິງ-ຊາຍ ເພື່ອການພັດທະນາ, ດັ່ງນັ້ນຈຶ່ງມີໂອກາດຫຼາຍໃນການຮ່ວມມືກັນ).

ໂຄງການຈັດສັນປ່າຜະລິດແບບຍືນນານ ແລະ ພັດທະນາຊົນນະບົດໄດ້ຈັດຊຸດຝຶກອົບຮົບ ທີ່ລວມມີບົດຮຽນກ່ຽວກັບບົດບາດຍິງ-ຊາຍ ຂື້ນ 1 ຄັ້ງ. ໃນປະຈຸບັນ ທາງສູນຂໍ້ມູນຂ່າວສານບົດບາດຍິງຊາຍ ເພື່ອການພັດທະນາ ກຳລັງທົບທວນເອກະສານຝຶກອົບຮົມຂອງໂຄງການຈັດສັນປ່າຜະລິດແບບຍືນນານ ແລະ ພັດທະນາຊົນນະບົດ ເພື່ອເອົາບັນຫາບົດບາດຍິງ-ຊາຍເຂົ້າໃນຫຼັກສູດຕື່ມ. ສິ່ງເຫຼົ່ານີ້ຈະເປັນໂອກາດອັນດີ ໃຫ້ແກ່ການສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍໃນການບໍລິຫານ ແລະ ຈັດຕັ້ງພະນັກງານຂອງໂຄງການ ແລະ ນອກຈາກນີ້ຍັງເປັນການດີຕໍ່ຍຸດທະສາດການພັດທະນາບົດບາດຍິງ-ຊາຍອີກດ້ວຍ. ພ້ອມກັນນັ້ນທາງໂຄງການໄດ້ທຳການປະເມີນຄວາມຕ້ອງການຝຶກອົບຮົມ, ຊຶ່ງຈະເປັນບ່ອນອີງຕໍ່ແຜນຍຸດທະສາດໃນການເຊື່ອມບົດບາດຍິງ-ຊາຍໃນອະນາຄົດ.

ທັງສອງໂຄງການທີ່ຜ່ານມາ,ໂຄງການຮ່ວມມືປ່າໄມ້ລາວຊູແອດ (LSFP) ແລະ ໂຄງການຈັດສັນ ແລະ ອະນຸລັກປ່າໄມ້ (FOMACOP) ໄດ້ຜະລິດຄູ່ມືວ່າດ້ວຍປ່າໄມ້ ແລະ ບົດບາດຍິງ-ຊາຍຈຳນວນໜຶ່ງ, ຊຶ່ງມີຂໍ້ມູນ ແລະ ບົດລາຍງານກ່ຽວກັບການຊົມໃຊ້ຊັບພະຍາກອນ ຂອງແມ່ຍິງ ແລະ ຜູ້ຊາຍ, ການເຂົ້າເຖິງຊັບພະຍາກອນ ແລະ ການມີສ່ວນຮ່ວມໃນການຈັດສັນ ແລະ ຕັດສິນໃຈກ່ຽວກັບປ່າໄມ້.

## 5.7. ການປະເມີນຄວາມຕ້ອງການຝຶກອົບຮົມ

ທິມງານໄດ້ປະຊຸມປຶກສາຫາລືກັບພະນັກງານໂຄງການເພື່ອປະເມີນຄວາມຕ້ອງການຝຶກອົບຮົມບົດບາດຍິງ-ຊາຍ (TNA). ຈຸດປະສົງແມ່ນເພື່ອປະເມີນ ແລະ ຄົ້ນຄວ້າປັດໃຈທີ່ພົວພັນເຖິງບັນຫາບົດບາດຍິງ-ຊາຍໃນລະດັບເມືອງ ແລະ ບ້ານ, ຕົວຢ່າງ: ບັນຫາບົດບາດຍິງ-ຊາຍ, ຈິດສຳນຶກບົດບາດຍິງ-ຊາຍ, ທັກສະ ແລະ ຄວາມຕ້ອງການຝຶກອົບຮົມບົດບາດຍິງ-ຊາຍໃນອະນາຄົດ.

ຜ່ານມາໂຄງການໄດ້ຈັດຝຶກອົບຮົມຫຼັກສູດການຈັດຕັ້ງປະຕິບັດປ່າໄມ້ບ້ານ, ການສື່ສານ ແລະ ປະສານງານ, ແລະ ຝຶກໃຫ້ເປັນຄູຝຶກ. ພະນັກງານໂຄງການຈັດສັນປ່າຜະລິດແບບຍືນນານ ແລະ ພັດທະນາຊົນນະບົດ ລະດັບແຂວງ ແລະ ເມືອງຕ່າງໆສ່ວນຫຼາຍກໍ່ໄດ້ເຂົ້າຮ່ວມຫຼັກສູດການຝຶກອົບຮົມການພັດທະນາບ້ານ, ຊຶ່ງລວມມີບົດບາດຍິງ-ຊາຍ 2 ຊົ່ວໂມງ ແລະ ບັນລະຍາຍໂດຍຄູຝຶກຈາກສູນຂໍ້ມູນຂ່າວສານບົດບາດຍິງ-ຊາຍ ເພື່ອການພັດທະນາ. ນັກສຳມະນາກອນຕ່າງໆສາມາດຈື່ເນື້ອ

ໃນຕົ້ນຕໍຂອງບົດບາດຍິງ-ຊາຍໄດ້ແລະສາມາດສິ່ງເສີມບົດບາດຂອງແມ່ຍິງໃນຄອບຄົວ ແລະ ສັງຄົມ. ເຂົາເຈົ້າເວົ້າວ່າຫຼັກສູດໄດ້ນໍາສະເໜີຄວາມຮູ້ເບື້ອງຕົ້ນກ່ຽວກັບບົດບາດຍິງ-ຊາຍໂດຍໃຫ້ຄວາມຮູ້ ແລະ ສ້າງຈິດສໍານຶກໃນລະດັບພື້ນຖານ. ຜູ້ເຂົ້າຮ່ວມຍັງເວົ້າອີກວ່າ ກອງປະຊຸມສໍາມະນາໃນຄັ້ງນີ້ ມີເວລາສັ້ນຫຼາຍ ສະນັ້ນ ຈຶ່ງເຮັດໃຫ້ເວລາໃນການສົນທະນາບໍ່ພຽງພໍ.

ໃນລະດັບຊຸມຊົນ, ນາຍບ້ານຈໍານວນໜຶ່ງ (ຜູ້ຊາຍ) ຕ້ອງການຢາກໃຫ້ແມ່ຍິງມີສ່ວນຮ່ວມໃນການບໍລິຫານບ້ານ, ໂດຍສະເພາະແມ່ນສະມາຄົມປ່າໄມ້ບ້ານ. ທັງຍິງ ແລະ ຊາຍເວົ້າວ່າໃນເຂດຊົນນະບົດ, ໂດຍສະເພາະຢູ່ຕາມບ້ານ ຊົນເຜົ່າປະໂກະ ແລະ ກະຕ່າງນັ້ນ ແມ່ຍິງເຮັດວຽກໜັກກວ່າຜູ້ຊາຍຫຼາຍ ບໍ່ວ່າຈະເປັນວຽກການຜະລິດ ຫຼື ວຽກເຮືອນກໍ່ຕາມ. ເຫດຜົນທີ່ເປັນຄືແນວນັ້ນ ກໍ່ຍ້ອນວັດທະນາທໍາ ແລະ ຮີດຄອງປະເພນີຂອງພວກເຂົາເອງ. ປະຊາຊົນສ່ວນຫຼາຍ ຊຶ່ງລວມທັງອໍານາດການປົກຄອງບ້ານຄິດວ່າສະຫະພັນແມ່ຍິງບ້ານມີບົດບາດພຽງແຕ່ຮັບແຂກບ້ານ ແລະ ສ້າງຄວາມມ່ວນຊື່ນເທົ່ານັ້ນ. ເພາະສະນັ້ນ, ນາຍບ້ານ ຈຶ່ງໃຫ້ເຂົາເຈົ້າຮັບຜິດຊອບທ້າງຫາກະກຽມອາຫານ, ລ້າງຖ້ວຍ, ແລະ ເສີບອາຫານ ແທນການເຂົ້າຮ່ວມກອງປະຊຸມ, ແທນການໃຊ້ສິດ ແລະ ຕັດສິນໃຈບັນຫາສໍາຄັນຕ່າງໆໃນກອງປະຊຸມ.

ຜູ້ທີ່ຖືກສໍາພາດເກືອບໝົດທຸກຄົນໄດ້ຍອມຮັບວ່າ ມີຄວາມຈໍາເປັນຈະຕ້ອງຝຶກອົບຮົມບົດບາດຍິງ-ຊາຍໃຫ້ແກ່ພະນັກງານລັດ, ຄະນະບ້ານ, ສະມາຄົມປ່າໄມ້ບ້ານ ແລະ ຊາວບ້ານຕ່າງໆ (ທັງຍິງ ແລະ ຊາຍ). ເຂົາເຈົ້າສະເໜີວ່າໂຄງການຄວນເອົາບັນຫາບົດບາດຍິງ-ຊາຍເຂົ້າໃນຄູ່ມືຝຶກອົບຮົມກ່ຽວກັບການຝຶກອົບຮົມແບບມີສ່ວນຮ່ວມ, ການສົ່ງເສີມ ແລະ ການປະເມີນຊົນນະບົດແບບມີສ່ວນຮ່ວມຂອງໂຄງການ.

# ພາກທີ 6: ສະຫຼຸບ ແລະ ຂໍ້ສະເໜີແນະ

## 6.1. ສະຫຼຸບ

ການຄົ້ນຄວ້າວິໄຈຄັ້ງນີ້ໄດ້ຄົ້ນພົບປະສົບປະການຕົວຈິງໃນພາກສະໜາມແລະສາມາດສະຫຼຸບບັນຫາບົດບາດຍິງ-ຊາຍໃນການຊົມໃຊ້ຊັບພະຍາກອນປ່າໄມ້ເພື່ອປັບປຸງຊີວິດການເປັນຢູ່ດັ່ງນີ້:

- ແມ່ຍິງມີບົດບາດສຳຄັນ ຕໍ່ການພັດທະນາຊີວິດການເປັນຢູ່ຂອງຄອບຄົວ ແລະ ຊຸມຊົນຕ່າງໆ. ພວກເຂົາມີບົດບາດໃນການຄຸ້ມຄອງ, ນຳໃຊ້ ແລະ ອະນຸລັກຊັບພະຍາກອນທຳມະຊາດຕ່າງໆ. ແມ່ຍິງເປັນຜູ້ນຳໃຊ້ປ່າໄມ້ຕົ້ນຕໍ ໂດຍສະເພາະແມ່ນໄມ້ຟືນ ແລະ ເຄື່ອງປ່າຂອງດົງຕ່າງໆ. ຢູ່ໃນຫຼາຍໆຂົງເຂດ, ແມ່ຍິງໄດ້ເວົ້າວ່າ ພວກເຂົາບໍ່ພຽງແຕ່ເປັນຄົນນຳໃຊ້ປ່າໄມ້ຕົ້ນຕໍເທົ່ານັ້ນ ແຕ່ຍັງເປັນຄົນປົກປັກຮັກສາປ່າໄມ້ໄດ້ດີອີກດ້ວຍ. ແມ່ຍິງມີບົດບາດສຳຄັນຕໍ່ການຈັດການເຄື່ອງປ່າຂອງດົງ ແລະ ການຜະລິດເຂົ້າ, ແຕ່ພວກເຂົາຖືກມອງຂ້າມ ແລະ ບໍ່ໄດ້ເຂົ້າຮ່ວມກິດຈະກຳໂຄງການເທົ່າທີ່ຄວນ. ໂຄງການມີນະໂຍບາຍສົ່ງເສີມດ້ານບົດບາດຍິງ-ຊາຍ, ແຕ່ໃນພາກປະຕິບັດຕົວຈິງ, ການອອກແບບກິດຈະກຳການພັດທະນາຍັງທີ່ເອົາໃຈໃສ່ຕໍ່ບັນຫາບົດບາດຍິງ-ຊາຍ/ຊົນເຜົ່າຍັງບໍ່ທັນພຽງພໍເທົ່າທີ່ຄວນ.
- ແມ່ຍິງຕ່າງໆ, ໂດຍສະເພາະຢູ່ໃນບ້ານຊົນເຜົ່າມີອັດຕາກືກໜັງສືສູງ. ແມ່ຍິງບໍ່ເຂົ້າໃຈກ່ຽວກັບການແນະນຳຕ່າງໆ, ບໍ່ສາມາດມີສ່ວນຮ່ວມໃນກິດຈະກຳຕ່າງໆໄດ້ເພາະເຂົາເຈົ້າບໍ່ເຂົ້າໃຈກ່ຽວກັບສະພາບ ແລະ ບັນຫາພື້ນຖານ. ເຂົາເຈົ້າບໍ່ກ້າອອກຄຳເຫັນ ແລະ ບໍ່ສາມາດສະແດງອອກໃນກອງປະຊຸມໄດ້.
- ແມ່ຍິງໄດ້ເຂົ້າເຖິງ ແລະ ຄວບຄຸມຊັບພະຍາກອນປ່າໄມ້ແຕກຕ່າງກັນ. ແມ່ຍິງມີມູມມອງ ແລະ ຕ້ອງການຊັບພະຍາກອນປ່າໄມ້ແຕກຕ່າງຈາກຜູ້ຊາຍ. ແມ່ຍິງຈະມັກເກັບເຄື່ອງປ່າຂອງດົງຫຼາຍກວ່າ ແລະ ສ່ວນຜູ້ຊາຍຈະຕ້ອງການໄມ້ທ່ອນ ແລະ ໄມ້ໃຊ້ສອຍ.
- ໂຄງການຈັດສັນ ແລະ ອະນຸລັກປ່າໄມ້ ຫຼື FOMACOP ທີ່ຜ່ານມາໄດ້ຈຳແນກຕໍ່ແມ່ຍິງໃນການຈ້າງແຮງງານ. ນອກຈາກນັ້ນ, ທາງໂຄງການຍັງໄດ້ສ້າງອາຊີບຫຼາຍຢ່າງ (ສ້າງໂອກາດດ້ານອາຊີບ) ໃຫ້ແກ່ຜູ້ຊາຍ, ບໍ່ແມ່ນແມ່ຍິງ.
- ຄຸນຄ່າທາງວັດທະນາທຳຂ້ອນຂ້າງເຮັດໃຫ້ແມ່ຍິງດ້ອຍໂອກາດໃນການມີສ່ວນຮ່ວມໃນວຽກງານການເມືອງ ແລະ ຂະບວນການຕັດສິນໃຈຕ່າງໆ. ຕາມທຳມະດາແລ້ວ ຜູ້ຊາຍຈະເປັນຫົວໜ້າຄອບຄົວ ແລະ ຕັດສິນໃຈເລື້ອງຕ່າງໆໃນຄອບຄົວ. ແຕ່ເຖິງຢ່າງໃດກໍ່ຕາມ, ແມ່

ຍິງຊົນເຜົ່າລາວລຸ່ມແມ່ນເປັນຜູ້ຮັກສາເງິນ ແລະ ຕັດສິນໃຈໃນການໃຊ້ຈ່າຍປະເພດເລັກໆ ນ້ອຍໆໄດ້.

- ແມ່ຍິງມີຂອບເຂດຈຳກັດໃນການເຄື່ອນໄຫວໄປມາ ແລະ ຮີດຄອງປະເພນີບໍ່ອະນຸຍາດໃຫ້ ເຂົາເຈົ້າອອກຈາກເຮືອນໄປປະຊຸມ ແລະ ຝຶກອົບຮົມຕ່າງໆ ຢູ່ໄກຈາກບ້ານ. ຜູ້ຊາຍບໍ່ມີຂໍ້ບັງ ຄັບທາງວັດທະນາທຳ ຕໍ່ການໄປມາຂອງເຂົາເຈົ້າແຕ່ຢ່າງໃດ.
- ການເຂົ້າເຖິງທີ່ດິນຂອງແມ່ຍິງກໍ່ມີຄວາມແຕກຕ່າງກັນອອກໄປຕາມແຕ່ລະຊົນເຜົ່າ. ແມ່ຍິງ ຊົນເຜົ່າລາວລຸ່ມມີສິດສືບທອດມູນມໍລະດົກທີ່ດິນ. ແຕ່ເຖິງຢ່າງໃດກໍ່ຕາມ, ຜູ້ຊາຍຈະເປັນ ຄົນໄດ້ຮັບສິດຕາມກົດໝາຍເຫຼົ່ານີ້ຢູ່ສະເໝີ. ຫົວໜ້າຄອບຄົວ ຊຶ່ງສ່ວນຫຼາຍຈະແມ່ນຜູ້ຊາຍ ຈະເປັນຄົນເຊັນຊື່ໃນເອກະສານກຳມະສິດທີ່ດິນ.ແມ່ຍິງສູນເສຍກຳມະສິດທີ່ດິນຂອງເຂົາ ເຈົ້າ ເນື່ອງຈາກເຂົາເຈົ້າມີລະດັບການສຶກສາທີ່ຕໍ່າກວ່າ ແລະ ຂາດຄວາມໝັ້ນໃຈກ່ຽວກັບ ບັນຫາກົດໝາຍແລະມີຂໍ້ຫຍຸ້ງຍາກໃນການພົວພັນກັບພະນັກງານເພື່ອປະກອບເອກະສານ ຕ່າງໆ, ໂດຍສະເພາະແມ່ນການສື່ສານກັບພະນັກງານອຳນາດການປົກຄອງ, ຊຶ່ງສ່ວນຫຼາຍ ເປັນຜູ້ຊາຍ.
- ວຽກຂອງແມ່ຍິງສ່ວນໃຫຍ່ບໍ່ໄດ້ຮັບຄ່າຈ້າງແລະຮັບພາລະວຽກເຮືອນຫຼາຍຢ່າງ, ອັນເນື່ອງ ມາຈາກການແບ່ງງານລະຫວ່າງຍິງ-ຊາຍຕາມຮີດຄອງປະເພນີ,ຊຶ່ງຈຳກັດແມ່ຍິງບໍ່ໃຫ້ມີ ສ່ວນຮ່ວມຢ່າງເຕັມເມັດເຕັມໜ່ວຍໃນກິດຈະກຳປ່າໄມ້ແລະຈຳກັດໂອກາດການມີສ່ວນ ຮ່ວມ ໃນການພັດທະນາເສດຖະກິດ-ສັງຄົມຕ່າງໆ.
- ພະນັກງານແມ່ຍິງ ໄດ້ຮັບການສົ່ງເສີມ/ຝຶກອົບຮົມ ຈາກໂຄງການ ໜ້ອຍກວ່າພະນັກງານຜູ້ ຊາຍ. ແມ່ຍິງຂາດຈິດສຳນຶກ, ຄວາມຮູ້ ແລະ ທັກສະກ່ຽວກັບກິດຈະກຳຫາລາຍໄດ້ຕ່າງໆ.
- ໃນລະດັບເມືອງຍັງຂາດພະນັກງານແມ່ຍິງ. ໃນວຽກງານສົ່ງເສີມພາກສະໜາມ ຈຳເປັນຕ້ອງ ໄດ້ປັບປຸງຄວາມດຸ່ນດ່ຽງລະຫວ່າງຍິງ-ຊາຍຕື່ມອີກ. ໃນວຽກງານສົ່ງເສີມ ແລະໃນລະດັບ ບ້ານຍັງມີອຸປະສັກກ່ຽວກັບບົດບາດຍິງ-ຊາຍ. ໃນລະດັບບ້ານ, ທັດສະນະຂອງຜູ້ຊາຍເປັນອຸ ປະສັກຕົ້ນຕໍເຮັດໃຫ້ແມ່ຍິງບໍ່ມີສ່ວນຮ່ວມ. ບາງກໍລະນີແມ່ຍິງເອງກໍ່ຍັງຕີໂຕເອງຕໍ່າ ແລະ ຂາດຄວາມເຊື່ອໝັ້ນໃນຕົນເອງຍິ່ງເປັນອຸປະສັກຫຼາຍກວ່າເກົ່າ. ການເຮັດວຽກກັບກຸ່ມ ແມ່ຍິງຍັງມີຄວາມຫຍຸ້ງຍາກດ້ານພາສາລາວ ແລະ ວັດທະນາທຳ. ໃນເຂດທີ່ຖືກຄັດເລືອກ, ມີແມ່ຍິງຈຳນວນບໍ່ເທົ່າໃດຄົນ ທີ່ເປັນຜູ້ນຳທີ່ເຂັ້ມແຂງ ແລະ ມີສິດມີສຽງ. ຜູ້ຊາຍຂ້ອນຂ້າງ ໃຫ້ຄວາມສຳຄັນຕໍ່ການຮຽນຮູ້ຂອງແມ່ຍິງໜ້ອຍຫຼາຍ. ໃນວຽກງານສົ່ງເສີມຂອງໜ່ວຍງານ ລັດ/ໂຄງການຍັງບໍ່ມີການພິຈາລະນາບັນຫາບົດບາດຍິງ-ຊາຍເທົ່າທີ່ຄວນ
- ໂຄງການຕ່າງໆຍັງບໍ່ທັນມີສ່ວນຮ່ວມກັບກຸ່ມຕ່າງໆຢ່າງເຕັມສ່ວນ, ໂດຍສະເພາະແມ່ນແມ່ ຍິງ ແລະ ສ່ວນຫຼາຍພວກເຂົາຖືກພະນັກງານໂຄງການປ່າໄມ້ມອງຂ້າມ, ບໍ່ໃຫ້ຄວາມສຳ

ຄົນເທົ່າທີ່ຄວນ. ແມ່ຍິງບໍ່ຖືກຍອມຮັບຈາກຂະແໜງການປ່າໄມ້ໃນນາມເປັນຄົນຊົມໃຊ້, ຜູ້ຕັດສິນໃຈ ຫຼື ຜູ້ປະຕິບັດຕ່າງໆ. ແມ່ຍິງມີສ່ວນຮ່ວມໃນສະມາຄົມປ່າໄມ້ບ້ານບໍ່ເທົ່າທຽມກັບຜູ້ຊາຍ. ແມ່ຍິງມີສິດໃນການຕັດສິນໃຈກ່ຽວກັບທີ່ດິນ ແລະ ຊັບພະຍາກອນປ່າໄມ້ຕ່າງໆຂອງຊຸມຊົນ ແລະ ຄອບຄົວໜ້ອຍ. ຊີວິດການເປັນຢູ່ຂອງແມ່ຍິງມີຂອບເຂດຈຳກັດ. ແມ່ຍິງຊົມໃຊ້ຊັບພະຍາກອນເພື່ອການດູແລຄອບຄົວ ແລະ ຄ້ຳປະກັນຊີວິດການເປັນຢູ່ ຊຶ່ງບໍ່ຖືກຮັບຮູ້ ຫຼື ໃຫ້ບຸລິມະສິດ.

- ແມ່ຍິງມີສ່ວນຮ່ວມໃນທຸກໆກິດຈະກຳຂອງການຜະລິດ- ການຫາລ້ຽງຊີບແບບຄອງເດີມ, ປູກຜັກ, ລ້ຽງສັດ ແລະ ປ່າໄມ້. ການແບ່ງງານລະຫວ່າງຍິງ-ຊາຍໃນລະບົບການຜະລິດກະສິກຳເພື່ອການດຳລົງຊີວິດ, ແຕ່ບໍ່ໄດ້ເຂົ້າຮ່ວມວຽກເຮັດງານທຳ (ຮັບຈ້າງຕັດໄມ້ທ່ອນ) ຊຶ່ງສ່ວນຫຼາຍແມ່ນຜູ້ຊາຍ ແລະ ຜູ້ຊາຍເປັນຄົນຄວບຄຸມການຂຸດຄົ້ນຊັບພະຍາກອນປ່າໄມ້ເພື່ອການຕະຫຼາດອື່ນໆ.
- ໃນທຸກໆໝູ່ບ້ານ, ແມ່ຍິງເປັນຄົນຮັບຜິດຊອບວຽກເຮືອນເກືອບທັງໝົດ, ເຊັ່ນ: ກິດຈະກຳລ້ຽງດູ (ວຽກປະເພດບໍ່ແມ່ນການຜະລິດ). ແຕ່ວ່າແມ່ຍິງ ແລະ ຜູ້ຊາຍ ພັດມີສ່ວນຮ່ວມໃນກິດຈະກຳການຜະລິດນຳກັນ, ຊຶ່ງລວມມີການປູກພືດຕ່າງໆ. ແມ່ຍິງເຮັດວຽກຫຼາຍຊົ່ວໂມງກ່ອນຜູ້ຊາຍ. ແມ່ຍິງມີສ່ວນຮ່ວມໃນລະບົບການຜະລິດແບບເກົ່າ ແລະ ໃໝ່ຫຼາຍຊົ່ວໂມງເທົ່າທຽມກັບຜູ້ຊາຍ. ວຽກການຜະລິດຂອງແມ່ຍິງ ທີ່ລວມມີການປູກຕົ້ນໄມ້ ແລະ ກິດຈະກຳປ່າໄມ້ຊຸມຊົນ ຖືວ່າໜ້ອຍກວ່າຜູ້ຊາຍ ແລະ ວຽກເຮືອນຂອງແມ່ຍິງຍັງຄົງຖືກມອງຂ້າມ.
- ແມ່ຍິງເຂົ້າຮ່ວມກອງປະຊຸມບ້ານ ວ່າດ້ວຍຊັບພະຍາກອນປ່າໄມ້ ແລະ ໂຄງການ ບໍ່ເທົ່າທຽມກັບຜູ້ຊາຍ. ແມ່ຍິງຂາດການມີສ່ວນຮ່ວມໃນໂຄງການປ່າໄມ້. ພະນັກງານໄດ້ເຊີນເອົາຜູ້ຊາຍພຽງຝ່າຍດຽວມາຮ່ວມກອງປະຊຸມປ່າໄມ້ ແລະ ຜູ້ຊາຍຍັງເບິ່ງຂ້າມ ຫຼື ຖືເບົາ ການມີສ່ວນຮ່ວມຂອງແມ່ຍິງ, ພະນັກງານປ່າໄມ້ ຍັງບໍ່ທັນໄດ້ນຳເອົາຄວາມຮູ້ ຫຼື ຄຳຄິດຄຳເຫັນຂອງແມ່ຍິງເຂົ້າໃນກິດຈະກຳໂຄງການ.

## 6.2. ຂໍ້ສະເໜີແນະ

ຜ່ານການສຳຫຼວດຕົວຈິງພາກສະໜາມ, ທາງທີມງານໄດ້ໃຫ້ຂໍ້ສັງເກດຈຳນວນໜຶ່ງ, ຊຶ່ງອາດຈະຊ່ວຍໂຄງການຈັດສັນປ່າຜະລິດແບບຍືນນານ ແລະ ພັດທະນາຊົນນະບົດ ໄດ້ນຳເອົາໄປພິຈາລະນາເພື່ອປັບປຸງວຽກງານພັດທະນາປ່າໄມ້ ແລະ ຊີວິດການເປັນຢູ່ທີ່ພົວພັນເຖິງຄວາມສະເໝີພາບລະຫວ່າງຍິງ-ຊາຍ. ຂໍ້ສະເໜີຕ່າງໆເຫຼົ່ານີ້ໄດ້ອີງໃສ່ການຄົ້ນພົບຂອງການວິໄຈຕົວຈິງໃນພາກສະໜາມ. ເພື່ອເຮັດໃຫ້ແມ່ຍິງມີສ່ວນຮ່ວມກິດຈະກຳປ່າໄມ້ ແລະ ພັດທະນາຊົນນະບົດ,ໂຄງການຄວນມີມາດຕະການດັ່ງລຸ່ມນີ້ຄື:

**ຄຳແນະນຳທີ 1: ທຸກພາກສ່ວນກ່ຽວຂ້ອງຕ້ອງມີຄວາມເປັນເອກະພາບ ແລະ ເຫັນຄວາມຈຳເປັນໃນການເຊື່ອມທັດສະນະບົດບາດຍິງ-ຊາຍ ເຂົ້າໃນກິດຈະກຳໂຄງການ**

ເຖິງແມ່ນວ່າໂຄງການຈັດສັນປ່າຜະລິດແບບຍືນນານ ແລະ ພັດທະນາຊົນນະບົດ ມີນະໂຍບາຍສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ຊົນເຜົ່າກໍ່ຕາມ, ແຕ່ທາງໂຄງການຍັງບໍ່ທັນມີແຜນຍຸດທະສາດ ແລະ ແຜນປະຕິບັດໃນການເຊື່ອມບົດບາດຍິງ-ຊາຍຢ່າງຈະແຈ້ງວ່າຈະປະຕິບັດວຽກນີ້ຄືແນວໃດ. ພວກເຮົາສັງເກດເຫັນວ່າຍັງບໍ່ມີຕົວຊີ້ບອກການປະຕິບັດບົດບາດຍິງ-ຊາຍໃນແຜນປະຈຳປີຂອງໂຄງການ. ເພາະສະນັ້ນ, ທາງໂຄງການຕ້ອງຮັບປະກັນວ່າ ພະນັກງານຕົນເອງ (ທັງລະດັບບໍລິຫານ ແລະ ສະໜາມ) ເຂົ້າໃຈນຳກັນໝົດທຸກຄົນ ແລະ ວາງມາດຕະການເຊື່ອມທັດສະນະບົດບາດຍິງ-ຊາຍເຂົ້າໃນຂອບເຂດວຽກງານຕ່າງໆຂອງໂຄງການຢ່າງຈິງຈັງ.ໂຄງການຄວນຈະມີການປຶກສາຫາລືກັນພາຍໃນ ວ່າດ້ວຍການສ້າງຈິດສຳນຶກບົດບາດຍິງ-ຊາຍ ແລະ ສ້າງມາດຕະການຮ່ວມກັບພາກສ່ວນກ່ຽວຂ້ອງຕ່າງໆ. ໂຄງການຄວນຈະຈັດກອງປະຊຸມສຳມະນາລະດັບຊາດກ່ຽວກັບແຜນປະຕິບັດບົດບາດຍິງ-ຊາຍ ເພື່ອໃຫ້ພາກສ່ວນຕ່າງໆທີ່ກ່ຽວຂ້ອງກັບໂຄງການເຫັນຄວາມຈຳເປັນໃນການສົ່ງເສີມໃນການເຊື່ອມທັດສະນະບົດບາດຍິງ-ຊາຍ ແລະ ເຂົ້າໃຈເປັນເອກະພາບກັນ.

**ຄຳແນະນຳທີ 2: ສ້າງແຜນປະຕິບັດງານບົດບາດຍິງ-ຊາຍທີ່ມີຈຸດປະສົງ, ຜົນໄດ້ຮັບ ແລະ ກິດຈະກຳຢ່າງຈະແຈ້ງ**

ການມີເປົ້າໝາຍ, ຫຼັກການ, ແລະ ຄວາມສາມາດພື້ນຖານ ໃນການສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍຕ່າງໆ ຈະເຮັດໃຫ້ ໂຄງການຈັດສັນປ່າຜະລິດແບບຍືນນານ ແລະ ພັດທະນາຊົນນະບົດ ສາມາດເຊື່ອມບົດບາດຍິງ-ຊາຍເຂົ້າກິດຈະກຳຕ່າງໆໄດ້ຢ່າງຖືກຕ້ອງ, ໂດຍຮັບປະກັນໃຫ້ມີບັນຫາເຫຼົ່ານີ້ຢູ່ໃນອົງປະກອບຕ່າງໆຂອງໂຄງການ. ດັ່ງນັ້ນສະເໜີໃຫ້ທາງໂຄງການສ້າງ **ແຜນປະຕິບັດງານບົດບາດຍິງ-ຊາຍ** ທີ່ຈະແຈ້ງ ແລະ ຕ້ອງໄດ້ເຮັດແຕ່ລະປີ. ແຜນປະຕິບັດງານດັ່ງກ່າວບໍ່ຄວນແຍກອອກຈາກແຜນປະຈຳປີຂອງໂຄງການ, ຄວນເຊື່ອມເຂົ້າກັບກິດຈະກຳໂຄງການ. ເພື່ອເປັນການສົ່ງເສີມໃຫ້ພະນັກງານທຸກຝ່າຍເປັນເຈົ້າການໃນການວາງແຜນ, ໂຄງການຕ້ອງວາງເປົ້າໝາຍ ແລະ ຮ່າງແຜນປະຕິບັດບົດບາດຍິງ-ຊາຍແບບມີສ່ວນຮ່ວມກັບທຸກຝ່າຍ ພາຍຫຼັງທີ່ພະນັກງານຂອງຕົນໄດ້ຮັບການຝຶກອົບຮົມກ່ຽວກັບບົດບາດຍິງ-ຊາຍ. ແຜນດັ່ງກ່າວຄວນກຳນົດເວລາລະອຽດໃນໄລຍະສັ້ນ-ຍາວເພື່ອບັນລຸຍຸດທະສາດການເຊື່ອມບົດບາດຍິງ-ຊາຍ.

ຄວນຈະໃຊ້ **ແຜນປະຕິບັດງານບົດບາດຍິງ-ຊາຍ** ເປັນເຄື່ອງມືໃນການຈັດການຕົ້ນຕໍເພື່ອໃຫ້ບົດບາດຍິງ-ຊາຍຖືກເຊື່ອມເຂົ້າໃນວຽກຕ່າງໆຂອງໂຄງການຢ່າງເປັນລະບົບ. ແຜນວຽກຕ່າງໆຂອງໂຄງການຄວນຈະໄດ້ຮັບການທົບທວນເປັນປົກກະຕິ, ຕົວຢ່າງ: ປີລະຄັ້ງ. ໂຄງການຈຳເປັນຕ້ອງໄດ້ແຕ່ງຕັ້ງກຸ່ມຮັບຜິດຊອບບົດບາດຍິງ-ຊາຍ ເພື່ອສ້າງແຜນປະຕິບັດບົດບາດຍິງ-ຊາຍ. ກຸ່ມຮັບຜິດຊອບບົດບາດຍິງ-ຊາຍ ຄວນຈະປະກອບມີທັງຍິງ ແລະ ຊາຍ ຈາກອົງການຈັດຕັ້ງຕ່າງໆ ເຊັ່ນ: ພະແນກກະສິກຳ ແລະ ປ່າໄມ້ແຂວງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ສະຫະພັນແມ່ຍິງລາວ, ແນວລາວສ້າງຊາດ ແລະ ສະມາຄົມປ່າໄມ້ບ້ານ. ເຖິງຢ່າງໃດກໍ່ຕາມ, **ການສ້າງຕັ້ງຄະນະຮັບຜິດຊອບບົດບາດຍິງ-ຊາຍ** ສະເພາະໂຄງການແມ່ນບໍ່ພຽງພໍເພື່ອຮັບຜິດຊອບເຊື່ອມບົດບາດຍິງ-ຊາຍເຂົ້າໃນທຸກຂົງເຂດວຽກງານຂອງລັດ, ດັ່ງນັ້ນຄວນສ້າງຄະນະຮັບຜິດຊອບບົດບາດຍິງ-ຊາຍໃນລະດັບກົມ ຫຼືກະຊວງນຳອີກເພື່ອເຮັດໜ້າທີ່ສືບຕໍ່ເຊື່ອມບົດບາດຍິງ-ຊາຍເຂົ້າໃນວຽກງານຂອງກົມປ່າໄມ້ໃນໄລຍະຍາວເພື່ອເຮັດໃຫ້ກິດຈະກຳດັ່ງກ່າວມີຄວາມຍືນຍົງຫຼັງຈາກສິ້ນສຸດໂຄງການ.

### ຄຳແນະນຳທີ 3: ປັບປຸງເຄື່ອງມື ແລະ ບົດແນະນຳກ່ຽວກັບບົດບາດຍິງ-ຊາຍ

ເພື່ອເປັນການຫຼີກເວັ້ນ "ບັນຫາຊໍ້າຊາກ" ໂຄງການຈັດສັນປ່າຜະລິດ ແລະ ພັດທະນາຊົນນະບົດສາມາດນຳໃຊ້ເອກະສານ ແລະ ບົດແນະນຳບົດບາດຍິງ-ຊາຍຕ່າງໆທີ່ມີຢູ່, ຊຶ່ງແມ່ນພາກສ່ວນກ່ຽວຂ້ອງເປັນຄົນສ້າງຂຶ້ນມາກ່ອນແລ້ວ (ຕົວຢ່າງເຊັ່ນ: ໂຄງການຮ່ວມມືປ່າໄມ້ລາວຊູແອດ SIDA ແລະ ໂຄງການຈັດສັນ ແລະ ອະນຸລັກປ່າໄມ້ FOMACOP). ໂຄງການ SUFORD ອາດຈະເລືອກເຟັ້ນເອົາໂຕໃດຄວນໃຊ້ ຫຼື ນຳເອົາມາປະສົມປະສານໃຫ້ເໝາະກັບເງື່ອນໄຂຂອງໂຄງການ.ປະຈຸບັນທີມງານຈາກສູນຂໍ້ມູນຂ່າວສານບົດບາດຍິງ-ຊາຍ ເພື່ອການພັດທະນາ ກຳລັງທົບທວນຄູ່ມືຝຶກອົບຮົມຂອງໂຄງການ ເພື່ອເອົາບັນຫາບົດບາດຍິງ-ຊາຍເຂົ້າໃສ່, ໂຄງການຕ້ອງຮັບປະກັນວ່າພະນັກງານຂອງຕົນສາມາດນຳໃຊ້ຄູ່ມືສະບັບປັບປຸງໃໝ່ນີ້. ເພາະສະນັ້ນ, ໂຄງການຕ້ອງຈັດຝຶກອົບຮົມໃຫ້ພະນັກງານໂຄງການກ່ຽວກັບວິທີການນຳໃຊ້ຄູ່ມືດັ່ງກ່າວ.ໂດຍອີງໃສ່ເປົ້າໝາຍຂອງການສ້າງຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ແຜນງານຕ່າງໆ, ພະນັກງານໂຄງການຕ້ອງອອກແບບຄູ່ມືພິເສດເພື່ອໃຫ້ສອດຄ່ອງກັບການວາງແຜນ ແລະ ຈັດຕັ້ງປະຕິບັດໂຄງການ.

### ຄຳແນະນຳທີ 4: ສ້າງກົນໄກທີ່ອຳນວຍຄວາມສະດວກໃຫ້ແກ່ຂະບວນການເຊື່ອມທັດສະນະບົດບາດຍິງ-ຊາຍ ເພື່ອຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ຄວາມກ້າວໜ້າຂອງແມ່ຍິງ

ໂຄງການຕ້ອງສ້າງກົນໄກຕ່າງໆເພື່ອເພີ່ມການມີສ່ວນຮ່ວມຂອງແມ່ຍິງໃນຊຸມຊົນ ແລະ ການຕັດສິນໃຈໃນວຽກງານປ່າໄມ້ ແລະ ເຮັດໃຫ້ແມ່ຍິງມີສ່ວນຮ່ວມໃນການປຶກສາຫາລື ແລະ ຕັດສິນໃຈ

ກ່ຽວກັບໂຄງການປ່າໄມ້ຫຼາຍຂຶ້ນ. ອີງການຈັດຕັ້ງຊຸມຊົນຈະຕ້ອງເຮັດວຽກແບບລວມສູນປະຊາທິປະໄຕ ແລະ ປະກອບມີທັງຍິງ ແລະ ຊາຍ. ຈະຕ້ອງໄດ້ສົ່ງເສີມໃຫ້ມີແມ່ຍິງເປັນຄະນະນຳຂອງສະມາຄົມປ່າໄມ້ບ້ານໃຫ້ຫຼາຍຂຶ້ນຕື່ມ. ຕ້ອງກຳນົດໃຫ້ມີອັດຕາສ່ວນຂອງແມ່ຍິງ ຫຼື ໃຊ້ລະບົບໂກຕາເພື່ອໃຫ້ແມ່ຍິງເຂົ້າມາຢູ່ໃນຄະນະນຳຕື່ມອີກ. ໂຄງການຈຳເປັນຕ້ອງໄດ້ສ້າງຄະນະຮັບຜິດຊອບບົດບາດຍິງ-ຊາຍ ແລະ ກຳນົດຄວາມຮັບຜິດຊອບໂດຍການສ້າງຂໍ້ກຳນົດຕ່າງໆ, ຢ່າງໜ້ອຍທີ່ສຸດໃນແຕ່ລະເມືອງຕ້ອງໃຫ້ມີພະນັກງານບົດບາດຍິງ-ຊາຍ ຜູ້ໜຶ່ງ ຫຼື ສອງຄົນຂຶ້ນໄປ.

ອຸປະສັກຂອງການສົນທະນາແມ່ນບັນຫາພາສາ ແລະ ວັດທະນາທຳ, ສະນັ້ນ ທາງໂຄງການຕ້ອງມີແຜນຍຸດທະສາດເພື່ອສົ່ງເສີມພະນັກງານທ້ອງຖິ່ນ ແລະ ຊົນເຜົ່າ. ອີງຕາມປະສົບປະການຜ່ານມາເຫັນວ່າຖ້າມີພະນັກງານແມ່ຍິງຫຼາຍຄົນຈະເຮັດໃຫ້ການເຮັດວຽກກັບແມ່ຍິງຊາວບ້ານໄດ້ຮັບຜົນສຳເລັດຫຼາຍຂຶ້ນ. ດັ່ງນັ້ນຄວນຈະເອົາໃຈໃສ່ສົ່ງເສີມພະນັກງານແມ່ຍິງໂດຍນຳສະເໜີລັດຖະບານຊອກຫາ ຫຼື ບັນຈຸພະນັກງານແມ່ຍິງໃຫ້ຫຼາຍຂຶ້ນ. ມີຄວາມຈຳເປັນຕ້ອງຍົກລະດັບການສຶກສາ ແລະ ສ້າງຄວາມສາມາດໃຫ້ແກ່ພະນັກງານຊົນເຜົ່າເຫຼົ່ານີ້.

**ຄຳແນະນຳທີ 5: ສ້າງຄວາມສາມາດດ້ານບົດບາດຍິງ-ຊາຍໃຫ້ແກ່ພະນັກງານບໍລິຫານ, ພະນັກງານພະແນກກະສິກຳ ແລະ ປ່າໄມ້ແຂວງ, ກອງສົ່ງເສີມກະສິກຳ ແລະ ປ່າໄມ້ແຂວງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ກອງສົ່ງເສີມກະສິກຳ ແລະ ປ່າໄມ້ເມືອງ, ສະຫະພັນແມ່ຍິງ ແລະ ໂຄງການຈັດສັນປ່າຜະລິດແບບຍືນນານ ແລະ ພັດທະນາຊົນນະບົດ ໂດຍການຝຶກອົບຮົມ ແລະ ສະໜັບສະໜູນທີ່ພຽງພໍ**

ຄືດັ່ງໄດ້ກ່າວມາຂ້າງເທິງ, ມັນມີຄວາມຈຳເປັນຈະຕ້ອງໄດ້ຝຶກອົບຮົມພະນັກງານໂຄງການ ແລະ ພະນັກງານລັດ ກ່ຽວກັບບັນຫາບົດບາດຍິງ-ຊາຍ ແລະ ຄວາມຮູ້ພື້ນຖານກ່ຽວກັບຊົນເຜົ່າຕ່າງໆ. ແຕ່ເຖິງຢ່າງໃດກໍ່ຕາມ, ເນື່ອງຈາກວ່າໂຄງການດັ່ງກ່າວນີ້ເປັນໂຄງການໃໝ່ ສະນັ້ນ ຈຶ່ງຕ້ອງການຝຶກອົບຮົມລົງເລິກຫຼາຍທີ່ສຸດ ຊຶ່ງຈະເຮັດໃຫ້ພະນັກງານເຂົ້າໃຈກ່ຽວກັບບັນຫາສັງຄົມຫຼາຍຂຶ້ນ ແລະ ຕ້ອງໄດ້ຕິດຕາມຊຸດຝຶກອົບຮົມເຫຼົ່ານັ້ນຢ່າງໃກ້ຊິດຕິດແທດ.

ທີມພະນັກງານບໍລິຫານໂຄງການຈັດສັນປ່າຜະລິດແບບຍືນນານ ແລະ ພັດທະນາຊົນນະບົດ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕ້ອງມີເຄື່ອງມື ແລະ ທັກສະດ້ານບົດບາດຍິງ-ຊາຍ ຕື່ມອີກ. ໂຄງການຈະຕ້ອງຮັບປະກັນວ່າພະນັກງານແຕ່ລະຄົນເຂົ້າໃຈບັນຫາຄວາມສະເໝີພາບລະຫວ່າງຍິງ-ຊາຍໃນການພັດທະນາ. ຢາກສະເໜີໃຫ້ **ຈັດຝຶກອົບຮົມ** ກ່ຽວກັບການວາງແຜນທີ່ເອົາໃຈໃສ່ບົດບາດຍິງ-ຊາຍ ທີ່ພົວພັນເຖິງວຽກປ່າໄມ້ ແລະ ພັດທະນາ ຫຼາຍຕື່ມອີກ. ມີຄວາມຈຳເປັນຕ້ອງເອົາທັດສະນະບົດບາດຍິງ-ຊາຍເຂົ້າໃນຫຼັກສູດປ່າໄມ້ ແລະ ຫຼັກສູດຝຶກອົບຮົມປ່າໄມ້ລະດັບແຂວງ, ເມືອງ ແລະ

ບ້ານ. ຢາກສະເໜີໃຫ້ທາງໂຄງການຈັດຝຶກອົບຮົມບົດບາດຍິງ-ຊາຍ ກ່ຽວກັບວິທີນຳໃຊ້ຄູ່ມືປະເມີນຊົນນະບົດແບບມີສ່ວນຮ່ວມ (PRA) ສະບັບປັບປຸງໃໝ່ ໃຫ້ແກ່ພະນັກງານຕົນເອງຕື່ມອີກ ເພື່ອໃຫ້ຮັບປະກັນວ່າບັນຫາບົດບາດຍິງ-ຊາຍໄດ້ຮັບການພິຈາລະນາ. ເຄື່ອງມືວິເຄາະບົດບາດຍິງ-ຊາຍຕ່າງໆ ຄວນຈະແມ່ນພາກສ່ວນໜຶ່ງຂອງເຄື່ອງມືປະເມີນຊົນນະບົດແບບມີສ່ວນຮ່ວມ ແລະ ການສຳຫຼວດຂໍ້ມູນພື້ນຖານຕ່າງໆ.

ຄວນມີການຝຶກອົບຮົມສ້າງຈິດສຳນຶກບົດບາດຍິງ-ຊາຍໃຫ້ແກ່ຂະແໜງການປ່າໄມ້ທຸກລະດັບ ຕົວຢ່າງ: ໃນໜ່ວຍງານນະໂຍບາຍປ່າໄມ້ ຫຼື ພາກສ່ວນກ່ຽວຂ້ອງຕ່າງໆ ແລະ ໜ່ວຍງານວາງແຜນເສດຖະກິດອື່ນໆ. ລະດັບທ້ອງຖິ່ນ, ລະດັບແຂວງ ແລະ ລະດັບຊາດ ຈຳເປັນຕ້ອງມີຈິດສຳນຶກບົດບາດຍິງ-ຊາຍ. ຄວນຈັດຝຶກອົບຮົມບົດບາດຍິງ-ຊາຍໂດຍພື້ນຖານ ໃຫ້ແກ່ຄະນະບ້ານ ແລະ ສະມາຊິກສະມາຄົມປ່າໄມ້ບ້ານຕ່າງໆ.

## ຄຳແນະນຳທີ 6: ປ່ຽນວິທີການເຮັດວຽກແບບເກົ່າ ແລະ ນຳໃຊ້ວິທີການເຮັດວຽກທີ່ເອົາໃຈໃສ່ບົດບາດຍິງ- ຊາຍ

ພະນັກງານສົ່ງເສີມຂອງໂຄງການ***ຄວນຈະເຊີນແມ່ຍິງໂດຍກົງ ບໍ່ແມ່ນເຊີນ "ຫົວໜ້າຄອບຄົວ"*** ແລະ ເອົາໃຈໃສ່ໂດຍ ***ການຖາມແມ່ຍິງ, ໂອ້ລົມແມ່ຍິງ ແລະ ຟັງແມ່ຍິງ.*** ຄວນເປີດໂອກາດໃຫ້ແກ່ພະນັກງານເພດຊາຍ ແລະ ຍິງຄວນມີໂອກາດໄດ້ຮຽນຮູ້ໂດຍຜ່ານການຝຶກອົບຮົມ ແລະ ປະຕິບັດຕົວຈິງກ່ຽວກັບ ***ວິທີເຮັດວຽກແບບບົດບາດຍິງ-ຊາຍ*** ກັບຊາວບ້ານທີ່ເປັນເພດຊາຍ ແລະ ຍິງ. ພວກເຂົາຄວນຈະມີສ່ວນຮ່ວມໃນທຸກໆກິດຈະກຳ. ໂຄງການຄວນຈັດຝຶກອົບຮົມວິທີການເຮັດວຽກທີ່ເອົາໃຈໃສ່ບົດບາດຍິງ-ຊາຍໃຫ້ກັບພະນັກງານຕົນເອງກ່ອນການເລີ່ມກິດຈະກຳໂຄງການ.

ພະນັກງານສົ່ງເສີມພາກສະໜາມຊຸກຍູ້ໃຫ້ມີແມ່ຍິງເຂົ້າຮ່ວມທຸກກິດຈະກຳໂຄງການໃຫ້ຫຼາຍຂຶ້ນ.ພະນັກງານສົ່ງເສີມຄວນປຶກສາຫາລືກັບອຳນາດການປົກຄອງບ້ານຈະເຮັດແນວໃດໃຫ້ແມ່ຍິງໄດ້ເຂົ້າຮ່ວມຫຼາຍທີ່ສຸດ. ການຝຶກອົບຮົມຕ້ອງຈັດຢູ່ໃນບ້ານ ສະນັ້ນແມ່ຍິງຈຶ່ງບໍ່ຈຳເປັນຕ້ອງອອກເຮືອນຂອງເຂົາເຈົ້າ. ອີງຕາມປະສົບປະການເຮັດວຽກຮ່ວມກັບແມ່ຍິງໃນຊົນນະບົດຫ່າງໄກສອກຫຼີກໃຫ້ຮູ້ວ່າ, ຖ້າມີຜູ້ຊາຍ, ແມ່ຍິງຈະມິດງຽບ ແລະ ບໍ່ມີສ່ວນຮ່ວມໃນການສົນທະນາກຸ່ມ. ດັ່ງນັ້ນ, ຖ້າມີຄວາມຈຳເປັນ ແລະ ຢາກໃຫ້ແມ່ຍິງມີສ່ວນຮ່ວມ, ວິທີການຝຶກອົບຮົມຕ້ອງແຍກແມ່ຍິງ ແລະ ຜູ້ຊາຍອອກຈາກກັນ.

ໂຄງການບໍ່ຄວນຈະສືບຕໍ່ ແລະ ຍຶດຖືການເຮັດວຽກແບບຮີດເກົ່າຄອງເດີມ, ຕົວຢ່າງເຊັ່ນ: ມອບວຽກງານໃຫ້ແມ່ຍິງ ແລະ ຜູ້ຊາຍໂດຍອີງຕາມບົດບາດແບບຄອງເດີມຂອງຍິງ-ຊາຍ, ຫຼື ສ້າງອາຊີບໃຫ້ແກ່ຜູ້ຊາຍ, ຈ່າຍຄ່າແຮງງານໃຫ້ຍິງ ແລະ ຊາຍຕ່າງກັນ, ຫຼື ເຫັນແຕ່ວຽກຜູ້ຊາຍເປັນ "ວຽກໜັກ"

**ຄຳແນະນຳທີ 7: ພະນັກງານປ່າໄມ້ຕ້ອງໃຊ້ເຄື່ອງມືວິເຄາະບົດບາດຍິງ-ຊາຍ ໃນເວລາປະຕິບັດວຽກພາກສະໜາມ**

ໃນການວາງແຜນ ແລະ ປະຕິບັດວຽກງານປ່າໄມ້ຊຸມຊົນນັ້ນ ຈຳເປັນຕ້ອງໃຊ້ເຄື່ອງມື ແລະ ຄູ່ມືແນະນຳ/ວິເຄາະບົດບາດຍິງ-ຊາຍ. ໂຄງການຄວນຈະຝຶກພະນັກງານກ່ຽວກັບການນຳໃຊ້ເຄື່ອງມືປະເມີນຊົນນະບົດແບບມີສ່ວນຮ່ວມ (PRA) ທີ່ມີເຄື່ອງມືວິເຄາະບົດບາດຍິງ-ຊາຍ ແລະ ນຳພາທີມງານສົ່ງເສີມນຳໃຊ້ຕົວຈິງໃນພາກສະໜາມ. ໃນລະດັບໝູ່ບ້ານ, ພະນັກງານໂຄງການຈຳເປັນຕ້ອງໃຊ້ເຄື່ອງມືວິເຄາະບົດບາດຍິງ-ຊາຍ ເພື່ອວິເຄາະເບິ່ງບັນຫາດັ່ງຕໍ່ໄປນີ້:

- **ປະຫວັດຄວາມມາ ແລະ ລັກສະນະຂອງໂຄງການ**: ສຶກສາປັດໃຈທີ່ມີອິດທິພົນຕໍ່ຊີວິດການເປັນຢູ່ ແລະ ຄວາມສຳພັນບົດບາດຍິງ-ຊາຍຂອງແມ່ຍິງ ແລະ ຜູ້ຊາຍໃນສັງຄົມ
- **ກຸ່ມເປົ້າໝາຍ**: ກຳນົດກຸ່ມພົນລະເມືອງທັງໝົດທີ່ຈະເຂົ້າຮ່ວມໃນໂຄງການ ຫຼື ໄດ້ຮັບຜົນປະໂຫຍດຈາກໂຄງການ. ທີມງານສົ່ງເສີມພາກສະໜາມຄວນຈະໃຊ້ເຄື່ອງມືວິເຄາະບົດບາດຍິງ-ຊາຍ ໂດຍສຸມໃສ່ບັນຫາຕ່າງໆເຊັ່ນ: 1). ການແບ່ງງານ ແລະ ການຮັບພາລະວຽກງານລະຫວ່າງຍິງ-ຊາຍ; 2). ການເຂົ້າເຖິງ ແລະ ຄວບຄຸມຊັບພະຍາກອນ; 3). ຂະບວນການຕັດສິນໃຈໃນຄອບຄົວ ແລະ ຊຸມຊົນ; ແລະ 4). ບົດບາດຕາມຮີດຄອງປະເພນີຂອງແມ່ຍິງ ແລະ ຜູ້ຊາຍ ແລະ ສາຍພົວພັນຂອງເຂົາເຈົ້າ.
- **ອົງການຈັດຕັ້ງ**: ບົດບາດຂອງອົງການຈັດຕັ້ງມີຄວາມສຳຄັນຕໍ່ຜົນສຳເລັດຂອງໂຄງການ. ຄວາມຮູ້ ແລະ ຄວາມເຂົ້າໃຈກ່ຽວກັບບັນຫາທີ່ກ່ຽວຂ້ອງກັບບົດບາດຍິງ-ຊາຍ ແລະ ຄວາມສາມາດໃນການແກ້ໄຂບັນຫາຕ່າງໆຂອງໂຄງການແມ່ນຂອດຕັດສິນການບັນລຸເປົ້າໝາຍຂອງໂຄງການ.
- **ບົດສະເໜີໂຄງການ**: ບົດສະເໜີໂຄງການໄດ້ພິຈະລະນາບັນຫາບົດບາດຍິງ-ຊາຍບໍ? ມັນໄດ້ຮັບປະກັນການມີສ່ວນຮ່ວມເທົ່າທຽມລະຫວ່າງຍິງ-ຊາຍບໍ? ໂຄງການມີອິດທິພົນຕໍ່ຊີວິດການເປັນຢູ່ຂອງແມ່ຍິງ ແລະ ຜູ້ຊາຍແນວໃດ? ສິ່ງທີ່ຄາດວ່າຈະໄດ້ຮັບຈາກໂຄງການ ແລະ ຜົນປະໂຫຍດຕໍ່ທັງສອງເພດມີແນວໃດ? ແລະ ອື່ນໆ.

**ຄຳແນະນຳທີ 8: ໂຄງການຕ້ອງກຳນົດຄວາມຕ້ອງການສະເພາະ/ແຕກຕ່າງກັນຂອງແມ່ຍິງ ແລະ ຜູ້ຊາຍ ບໍ່ໃຫ້ກຳນົດແບບລວມໆ**

ກິດຈະກຳຕ່າງໆຂອງໂຄງການຄວນຈະກົງກັບຄວາມຕ້ອງການທີ່ແຕກຕ່າງກັນ ຂອງແມ່ຍິງ ແລະ ຜູ້ຊາຍ. ໂຄງການຈະຕ້ອງສ້າງແຜນປະຕິບັດຂອງບ້ານທີ່ລວມມີຄວາມຕ້ອງການຂອງແມ່ຍິງ ໂດຍເຮັດວຽກຮ່ວມກັບກຸ່ມແມ່ຍິງສະເພາະ, ໂດຍອີງຕາມບຸລິມະສິດ/ຄວາມຕ້ອງການຂອງເຂົາເຈົ້າ.

ຕົວຢ່າງ: ຈາກການສຳຫຼວດໃນຄັ້ງນີ້ໄດ້ສະແດງໃຫ້ເຫັນວ່າ ນ້ຳບາດານ, ໄມ້ຟືນ, ຕ່ຳຫູກ ແລະ ການແປຮູບເຄື່ອງປ່າຂອງດົງຈະມີຜົນປະໂຫຍດຕໍ່ແມ່ຍິງຫຼາຍກວ່າຜູ້ຊາຍ.

**ຄຳແນະນຳທີ 9: ສ້າງຄວາມສາມາດໃຫ້ຜູ້ນຳເພດຍິງ ແລະ ເອົາໃຈໃສ່ຕໍ່ການມີສ່ວນຮ່ວມຂອງແມ່ຍິງຕື່ມອີກ**

ແມ່ຍິງຄວນຈະຢູ່ໃນຕຳແໜ່ງ ແລະ ຮັບຜິດຊອບໜ້າວຽກທີ່ສຳຄັນ ສະນັ້ນ ພວກເຂົາຈຶ່ງສາມາດເຂົ້າຮ່ວມໃນຂະບວນການຕັດສິນໃຈຕ່າງໆ. ແມ່ຍິງຕ້ອງການເວລາ ແລະ ສະຖານທີ່ເພື່ອອອກຄຳຄິດຄຳເຫັນຂອງເຂົາເຈົ້າໃນໄລຍະເວລາຂອງການປະຊຸມ. ເພື່ອເຮັດໃຫ້ການມີສ່ວນຮ່ວມມີປະສິດພາບຍິ່ງຂຶ້ນ, ແມ່ຍິງຈະຕ້ອງໄດ້ຮັບການສະໜັບສະໜູນ ແລະ ກະກຽມກ່ອນການສົນທະນາ, ສະນັ້ນແມ່ຍິງຈຶ່ງສາມາດມີສ່ວນຮ່ວມໃນການອອກຄຳຄິດຄຳເຫັນໄດ້ດີກວ່າ. ແມ່ຍິງບໍ່ຄວນຈະຖືກຮັບເຊີນມາແຕ່ງກິນຮັບໃຊ້ກອງປະຊຸມຊື່ໆ. ແມ່ຍິງຕ້ອງເຂົ້າຮ່ວມຊຸດຝຶກອົບຮົມປ່າໄມ້, ທັດສະນະສຶກສາ ແລະ ກອງປະຊຸມຕ່າງໆ ທີ່ມີຜົນຕໍ່ເຂົາເຈົ້າໂດຍກົງ. ແມ່ຍິງຄວນມີສິດເຂົ້າຮ່ວມກອງປະຊຸມ ແລະ ບໍ່ແມ່ນເຂົ້າຮ່ວມເພາະມາແທນຜົວເມື່ອພວກເຂົາບໍ່ຢູ່. ຄວນຈະໃຫ້ແມ່ຍິງ ເຂົ້າຮ່ວມໃນຊຸດຝຶກອົບຮົມຕ່າງໆຫຼາຍຂຶ້ນ. ໃນການຕິດຕາມການສົ່ງເສີມ ແລະ ການຝຶກອົບຮົມຕ່າງໆຈຳເປັນຕ້ອງມີຂໍ້ມູນແຍກເພດ. ຍ້ອນແມ່ຍິງໄດ້ຮັບການສົ່ງເສີມຜ່ານມາໜ້ອຍ, ຈຶ່ງຢາກແນະນຳໃຫ້ກຳນົດກຸ່ມເປົ້າໝາຍໃຫ້ແມ່ຍິງເຂົ້າຮ່ວມໃນແຕ່ລະປີ.

ໂຄງການຄວນຈະເຮັດວຽກໃກ້ສິດຕິດແທດກັບສະຫະພັນແມ່ຍິງ, ຊຶ່ງເປັນຕົວແທນໃຫ້ແກ່ແມ່ຍິງໃນແຕ່ລະບ້ານເພື່ອໃຫ້ຮັບປະກັນໃຫ້ແມ່ຍິງໄດ້ຮັບຜົນປະໂຫຍດຈາກການພັດທະນາເທົ່າທຽມກັນ. ບັນດາຕົວແທນເຫຼົ່ານີ້ຄວນຈະໄດ້ຮັບການປຸກລະດົມຂົນຂວາຍ, ຝຶກອົບຮົມເພື່ອນຳພາການພັດທະນາໃນລະດັບບ້ານ.

ການມີສ່ວນຮ່ວມຂອງແມ່ຍິງບໍ່ຄວນຈະຈຳກັດ ໃຫ້ປູກເບ້ຍໄມ້, ເສຍຫຍ້າ ແລະ ເກັບແກ່ນເທົ່ານັ້ນ, ແຕ່ຕ້ອງເປີດໂອກາດໃຫ້ພວກເຂົາໄດ້ເພີ່ມທັກສະ ແລະ ຄວາມສາມາດດ້ານປ່າໄມ້. ແມ່ຍິງຄວນຈະມີສ່ວນຮ່ວມໃນວຽກງານທີ່ພວກເຂົາສາມາດສະແດງຄວາມຮູ້ກ່ຽວກັບການຄູ້ມຄອງ ແລະ ນຳໃຊ້ຊັບພະຍາກອນ ຂອງພວກເຂົາ. ແມ່ຍິງຕ້ອງການຂໍ້ມູນຂ່າວສານ, ຄວາມຮູ້ອັນໃໝ່ໆ, ມີສ່ວນຮ່ວມເທົ່າທຽມກັນ, ເງິນປະກອບສ່ວນເທົ່າກັນ ແລະ ທັກສະໃນການເຮັດວຽກແບບໃໝ່, ນອກຈາກນີ້ພວກເຂົາຍັງຕ້ອງການຝຶກອົບຮົມ ແລະ ສົ່ງເສີມດ້ານຕ່າງໆ (ເຊັ່ນ: ສິນເຊື່ອ, ການຈັດການ, ການຕະຫຼາດ).

**ຄຳແນະນຳທີ 10: ສຸມໃສ່ກິດຈະກຳທີ່ຫຼຸດຜ່ອນການເຮັດວຽກໜັກ ແລະ ການແບກຮັບພາລະອື່ນໆ ຂອງແມ່ຍິງ**

ໂຄງການຄວນຈະເລັ່ງໃສ່ປັບປຸງຊີວິດການເປັນຢູ່ ແລະ ຫຼຸດຜ່ອນການເຮັດວຽກໜັກຂອງແມ່ຍິງ, ຊຶ່ງຈະເຮັດໃຫ້ແມ່ຍິງມີເວລາເຂົ້າຮ່ວມໃນກິດຈະກຳຕ່າງໆຂອງໂຄງການ. ມີຄວາມຈຳເປັນຕ້ອງໃຊ້ເຕັກໂນໂລຍີທີ່ຄຳນຶງເຖິງບົດບາດຍິງ-ຊາຍ ຊຶ່ງແມ່ຍິງສາມາດນຳໃຊ້ໄດ້ຢ່າງມີປະສິດທິຜົນ ແລະ ຊ່ວຍແບ່ງເບົາການເຮັດວຽກໜັກລົງ, ຕົວຢ່າງ: ເຕົາປະຢັດ, ນ້ຳບາດານ, ໂຮງສີເຂົ້າ ແລະ ອື່ນໆ.

ຖ້າມີລະບົບນ້ຳປະປາ ກໍ່ຍິ່ງຈະເປັນການດີໃຫ້ແກ່ສະມາຊິກຂອງຊຸມຊົນໝົດທຸກຄົນ, ໂດຍສະເພາະແມ່ນແມ່ຍິງ ແລະ ເດັກນ້ອຍ. ກິດຈະກຳການຕັກນ້ຳ ຊຶ່ງທຳມະດາຈະແມ່ນວຽກຂອງແມ່ຍິງ ແລະ ເດັກຍິງກໍ່ຈະໃຊ້ເວລາໜ້ອຍລົງກ່ອນເກົ່າ.

ຄວນສ້າງຄວາມເຊື່ອໝັ້ນໃນຕົນເອງຂອງແມ່ຍິງ ໂດຍການປັບປຸງການສຶກສາຂອງພວກເຂົາ. ການສ້າງໂຮງຮຽນຫຼາຍຂື້ນຈະສາມາດບັນຈຸເດັກນ້ອຍ ອາຍຸລະຫວ່າງ 5 ຫາ 12 ປີ ໄດ້ເຂົ້າຮຽນຫຼາຍຂື້ນຕື່ມ. ສິ່ງນີ້ຈະຫຼຸດຜ່ອນພາລະການເບິ່ງແຍງລູກເຕົ້າຂອງແມ່ໜ້ອຍລົງ ແລະ ເຮັດໃຫ້ພວກເຂົາມີເວລາເຮັດກິດຈະກຳຫາລາຍໄດ້ອື່ນໆ. ການເຂົ້າເຖິງການສຶກສາໄດ້ຢ່າງສະດວກ ຍັງຈະເຮັດໃຫ້ເດັກຍິງມີໂອກາດໃນການພັດທະນາຫຼາຍຂື້ນ.

ການມີສິ່ງອຳນວຍຄວາມສະດວກດ້ານການແພດຈະເຮັດໃຫ້ແມ່ຍິງເຂົ້າເຖິງຢາປົວພະຍາດ ແລະ ຄຳແນະນຳຕ່າງໆທີ່ຖືກຕ້ອງ ຊຶ່ງຈະເປັນຜົນກະທົບຕໍ່ຊີວິດການເປັນຢູ່ຂອງເຂົາເຈົ້າ. ແມ່ຍິງຮັບຜິດຊອບເບິ່ງແຍງຄົນເຈັບ, ຜູ້ເຖົ້າ ແລະ ລູກນ້ອຍ..

ການປັບປຸງລະບົບຄົມມະນາຄົມຂົນສົ່ງ ຈະມີຜົນປະໂຫຍດໃຫ້ແກ່ແມ່ຍິງ ແລະ ຜູ້ຊາຍ ແຕ່ມີຄວາມສຳຄັນພິເສດຕໍ່ແມ່ຍິງ ຊຶ່ງພວກເຂົາສ່ວນຫຼາຍຈະໄປຕະຫຼາດເພື່ອຊື້ອາຫານ, ເຄື່ອງຮັບໃຊ້ອື່ນໆ ແລະ ຂາຍຜົນຜະລິດກະສິກຳ ແລະ ປ່າໄມ້. ສິ່ງນີ້ຈະເປັນການປັບປຸງເສດຖະກິດຂອງແມ່ຍິງດ້ວຍການຫາເງິນ, ຊຶ່ງສ່ວນຫຼາຍແມ່ນໄປຫາເງິນເພື່ອມາລ້ຽງຄອບຄົວ.

**ຄຳແນະນຳທີ 11: ນຳໃຊ້ສະຖິຕິແຍກເພດ ແລະ ຕົວຊີ້ບອກບົດບາດຍິງ-ຊາຍ ເພື່ອຕິດຕາມ ແລະ ປະເມີນຜົນກະທົບຂອງໂຄງການຕໍ່ແມ່ຍິງ ແລະ ຜູ້ຊາຍ**

ພະນັກງານໂຄງການຄວນເກັບກຳຂໍ້ມູນການມີສ່ວນຮ່ວມຂອງໂຄງການ ແລະ ສິ່ງກ່ຽວຂ້ອງອື່ນໆຕ້ອງໄດ້ແຍກເພດ. ຕ້ອງເກັບກຳ ແລະ ລາຍງານເປັນປະຈຳ. ໂຄງການຈຳເປັນຕ້ອງທົບທວນ ແລະ ປັບປຸງສະຖິຕິທັງໝົດ ແລະ ຕ້ອງຮັບປະກັນວ່າພວກມັນໄດ້ຖືກລວບລວມ, ບັນທຶກຢູ່ໃນຮູບແບບສະຖິຕິແຍກເພດ, ໂດຍສະເພາະແມ່ນປັບປຸງແບບວິທີການຂຽນບົດລາຍງານ ຈາກບ້ານຫາ

ເມືອງ ແລະ ຈາກເມືອງຫາແຂວງ. ໃນການທົບທວນໂຄງການ ແລະ ການປະເມີນໄລຍະ ກາງໂຄງການຄວນປະເມີນບັນຫາບົດບາດຍິງ-ຊາຍຕື່ມອີກ.

ໂຄງການກຳລັງກະກຽມການສຳຫຼວດຂໍ້ມູນເສດຖະກິດ-ສັງຄົມ (ສຳຫຼວດຂໍ້ມູນພື້ນຖານ), ດັ່ງນັ້ນຈຶ່ງແນະນຳໃຫ້ເອົາຕົວຊີ້ບອກບົດບາດຍິງ-ຊາຍເຂົ້າໃນການສຳຫຼວດຂອງໂຄງການດັ່ງຕໍ່ໄປນີ້: ການເຂົ້າເຖິງປັດໃຈນຳເຂົ້າທາງດ້ານກະສິກຳຂອງແມ່ຍິງ ແລະ ຜູ້ຊາຍ, ການເຂົ້າເຖິງທີ່ດິນຂອງແມ່ຍິງ ແລະ ຜູ້ຊາຍ, ການຊົມໃຊ້ເວລາຂອງແມ່ຍິງ ແລະ ຜູ້ຊາຍ ໃນການຈັດສັນຊັບພະຍາກອນທຳມະຊາດແບບຍືນນານ, ຄວາມຮູ້ພື້ນບ້ານຂອງແມ່ຍິງ ແລະ ຜູ້ຊາຍ ໃນການຈັດສັນຊັບພະຍາກອນທຳມະຊາດ, ການເຂົ້າເຖິງຕະຫຼາດ, ການເຂົ້າເຖິງແຫຼ່ງລາຍໄດ້ເສີມ, ຮັບຈ້າງແຮງງານ, ການເຂົ້າເຖິງຊັບພະຍາກອນ, ຂໍ້ມູນຂ່າວສານຂອງໂຄງການ ແລະ ການມີສ່ວນຮ່ວມຂອງແມ່ຍິງ ແລະ ຜູ້ຊາຍໃນກິດຈະກຳການພັດທະນາ (ຂະບວນການປຶກສາຫາລື ແລະ ແກ້ໄຂບັນຫາ).

## ຄຳແນະນຳທີ 12: ປັບປຸງການເຂົ້າເຖິງ ແລະ ຄວບຄຸມທີ່ດິນປ່າໄມ້

ເພື່ອເປັນການຫຼີກເວັ້ນບັນຫາຄວາມບໍ່ສະເໝີພາບລະຫວ່າງຍິງ-ຊາຍ, ທາງໂຄງການຄວນຈະເຮັດວຽກຮ່ວມກັບອຳນາດການປົກຄອງເມືອງອອກໄປຕາດິນໃຫ້ຖືກຕ້ອງຕາມຕົວຈິງ, ໂດຍອີງຕາມການສືບທອດທີ່ດິນ, ໂດຍບໍ່ໄດ້ຍຶດຕິດກັບແນວຄວາມຄິດແບບຖື "ຫົວໜ້າຄອບຄົວ" ເປັນຫຼັກ. ການແບ່ງດິນແບ່ງປ່າລວມໝູ່ ແລະ ທີ່ດິນປ່າໄມ້ໄດ້ຖືກແບ່ງໃຫ້ແມ່ຍິງ ແລະ ຜູ້ຊາຍເທົ່າກັນ.

## ຄຳແນະນຳທີ 13: ປັບປຸງໂອກາດໃນການຈ້າງງານ

ການປັບປຸງໂອກາດໃນການຈ້າງງານໃນການຈັດສັນປ່າໄມ້ຊຸມຊົນມີຄື: ການເບິ່ງແຍງສວນກ້າເບ້ຍໄມ້ ແລະ ເສຍຫຍ້າໃນປ່າໄມ້ນັ້ນ ຈະສ້າງແຫຼ່ງລາຍໄດ້ເສີມໃຫ້ແກ່ແມ່ຍິງ. ໂຄງການຈຳເປັນຕ້ອງໄດ້ພິຈາລະນາ ການສ້າງວຽກເຮັດງານທຳໃຫ້ແກ່ແມ່ຍິງຄືນໃໝ່. ເພີ່ມຄ່າຈ້າງປະເພດວຽກແມ່ຍິງເຮັດ (ເຊັ່ນ: ຄ່າຈ້າງໃນການຖາງຫາງ) ອາດຈະເປັນທາງເລືອກໜຶ່ງທີ່ຈະເພີ່ມລາຍໄດ້ໃຫ້ແກ່ແມ່ຍິງສູງຂຶ້ນ.

## ຄຳແນະນຳທີ 14: ຈັດຝຶກອົບຮົມ ແລະ ສົ່ງເສີມກິດຈະກຳການປັບປຸງຊີວິດການເປັນຢູ່

ໂຄງການປ່າໄມ້ຄວນມີຫຼາຍກິດຈະກຳພັດທະນາ, ບໍ່ຄວນຈະສຸມໃສ່ແຕ່ກິດຈະກຳການຕັດໄມ້ທ່ອນ, ເຮັດລະບຽບຫຼັກການ ແລະ ການຈັດສັນຊັບພະຍາກອນປ່າໄມ້. ໂຄງການຄວນຈະເປີດໂອກາດໃຫ້ມີກິດຈະກຳປັບປຸງຊີວິດການເປັນຢູ່ຂອງຊາວບ້ານ, ໂດຍແມ່ນແມ່ຍິງ. ກິດຈະກຳປ່າໄມ້

ຕ່າງໆຈະຕ້ອງມີຜົນປະໂຫຍດໃຫ້ແກ່ຄອບຄົວ, ຊຶ່ງລວມມີແມ່ຍິງ ແລະ ຜູ້ຊາຍ ຊົມໃຊ້ຊັບພະຍາກອນປ່າໄມ້. ໂຄງການຄວນສົ່ງເສີມກິດຈະກຳການປູກຕົ້ນໄມ້ ແລະ ຕົ້ນໄມ້ໃຊ້ສອຍເພື່ອຕອບສະໜອງຄວາມຕ້ອງການຂອງຄອບຄົວ

ໂຄງການຄວນຈະຈັດຝຶກອົບຮົມ ແລະ ສົ່ງເສີມການປັບປຸງຊີວິດການເປັນຢູ່ ໃຫ້ແກ່ຊາວບ້ານ. ຫຼັກສູດການຝຶກອົບຮົມຈະຕ້ອງຈັດໃຫ້ແມ່ຍິງ ໂດຍອີງຕາມຄວາມສົນໃຈຂອງພວກເຂົາ. ສຳລັບການຝຶກອົບຮົມກ່ຽວກັບກິດຈະກຳເສດຖະກິດ (ຕົວຢ່າງເຊັ່ນ: ກະສິກຳ, ລ້ຽງສັດ, ປ່າໄມ້ ແລະ ການປະມົງ) ຈະຕ້ອງຈັດຢູ່ໃນລະດັບບ້ານ ທີ່ກົງກັບຄວາມຕ້ອງການຂອງແມ່ຍິງຫຼາຍທີ່ສຸດ. ນອກຈາກນີ້ ການຝຶກອົບຮົມກ່ຽວກັບກຸ່ມອອມຊັບ ແລະ ສິນເຊື່ອ ກໍ່ຈະຕ້ອງໄດ້ຈັດໃຫ້ແກ່ຊາວບ້ານທີ່ສົນໃຈເລື້ອງນີ້. ສຳລັບກິດຈະກຳພິເສດຕ່າງໆ (ຕົວຢ່າງ: ຕຳ່ຫູກ, ປຸງແຕ່ງອາຫານ) ທີ່ມີຂອບເຂດຈຳກັດທາງການຕະຫຼາດ ຈະຕ້ອງໃຫ້ຊາວບ້ານໄດ້ຄັດເລືອກດ້ວຍຕົນເອງວ່າ ກິດຈະກຳໂຕໃດທີ່ຕ້ອງການໃຫ້ໂຄງການສົ່ງເສີມໂດຍສະເພາະແມ່ນການຕະຫຼາດ. ການຝຶກອົບຮົມກ່ຽວກັບການແປຮູບເຄື່ອງປ່າຂອງດົງຄວນຈະສຸມໃສ່ກຸ່ມແມ່ຍິງເປັນຕົ້ນຕໍ.

# ເອກະສານຕິດຄັດ

ຕາຕະລາງ1: ລັກສະນະຂອງບ້ານທີ່ສຶກສາໃນແຂວງ ສະຫວັນນະເຂດ

| | ບ້ານ ຫຼັກສິບເອັດ | ບ້ານ ບາກຂຸມຄຳ | ບ້ານ ໂຄກທະເລີ້ |
|---|---|---|---|
| ປີຕັ້ງບ້ານ | 1982 | 1929 | 1964 |
| ໄລຍະທາງ/ ລະດູການໄປຫາຕົວເມືອງ | ແລ້ງ ແລະ ຝົນ, ຫ່າງຈາກທາງເລກທີ 13 ໃຕ້ 11km, ຈາກຕົວເມືອງສອງຄອນ 56 km | ແລ້ງ ແລະ ຝົນ, ຈາກຕົວເມືອງທ່າປາງທອງ 26 km, ຈາກບ້ານ ໃໝ່ 15 km | ແລ້ງ ແລະ ຝົນ, ຈາກຕົວເມືອງທ່າປາງທອງ 22 km |
| ພົນລະເມືອງ/ຄົວເຮືອນ | 377 ຄົນ / 69 ຄົວເຮືອນ | 720 ຄົນ/ 148 ຄົວເຮືອນ | 183 ຄົນ / 38 ຄົວເຮືອນ |
| ຊົນເຜົ່າ | ກະຕ່າງ 97%<br>ລາວ 3% | ລາວ100% | ກະຕ່າງ 98%<br>ລາວ 2% |
| ການສຶກສາ | ປະຖົມ 1-3, 1989<br>ລະດັບສູງກວ່າ ຢູ່ເມືອງສອງຄອນ | ປະຖົມ 1-5, 1977<br>ລະດັບສູງກວ່າ ຢູ່ເມືອງທ່າປາງທອງ | ບໍ່ມີໂຮງຮຽນໃນບ້ານ, ໂຮງຮຽນປະຖົມຢູ່ບ້ານໃກ້ຄຽງ 1-5, 1988, ລະດັບສູງກວ່າ ຢູ່ເມືອງທ່າປາງທອງ |
| ສາທາລະນະສຸກ | ປິ່ນປົວດ້ວຍຢາຫຼວງ, ໂຮງໝໍເມືອງສອງຄອນ 54 km | ປິ່ນປົວດ້ວຍຢາຫຼວງ, ໂຮງໝໍເມືອງທ່າປາງທອງ 26 km | ໃຊ້ຢາຫຼວງຈາກສຸກສາລາ, ໂຮງໝໍເມືອງທ່າປາງທອງ 22 km |
| ເນື້ອທີ່ທຳການຜະລິດ | ນາປີ 94 ha, ສວນ ແລະ ຕົ້ນໄມ້ກິນໝາກ ຈຳນວນໜຶ່ງ | ນາປີ 310 ha, ສວນ ແລະ ຕົ້ນໄມ້ກິນໝາກ ຈຳນວນໜຶ່ງ | ນາປີ 321 ha, ສວນ ແລະ ຕົ້ນໄມ້ກິນໝາກ ຈຳນວນໜຶ່ງ |
| ການຜະລິດເຂົ້າ | 0.8 ໂຕນ/ເຮັກຕາ<br>ເກືອບໝົດທຸກຄົວເຮືອນ | 1.2 ໂຕນ/ເຮັກຕາ<br>ເກືອບໝົດທຸກຄົວເຮືອນ | 0.5 ໂຕນ/ເຮັກຕາ<br>ເກືອບໝົດທຸກຄົວເຮືອນ |
| ການລ້ຽງສັດ | ຄວາຍ 87, ງົວ 313, ໝູ 163 , ສັດປີກ 235 | ຄວາຍ 309, ງົວ 310,<br>ໝູ 234, ສັດປີກ 1021 | ຄວາຍ 127 , ງົວ 167<br>ໝູ 64 , ສັດປີກ 350 |
| ປ່າໄມ້/ການຊົມໃຊ້ ແລະ ການເກັບເຄື່ອງປ່າຂອງດົງ | ຮັບໃຊ້ໃນຊີວິດປະຈຳວັນເປັນຕົ້ນຕໍ, ປະເພດອາຫານ, ຄ້າຂາຍຢາພື້ນເມືອງ, ເຂົ້າໃນປ່າໄມ້ 10 km | ຮັບໃຊ້ໃນຊີວິດປະຈຳວັນ, ແລກປ່ຽນ ແລະ ທັດຖະກຳ, ເຂົ້າໃນປ່າໄມ້ > 8 km | ຮັບໃຊ້ໃນຊີວິດປະຈຳວັນ, ແລກປ່ຽນ ແລະ ຂາຍ, ເຂົ້າໃນປ່າໄມ້ 10 km |
| ການພັດທະນາບ້ານ | ນຳ້ບາດານ-FOMACOP 2000<br>ກອງທຶນລ້ຽງສັດ-ECP.P 2001 | ນຳ້ບາດານ-FOMACOP 1997<br>ລະບົບຊົນລະປະທານ-ກອງທຶນພັດທະນາບ້ານ (VDF. 2001) | ນຳ້ບາດານ-FOMACOP 1997<br>ກໍ່ສ້າງທາງ–ກອງທຶນປ່າໄມ້ (FDF 2002) |

## ຕາຕະລາງ 2: ລັກສະນະຂອງບ້ານທີ່ສຶກສາໃນແຂວງສາລະວັນ

| | ບ້ານ ຫ້ວຍຫຼາດ | ບ້ານ ນາໄຊ | ບ້ານ ນາດອນແກ້ວ |
|---|---|---|---|
| ປີຕັ້ງບ້ານ | 2001 | 1604 | 1884 |
| ໄລຍະທາງ/ ລະດູການໄປຫາຕົວເມືອງ | ແລ້ງ, ຈາກຕົວເມືອງສາລະວັນ 44 km , ເລົ່າງາມ 30 km | ແລ້ງ, ຈາກຕົວເມືອງສາລະວັນ 36 km , ເລົ່າງາມ 28 km | ແລ້ງ ແລະ ຝົນ, ຈາກຕົວເມືອງສາລະວັນ 30 km |
| ພົນລະເມືອງ/ຄົວເຮືອນ | 346 ຄົນ / 59 ຄົວເຮືອນ | 524 ຄົນ/ 100 ຄົວເຮືອນ | 238 ຄົນ/ 36 ຄົວເຮືອນ |
| ຊົນເຜົ່າ | ປະໂກະ 99%<br>ລາວ 1% | ສ່ວຍ 100% | ລາວ 100% |
| ການສຶກສາ | ປະຖົມ 1-3, 2002<br>ລະດັບສູງກວ່າ ຢູ່ເມືອງເລົ່າງາມ | ບໍ່ມີໂຮງຮຽນ ແລະ ກົກໜັງສື 90% | ບໍ່ມີໂຮງຮຽນ, ໂຮງຮຽນປະຖົມບ້ານໃກ້ຄຽງ 1-5, ລະດັບສູງກວ່າ ຢູ່ສາລະວັນ ແລະ ວາປີ |
| ສາທາລະນະສຸກ | ໃຊ້ຢາຫຼວງຈາກສຸກສາລາ, ໂຮງໝໍເລົ່າງາມ.30 km | ໃຊ້ຢາຫຼວງຈາກສຸກສາລາ, ໂຮງໝໍເລົ່າງາມ.28 km | ໃຊ້ຢາຫຼວງ, ໂຮງໝໍສາລະວັນ 30 km |
| ເນື້ອທີ່ທຳການຜະລິດ | ນາປີ 1 ha , ເນື້ອທີ່ໄຮ່, ສວນ ແລະ ຕົ້ນໄມ້ກິນໝາກ ຈຳນວນໜຶ່ງ | ເນື້ອທີ່ນາປີ 129.71ha, ນາແຊງ96.23 ha, ສວນ ແລະ ຕົ້ນໄມ້ກິນໝາກ ຈຳນວນໜຶ່ງ | ເນື້ອທີ່ນາປີ 74 ha, ສວນ ແລະ ຕົ້ນໄມ້ກິນໝາກ ຈຳນວນໜຶ່ງ |
| ການຜະລິດເຂົ້າ | 0.109 ໂຕນ/ເຮັກຕາ<br>ໝົດທຸກຄົວເຮືອນ | 1.6 ໂຕນ/ເຮັກຕາ<br>ໝົດທຸກຄົວເຮືອນ | 2 ໂຕນ/ເຮັກຕາ<br>ເກືອບໝົດທຸກຄົວເຮືອນ |
| ການລ້ຽງສັດ | ຄວາຍ 13, ງົວ 6, ໝູ-ບໍ່ມີຂໍ້ມູນ , ສັດປີກ 1900 | ຄວາຍ 163 , ງົວ 23<br>ໝູ ແລະ ສັດປີກ -ບໍ່ມີຂໍ້ມູນ | ຄວາຍ 60, ງົວ 28<br>ໝູ 20, ສັດປີກ 360 |
| ປ່າໄມ້/ການຊົມໃຊ້ ແລະ ການເກັບເຄື່ອງປ່າຂອງດົງ | ຮັບໃຊ້ໃນຊີວິດປະຈຳວັນເປັນຕົ້ນຕໍ, ປະເພດອາຫານ, ຂາຍຫອຍຫອມ ແລະ ຫວາຍ, ເຂົ້າໃນປ່າໄມ້.>10 km | ຮັບໃຊ້ໃນຊີວິດປະຈຳວັນເປັນຕົ້ນຕໍ, ປະເພດອາຫານ, ຂາຍ ແລະ ແລກປ່ຽນຫອຍຫອມ ແລະ ຫວາຍ, ເຂົ້າໃນປ່າໄມ້.>8 km | ຮັບໃຊ້ໃນຊີວິດປະຈຳວັນເປັນຕົ້ນຕໍ, ຂາຍ ແລະ ແລກປ່ຽນ, ເຂົ້າໃນປ່າໄມ້ 20 km |
| ການພັດທະນາບ້ານ | ກອງທຶນລ້ຽງສັດ-ໂຄງການQuaker service 2001<br>ໂຮງຮຽນປະຖົມ– ໂຄງການQuaker service 2002 | ລະບົບຊົນລະປະທານ-ລັດ 2000<br>ສຸກສາລາ– UNICEF | ນ້ຳບາດານ-ອົງການໂລກອາທອນ (World Concern) 2003<br>ລະບົບຊົນລະປະທານ-ລັດ 2000 |

ຕາຕະລາງ3: ລະດັບການສຶກສາຂອງຜູ້ທີ່ຖືກສຳພາດແຍກຕາມຊົນເຜົ່າ

| ລະດັບການສຶກສາ | ລາວລຸ່ມ | | ລາວເທິງ | |
|---|---|---|---|---|
| | ຍິງ | ຊາຍ | ຍິງ | ຊາຍ |
| ບໍ່ເຄີຍເຂົ້າໂຮງຮຽນ | 58% | 18% | 63% | 24% |
| ຊັ້ນປະຖົມ | 42% | 54% | 37% | 52% |
| ຊັ້ນມັດທະຍົມຕອນຕົ້ນ | - | 21% | - | 21% |
| ຊັ້ນມັດທະຍົມຕອນປາຍ | - | 4% | - | 0% |
| ວິຊາຊີບຊັ້ນຕົ້ນ | - | 4% | - | 3% |
| ລວມ | 100 | 100 | 100 | 100 |

ຕາຕະລາງ 4: ອັດຕາຂາດເຂົ້າກິນຂອງຜູ້ທີ່ຖືກສຳພາດໃນ 6 ບ້ານແຍກຕາມຫົວໜ້າຄອບຄົວ

| ອັດຕາຂາດເຂົ້າກິນຕາມຈຳນວນເດືອນ | ສ່ວນຮ້ອຍ | |
|---|---|---|
| | ແມ່ຍິງເປັນຫົວໜ້າຄອບຄົວ | ຜູ້ຊາຍເປັນຫົວໜ້າຄອບຄົວ |
| ພຽງພໍ | 64 | 67 |
| ຂາດເຂົ້າ 1-3 ເດືອນ | 12 | 11 |
| ຂາດເຂົ້າ 4-6 ເດືອນ | 6 | 14 |
| ຂາດເຂົ້າ 7-10 ເດືອນ | 18 | 9 |
| ລວມ | 100 | 100 |

ຕາຕະລາງ 5: ຈຸດປະສົງຂອງການເກັບຜະລິດຕະພັນປ່າໄມ້ແຍກຕາມເຜົ່າ ແລະ ເພດ

| ຈຸດປະສົງ | ລາວລຸ່ມ | | ລາວເທິງ | |
|---|---|---|---|---|
| | ຍິງ | ຊາຍ | ຍິງ | ຊາຍ |
| ກິນ | 21 (81%) | 24 (86%) | 23 (85%) | 25 (86%) |
| ຂາຍ | 9 (35%) | 5 (18%) | 8 (30%) | 4 (14%) |
| ຊົມໃຊ້ປະຈຳວັນ | 3 (12%) | 1 (4%) | 2 (7%) | 1 (3%) |
| ແລກປ່ຽນ | 1 (4%) | 0 (0%) | 0 (0%) | 1 (3%) |

ຕາຕະລາງ 6: ແຫຼ່ງລາຍໄດ້ຂອງແຕ່ລະຊົນເຜົ່າແລະເພດ

| ແຫຼ່ງລາຍໄດ້ | ລາວລຸ່ມ | | ລາວເທິງ | |
|---|---|---|---|---|
| | ຍິງ | ຊາຍ | ຍິງ | ຊາຍ |
| ຂາຍສັດລ້ຽງ ແລະ ຜັກ | 16 (62%) | 19 (68%) | 14(56%) | 17 (59%) |
| ຜະລິດຕະພັນປ່າໄມ້ (ເຄື່ອງປ່າຂອງດົງ) | 9 (35%) | 4 (14%) | 8(30%) | 5(17%) |
| ຫັດຖະກຳ | 4(15%) | 2(7%) | 4 (11%) | 2(7%) |
| ຮັບຈ້າງ | 3(12%) | 10(36%) | 2(7%) | 10(34%) |
| ຂາຍເຂົ້າ | 1(4%) | 2(7%) | 1(4%) | 1(3%) |
| ທຸລະກິດຂະໜາດນ້ອຍ | 0(0%) | 1(4%) | 0(0%) | 1(3%) |
| ຈຳນວນຜູ້ຕອບທັງໝົດ | 26(100%) | 28 (100%) | 27(100%) | 29 (100%) |

ຕາຕະລາງ 7: ກຳມະສິດທີ່ດິນແຍກຕາມຊົນເຜົ່າ ແລະ ເພດ

| ທີ່ມາຂອງດິນ | ສ່ວນຮ້ອຍ | | ຊື່ໃນເອກະສານທີ່ດິນ (ຕາມກົດໝາຍ) | ສ່ວນຮ້ອຍ | |
|---|---|---|---|---|---|
| | ລາວລຸ່ມ | ລາວເທິງ | | ລາວລຸ່ມ | ລາວເທິງ |
| ມາຈາກຄອບຄົວຂອງຜົວ | 28 | 32 | ອອກຊື່ຜົວ | 63 | 76 |
| ມາຈາກຄອບຄົວຂອງເມຍ | 46 | 10 | ອອກຊື່ເມຍ | 23 | 7 |
| ມາຈາກສັບສົມບັດທົ່ວໄປ | 26 | 58 | ອອກຊື່ທັງສອງ | 14 | 17 |
| ລວມ | 100 | 100 | ລວມ | 100 | 100 |

ຕາຕະລາງ 8: ຈຳນວນຄະນະຊີ້ນຳໂຄງການ SUFORD (ຫົວໜ່ວຍ: ທ່ານ)

| | ຍິງ | ຊາຍ | ລວມ |
|---|---|---|---|
| ສູນກາງ | 3 | 16 | 19 |
| ຄຳມ່ວນ | 5 | 37 | 42 |
| ສະຫວັນນະເຂດ | 5 | 54 | 59 |
| ສາລະວັນ | 7 | 49 | 56 |
| ຈຳປາສັກ | 4 | 47 | 51 |

*ແຫຼ່ງຂໍ້ມູນ: ໜ່ວຍງານບໍລິຫານ ແລະ ຈັດຕັ້ງ, SUFORD, 2004*

ຕາຕະລາງ 9: ຈຳນວນວິຊາການໃນຂະແໜງການປ່າໄມ້ (2001) (ຫົວໜ່ວຍ: ທ່ານ)

| | ແມ່ຍິງ | ຜູ້ຊາຍ | ລວມ |
|---|---|---|---|
| ກົມປ່າໄມ້ | 27 | 83 | 110 |
| ໃນລະດັບແຂວງ, ເມືອງຂອງຂອບເຂດໂຄງການທີ່ໄດ້ສຳຫຼວດ | | | |
| ແຂວງສະຫວັນນະເຂດ | 32 | 62 | 94 |
| ເມືອງສອງຄອນ | 1 | 11 | 12 |
| ເມືອງທ່າປາງທອງ | 7 | 15 | 22 |
| ແຂວງສາລະວັນ | 4 | 15 | 19 |
| ເມືອງສາລະວັນ | 4 | 7 | 11 |

*ແຫຼ່ງຂໍ້ມູນ: ໜ່ວຍງານບໍລິຫານ ແລະ ຈັດຕັ້ງ, SUFORD, 2004*

# ເອກະສານອ້າງອີງ


ທະນາຄານພັດທະນາອາຊີ (ADB) ແລະ ສູນສະຖິຕິແຫ່ງຊາດ (NSC), 2002, *ບົດສະຫຼຸບການປະເມີນຄວາມທຸກຍາກແບບມີສ່ວນຮ່ວມ,* ສະບັບພາສາລາວ ແລະ ອັງກິດ

ຊາຊີ (Chazee), L, 1999, ປະຊາຊົນໃນປະເທດລາວ: ຊົນນະບົດ ແລະ ຊົນເຜົ່າຕ່າງໆ

ໂຟປປ໌ ຈ (Foppes J ), ແລະ ເດໄຊເນີສ໌ ຣ (Dechaineux R), 2000, ເຄື່ອງປ່າຂອງດົງຢູ່ໃນ ສປປ ລາວ: ການນຳໃຊ້ລະບົບນິເວດວິທະຍາ

ສູນຂໍ້ມູນຂ່າວສານບົດບາດຍິງ-ຊາຍ ເພື່ອການພັດທະນາ (GRID), 2002, *ບົດບາດຍິງ-ຊາຍ ແລະ ເອກະສານດິນ: ທັດສະນະບົດບາດຍິງ-ຊາຍຂອງສັງຄົມສົ່ງຜົນສະທ້ອນຕໍ່ແມ່ຍິງແນວໃດ?*

ສູນຂໍ້ມູນຂ່າວສານບົດບາດຍິງ-ຊາຍ ເພື່ອການພັດທະນາ (GRID), 2002, ສະຖິຕິບົດບາດຍິງ-ຊາຍ, ວຽງຈັນ

ສູນຂໍ້ມູນຂ່າວສານບົດບາດຍິງ-ຊາຍ ເພື່ອການພັດທະນາ (GRID) ແລະ ທະນາຄານໂລກ, 2003, ການວິເຄາະບົດບາດຍິງ-ຊາຍ ແລະ ສະພາບບົດບາດຍິງ-ຊາຍໃນ ສປປ ລາວ

ຄາຄາສ໌ ອີ (Karkas E)., ອົງການ Concern Worldwide, 1999, ອົງການຈັດຕັ້ງບໍ່ສັງກັດລັດຖະບານ, *ແມ່ຍິງຊົນເຜົ່າສ່ວນນ້ອຍ ແລະ ສິນເຊື່ອຂະໜາດນ້ອຍ ໃນ ສປປ ລາວ,*

ສະພາແຫ່ງຊາດ, 1996, *ລັດຖະທຳມະນູນແຫ່ງ ສປປ ລາວ,* ວຽງຈັນ

ສປປ ລາວ, 1990, *ກົດໝາຍວ່າດ້ວຍການສືບທອດມໍລະດົກ,* ວຽງຈັນ

ສປປ ລາວ, 1990, *ກົດໝາຍວ່າດ້ວຍ ສັບສິນ,* ວຽງຈັນ

ສູນກາງສະຫະພັນແມ່ຍິງລາວ, ທະນາຄານພັດທະນາອາຊີ, 2002, *ບົດແນະນຳການເຊື່ອມທັດສະນະບົດບາດຍິງ-ຊາຍ: ຂັ້ນຕອນຂອງແຜນປະຕິບັດບົດບາດຍິງ-ຊາຍແຫ່ງຊາດ, ບົດບາດຍິງ-ຊາຍ ແລະ ການພັດທະນາ ໃນ ສປປ ລາວ,* ວຽງຈັນ

ສູນສະຖິຕິແຫ່ງຊາດ, 2000, *ສະຖິຕິພື້ນຂອງ ສປປ ລາວ,* ວຽງຈັນ

ນິໂຄລາສ໌ ມ (Nicholas M), *ຜົນຂອງການສຳຫຼວດແຫ່ງຊາດ, ທຸລະກິດຂະໜາດກາງ ແລະ ຂະໜາດນ້ອຍ ໃນ ສປປ ລາວ,* ໂຄງການພັດທະນາທຸລະກິດຂະໜາດນ້ອຍ ລາວ-ເຢຍລະມັນ

ສູນສະຖິຕິແຫ່ງຊາດ (NSC), 1999, *ຄົວເຮືອນແຫ່ງ ສປປ ລາວ, ຕົວຊີ້ວັດເສດຖະກິດ ແລະ ສັງຄົມ, ການສຳຫຼວດການໃຊ້ຈ່າຍ ແລະ ຊົມໃຊ້ໃນຄົວເຮືອນ* 1997/1998 (LECS 2), ວຽງຈັນ

ສູນສະຖິຕິແຫ່ງຊາດ (NSC), 2000, *ບົດລາຍງານວ່າດ້ວຍການສຶກສາການອົບພະຍົກຢູ່ ສປປ ລາວ,* ວຽງຈັນ

ສູນສະຖິຕິແຫ່ງຊາດ (NSC) ແລະ ທະນາຄານພັດທະນາອາຊີ (ADB), 2001, *ການປະເມີນຄວາມທຸກຍາກແບບມີສ່ວນຮ່ວມ,* ວຽງຈັນ

ໂພທອງ ສິລິພົງ, 2002, ບົດລາຍງານ: *ແມ່ຍິງ ແລະ ສິນເຊື່ອຊົນນະບົດ ໃນ ສປປ ລາວ*, ວຽງຈັນ

ໂຄງການຈັດສັນປ່າຜະລິດແບບຍືນນານ (SUFORD), 2004, ບົດລາຍງານການກະກຽມໂຄງການ, ເຫຼັ້ມທີ I

ໂຄງການຈັດສັນປ່າຜະລິດແບບຍືນນານ (SUFORD), 2004, ແຜນປະຕິບັດໂຄງການ, ເຫຼັ້ມທີ II

ໂຄງການຈັດສັນປ່າຜະລິດແບບຍືນນານ (SUFORD), 2004, ບົດລາຍງານການກະກຽມໂຄງການ ແລະ ເອກະສານປະຫວັດຄວາມເປັນມາອື່ນໆ, ເຫຼັ້ມທີ III

ອົງການສະຫະປະຊາຊາດ ເພື່ອການພັດທະນາ (UNDP), 2001, *ບົດລາຍງານການພັດທະນາຊັບພະຍາກອນມະນຸດແຫ່ງຊາດ 2001, ຄວາມຄືບໜ້າຂອງການພັດທະນາຊົນນະບົດ*

ອົງການສະຫະປະຊາຊາດ ເພື່ອການພັດທະນາ (UNDP), 2002, *ແຜນການຊ່ວຍເຫຼືອຂອງສະຫະປະຊາຊາດ ເພື່ອການພັດທະນາ ໃນ ສປປ ລາວ 2002-2006,* ວຽງຈັນ